| ກຸ່ມວິຊາ ວິທີສອນ | ສາຍສ້າງຄູປະຖົມລະບົບ 4 ປີ |
|---|---|

# ການສອນພາສາລາວ 1






**ສົກປີ 2024**

# ການສອນພາສາລາວ 1

| ສາຍຄູປະຖົມ ລະບົບ 4 ປີ | ປີທີ 2 | ພາກຮຽນ 2 |
|---|---|---|


ຮຽບຮຽງໂດຍ :

ອາຈານ ນາງ ຄຳສະຫວັນ ຈັນສີຍະວົງ

ກວດແກ້ໂດຍ :

ຊອ ທປ ນາງ ບົວສະຫວັນ ທອມສີສົມບັດ

ທ່ານ ພູວົງ ຄຳມະນີວົງ

ທ່ານ ສຸລິໄຊ ສີຜາລາດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ໜໜໜໜ໑໑໑໑

ວິທະຍາໄລຄູສາລະວັນ

ສະພາວິທະຍາສາດ

ເລກທີ 46 ສພ.ວສ

# ໃບຮັບຮອງ

## ອະນຸມັດຜ່ານການຮັບຮອງການຮຽບຮຽງເອກະສານ ປະກອບການສອນພາກວິຊາ ປະຖົມ

- **ອີງຕາມ:** ວິໄສທັດຮອດປີ 2030 ຍຸດທະສາດຮອດປີ 2025 ແລະແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ.
- **ອີງຕາມ:** ແຜນປັບປຸງຄຸນນະພາບ QA ຂອງກະຊວງສຶກສາທິການ ແລະ ກິລາ, ໃນມາດຕະຖານທີ 10 ຕົວຊີ້ວັດທີ 48-50 ການຄົ້ນຄວ້າວິທະຍາສາດ ແລະ ການບໍລິການ.
- **ອີງຕາມ:** ຂໍ້ຕົກລົງວ່າດ້ວຍພາລະບົດບາດ, ສິດ ແລະ ໜ້າທີ່ ສະພາວິທະຍາສາດຂອງວິທະຍາໄລຄູສາລະວັນ ສະບັບເລກທີ 05/ສພ.ວສ, ລົງວັນທີ 7 ມີນາ 2024.

ຈາກຜົນການກວດສອບ, ກວດກາທາງດ້ານເນື້ອໃນ, ຫຼັກການຂອງບັນດາອະນຸກຳມະການເຫັນວ່າ ບົດຮຽບຮຽງເອກະສານປະກອບການສອນ ວິຊາ: ວິທີສອນພາສາລາວ 1 ມີຄວາມຖືກຕ້ອງຕາມເນື້ອໃນຫຼັກສູດທີ່ໄດ້ກຳນົດ ແລະ ສະພາວິທະຍາສາດຈຶ່ງໄດ້ຮັບຮອງເອົາປຶ້ມເຫຼັ້ມນີ້ເປັນສ່ວນໜຶ່ງໃນການສິດສອນ ແລະ ຖືກນຳໃຊ້ເຂົ້າໃນກິດຈະກຳການຮຽນ - ການສອນໃນວິທະຍາໄລຄູສາລະວັນ.

| **ຄະນະກຳມະການກວດສອບ** | **ລາຍເຊັນ** |
|---|---|
| ທ່ານ ຊອ ປອ ໄພທອງ ພົງສົງຄາມ | ........................ |
| ທ່ານ ອຈ ປທ ແສນຮັກ ບຸນມີ | ........................ |
| ທ່ານ ອຈ ນາງ ລິດສະໄໝ ສິດທິຈັກ | ........................ |

ທີ່, ສາລະວັນ, ວັນທີ ........................

**ປະທານສະພາວິທະຍາສາດ**

ອຈ. ນ ສົມປອງ ແສນທະວິສຸກ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ວິທະຍາໄລຄູສາລະວັນ

ຄະນະວິທະຍາສາດ

ພາກວິຊາປະຖົມ

# ໃບຮັບຮອງ

## ການກວດແກ້ບົດຮຽບຮຽງເອກະສານປະກອບການສອນ

## ວິຊາ: ວິທີສອນພາສາລາວ 1

**ພາກວິຊາ**: ປະຖົມ

**ຜູ້ຮຽບຮຽງເອກະສານປະກອບການສອນ**

ທ່ານ ອຈ ນາງ ຄໍາສະຫວັນ ຈັນສີຍະວົງ

**ຄະນະກໍາມະການກວດແກ້ບົດ** **ລາຍເຊັນ**

ທ່ານ ຊອ ປທ ນາງ ບົວສະຫວັນ ທອມສີລິມບັດ ..............................

ທ່ານ ພູວົງ ຄໍາມະນີວົງ ..............................

ທ່ານ ສຸລິໄຊ ສີຜາລາດ ..............................

**ທີ່, ສາລະວັນ, ວັນທີ ..........................**

**ພາກວິຊາ..............................**

ແສນຮັກ ບຸນມີ

## ຄຳນຳ

ປຶ້ມເຫຼັ້ມນີ້ຜູ່ຂຽນພະຍາຍາມຮິບໂຮມເອົາຄວາມຮູ້ມາຈາກເອກະສານຫຼາຍເຫຼັ້ມ ສ່ວນໃຫຍ່ຈະເປັນເນື້ອໃນຫຼັກສູດການສອນພາສາລາວໃນຊັ້ນປະຖົມສຶກສາ, ແຕ່ງບົດສອນ, 3ທັກສະ ( ຟັງ, ເວົ້າ, ອ່ານ), ການສອນແບບເນັ້ນປະສົບການທາງພາສາ, ຜະລິດສື່ການສອນ ແລະ ຝຶກສອນຕົວຈິງ. ເນື້ອໃນທັງໝົດທີ່ຮິບໂຮມມານີ້ກໍ່ເພື່ອເປັນຄູ່ມືໃນການຈັດການຮຽນ-ການສອນສ່ວນ ເຖິງວ່າຈະມີຫຼາຍສິ່ງຫຼາຍຢ່າງທີ່ຍັງບໍ່ສົມບູນແຕ່ຜູ່ຮິບໂຮມຫວັງຢ່າງຍິ່ງວ່າຜູ້ອ່ານ ແລະ ຜູ່ຊົມໃຊ້ປຶ້ມເຫຼັ້ມນີ້ ທຸກໆທ່ານຄົງໃຫ້ຄວາມຮ່ວມມືຊ່ວຍແນະນຳແນວທາງເພື່ອປັບປຸງໃຫ້ປຶ້ມເຫຼັ້ມນີ້ສົມບູນ ແລະ ເປັນປະໂຫຍດແກ່ຜູ່ຊົມໃຊ້ຕໍ່ໄປ.

ຂ້າພະເຈົ້າຜູ້ຮິບໂຮມຂໍສະແດງຄວາມຮູ້ບຸນຄຸນ ແລະ ຂໍຂອບໃຈທຸກໆທ່ານໄວ້ລ່ວງໜ້າທີ່ໃຫ້ຂໍ້ແນະນຳໃນການປັບປຸງປຶ້ມເຫຼັ້ມນີ້ໃຫ້ສົມບູນ.

ອາຈານ ນາງ ຄຳສະຫວັນ ຈັນສີຍະວົງ

## ສາລະບານ

ໜ້າ


ຄຳນຳ........................................................................................................................ 1

ບົດທີ1: ວິເຄາະຫຼັກສູດພາສາລາວໃນຊັ້ນປະຖົມສຶກສາ .................... **Error! Bookmark not defined.**

1.ຄວາມໝາຍ, ຄວາມສຳຄັນຂອງການວິເຄາະຫຼັກສູດວິຊາພາສາລາວ ... **Error! Bookmark not defined.**

2.ການວິເຄາະຫຼັກສູດວິຊາພາສາລາວແຕ່ລະຂັ້ນຮຽນ........................ **Error! Bookmark not defined.**

ບົດທີ 2 :ຄວາມຮູ້ເບື້ອງຕົ້ນກ່ຽວກັບການສອນວິຊາພາສາລາວໃນຊັ້ນປະຖົມສຶກສາ **Error! Bookmark not defined.**

1.ຄວາມສຳຄັນຂອງການສອນວິຊາພາສາລາວໃນຊັ້ນປະຖົມສຶກສາ ...... **Error! Bookmark not defined.**

2.ຈຸດປະສົງຂອງການສອນວິຊາພາສາລາວໃນຊັ້ນປະຖົມສຶກສາ .......... **Error! Bookmark not defined.**

2.ຫຼັກການສອນພາສາລາວ ........................................................ **Error! Bookmark not defined.**

ບົດທີ 3 :ທັກສະການສອນຟັງ - ເວົ້າໃນຊັ້ນປະຖົມສຶກສາ ................. **Error! Bookmark not defined.**

1.ຄວາມໝາຍ ແລະ ຄວາມສຳຄັນຂອງການຟັງ - ເວົ້າ....................... **Error! Bookmark not defined.**

2.ທັກສະການສອນຟັງ - ເວົ້າ ...................................................... **Error! Bookmark not defined.**

2.1ກິດຈະກຳ: ສົນທະນາຮູບພາບ ............................................ **Error! Bookmark not defined.**

2.2 ກິດຈະກຳ: ເລືອກບັດອັກສອນ .......................................... **Error! Bookmark not defined.**

2.3 ກິດຈະກຳ: ສ້າງແຜນມະໂນພາບ ........................................ **Error! Bookmark not defined.**

2.4ກິດຈະກຳ: ເລົ່າເລື່ອງຄືນຕາມຮູບພາບ ................................. **Error! Bookmark not defined.**

2.5 ກິດຈະກຳ: ປະຕິບັດຄຳສັ່ງ ................................................ **Error! Bookmark not defined.**

2.6 ກິດຈະກຳ: ສົນທະນາກ່ຽວກັບຮູບ...................................... **Error! Bookmark not defined.**

2.7 ກິດຈະກຳ: ລາຍງານການສັງເກດ....................................... **Error! Bookmark not defined.**

2.8ກິດຈະກຳ: ສະແດງບົດບາດສົມມຸດ.................................... **Error! Bookmark not defined.**

2.9ກິດຈະກຳ: ການເວົ້າ ແລະ ການສາທິດ ................................ **Error! Bookmark not defined.**

2.10 ກິດຈະກຳ: ການເລົ່າປະສົບ ............................................. **Error! Bookmark not defined.**

2.12 ກິດຈະກຳ: ການເລົ່າກາບກອນ......................................... **Error! Bookmark not defined.**

ບົດທີ 4 : ທັກສະການສອນອ່ານໃນຊັ້ນປະຖົມສຶກສາ ...................... **Error! Bookmark not defined.**

1.ຄວາມໝາຍ ແລະ ຄວາມສຳຄັນຂອງການອ່ານ............................ **Error! Bookmark not defined.**

1.1ຄວາມໝາຍຂອງການອ່ານ ................................................ **Error! Bookmark not defined.**

1.2ຄວາມສຳຄັນຂອງການອ່ານ................................................ **Error! Bookmark not defined.**

2.ການສອນທັກສະອ່ານ ............................................................ **Error! Bookmark not defined.**

2.3 ກິດຈະກຳ: ການອ່ານຖອດສຽງ.......................................... **Error! Bookmark not defined.**

2.4ກິດຈະກຳ: ການອ່ານຟ້ອງສຽງ............................................ **Error! Bookmark not defined.**

2.5 ກິດຈະກຳ: ການອ່ານຜັນສຽງ ............................................. **Error! Bookmark not defined.**

2.6ກິດຈະກຳ: ເກມຊອກຄຳ ແລະ ອ່ານຄຳສັບ............................ **Error! Bookmark not defined.**

2.7 ກິດຈະກຳ: ການອ່ານເປັນຄຳ, ວະລີ ແລະ ປະໂຫຍກ ............... **Error! Bookmark not defined.**

2.9 ກິດຈະກຳ: ການອ່ານໃນໃຈຈັບໃຈຄວາມ ............................ **Error! Bookmark not defined.**

2.10 ກິດຈະກຳ: ການອ່ານນິທານ/ ເລື່ອງ................................... **Error! Bookmark not defined.**

# ບົດທີ 1

# ວິເຄາະຫຼັກສູດພາສາລາວໃນຊັ້ນປະຖົມສຶກສາ

## 1.ຄວາມໝາຍ, ຄວາມສຳຄັນຂອງການວິເຄາະຫຼັກສູດວິຊາພາສາລາວ

ການວິເຄາະຫຼັກສູດໝາຍເຖິງຂະບວນການສຶກສາສ່ວນປະກອບຕ່າງໆຂອງຫຼັກສູດເຊັ່ນ: ຫຼັກການ, ຈຸດມຸ່ງໝາຍ, ໂຄງສ້າງ, ຈຸດປະສົງຂອງການຮຽນຮູ້, ເນື້ອໃນລາຍວິຊາ, ສື່ການສອນ, ວິທີສອນ, ອັດຕາເວລາ, ການຈັດການຮຽນການສອນ ແລະ ປະເມີນຜົນ. ທັງນີ້ເພື່ອອະທິບາຍລັກສະນະຕ່າງໆຂອງສ່ວນປະກອບຂອງຫຼັກສູດ ເພື່ອປະໂຫຍດໃນການກະກຽມແຜນການສອນຂອງຄູ.

1.1 ຈຸດມຸ່ງໝາຍຂອງຫຼັກສູດພາສາລາວຊັ້ນປະຖົມສຶກສາ:

- ໃຫ້ນັກຮຽນມີຄວາມສາມາດໃນການຟັງ, ເວົ້າ, ອ່ານ ແລະ ຂຽນດ້ວຍຄວາມຊຳນິຊຳນານ ແລະ ກ້າວໜ້າໃຫ້ເຂົາເຈົ້າມີຄວາມຮູ້ເບື້ອງຕົ້ນກ່ຽວກັບພື້ນຖານພາສາລາວ.
- ໃຫ້ຮູ້ນຳໃຊ້ພາສາລາວໃນການຕິດຕໍ່ສື່ສານດ້ວຍການຟັງ, ອ່ານ ແລະ ຖ່າຍທອດເວົ້າ-ຂຽນຕາມຮີດຄອງປະເພນີ ແລະ ວັດທະນະທຳຂອງຊາດ.
- ສຶກສານ້ຳໃຈຮັກຊາດ ໂດຍຜ່ານພາສາລາວອັນເປັນພາສາກາງຂອງຊາດ.
- ສຶກສາອົບຮົມນ້ຳໃຈສະຫງວນມັກຄວາມງາມ, ການອ່ານພາສາລາວ ແລະ ມີນິດໄສຢາກຮູ້ຢາກຮຽນ. ໃຫ້ຮູ້ນຳໃຊ້ສິ່ງທີ່ໄດ້ຮຽນມາເຂົ້າໃນການຄົ້ນຄິດຕັດສິນໃຈແກ້ໄຂບັນຫາ ແລະ ພິຈາລະນາໄຈ້ແຍກບັນຫາຢ່າງມີເຫດຜົນດ້ວຍຕົນເອງ.
- ໃຫ້ນັກຮຽນມີຄວາມຮູ້ເບື້ອງຕົ້ນກ່ຽວກັບວັນນະຄະດີຂອງຊາດ ແລະ ຕ່າງປະເທດ.
- ປະກອບສ່ວນກໍ່ສ້າງຄົນຮຸ່ນໃໝ່ໃຫ້ກາຍເປັນພົນລະເມືອງດີທີ່ຂະຫຍາຍຕົວຮອບດ້ານ.

1.2 ເນື້ອໃນສຳຄັນຂອງຫຼັກສູດ

- ຜູ້ຮຽນມີຄວາມຮູ້ເບື້ອງຕົ້ນກ່ຽວກັບພື້ນຖານພາສາລາວຄື: ສາມາດຟັງ, ເວົ້າ, ອ່ານ, ຂຽນໄດ້ຢ່າງມີປະສິດທິພາບ ແລະ ຖືກກາລະເທສະ.
- ສ້າງນິດໄສຮັກການອ່ານ, ຄົ້ນຄວ້າເພື່ອສະແຫວງຫາຄວາມຮູ້, ມີຄວາມຮູ້ຂະຫຍາຍຕົວຢ່າງຮອບດ້ານ.
- ເຫັນຄຸນຄ່າຄວາມງົດງາມຂອງພາສາໂດຍການສຶກສາວັນນະຄະດີ.
- ຄວາມມັກພາສາ ແລະ ວັນນະຄະດີປະຈຳຊາດ ເຮັດໃຫ້ເກີດມີນ້ຳໃຈຮັກຊາດ ແລະ ເປັນພົນລະເມືອງດີ

### ແຜນພູມສະແດງຄວາມສຳພັນລະຫວ່າງຫຼັກສູດກັບເອກະສານປະກອບຫຼັກສູດ




## 2. ການວິເຄາະຫຼັກສູດວິຊາພາສາລາວແຕ່ລະຂັ້ນຮຽນ

ມາດຕະຖານຄວາມສຳເລັດ ແມ່ນຜົນສຳເລັດຂັ້ນຕ່ຳສຳລັບນັກຮຽນທຸກຄົນທີ່ຈະພັດທະນາການຮຽນໃນຂັ້ນສູງຕໍ່ໄປ. ຂໍ້ມູນເພີ່ມເຕີມສຳລັບການວາງແຜນການປະເມີນແມ່ນໃຫ້ເບິ່ງຜົນໄດ້ຮັບຂອງການຮຽນວິຊານີ້:

**ຊັ້ນປ.1**

ເມື່ອຈົບຊັ້ນປ.1 ນັກຮຽນສາມາດ:

**ຟັງ ແລະ ເວົ້າ**

- ນຳໃຊ້ພາສາລາວເພື່ອສື່ສານກັບຄູ-ອາຈານ ແລະ ເພື່ອນຮ່ວມຫ້ອງ.
  - ຟັງ ແລະ ປະຕິບັດຕາມຄຳແນະນຳຂອງຫ້ອງຮຽນ
  - ອອກສຽງໄດ້ຢ່າງມີປະສິດທິພາບເພື່ອໃຫ້ສາມາດເຂົ້າໃຈ.
  - ຟັງເຂົ້າໃຈເວລາທີ່ຄົນອື່ນເວົ້າ.
- ນຳໃຊ້ພາສາລາວເພື່ອສື່ສານພ້ອມທັງເຂົ້າຮ່ວມໃນຫຼາຍໆກິດຈະການດ້ານການຮຽນຮູ້.
  - ແບ່ງປັນຂໍ້ມູນຄົນອື່ນ ( ດ້ວຍການສື່ຄວາມໝາຍທີ່ຊັດເຈນ)
  - ນຳໃຊ້ ແລະ ຮຽນພາສາລາວໄດ້ຢ່າງຕັ້ງໜ້າ.
- ນຳໃຊ້ຄຳສັບທີ່ໄດ້ຮຽນເພື່ອເວົ້າກ່ຽວກັບຫົວຂໍ້ການຮຽນ.

**ການອ່ານ**

- ບອກຊື່ ແລະ ບອກກ່ຽວກັບການອອກສຽງພະຍັນຊະນະ, ສະຫຼະພື້ນຖານ, ການອອກສຽງ ແລະ ພະຊະນະປະສົມ ຫຼື ສະຫຼະປະສົມ.
- ບອກຊື່ ແລະ ບອກກ່ຽວກັບການອອກສຽງທີ່ໄດ້ອ່ານກ່ຽວກັບສະຫຼະ ແລະ ພະຍັນຊະນະຈາກຄົນອື່ນ.
- ນຳໃຊ້ຄວາມຮູ້ດ້ານການອອກສຽງ ເພື່ອແປຄວາມໝາຍຄຳສັບທີ່ບໍ່ຄຸ້ນເຄີຍ.
- ນຳໃຊ້ຄວາມຮູ້ທາງດ້ານຄຳສັບ ແລະ ການອອກສຽງໃນການອ່ານປະໂຫຍກທີ່ງ່າຍ ແລ ບໍ່ຄຸ້ນເຄີຍ ( ປະໂຫຍກ 3 ປະປະໂຫຍກ )
- ບອກກ່ຽວກັບຄວາມໝາຍຂອງປະໂຫຍກ.
- ຕອບຄຳຖາມກວມລວມກ່ຽວກັບຄວາມໝາຍກົງ.
- ອ່ານອອກສຽງໂດຍການໃຊ້ສຽງທີ່ຖືກກັບຄວາມໝາຍ( ກ່ອນອື່ນ, ໃຊ້ເວລາໃນການຝຶກ ເຊິ່ງອາດຈະເຮັດໃຫ້ການອ່ານຊ້າ).
- ສາມາດໃຊ້ຄວາມຮູ້ຂອງໂຄງສ້າງນິທານເພື່ອໃຫ້ເຂົ້າໃຈກ່ຽວກັບຄວາມໝາຍຂອງນິທານ
  - ພະຍາຍາມຄາດເດົາກ່ຽວກັບເນື້ອໃນຂອງນິທານໂດຍໂດຍການສັງເກດເບິ່ງຮູບ ແລະ ຊື່ນິທານ
  - ໃນລະຫວ່າງການເລົ່ານິທານ, ພະຍາຍາຄາດເດົາສິ່ງທີ່ຈະເກີດເກີດໃນອະນາຄົດບົນພື້ນຖານເຫດການທີ່ເກີດຂຶ້ນໃນເມື່ອກ່ອນ ແລະ ຮູບພາບຂອງນິທານ.
  - ຕອບຄຳຖາມຂອງນິທານ, ລວມທັງການເລົ່ານິທານຄືນ.

**ການຂຽນ**

- ຂຽນຈົດໝາຍຫຼາຍໆເພື່ອເຮັດໃຫ້ສາມາດຈື່ໄດ້.
  - ເລີ່ມຕົ້ນດ້ວຍການຂຽນໃສ່ແຖວທີ່ຖືກຕ້ອງ.
- ນຳໃຊ້ຄວາມຮູ້ກ່ຽວກັບການອອກສຽງໃນການສະກົດຄຳ ( ເຊິ່ງຄຳສັບສ່ວນຫຼາຍແມ່ນຖືກຕ້ອງ)
- ແຕ້ມຮູບເພື່ອບັນທຶກ ແລະ ສື່ສານໂດຍການນຳໃຊ້ປະໂຫຍກທຳມະດາ.
- ຂຽນຄຳຕອບກ່ຽວກັບກິດຈະກຳ( ຄຳສັບ, ວະລີ, ປະໂຫຍກ ແລະ ປະໂຫຍກທຳມະດາ).
- ຂຽນປະໂຫຍກທຳມະດາພ້ອມທັງການອອກສຽງທຳມະດາຈາກພາບທີ່ແຕ້ມຂຶ້ນ( ເຊິ່ງຄາດວ່າຖືກຕ້ອງ). ປະໂຫຍກຫຼາຍປະເພດ
- ຂຽນຕົວຢ່າງທຳມະດາທີ່ມີປະໂຫຍກຫຼາຍຮູບແບບຂຶ້ນກັບຮູບແບບທີ່ໄດ້ອ່ານລວມທັງ: ການແນະນຳ, ການນັບຄືນ, ການເລົ່າ ແລະ ຂໍ້ມູນຕົວຈິງ ( ໃຫ້ແຕ້ມຮູບກ່ອນເພື່ອສະໜັບສະໜູນການຂຽນ1-3 ປະໂຫຍກ.

ຊັ້ນປ.2

ເມື່ອຈົບຊັ້ນ ປ.2 ນັກຮຽນສາມາດ:

- ນຳໃຊ້ພາສາລາວໃນການສື່ສານກັບຄູ - ອາຈານ ແລະ ເພື່ອນຮ່ວມຫ້ອງ.
  - ປະຕິບັດຄຳແນະນຳຂອງຫ້ອງຮຽນ
  - ອອກສຽງຄຳສັບພາສາລາວໃຫ້ພຽງພໍ
  - ຕັ້ງໃຈຟັງເມື່ອຄົນເວົ້າ

- ນໍາໃຊ້ພາສາລາວໃນການສື່ສານເວລາທີ່ມີການເຂົ້າຮ່ວມໃນກິດຈະກໍາໃນການຮຽນຮູ້:
  - ໃຫ້ຄໍາແນະນໍາໃນກິດຈະກໍາໂດຍໃຊ້ຄໍາເວົ້າຂອງຕົນເອງ
  - ອອກສຽງຄໍາສັບສ່ວນຫຼາຍຂອງພາສາລາວໃຫ້ຖືກຕ້ອງ
  - ແບ່ງປັນຂໍ້ມູນໂດຍການນໍາໃຊ້ຫຼາຍໆປະໂຫຍກທີ່ມີຄວາມໝາຍຊັດເຈນ
  - ນໍາໃຊ້ ແລະ ຮຽນຮູ້ພາສາລາວໄດ້ຢ່າງຕັ້ງໜ້າ
- ນໍາໃຊ້ພາສາ ແລະ ປະໂຫຍກທີ່ໄດ້ຮຽນເພື່ອໂອ້ລົມກ່ຽວກັບບົດຮຽນ ແລະ ປະສົບການຂອງຕົນ.

ການອ່ານ

- ບອກຊື່ ແລະ ການອອກສຽງໂດຍການນໍາໃຊ້ສັນຍາລັກພາສາລາວ( ລວມມີ: ອະລິ, ຄໍາປະສົມ, ວັນນະຍຸດ, ການອອກສຽງທີ່ບໍ່ໄດ້ໃຊ້ແຜ່ຫຼາຍ, ສັນຍາລັກຂອງຄໍາສັບ). ສັນຍາລັກຄໍາສັບຊໍ້າກັນ.
- ອ່ານຄໍາສັບທີ່ຄຸ້ນເຄີຍທີ່ສຸດຈາກຄວາມຈໍາ( ມີການນໍາໃຊ້ຫຼາຍ / ຄໍາສັບທີ່ສາມາດເບິ່ງເຫັນ)
- ນໍາໃຊ້ຄວາມຮູ້ກ່ຽວກັບການອອກສຽງໃນການຕີຄວາມໝາຍຄໍາສັບທີ່ບໍ່ຄຸ້ນເຄີຍ( ອອກສຽງຄໍາສັບດັ່ງກ່າວ).
- ນໍາໃຊ້ຄວາມຮູ້ກ່ຽວກັບຄໍາສັບທີ່ໃຊ້ສັນຍາລັກ ແລະ ຄວາມຮູ້ກ່ຽວກັບການອອກສຽງເພື່ອໃຫ້ສາມາດອ່ານປະໂຫຍກທີ່ບໍ່ມີຄວາມຄຸ້ນເຄີຍ( 8 ປະໂຫຍກທໍາມະດາ)
- ນໍາໃຊ້ຄວາມຮູ້ຂອງໂຄງສ້າງນິທານເພື່ອໃຫ້ເຂົາໃຈກ່ຽວກັບຄວາມໝາຍຂອງນິທານ
  - ພະຍາຍາມຄາດເດົາກ່ຽວກັບເນື້ອໃນຂອງນິທານໂດຍການສັງເກດເບິ່ງຮູບ ແລະ ຊື່ນິທານ
  - ໃນລະຫວ່າງການເລົ່ານິທານ, ພະຍາຍາມຄາດເດົາສິ່ງທີ່ຈະເກີດຂຶ້ນໃນອະນາຄົດບົນພື້ນຖານເຫດການທີ່ເກີດຂຶ້ນໃນເມື່ອກ່ອນ ແລະ ຮູບພາບຂອງນິທານ
  - ຕອບຄໍາຖາມຂອງນິທານ, ລວມທັງການເລົ່ານິທານຄືນ.

ການຂຽນ

- ການຂຽນຕົວໜັງສືໂດຍນໍາໃຊ້ຂະໜາດ, ຮູບແບບ ແລະ ຕໍາແໜ່ງທີ່ຖືກຕ້ອງໃນແຖວ
- ສະກົດຄໍາສັບທີ່ຄຸ້ນເຄີຍ( ຄໍາສັບທີ່ໃຊ້ສັນຍາລັກເພື່ອບອກຄວາມໝາຍ) ຈາກຄວາມຈໍາ
- ນໍາໃຊ້ຄວາມຮູ້ຈາກການອ່ານອອກສຽງໃນການສະກົດຄໍາ( ທີ່ເກືອບຖືກຕ້ອງ)
- ແຕ້ມລໍາດັບຂອງຄໍາສັບເພື່ອບັນທຶກ ແລະ ສື່ສານໂດຍການນໍາໃຊ້ປະໂຫຍກຂອງຕົນ

- ຂຽນຄໍາຕອບຂອງບົດຮຽນກິດຈະກໍາ( ປະໂຫຍກ, ລາຍຊື່ຄໍາສັບ)
- ຂຽນປະໂຫຍກພ້ອມກັບການອອກສຽງ ແລະ ແຕ້ມຮູບໃສ່ຄໍາສັບ( ທີ່ເກືອບຖືກຕ້ອງ)
- ນໍາໃຊ້ເຄື່ອງໝາຍວັກທໍາມະດາໃນປະໂຫຍກ, ຄໍາຖາມ, ລາຍຊື່ ແລະ ການສົນທະນາ
- ດັດແປງຂຽນເພື່ອຊອກຫາ ແລະ ດັດແກ້ຂໍ້ຜິດພາດ

  ປະໂຫຍກຫຼາຍປະເພດ

- ຂຽນຕົວຢ່າງແບບງ່າຍດາຍຂອງແຕ່ລະປະເພດຂອງປະໂຫຍກ ຂຶ້ນກັບຮູບແບບທີ່ໄດ້ມີການອ່ານລວມມີ: ຄໍາແນະນໍາ, ການນັບຄືນ, ການເລົ່າ ແລ ປະໂຫຍກຂອງຂໍ້ມູນຕົວຈິງ( ທໍາອິດແຕ້ມລໍາດັບຂອງຮູບພາບ 4 – 6 ປະໂຫຍກ)

ຊັ້ນປ. 3

ເມື່ອຈົບຊັ້ນ ປ. 3 ນັກຮຽນສາມາດ

ຟັງ ແລະ ເວົ້າ

- ນໍາໃຊ້ພາສາລາວໃນການປະຕິສໍາພັນກັບອາຈານ ແລະ ເພື່ອນຮ່ວມຫ້ອງ - ລວມທັງການເລີ່ມປະຕິສໍາພັນ
- ນໍາໃຊ້ພາສາລາວໃນການສື່ສານເວລາທີ່ໄດ້ມີສ່ວນຮ່ວມໃນກິດຈະກໍາການຮຽນຮູ້
  - ເຂົ້າຮ່ວມກຸ່ມຂະໜາດນ້ອຍ ແລະ ການປຶກສາຮ່ວມກັນໃນຫ້ອງທັງໝົດ
  - ແບ່ງປັນຂໍ້ມູນທີ່ກ່ຽວຂ້ອງ
  - ຮັບຟັງເວລາທີ່ຄົນອື່ນເວົ້າ ແລະ ຕອບຮັບຕໍ່ກັບຂໍ້ມູນດັ່ງກ່າວ
- ເລືອກຄໍາສັບ ແລະ ປະໂຫຍກໄວຍາກອນທີ່ເໝາະສົມໃນການສື່ສານໃນຫຼາຍຮູບແບບໃນຫຼາຍໆຫົວຂໍ້ການອ່ານ
- ອ່ານຄໍາສັບທີ່ບໍ່ຄຸ້ນເຄີຍໄດ້ຢ່າງວ່ອງໄວ ແລະ ຊັດເຈນໂດຍການນໍາໃຊ້ຍຸດທະສາດຕ່າງໆ ( 10 – 15 ປະໂຫຍກ )
  - ລວມມີການເດົາຄໍາສັບອີງຕາມພະຍັນຊະນະຕົວທໍາອິດ, ຮູບແບບຂອງຄໍາສັບ, ລໍາດັບຂອງປະໂຫຍກ( ຕາມຫຼັກໄວຍາກອນ) ແລະ ຄວາມໝາຍທີ່ໄດ້ມີການອ່ານ
  - ຕອບຄໍາຖາມໄດ້ຄົບລວມມີ: ຄໍາຖາມໃນການວິເຄາະ
  - ອ່ານອອກສຽງໂດຍການນໍາໃຊ້ສຽງທີ່ເໝາະສົມຕໍ່ກັບຄວາມໝາຍຂອງປະໂຫຍກ ແລະ ການນໍາໃຊ້ເຄື່ອງວັກທີ່ເໝາະສົມ( ໃຫ້ຝຶກຊ້ອມກ່ອນຖ້າຫາກມີຄວາມຜິດໜ້ອຍແມ່ນໃຫ້ແກ້ໄຂ)
  - ນໍາໃຊ້ຄວາມຮູ້ກ່ຽວກັບການອ່ານອອກສຽງໃນການອອກສຽງຄໍາສັບທີ່ບໍ່ຮູ້ຈັກໃນປະໂຫຍກ ແລະ ໃຊ້ຄວາມເຂົ້າໃຈກ່ຽວກັບຄວາມໝາຍຂອງປະໂຫຍກເພື່ອຄາດເດົາຄວາມໝາຍຂອງຄໍາສັບທີ່ບໍ່ຮູ້ຈັກດັ່ງກ່າວ.
  - ຕອບຄໍາຖາມກ່ຽວກັບນິທານ, ໃຫ້ຄໍາຄິດເຫັນກ່ຽວກັບການກະທໍາຂອງຕົວລະຄອນ ແລະ ແຮງຈູງໃຈໃນການກະທໍາດັ່ງກ່າວ.

ການຂຽນ

- ຂຽນຢ່າງປານິດຕາມການກໍານົດໃນກິດຈະກໍາການຮຽນ.
  - ນໍາໃຊ້ອັກສອນການຂຽນຂະໜາດນ້ອຍທີ່ມີຂະໜາດ ແລະ ຮູບຮ່າງສະເໝີພາບກັນ
  - ຂຽນດ້ວຍຄວາມໄວເພີ່ມຂຶ້ນ ແລະ ສາມາດຂຽນໄດ້ຍາວຂຶ້ນ
- ມີຄວາມໝັ້ນໃຈໃນການນໍາໃຊ້ຄວາມຈໍາຂອງຄໍາສັບທີ່ຄຸ້ນເຄີຍ( ຄໍາສັບທີ່ໃຊ້ສັນຍາລັກໃນການອະທິບາຍຄວາມໝາຍ) ແລະ ຄວາມຮູ້ກ່ຽວກັບການອ່ານອອກສຽງໃນການສະກົດຄໍາເຊິ່ງອາດເຮັດໃຫ້ມີຂໍ້ຜິດພາດເລັກໜ້ອຍ.
- ຂຽນປະໂຫຍກສັ້ນໆໃນການສື່ສານໂດຍໃຊ້ຂໍ້ມູນ, ປະສົບການ ຫຼື ຄໍາຄິດເຫັນຂອງຕົນທີ່ມີການຈັດແຖວທີ່ຖືກຕ້ອງ.

- ດັດແກ້ການຂຽນ ແລະ ການຂຽນຂອງນັກຮຽນຄົນອື່ນເພື່ອຊອກຫາຂໍ້ຜິດພາດ ແລະ ຫາວິທີການປັບປຸງປະໂຫຍກທີ່ດີຂຶ້ນ.

ປະໂຫຍກຫຼາຍປະເພດ

- ຂຽນຕົວຢ່າງແບບງ່າຍດາຍຂອງແຕ່ລະປະເພດຂອງປະໂຫຍກ ຂຶ້ນກັບຮູບແບບທີ່ໄດ້ມີການອ່ານລວມມີ: ຄຳແນະນຳ, ການນັບຄືນ, ການເລົ່າ ແລະ ປະໂຫຍກຂອງຂໍ້ມູນຕົວຈິງ( ທຳອິດແຕ້ມລຳດັບຂອງຮູບພາບ 5 – 10 ປະໂຫຍກ ).

ຊັ້ນ ປ. 4

ເມື່ອຈົບຊັ້ນ ປ. 4 ນັກຮຽນສາມາດ:

ຟັງ ແລະ ເວົ້າ

- ນຳໃຊ້ພາສາລາວໃນການສື່ສານກັບຄູ - ອາຈານ, ເພື່ອຮ່ວມຫ້ອງ ແລະ ແຂກຜູ້ມາຢ້ຽມຢາມໃນໂຮງຮຽນລວມທັງເນື້ອຫາທີ່ເປັນທາງການ ແລະ ບໍ່ເປັນທາງການ.
- ນຳໃຊ້ພາສາລາວໃນການສື່ສານເວລາທີ່ໄດ້ມີສ່ວນຮ່ວມກັບກິດຈະກຳເປັນກຸ່ມໃນຫ້ອງຮຽນ.

- ເຂົ້າຮ່ວມຢ່າງມີປະສິດທິພາບໃນການນຳສະເໜີກິດຈະກຳເປັນກຸ່ມໃນຫາຫ້ອງຮຽນ.
- ເລືອກຄຳສັບ ແລະ ປະໂຫຍກທີ່ຖືກຕ້ອງຕາມຫຼັກໄວຍາກອນຕາມການມອບໝາຍ, ຫົວຂໍ້ ແລະ ຜູ້ຟັງ.

ການອ່ານ

- ອ່ານຄຳສັບທີ່ບໍ່ຄຸ້ນເຄີຍໄດ້ຢ່າງວ່ອງໄວ ແລະ ຊັດເຈນໂດຍການນຳໃຊ້ຍຸດທະສາດຕ່າງໆ ພ້ອມທັງເຂົ້າໃຈຄວາມໝາຍເປັນສ່ວນຫຼາຍ ( ½ - 1ໜ້າ )

- ນຳໃຊ້ຄວາມຮູ້ກ່ຽວກັບໂຄງສ້າງຂອງປະໂຫຍກເພື່ອກຳນົດທີ່ຕັ້ງຂອງຂໍ້ມູນໃນປະໂຫຍກ
- ໃຊ້ຄວາມເຂົ້າໃຈເພື່ອເຮັດກິດຈະກຳບົດຮຽນໃຫ້ສຳເລັດ
- ຕອບຄຳຖາມຄົບຊຸດ ລວມທັງຄຳຖາມທີ່ໃຊ້ໃນການປະເມີນ
- ກຳນົດສິ່ງທີ່ສາມາດຮຽນຈາກປະໂຫຍກ
- ອ່ານອອກສຽງໂດຍການນຳໃຊ້ສຽງ ແລະ ຈັງຫວະທີ່ເໝາະສົມ( ດັດແປງຂໍ້ຜິດພາດພຽງເລັກນ້ອຍ ແລະ ດຳເນີນການແກ້ໄຂ)

ພາກຂຽນ

- ຂຽນດ້ວຍຄວາມໝັ້ນໃຈ, ດ້ວຍຄວາມສວຍງາມ ແລະ ຊັດເຈນ ພ້ອມທັງມີຂໍ້ຜິດພາດເລັກໜ້ອຍ.
- ຂຽນຈຸດປະສົງເພື່ອຕິດຕໍ່ສື່ສານໂດຍໃຊ້ຂໍ້ມູນ, ປະສົບການ ຫຼື ຄຳເຫັນຂອງຕົນ, ນຳໃຊ້ສິ່ງທີ່ໄດ້ຮຽນກ່ຽວກັບໂຄງສ້າງຂອງປະໂຫຍກເພື່ອຮັບປະກັນວ່າເຂົາເຈົ້າມີຂໍ້ມູນທີ່ຖືກຕ້ອງໃນປະໂຫຍກ.
- ດັດແກ້ການຂຽນຂອງຕົນ ແລະ ການຂຽນຂອງນັກຮຽນຄົນອື່ນເພື່ອປັບປຸງປະສິດທິພາບໂດຍການສ້າງປະໂຫຍກຕາມໂຄງສ້າງ.

ປະໂຫຍກຫຼາຍປະເພດ

- ຂຽນຕົວຢ່າງແບບງ່າຍດາຍຂອງແຕ່ລະປະເພດຂອງປະໂຫຍກຂຶ້ນກັບຮູບແບບທີ່ໄດ້ມີການອ່ານລວມມີ: ສາລະບານ, ຕົວເລກ, ຮູບ ແລະ ປະໂຫຍກຂອງຂໍ້ມູນຕົວຈິງ ແລະ ປະໂຫຍກຄຳເຫັນທີ່ຊັກຊວນ( ປະໂຫຍກ ½ ໜ້າຂຶ້ນກັບຫົວຂໍ້)

ຊັ້ນ ປ. 5

ເມື່ອຈົບຊັ້ນ ປ. 5 ນັກຮຽນສາມາດ:

ຟັງ ແລະ ເວົ້າ

- ສາມາດນຳໃຊ້ພາສາລາວໃນການສື່ສານໄດ້ຢ່າງຄ່ອງແຄ້ວ ແລະ ມີປະສິດທິພາບໃນຄວາມໝາຍສ່ວນໃຫຍ່.
- ນຳໃຊ້ພາສາລາວໃນການສື່ສານເວລາທີ່ມີສ່ວນຮ່ວມໃນບັນດາກິດຈະກຳໃນການຮຽນຮູ້.

- ເຂົ້າຮ່ວມໃນກິດຈະກຳການປຶກສາຫາລື, ການປະກອບສ່ວນທີ່ກ່ຽວຂ້ອງຢ່າງມີປະສິດທິພາບລວມທັງຄຳຄິດເຫັນຂອງຕົນເອງ ຫຼື ການປຽບທຽບດ້ານມູມມອງ.
- ວາງແຜນ ແລະ ນຳສະເໜີກ່ຽວກັບຫົວຂໍ້ໃຫ້ແກ່ນັກຮຽນ.

ການອ່ານ

- ອ່ານຄຳສັບທີ່ບໍ່ຄຸ້ນເຄີຍໄດ້ຢ່າງວ່ອງໄວ ແລະ ຊັດເຈນໂດຍການໃຊ້ຍຸດທະສາດຕ່າງໆພ້ອມທັງເຂົ້າໃຈຄວາມໝາຍເປັນສ່ວນໃຫຍ່ ( 1 – 2 ໜ້າ )

- ໃຊ້ຄວາມຮູ້ກ່ຽວກັບໂຄງສ້າງຂອງປະໂຫຍກເພື່ອກຳນົດທີ່ຕັ້ງຂອງຂໍ້ມູນປະໂຫຍກ
- ໃຊ້ຄວາມເຂົ້າໃຈເພື່ອເຮັດກິດຈະກຳບົດຮຽນໃຫ້ສຳເລັດ
- ຕອບຄຳຖາມຄົບຊຸດລວມທັງຄຳຖາມທີ່ໃຊ້ນການປະເມີນ
- ກຳນົດສິ່ງທີ່ສາມາດຮຽນຈາກປະໂຫຍກ
- ອ່ານອອກສຽງໂດຍການໃຊ້ສຽງ ແລະ ຈັງຫວະທີ່ເໝາະສົມ ( ດັດແປງຂໍ້ຜິດພາດພຽງເລັກນ້ອຍ ແລະ ດຳເນີນການແກ້ໄຂດ້ວຍຕົນເອງ )

ການຂຽນ

- ຂຽນດ້ວຍຄວາມໝັ້ນໃຈໃນກິດຈະກຳຫຼາຍຮູບແບບ

- ປັບເອົາຮູບແບບການຂຽນໃຫ້ເໝາະສົມກັບໜ້າວຽກ
- ນຳໃຊ້ສິ່ງທີ່ໄດ້ຮຽນກ່ຽວກັບໂຄງສ້າງຂອງປະໂຫຍກເພື່ອຮັບປະກັນວ່າເຂົາເຈົ້າມີຂໍ້ມູນທີ່ຖືກຕ້ອງໃນປະໂຫຍກ.
- ລວມເອົາ: ການໃຊ້ຫົວຂໍ້ຍ່ອຍ, ແຜນວາດ ຫຼື ພາບວາດຕາມຄວາມເໝາະສົມ.

ປະໂຫຍກຫຼາຍປະເພດ

- ຂຽນຕົວຢ່າງແບບງ່າຍດາຍຂອງແຕ່ລະປະເພດຂອງປະໂຫຍກຂຶ້ນກັບຮູບແບບທີ່ໄດ້ມີການອ່ານລວມມີ: ສາລະບານ, ຕົວເລກ ແລະ ປະໂຫຍກຂອງຂໍ້ມູນຕົວຈິງປະໂຫຍກຄຳເຫັນທີ່ຊັກຊວນ ( ປະໂຫຍກ 1 – 2 ໜ້າຂຶ້ນກັບຫົວຂໍ້).

| ພາກທີ I ການເວົ້າ ແລະ ການຟັງ | | | | |
|---|---|---|---|---|
| **ອົງປະກອບ1 ນຳໃຊ້ພາສາລາວໃນການສື່ສານ ແລະ ການຮຽນຮູ້** | | | | |
| ປ.1 | ປ. 2 | ປ. 3 | ປ. 4 | ປ. 5 |
| **ນັກຮຽນຮູ້:**<br>ຄຳສັບ ແລະ ໄວຍາກອນພື້ນຖານໃນພາສາລາວ<br>**ນັກຮຽນສາມາດ:**<br>1. ຝຶກ ແລະ ນຳໃຊ້ພາສາລາວຢ່າງຖືກຕ້ອງ.<br>2. ຟັງບົດເລື່ອງໃນຫົວຂໍ້ທີ່ຄຸ້ນເຄີຍ ແລະ ຈັບໃຈຄວາມຂອງບົດເລື່ອງ<br>3. ນຳໃຊ້ປະໂຫຍກທີ່ຄຸ້ນເຄີຍເຂົ້າໃນການເວົ້າທີ່ຈະແຈ້ງດ້ວຍຄຳເວົ້າຂອງຕົນເອງ<br>4. ນຳໃຊ້ຮູບແບບປະໂຫຍກທີ່ໄດ້ຮຽນໃນການສື່ສານຂໍ້ມູນຂອງຕົນເອງ. | **ນັກຮຽນຮູ້:**<br>ຄຳສັບ ແລະ ໄວຍາກອນໃນພາສາລາວໄດ້ທີ່ຫຼາກຫຼາຍຂຶ້ນ.<br>**ນັກຮຽນສາມາດ:**<br>**1.**ຮຽນຮູ້ ແລະ ນຳໃຊ້ພາສາລາວຈາກແຫຼ່ງຂໍ້.ມູນຕ່າງໆ.<br>2. ຟັງບົດເລື່ອງໃນຫົວຂໍ້ທີ່ຄຸ້ນເຄີຍ ແລະ ຈັບໃຈຄວາມຂອງບົດເລື່ອງ.<br>3. ນຳໃຊ້ປະໂຫຍກທີ່ມີຄຳເຊື່ອມ, ຄຳຕໍ່ທີ່ຫຼາກຫຼາຍເຂົ້າໃນການເວົ້າທີ່ຈະແຈ້ງດ້ວຍຄຳເວົ້າຂອງຕົນເອງ.<br>4. ດັດປັບໂຄງສ້າງປະໂຫຍກທີ່ໄດ້ຮຽນເພື່ອນຳໃຊ້ໃນບໍລິບົດຕ່າງໆ. | **ນັກຮຽນຮູ້:**<br>ຄຳສັບ ແລະ ໄວຍາກອນໃນພາສາລາວໄດ້ທີ່ຫຼາກຫຼາຍຂຶ້ນ.<br>**ນັກຮຽນສາມາດ:**<br>1.ກວດແກ້ຄຳຜິດໃນຫົວຂໍ້ຂອງຕົນເອງ.<br>2. ສະຫຼຸບຂໍ້ມູນທີ່ກ່ຽວພັນໃນເວລາຟັງໃນເງື່ອນໄຂທີ່ຄຸ້ນເຄີຍ<br>3.ຖາມຄຳຖາມເພື່ອເຮັດໃຫ້ຄວາມໝາຍແຈ້ງຂຶ້ນ.<br>4. ເຮັດໃຫ້ຄວາມໝາຍແຈ້ງໃນເວລາບອກລາຍລະອຽດກ່ຽວກັບຂໍ້ມູນ ແລະ ແນວຄວາມຄິດຂອງຕົນ.<br>5. ນຳສະເໜີວຽກກຸ່ມໃນຫ້ອງຮຽນ, ຍົກໃຫ້ເຫັນ ແລະ ອະທິບາຍຂໍ້ມູນສຳຄັນ. | **ນັກຮຽນຮູ້:**<br>ຄຳສັບ ແລະ ໄວຍາກອນໃນພາສາລາວໄດ້ທີ່ຫຼາກຫຼາຍຂຶ້ນ.<br>ຮູ້ເລືອກຄຳສັບທີ່ເໝາະສົມກັບຫົວຂໍ້ ແລະ ປັບປ່ຽນການເວົ້າຂອງຕົນເອງເພື່ອໃຫ້ເໝາະສົມກັບຄວາມຕ້ອງການຂອງຜູ້ຟັງ.<br>**ນັກຮຽນສາມາດ:**<br>1.ເຝິກ ແລະ ນຳໃຊ້ພາສາລາວທີ່ເປັນທາງການ ແລະ ບໍ່ເປັນທາງການໃນບໍລິບົດຕ່າງໆຢ່າງເໝາະສົມ. | **ນັກຮຽນຮູ້:**<br>ຄຳສັບ ແລະ ໄວຍາກອນໃນພາສາລາວໄດ້ທີ່ຫຼາກຫຼາຍຂຶ້ນ.<br>**ນັກຮຽນສາມາດ:**<br>1.ເຝິກ ແລະ ນຳໃຊ້ພາສາລາວໃນບໍລິບົດຕ່າງໆຢ່າງມີປະສິດທິພາບ.<br>2.ຈັບໃຈຄວາມຂໍ້ມູນທີ່ກ່ຽວຂ້ອງໃນເວລາຟັງເນັ້ນໃສ່ຮູບພາບ( ບໍ່ມີຕົວໜັງສື)<br>3. ສົນທະນາເພື່ອສະໜັບສະໜູນການປະກອບຄຳຄິດຄຳເຫັນຕ່າງໆ.<br>4. ເລືອກຄຳສັບທີ່ຍືດຢຸ່ນເພື່ອໃຫ້ເໝາະສົມກັບຈຸດປະສົງຂອງການເວົ້າ. |

| | | | | |
|---|---|---|---|---|
| 5. ນຳສະເໜີຂໍ້ມູນ ຈາກວຽກກຸ່ມໃນ ຫ້ອງຮຽນ. | 5. ນຳສະເໜີວຽກ ກຸ່ມຕໍ່ຫ້ອງຮຽນ, ຍົກໃຫ້ເຫັນຂໍ້ມູນສຳ ຄັນ. | | 2. ສະຫຼຸບຂໍ້ມູນ ທີ່ກ່ຽວພັນກັນ ໃນເວລາຟັງຂໍ້ ມູນທີ່ເນັ້ນໃສ່ ຕົວໜັງສື. 3. ສົນທະນາ ເພື່ອສະໜັບສະ ໜູນການ ປະກອບຄຳເຫັນ ໃຫ້ເໝາະສົມ. 4. ເລືອກຄຳສັບ ທີ່ເໝາະສົມກັບ ຫົວ ແລະ ປັບ ປ່ຽນການເວົ້າ ຂອງຕົນເອງເພື່ອ ໃຫ້ເໝາະສົມ ກັບຄວາມ ຕ້ອງການຂອງຜູ້ ຟັງ 5. ວາງແຜນ ແລະ ນຳສະເໜີ ບົດສັ້ນໆກ່ຽວ ກັບຫົວຂໍ້ທີ່ຄຸ້ນ ເຄີຍນຫ້ອງ ຮຽນ. | 8 5. ວາງແຜນ ແລະ ນຳສະເໜີບົດສັ້ນໆ ກ່ຽວກັບຫົວຂໍ້ໃດໜຶ່ ງໃນຫ້ອງຮຽນ. |
| **ອົງປະກອບ 2 ສຽງ ແລະ ການຜັນສຽງ** | | | | |
| ປ.1 | ປ. 2 | ປ. 3 | ປ. 4 | ປ. 5 |

| | | | | |
|---|---|---|---|---|
| **ນັກຮຽນຮູ້:**<br>ສຽງພື້ນຖານໃນພາສາລາວ<br>**ນັກຮຽນສາມາດ:**<br>1.ໄຈ້ແຍກລະຫວ່າງຄຳສັບໃນພາສາລາວເພື່ອລະບຸວ່າບັນດາຄຳສັບມີສຽງຄືກັນ ຫຼື ລະບຸວ່າຄຳສັບບໍ່ມີສຽງຂອງອັກສອນທີ່ໃຫ້ມາ<br>2. ປະສົມ 2 ຫຼື 3 ສຽງເພື່ອບອກການສ້າງຄຳສັບ( ສຳລັບຄຳສັບງ່າຍ).<br>3. ແຍກສ່ວນຄຳສັບໃດໜຶ່ງເພື່ອແຍກອົງປະກອບສຽງ ( 2 ຫຼື 3 ສຳລັບຄຳສັບງ່າຍ).<br>4. ເວົ້າ, ອອກສຽງພາສາລາວໄດ້ຢ່າງຖືກຕ້ອງ.<br>5. ນຳໃຊ້ກິດຈະກຳການເວົ້າຝຶກອອກສຽງທີ່ຍາກໃນບາງໂອກາດ. | **ນັກຮຽນຮູ້:**<br>ສຽງທັງໝົດໃນພາສາລາວ<br>**ນັກຮຽນສາມາດ:**<br>1.ລະບຸຈັງຫວະຂອງບັນດາຄຳສັບໃນບົດຄວາມ ແລະ ບອກຄຳສັບທີ່ເປັນຈັງຫວະສຳລັບບັນດາຄຳສັບທີ່ໃຫ້ມາ.<br>2. ປະສົມ 2 ຫຼື 3 ສຽງເພື່ອບອກການປະດິດສ້າງຄຳສັບ ( ສຳລັບທຸກຄຳສັບ)<br>4.ເພີ່ມ ຫຼື ຕັດຈາກບັນດາຄຳສັບ ຫຼື ສຽງທີ່ປ່ຽນແທນເພື່ອສ້າງຄຳສັບໃໝ່.<br>5.ເວົ້າ, ອອກສຽງພາສາລາວໄດ້ຢ່າງຖືກຕ້ອງ.<br>6. ນຳໃຊ້ກິດຈະກຳການເວົ້າໃນບົດຮຽນ ແລະ ຝຶກອອກສຽງທີ່ຍາກໃນບາງໂອກາດ. | **ນັກຮຽນຮູ້:**<br>ສຽງທີ່ຖືກຕ້ອງຂອງຄຳສັບພາສາລາວເປັນສ່ວນຫຼາຍ<br>**ນັກຮຽນສາມາດ:**<br>1.ອອກສຽງຄຳສັບພາສາລາວຢ່າງມີປະສິດທິພາບເປັນສ່ວນຫຼາຍ<br>2.ເວົ້າ, ອອກສຽງບົດຄວາມໃນພາສາລາວຢ່າງມີປະສິດທິພາບ. | | |

| ອົງປະກອບທີ 3 ຄຳສັບ | | | | |
|---|---|---|---|---|
| ປ.1 | ປ. 2 | ປ. 3 | ປ. 4 | ປ. 5 |
| **ນັກຮຽນຮູ້:** ຄວາມໝາຍຂອງຄຳສັບໃນພາສາລາວທີ່ນຳໃຊ້ເລື້ອຍໆໃນບົດຮຽນ **ນັກຮຽນສາມາດ:** 1.ນຳໃຊ້ຄຳສັບທີ່ໄດ້ຮຽນຮູ້ໃນບ່ອນທີ່ເໝາະສົມ. 2.ຕັ້ງຄຳຖາມເພື່ອຊອກຫາຄວາມໝາຍຂອງຄຳສັບໃໝ່. | **ນັກຮຽນຮູ້:** ຄວາມໝາຍຂອງຄຳສັບນພາສາລາວທີ່ເພີ່ມຂຶ້ນໃນບົດຮຽນ **ນັກຮຽນສາມາດ:** ນຳໃຊ້ຄຳສັບທີ່ໄດ້ຮຽນຈາກບັນດາບົດຮຽນໃນການສື່ສານຂອງຕົນເອງ. | **ນັກຮຽນຮູ້:** ຄວາມໝາຍຂອງຄຳສັບນພາສາລາວທີ່ເພີ່ມຂຶ້ນໃນບົດຮຽນ ແລະ ແຫຼ່ງການຮຽນຮູ້ອື່ນ. **ນັກຮຽນສາມາດ:** 1.ເລືອກ ແລະ ນຳໃຊ້ບັນດາຄຳສັບໃຫ້ແທດເໝາະກັບເງື່ອນໄຂ ແລະ ຫົວຂໍ້. | ນັກຮຽນຮູ້: ຄວາມໝາຍຂອງຄຳສັບນພາສາລາວທີ່ເພີ່ມຂຶ້ນໃນບົດຮຽນ ແລະ ແຫຼ່ງການຮຽນຮູ້ອື່ນ. **ນັກຮຽນສາມາດ:** 1.ເລືອກ ແລະ ນຳໃຊ້ບັນດາຄຳສັບໃຫ້ແທດເໝາະກັບເງື່ອນໄຂ ແລະ ຫົວຂໍ້ ອື່ນທີ່ຫຼາກຫຼາຍ. | ນັກຮຽນຮູ້: ຄວາມໝາຍຂອງຄຳສັບນພາສາລາວທີ່ເພີ່ມຂຶ້ນໃນບົດຮຽນ ແລະ ແຫຼ່ງການຮຽນຮູ້ອື່ນ. **ນັກຮຽນສາມາດ:** 1.ເລືອກ ແລະ ນຳໃຊ້ບັນດາຄຳສັບທີ່ເຮັດໃຫ້ມີຜົນເພີ່ມຂຶ້ນຕໍ່ກັບສິ່ງທີ່ເວົ້າ. |
| **ພາກທີ II ການອ່ານ** | | | | |
| **ອົງປະກອບທີ1 ຕົວອັກສອນ ແລະ ສຽງ** | | | | |
| ປ.1 | ປ. 2 | ປ. 3 | ປ. 4 | ປ. 5 |
| **ນັກຮຽນຮູ້:** ພະຍັນຊະນະເຄົ້າໃນພາສາລາວ, ພະຍັນຊະນະຄວບ, ພະຍັນຊະນະປະສົມ, | **ນັກຮຽນຮູ້:** ສະຫຼະປະສົມ, ວັນນະຍຸດທີ່ມີໄມ້... ແລະ ໄມ້...ສັນຍາ | | | |

| | | | | |
|---|---|---|---|---|
| ສະຫຼະເຄົ້າ, ສະຫຼະ ປະສົມ, ວັນຍຸດ ໄມ້ເອກ, ໄມ້ໂທ.<br>**ນັກຮຽນສາມາດ:**<br>1.ຊີ້ສັນຍາລັກຕ່າງໆ<br>2.ອອກສຽງສະເພາະ<br>3. ຄໍາສັບທີ່ຂຶ້ນຕົ້ນ ດ້ວຍ ຫຼື ປະກອບສຽງ ສະເພ | ລັກ, ພະຍັນຊະນະ ປະສົມທີ່ຍັງເຫຼືອ.<br>**ນັກຮຽນສາມາດ:**<br>1.ຊີ້ສັນຍາລັກຕ່າງໆ<br>2.ອອກສຽງ ສະເພາະ<br>3.ຄໍາສັບທີ່ຂຶ້ນຕົ້ນ ດ້ວຍ ຫຼື ປະກອບ ດ້ວຍສຽງສະເພາະ | | | |
| **ອົງປະກອບທີ 2 ຄໍາສັບ ແລະ ບົດຄວາມ - ນໍາໃຊ້ຄວາມຮູ້ກ່ຽວກັບສຽງ ( ການປະສົມ)** | | | | |
| ປ.1 | ປ. 2 | ປ. 3 | ປ. 4 | ປ. 5 |
| **ນັກຮຽນຮູ້:**<br>ນໍາໃຊ້ຄວາມຮູ້ຂອງ ສຽງອັກສອນເຂົ້າໃນ ການອ່ານຄໍາສັບງ່າຍທີ່ ບໍ່ຄຸ້ນເຄີຍ<br>**ນັກຮຽນສາມາດ:**<br>ຟັງສຽງ ແລະ ປະສົມ 2 ຫຼື 3 ສຽງ ອັກສອນເພື່ອ ອອກສຽງຄໍາສັບທີ່ໄດ້ ອ່ານ | **ນັກຮຽນຮູ້:**<br>ນໍາໃຊ້ຄວາມຮູ້ຂອງ ສຽງອັກສອນເຂົ້າໃນ ວິທີອ່ານຄໍາສັບທີ່ບໍ່ ຄຸ້ນເຄີຍ.<br>**ນັກຮຽນສາມາດ:**<br>1.ຟັງສຽງ ແລະ ປະສົມ 2 ຫຼື 3 ຄໍາ ສຽງອັກສອນເພື່ອ ອອກສຽງຄໍາສັບທີ່ ໄດ້ອ່ານ ( ສໍາລັບ ທຸກຄໍາສັບ)<br>2.ເພີ່ມ ຫຼື ຕັດອອກ ຈາກຄໍາສັບ ຫຼື ອັກສອນປ່ຽນແທນ ເພື່ອສ້າງຄໍາສັບອື່ນ | **ນັກຮຽນຮູ້:**<br>ນໍາໃຊ້ຄວາມຮູ້ຂອງ ສຽງອັກສອນເຂົ້າໃນ ອ່ານຄໍາສັບທີ່ບໍ່ຄຸ້ນ ເຄີຍ.<br>**ນັກຮຽນສາມາດ:**<br>1.ນໍາໃຊ້ການອ່ານ ປະສົມດ້ວຍຄວາມ ຄ່ອງແຄ້ວໃຫ້ຫຼາຍ ຂຶ້ນ.<br>2.ຖອດລະຫັດຄໍາສັບ ຫຼາຍໃຫ້ໄດ້. | **ນັກຮຽນຮູ້:**<br>ນໍາໃຊ້ຄວາມຮູ້ ຂອງສຽງ ອັກສອນເຂົ້າໃນ ອ່ານຄໍາສັບທີ່ບໍ່ ຄຸ້ນເຄີຍ.<br>**ນັກຮຽນ ສາມາດ:**<br>1.ນໍາໃຊ້ການ ອ່ານປະສົມ ດ້ວຍຄວາມຄ່ອງ ແຄ້ວໃຫ້ຫຼາຍ ຂຶ້ນ. | **ນັກຮຽນຮູ້:**<br>ນໍາໃຊ້ຄວາມຮູ້ຂອງ ສຽງອັກສອນເຂົ້າໃນ ອ່ານຄໍາສັບທີ່ບໍ່ຄຸ້ນ ເຄີຍ.<br>**ນັກຮຽນສາມາດ:**<br>1.ນໍາໃຊ້ການອ່ານ ປະສົມດ້ວຍຄວາມ ຄ່ອງແຄ້ວໃຫ້ຫຼາຍ ຂຶ້ນ.<br>2.ຊອກຄໍາສັບທີ່ບໍ່ ຄຸ້ນເຄີຍຈາກ ພົດຈະນານຸກົມ. |

| **ອົງປະກອບທີ 3 ຄໍາສັບທີ່ຄຸ້ນເຄີຍ** | | | | |
|---|---|---|---|---|
| ປ.1 | ປ. 2 | ປ. 3 | ປ. 4 | ປ. 5 |
| **ນັກຮຽນຮູ້:**<br>ສໍານຶກໄດ້ບັນດາຄໍາສັບງ່າຍທີ່ໄດ້ເຫັນເລື້ອຍໆ( ຮູ້ໂດຍປາສະຈາກການອ່ານອັກສອນແຕ່ລະຕົວ)<br>**ນັກຮຽນສາມາດ:**<br>1.ສໍານຶກໄດ້ຢ່າງໜ້ອຍຄໍາສັບ.<br>2. ນໍາໃຊ້ຄວາມຮູ້ກ່ຽວກັບຄໍາສັບທີ່ຄຸ້ນເຄີຍເພື່ອການອ່ານທີ່ຄ່ອງແຄ້ວຂຶ້ນ. | **ນັກຮຽນຮູ້:**<br>ສໍານຶກໄດ້ບັນດາຄໍາສັບງ່າຍທີ່ໃຊ້ເລື້ອຍໆຈໍານວນເພີ່ມຂຶ້ນ( ຮູ້ໂດຍປາສະຈາກການອ່ານອັກສອນແຕ່ລະຕົວ).<br>**ນັກຮຽນສາມາດ:**<br>1.ສໍານຶກໄດ້ຢ່າງໜ້ອຍ 150 ຄໍາສັບ.<br>2.ນໍາໃຊ້ຄວາມຮູ້ກ່ຽວກັບຄໍາສັບທີ່ຄຸ້ນເຄີຍເພື່ອການອ່ານທີ່ຄ່ອງແຄ້ວຂຶ້ນ. | **ນັກຮຽນຮູ້:**<br>ສໍານຶກໄດ້ບັນດາຄໍາສັບງ່າຍທີ່ໃຊ້ເລື້ອຍໆດ້ວຍຕາເປົ່າຈໍານວນເພີ່ມຂຶ້ນ( ຮູ້ໂດຍປາສະຈາກການອ່ານອັກສອນແຕ່ລະຕົວ)<br>**ນັກຮຽນສາມາດ:**<br>1.ສໍານຶກໄດ້ຢ່າງໜ້ອຍ 300 ຄໍາສັບ<br>2. ນໍາໃຊ້ຄວາມຮູ້ກ່ຽວກັບຄໍາສັບທີ່ຄຸ້ນເຄີຍເພື່ອການອ່ານທີ່ຄ່ອງແຄ້ວຂຶ້ນ. | **ນັກຮຽນຮູ້:**<br>ສໍານຶກໄດ້ບັນດາຄໍາສັບງ່າຍທີ່ພົບເຫັນເລື້ອຍໆດ້ວຍຕາເປົ່າ.<br>**ນັກຮຽນສາມາດ:**<br>1.ສໍານຶກໄດ້ບັນດາຄໍາສັບທີ່ພົບເປັນປົກກະຕິຈໍານວນຫຼາຍ.<br>2.ນໍາໃຊ້ຄວາມຮູ້ກ່ຽວກັບຄໍາສັບທີ່ຄຸ້ນເຄີຍເພື່ອການອ່ານທີ່ຄ່ອງແຄ້ວຂຶ້ນ. | **ນັກຮຽນຮູ້:**<br>ສໍານຶກໄດ້ບັນດາຄໍາສັບທີ່ພົບເຫັນເລື້ອຍໆ.<br>**ນັກຮຽນສາມາດ:**<br>1.ນໍາໃຊ້ຄວາມຮູ້ກ່ຽວກັບຄໍາສັບທີ່ເຫັນດ້ວຍຕາເປົ່າເພື່ອການອ່ານທີ່ຄ່ອງແຄ້ວ. |
| **ອົງປະກອບທີ 4 ການຄາດເດົາຄໍາສັບ** | | | | |
| ປ.1 | ປ. 2 | ປ. 3 | ປ. 4 | ປ. 5 |
| **ນັກຮຽນຮູ້:**<br>ເລີ່ມຕົ້ນອະທິບາຍກ່ຽວກັບຕົວອັກສອນ, ປະໂຫຍກ, ເນື້ອໃນ, ໄວຍາກອນ ແລະ ຮູບ | **ນັກຮຽນຮູ້:**<br>ເລີ່ມຕົ້ນອະທິບາຍກ່ຽວກັບຕົວອັກສອນ, ປະໂຫຍກ, ເນື້ອໃນ, | **ນັກຮຽນຮູ້:**<br>ປະເພດບົດຄວາມແລະຮູບຮ່າງຂອງບົດຄວາມທີ່ສາມາດນໍາໃຊ້ຮ່ວມກັບວິທີອື່ນ | **ນັກຮຽນຮູ້:**<br>ວິທີໃນການອ່ານບົດທີ່ຫຼາກຫຼາຍຢ່າງວ່ອງໄວ ແລະ ຖືກຕ້ອງ. | **ນັກຮຽນຮູ້:**<br>ວິທີໃນການອ່ານບົດທີ່ຫຼາກຫຼາຍຢ່າງວ່ອງໄວ ແລະ ຖືກຕ້ອງ. |

| | | | | |
|---|---|---|---|---|
| ຮ່າງຂອງຄຳສັບເພື່ອຄາດເດົາຄຳສັບໃດໜຶ່ງໂດຍປາສະຈາກການອ່ານແຕ່ລະຕົວອັກສອນ. **ນັກຮຽນສາມາດ:** 1.ນຳໃຊ້ການຄາດເດົາເພື່ອການອ່ານຢ່າງຄ່ອງແຄ້ວຂຶ້ນ. | ໄວຍາກອນ ແລະ ຮູບຮ່າງຂອງຄຳສັບເພື່ອຄາດເດົາຄຳສັບໃດໜຶ່ງໂດຍປາສະຈາກການອ່ານແຕ່ລະຕົວອັກສອນ. **ນັກຮຽນສາມາດ:** 1.ນຳໃຊ້ການຄາດເດົາເພື່ອການອ່ານຢ່າງຄ່ອງແຄ້ວຂຶ້ນ. 2.ນຳໃຊ້ການອ່ານອອກສຽງເຂົ້າໃນການຕິດຕາມເພື່ອກວດແກ້ການຄາດເດົາຂອງຕົນ ແລະ ອ່ານຄືນເມື່ອມີຄວາມຈຳເປັນ | ເພື່ອຄາດເດົາຄຳສັບໃດໜຶ່ງໂດຍປາສະຈາກການອ່ານ. **ນັກຮຽນສາມາດ:** 1.ນຳໃຊ້ການຄາດເດົາເພື່ອການອ່ານຢ່າງຄ່ອງແຄ້ວຂຶ້ນ. 2.ນຳໃຊ້ການອ່ານອອກສຽງເຂົ້າໃນການຕິດຕາມເພື່ອກວດແກ້ການຄາດເດົາຂອງຕົນ ແລະ ອ່ານຄືນເມື່ອມີຄວາມຈຳເປັນ. | **ນັກຮຽນສາມາດ:** 1.ການອ່ານໂດຍນຳໃຊ້ການຄາດເດົາ ແລະ ຄວາມຖືກຕ້ອງຕ້ອງອ່ານບົດຄວາມເພື່ອຈັບໃຈຄວາມດ້ວຍຄວາມໄວ ແລະ ນຳໃຊ້ແຫຼ່ງການຮຽນຮູ້ອື່ນເພື່ອຢັ້ງຢືນຄຳສັບທີ່ບໍ່ຄຸ້ນເຄີຍ. | **ນັກຮຽນສາມາດ:** 1.ເລືອກວິທີໃນການອ່ານຢ່າງເໝາະສົມກັບບົດອ່ານ. |
| **ອົງປະກອບທີ 5 ການນຳເຄື່ອງໝາຍວັກຕອນເຂົ້າໃນການແຕ່ງບົດຄວາມ** | | | | |
| ປ.1 | ປ. 2 | ປ. 3 | ປ. 4 | ປ. 5 |
| **ນັກຮຽນຮູ້:** ປະດິດສ້າງບົດຄວາມໃນຫົວຂໍ້ໃດໜຶ່ງ, ໃຊ້ເຄື່ອງໝາຍວັກຕອນງ່າຍໆໝາຍຈ້ຳ, ໝາຍຈຸດ, ໝາຍວົງຢືມ ແລະ ໝາຍທ້ວງເຂົ້າໃນການເວົ້າ. | **ນັກຮຽນຮູ:** ການປະດິດສ້າງບົດດ້ວຍຫົວຂໍ້ລວມ, ຄຳອະທິບາຍ, ຮູບແບບຂອງບົດ, ເຄື່ອງໝາຍຈ້ຳ ແລະ ເຄື່ອງໝາຍສອງຈ້ຳ. **ນັກຮຽນສາມາດ:** | **ນັກຮຽນຮູ້:** ປະດິດສ້າງຫົວເພີ່ມຂຶ້ນ ແລະ ຄວາມແຕກຕ່າງທາງໂຄງສ້າງຂອງປະເພດບົດຄວາມລວມທັງການນຳໃຊ້ເຄື່ອງໝາຍ ແລະ ແຜນວາດໃນ | **ນັກຮຽນຮູ້:** ປະດິດສ້າງບົດເພີ່ມຂຶ້ນ ແລະ ຄວາມແຕກຕ່າງທາງໂຄງສ້າງຂອງປະເພດບົດຄວາມທີ່ຫຼາກຫຼາຍ. | **ນັກຮຽນຮູ້:** ປະດິດສ້າງບົດເພີ່ມຂຶ້ນ ແລະ ຄວາມແຕກຕ່າງທາງໂຄງສ້າງຂອງປະເພດບົດຄວາມທີ່ຫຼາກຫຼາຍ. **ນັກຮຽນສາມາດ:** |

| | | | | |
|---|---|---|---|---|
| **ນັກຮຽນສາມາດ:**<br>1.ນຳໃຊ້ເຄື່ອງໝາຍ ວັກຕອນເຂົ້າໃນການ ອ່ານຢ່າງຄ່ອງແຄ້ວ ແລະ ເພື່ອຄວາມ ເຂົ້າໃຈ. | 1.ນຳໃຊ້ເຄື່ອງໝາຍ ວັກຕອນເຂົ້າໃນ ການອ່ານຢ່າງຄ່ອງ ແຄ້ວ ແລະ ເພື່ອ ຄວາມເຂົ້າໃຈ. | ການນຳສະເໜີຂໍ້ມູນທີ່ ຫຼາກຫຼາຍ.<br>**ນັກຮຽນສາມາດ:**<br>1.ນຳໃຊ້ເຄື່ອງໝາຍ ວັກຕອນເຂົ້າໃນການ ອ່ານຢ່ອງຄ່ອງແຄ້ວ ແລະ ເພື່ອຄວາມ ເຂົ້າໃຈ.<br>2.ລະບຸຄວາມແຕກ ຕ່າງລະຫວ່າງບົດເວົ້າ ແລະ ບົດຂຽນໃນບົດ ທີ່ຟັງ ແລະ ອ່ານ. | **ນັກຮຽນ ສາມາດ:**<br>1.ນຳໃຊ້ເຄື່ອງໝ າຍວັກຕອນເຂົ້າ ໃນການອ່ານຢ່າງ ຄ່ອງແຄ້ວ ແລະ ເພື່ອຄວາມ ເຂົ້າໃຈ. | 1.ນຳໃຊ້ເຄື່ອງໝາຍ ວັກຕອນເຂົ້າໃນ ການອ່ານຢ່າງຄ່ອງ ແຄ້ວ ແລະ ເພື່ອ ຄວາມເຂົ້າໃຈ. |
| **ອົງປະກອບທີ 6 ການອ່ານອອກສຽງ** | | | | |
| ປ.1 | ປ. 2 | ປ. 3 | ປ. 4 | ປ. 5 |
| **ນັກຮຽນຮູ້:**<br>ວິທີການອ່ານ ອອກສຽງບົດຄວາມ ດ້ວຍນ້ຳສຽງ, ການ ວາງສຽງທີ່ເໝາະສົມ ກັບຄວາມໝາຍຂອງ ບົດ( ບົດທີ່ບໍ່ຄຸ້ນເຄີຍ ກ່ຽວກັບຫືວຂໍ້ ຄອບຄົວກວມເອົາຄຳ ສັບທີ່ໄດ້ຮຽນມາ. ຂໍ້ ສັງເກດ: ໃຫ້ເວລາ ນັກຮຽນກ່ອນການ ອ່ານອອກສຽງ ເພື່ອ | **ນັກຮຽນຮູ້:**<br>ວິທີອ່ານອອກສຽງ ບົດຄວາມດ້ວນນ້ຳ ສຽງ ແລະ ໄລຍະ ຫ່າງທີ່ເໝາະສົມໃຫ້ ແທດເໝາະກັບ ຄວາມໝາຍຂອງບົດ ຄວາມ ( ບົດທີ່ບໍ່ຄຸ້ນ ເຄີຍກ່ຽວກັບຫົວຂໍ້ ຄອບຄົວກວມເອົາ ຄຳສັບທີ່ໄດ້ຮຽນ ມາ) ຂໍ້ສັງເກດ: ໃຫ້ ເວລານັກຮຽນກ່ອນ | **ນັກຮຽນຮູ້:**<br>ວິທີອ່ານອອກສຽງບົດ ຄວາມດ້ວນນ້ຳສຽງ ແລະ ໄລຍະຫ່າງທີ່ເໝ າະສົມໃຫ້ແທດເໝາະ ກັບຄວາມໝາຍຂອງ ບົດຄວາມ ( ບົດ ທີ່ບໍ່ຄຸ້ນເຄີຍກ່ຽວກັບ ຫົວຂໍ້ຄອບຄົວກວມ ເອົາຄຳສັບທີ່ໄດ້ຮຽນ ມາ) ຂໍ້ສັງເກດ: ໃຫ້ ເວລານັກຮຽນກ່ອນ ການອ່ານອອກສຽງ | **ນັກຮຽນຮູ້:**<br>ວິທີອ່ານ ອອກສຽງບົດ ຄວາມດ້ວນນ້ຳ ສຽງ ແລະ ໄລຍະຫ່າງທີ່ເໝ າະສົມໃຫ້ແທດເ ໝາະກັບຄວາມ ໝາຍຂອງບົດ ຄວາມ( ບົດທີ່ບໍ່ ຄຸ້ນເຄີຍກ່ຽວກັບ ຫົວຂໍ້ຄອບຄົວ ກວມເອົາຄຳສັບ | **ນັກຮຽນຮູ້:**<br>ວິທີອ່ານອອກສຽງ ບົດຄວາມດ້ວນນ້ຳ ສຽງ ແລະ ໄລຍະ ຫ່າງທີ່ເໝາະສົມໃຫ້ ແທດເໝາະກັບ ຄວາມໝາຍຂອງບົດ ຄວາມ.<br>**ນັກຮຽນສາມາດ:**<br>1.ອ່ານອອກສຽງບົດ ຄວາມໃດໜຶ່ງຢ່າອງ ຄ່ອງແຄ້ວ ( 1 ໜ້າ ເຈ້ຍ). |

| | | | | |
|---|---|---|---|---|
| ອ່ານບົດຄວາມດ້ວຍຕົນເອງ.<br>**ນັກຮຽນສາມາດ:**<br>1.ອ່ານອອກສຽງບົດຄວາມໄດ້ຢ່າງຄ່ອງແຄ້ວ ປລພ ປົງສຽງຖືກຕາມເຄື່ອງໝາຍວັກຕອນ ( ຮອດ 10 ປະໂຫຍກສັ້ນໆ) | ການອ່ານອອກສຽງເພື່ອອ່ານບົດຄວາມດ້ວຍຕົນເອງ.<br>**ນັກຮຽນສາມາດ:**<br>1.ອ່ານອອກສຽງໄດ້ຢ່າງຄ່ອງແຄ້ວ ແລະ ປົງສຽງຖືກຕ້ອງຕາມເຄື່ອງໝາຍວັກຕອນ( ຮອດ 15 ປະໂຫຍກທີ່ມີຄວາມຍາວປານກາງກວມເອົາການໃຊ້ເຄື່ອງໝາຍວັກຕອນ) | ເພື່ອອ່ານບົດຄວາມຕໍ່ຕົນເອງ.<br>**ນັກຮຽນສາມາດ:**<br>1.ອ່ານອອກສຽງບົດຄວາມໄດ້ຢ່າງຄ່ອງແຄ້ວ ແລະ ປົງສຽງຖືກຕາມເຄື່ອງໝາຍວັກຕອນ ( ຮອດ ½ ໜ້າເຈ້ຍທີ່ມີຄວາມຍາວປານກາງກວມເອົາການໃຊ້ເຄື່ອງໝາວັກຕອນ ແລະ ປະໂຫຍກຍາກຂຶ້ນ). | ທີ່ໄດ້ຮຽນມາ) ຂໍ້ສັງເກດ: ໃຫ້ເວລານັກຮຽນກ່ອນການອ່ານອອກສຽງ ເພື່ອອ່ານບົດຄວາມຕໍ່ຕົນເອງ.<br>**ນັກຮຽນສາມາດ:**<br>1.ອ່ານອອກສຽງບົດຄວາມໃດໜຶ່ງຢ່າອງຄ່ອງແຄ້ວ ( 1ໜ້າເຈ້ຍ) | |
| **ອົງປະກອບທີ 7 ການອ່ານເພື່ອຫາຄວາມໝາຍ** | | | | |
| ປ.1 | ປ. 2 | ປ. 3 | ປ. 4 | ປ. 5 |
| **ນັກຮຽນຮູ້:**<br>ອ່ານບດຕາມຈຸດປະສົງເພື່ອຄວາມເຂົ້າໃຈຄວາມໝາຍຂອງບົດຄວາມ<br>**ນັກຮຽນສາມາດ:**<br>1.ອ່ານບົດຄວາມທີ່ໄດ້ຮຽນມາຢ່າງວ່ອງໄວ ແລະ ຖືກຕ້ອງທັງເຂົ້າໃຈຄວາມໝາຍ | **ນັກຮຽນຮູ້:**<br>ອ່ານບົດຄວາມຕາມຈຸດປະສົງເພື່ອເຂົ້າໃຈຄວາມໝາຍຂອງບົດຄວາມ.<br>**ນັກຮຽນສາມາດ:**<br>1.ອ່ານບົດຄວາມທີ່ໄດ້ຮຽນມາຢ່າງວ່ອງໄວ ແລະ ຖືກຕ້ອງເພື່ອເຂົ້າໃຈຄວາມໝາຍ ແລະ | **ນັກຮຽນຮູ້:**<br>ອ່ານບົດຄວາມຕາມຈຸດປະສົງເພື່ອເຂົ້າໃຈຄວາມໝາຍຂອງບົດຄວາມ.<br>**ນັກຮຽນສາມາດ:**<br>1.ອ່ານບົດຄວາມທີ່ໄດ້ຮຽນມາຢ່າງວ່ອງໄວ ແລະ ຖືກຕ້ອງເພື່ອເຂົ້າໃຈຄວາມໝາຍ ແລະ ສາມາດຕອບຄຳ | **ນັກຮຽນຮູ້:**<br>ອ່ານບົດຕາມຈຸດປະສົງເພື່ອເຂົ້າໃຈຄວາມໝາຍຂອງບົດຄວາມ.<br>**ນັກຮຽນສາມາດ:**<br>1.ອ່ານບົດຄວາມທີ່ໄດ້ຮຽນມາຢ່າອງວ່ອງໄວ | **ນັກຮຽນຮູ້:**<br>ອ່ານບົດຕາມຈຸດປະສົງເພື່ອເຂົ້າໃຈຄວາມໝາຍຂອງບົດຄວາມ.<br>**ນັກຮຽນສາມາດ:**<br>1.ອ່ານບົດຄວາມທີ່ໄດ້ຮຽນມາຢ່າງວ່ອງໄວ ແລະ ຖືກຕ້ອງເພື່ອເຂົ້າໃຈຄວາມໝາຍ ແລະ |

| | | | | |
|---|---|---|---|---|
| ແລະ ສາມາດຕອບຄຳຖາມ (ຂັ້ນຕ່ຳ )<br>2.ອ່ານ ແລະ ເຂົ້າໃຈຄຳສັບ, ປະໂຫຍກ ແລະ ການເຮັດກິດຈະກຳບາງຢ່າງໄດ້ ( ຈັບຄູ່ຮູບພາບ, ຈັດລຽງປະໂຫຍກ, ຕື່ມໃສ່ບ່ອນຫວ່າງ ແລະ ອື່ນໆ).<br>3. ນຳໃຊ້ຂໍ້ມູນດ້ວຍຄວາມເອົາໃຈໃສ່ ເພື່ອເຂົ້າໃຈຄວາມໝາຍຂອງບົດ ແລະ ປຶ້ມອື່ນໆທີ່ໄດ້ອ່ານ( ຊັ້ນປ.1 ) | ສາມາດຕອບຄຳຖາມໄດ້ເປັນສ່ວນຫຼາຍ ( ລະດັບສູງຈຳນວນໜຶ່ງ).<br>2.ອ່ານ ແລະ ເຂົ້າໃຈຄຳສັບ, ປະໂຫຍກ ແລະ ບາງບົດຄວາມຍາວຂຶ້ນເພື່ອດຳເນີນກິດຈະກຳບາງຢ່າງໄດ້( ຈັບຄູ່ຮູບພາບ, ຈັດລຽງປະໂຫຍກ, ຕື່ມສ່ບ່ອນຫວ່າງ ແລະ ອື່ນໆ).<br>3.ນຳໃຊ້ຂໍ້ມູນທີ່ມີໃນບົດ ແລະ ປຶ້ມອື່ນໆທີ່ໄດ້ອ່ານ, ຟັງ ( ຊັ້ນປ.2). | ຖາມໄດ້ເປັນສ່ວນໃຫຍ່ ( ລະດັບສູງຈຳນວນໜຶ່ງ).<br>2.ອ່ານ ແລະ ເຂົ້າໃຈຄຳສັບ, ປະໂຫຍກ ແລະ ບາງບົດຄວາມທີ່ຍາວກວ່າເພື່ອດຳເນີນກິດຈະກຳທີ່ຍາກຂຶ້ນໄດ້.<br>3.ສົນທະນາຄວາມໝາຍຂອງປຶ້ມເລື່ອງ ແລະ ປຶ້ມອື່ນໆທີ່ໄດ້ອ່ານ, ຟັງລວມທັງແປຄວາມ ໝາຍ ແລະ ສິ່ງທີ່ໄດ້ຮຽນຮູ້ຈາກສິ່ງເຫຼົ່ານັ້ນ( ຊັ້ນປ.3 ) | ແລະ ຖືກຕ້ອງເພື່ອເຂົ້າໃຈຄວາມໝາຍເປັນສ່ວນໃຫຍ່ເຮັດໃຫ້ເຂົາເຈົ້າສາມາດຕອບຄຳຖາມ ( ລະດັບສູງຂຶ້ນ).<br>2.ອ່ານ ແລະ ເຂົ້າໃຈຄຳສັບ, ປະໂຍກ ແລະ ບາງບົດຄວາມທີ່ຍາວກວ່າເພື່ອດຳເນີນກິດຈະກຳທີ່ຍາກຂຶ້ນໄດ້.<br>3.ສົນທະນາຕາມຈຸດປະສົງຂອງບົດເລື່ອງ ແລະ ຂໍ້ຄວາມຈິງໃນປຶ້ມທີ່ໄດ້ອ່ານ ແລະ ສິ່ງທີ່ໄດ້ຮຽນຮູ້ຈາກສິ່ງເຫຼົ່ານັ້ນ ( ຊັ້ນປ.4 ) | ສາມາດຕອບຄຳຖາມໄດ້ເປັນສ່ວນໃຫຍ່( ລະດັບສູງຂຶ້ນ)<br>2.ອ່ານ ແລະ ໃຈຄຳສັບ,ປະໂຫຍກ ແລະ ບາງບົດຄວາມທີ່ຍາວກວ່າເພື່ອດຳເນີນກິດຈະກຳທີ່ຍາກຂຶ້ນໄດ້.<br>3.ສົນທະນາຕາມຈຸດປະສົງຂອງບົດເລື່ອງ ແລະ ຂໍ້ຄວາມຈິງໃນປຶ້ມທີ່ໄດ້ອ່ານ ແລະ ປະເມີນ ຫຼື ຂໍ້ມູນໃນຊີວິດປະຈຳວັນ ( ຊັ້ນ ປ.5 ) |
| **ພາກທີ III ການຂຽນ** | | | | |
| **ອົງປະກອບທີ 1 ການຂຽນດ້ວຍມື** | | | | |
| ປ.1 | ປ. 2 | ປ. 3 | ປ. 4 | ປ. 5 |

| | | | | |
|---|---|---|---|---|
| **ນັກຮຽນຮູ້:**<br>ວິທີການຮ່າງຕົວອັກສອນ ແລະ ວິທີໃຊ້ແຖວກວ້າງໃນການຂຽນຫຼາຍແບບ.<br>**ນັກຮຽນສາມາດ:**<br>1.ຂຽນອັກສອນໂດຍເລີ່ມຈາກບ່ອນທີ່ຖືກຕ້ອງ.<br>2.ຂຽນອັກສອນໃນຮູບແບບ ແລະ ຂະໜາດທີ່ຖືກຕ້ອງໃສ່ແຖວສຳລັບການຂຽນ. | **ນັກຮຽນຮູ້:**<br>ວິທີຮ່າງຕົວອັກສອນ ແລະ ວິທີໃຊ້ແຖວໃນການຂຽນ.<br>**ນັກຮຽນສາມາດ:**<br>1.ຂຽນອັກສອນຖືກຕ້ອງຕາມຮູບຮ່າງ, ຂະໜາດ ແລະ ແຖວ. | **ນັກຮຽນຮູ້:**<br>ວິທີຮ່າງຕົວອັກສອນ ແລະ ຂຽນໃສ່ແຖວທີ່ໜ້ອຍກວ່າໄດ້.<br>**ນັກຮຽນສາມາດ:**<br>1.ຂຽນຢ່າງເປັນລະບຽບດ້ວຍຄວາມຖືກຕ້ອງ ແລະ ວ່ອງໄວ. | **ນັກຮຽນຮູ້:**<br>ວິທີການຮ່າງຕົວອັກສອນຂຽນໃສ່ແຖວຂະໜາດມາດຕະຖານ.<br>**ນັກຮຽນສາມາດ:**<br>1.ຂຽນຢ່າງເປັນລະບຽບດ້ວຍຄວາມຖືກຕ້ອງ ແລະ ວ່ອງໄວເພື່ອເຕີມເຕັມຄວາມຕ້ອງການຂອງທຸກກິດຈະກຳໃນປົດຮຽນ | **ນັກຮຽນຮູ້:**<br>ວິທີການຮ່າງຕົວອັກສອນຂຽນໃສ່ແຖວຂະໜາດມາດຕະຖານ.<br>**ນັກຮຽນສາມາດ:**<br>1.ປັບປ່ຽນຮູບແບບການຂຽນສຳລັບກິດຈະກຳຕ່າງໆ. |
| **ອົງປະກອບທີ 2 ການສະກົດຄຳ - ການນຳໃຊ້ຄວາມຮູ້ກ່ຽວກັບສຽງ (ການຈຳແນກຕົວອັກສອນ )** | | | | |
| ປ.1 | ປ. 2 | ປ. 3 | ປ. 4 | ປ. 5 |
| **ນັກຮຽນຮູ້:**<br>ນຳໃຊ້ຄວາມຮູ້ຂອງສຽງອັກສອນເຂົ້າໃນການຂຽນຄຳສັບງ່າຍທີ່ບໍ່ຄຸ້ນເຄີຍ.<br>**ນັກຮຽນສາມາດ:**<br>1.ແຍກສ່ວນ ແລະ ຂຽນອັກສອນສຳລັບແຕ່ລະສຽງຂອງຄຳສັບ | **ນັກຮຽນຮູ້:**<br>ນຳໃຊ້ຄວາມຮູ້ຂອງສຽງອັກສອນເຂົ້າໃນວິທີການຂຽນຄຳສັບງ່າຍທີ່ບໍ່ຄຸ້ນເຄີຍ.<br>**ນັກຮຽນສາມາດ:**<br>1.ແຍກສ່ວນຂຽນອັກສອນສຳລັບແຕ່ລະສຽງຂອງຄຳສັບ | **ນັກຮຽນຮູ້:**<br>ນຳໃຊ້ຄວາມຮູ້ຂອງສຽງອັກສອນເຂົ້າໃນວິທີຂຽນຄຳສັບງ່າຍທີ່ບໍ່ຄຸ້ນເຄີຍ.<br>**ນັກຮຽນສາມາດ:**<br>1.ສະກົດຄຳໂດຍການແຍກແຍກສ່ວນເພື່ອເພີ່ມຄວາມວ່ອງໄວ. | **ນັກຮຽນຮູ້:**<br>ນຳໃຊ້ຄວາມຮູ້ຂອງສຽງອັກສອນເຂົ້າໃນວິທີຂຽນຄຳສັບງ່າຍທີ່ບໍ່ຄຸ້ນເຄີຍ.<br>**ນັກຮຽນສາມາດ:** | **ນັກຮຽນຮູ້:**<br>ນຳໃຊ້ຄວາມຮູ້ຂອງສຽງອັກສອນເຂົ້າໃນວິທີຂຽນຄຳສັບງ່າຍທີ່ບໍ່ຄຸ້ນເຄີຍ.<br>**ນັກຮຽນສາມາດ:**<br>1.ສະກົດຄຳໂດຍການແຍກສ່ວນເພື່ອເພີ່ມຄວາມວ່ອງໄວ. |

| | | | | |
|---|---|---|---|---|
| ຕາມເປົ້າໝາຍໃຫ້ໄດ້ ຫຼື ການສະກົດຄໍາ. | ເປົ້າໝາຍ ( ຄໍາສັບ ໃດໜຶ່ງ ) ໃຫ້ໄດ້ ຫຼື ການສະກົດຄໍາ. | 2.ສະກົດຄໍາສັບໄດ້ ຖືກຕ້ອງເປັນສ່ວນ ຫຼາຍ. | 1.ສະກົດຄໍາ ໂດຍການແຍກ ສ່ວນເພື່ອເພີ່ມ ຄວາມວ່ອງໄວ.<br>2.ນໍາໃຊ້ ອຸປະກອນໃນ ຫ້ອງຮຽນເພື່ອ ກວດກາຄວາມ ຖືກຕ້ອງຂອງ ການສະກົດຄໍາ. | 2.ນໍາໃຊ້ ວັດຈະນານຸກົມໃນ ການກວດກາຄວາມ ຖືກຕ້ອງຂອງການ ສະກົດຄໍາ. |
| **ອົງປະກອບທີ 3 ຄໍາສັບທີ່ຄຸ້ນເຄີຍ** | | | | |
| ປ.1 | ປ. 2 | ປ. 3 | ປ. 4 | ປ. 5 |
| **ນັກຮຽນຮູ້:**<br>ວິທີຂຽນຄໍາສັບຂັ້ນສູງ ທີ່ງ່າຍຈາກຄວາມຈໍາ<br><br>**ນັກຮຽນສາມາດ:**<br>1.ຂຽນຄໍາສັບຂັ້ນສູງ ຫຼາຍຂຶ້ນຢ່າງວ່ອງໄວ ໂດຍບໍ່ມີການແຍກ ສ່ວນ. | **ນັກຮຽນຮູ້:**<br>ວິທີການຂຽນຄໍາສັບ ຂັ້ນສູງຈາກການ ເພີ່ມຈໍານວນຂຶ້ນທີ່ ເຂົາເຈົ້າສາມາດຂຽນ ຈາກຄວາມຈໍາ.<br><br>**ນັກຮຽນສາມາດ:**<br>1.ຂຽນຄໍາສັບຂັ້ນສູງ ຫຼາຍຂຶ້ນຢ່າງວ່ອງໄວ ໂດຍບໍ່ມີການແຍກ ສ່ວນ. | **ນັກຮຽນຮູ້:**<br>ວິທີຂຽນຄໍາສັບຂັ້ນສູງ ຈາກການເພີ່ມຈໍາ ນວນຂຶ້ນທີ່ເຂົາເຈົ້າ ສາມາດຂຽນຈາກ ຄວາມຈໍາ.<br><br>**ນັກຮຽນສາມາດ:**<br>1.ຂຽນຄໍາສັບຂັ້ນສູງ ຫຼາຍຂຶ້ນຢ່າງວ່ອງໄວ ໂດຍບໍ່ມີການແຍກ ສ່ວນ. | **ນັກຮຽນຮູ້:**<br>ວິທີຂຽນຄໍາສັບ ຂັ້ນສູງຈາກການ ເພີ່ມຈໍານວນຂຶ້ນ ທີ່ເຂົາເຈົ້າ ສາມາດຂຽນ ຈາກຄວາມຈໍາ.<br><br>**ນັກຮຽນ ສາມາດ:**<br>1.ຂຽນຄໍາສັບ ຂັ້ນສູງຫຼາຍຂຶ້ນ ຢ່າງວ່ອງໄວໂດຍ | **ນັກຮຽນຮູ້:**<br>ວິທີຂຽນຄໍາສັບຂັ້ນ ສູງຈາກການເພີ່ມຈໍາ ນວນຂຶ້ນທີ່ເຂົາເຈົ້າ ສາມາດຂຽນຈາກ ຄວາມຈໍາ.<br><br>**ນັກຮຽນສາມາດ:**<br>ຂຽນຄໍາສັບຂັ້ນສູງ ຫຼາຍຂຶ້ນຢ່າງວ່ອງໄວ ໂດຍບໍ່ມີການແຍກ ສ່ວນ. |

| | | | | |
|---|---|---|---|---|
| | | | ບໍ່ມີການແຍກສ່ວນ. | |
| **ອົງປະກອບທີ 4 ການຂຽນເພື່ອບັນທຶກຄຳຕອບ** | | | | |
| ປ.1 | ປ. 2 | ປ. 3 | ປ. 4 | ປ. 5 |
| **ນັກຮຽນຮູ້:** ວິທີຂຽນເພື່ອບັນທຶກກິດຈະກຳຂັ້ນສູງທີ່ຫຼາກຫຼາຍໃນບົດຮຽນ **ນັກຮຽນສາມາດ:** 1.ນຳໃຊ້ຄຳສັບ, ລາຍການຄຳສັບ, ປະໂຫຍກສັ້ນເຂົ້າໃນການຂຽນເພື່ອບັນທຶກຄຳຕອບໃນການດຳເນີນກິດຈະກຳງ່າຍ. 2.ຂຽນທວາຍ, ຂຽນຄຳສັບທີ່ຄຸ້ນເຄີຍ, ປະໂຫຍກສັ້ນດ້ວຍການສະກົດຄຳ ແລະ ການໃຊ້ເຄື່ອງໝາຍວັກຕອນທີ່ຖືກຕ້ອງ. | **ນັກຮຽນຮູ້:** ວິທີຂຽນເພື່ອບັນທຶກກິດຈະກຳມີໂຄງສ້າງທີ່ຫຼາກຫຼາຍໃນບົດຮຽນ. **ນັກຮຽນສາມາດ:** 1.ນຳໃຊ້ລາຍການຄຳສັບ, ປະໂຫຍກສັ້ນເຂົ້າໃນການຂຽນເພື່ອບັນທຶກຄຳຕອບ. 2.ຂຽນທວາຍ, ຂຽນຄຳສັບທີ່ຄຸ້ນເຄີຍ, ປະໂຫຍກສັ້ນດ້ວຍການສະກົດຄຳ ແລະ ໃຊ້ເຄື່ອງໝາຍວັກຕອນທີ່ຖືກຕ້ອງ. | **ນັກຮຽນຮູ້:** ວິທີຂຽນເພື່ອບັນທຶກກິດຈະກຳມີໂຄງສ້າງທີ່ຫຼາກຫຼາຍໃນບົດຮຽນ. **ນັກຮຽນສາມາດ:** 1.ນຳໃຊ້ການຂຽນເພື່ອບັນທຶກຄຳຕອບ - ເລືອກວິທີທີ່ດີທີ່ສຸດເພື່ອຕອບ. 2.ຂຽນທວາຍ, ຂຽນຄຳສັບທີ່ຄຸ້ນເຄີຍ, ປະໂຫຍກສັ້ນດ້ວຍການສະກົດຄຳ ແລະ ໃຊ້ເຄື່ອງໝາຍວັກຕອນທີ່ຖືກຕ້ອງ. | **ນັກຮຽນຮູ້:** ວິທີຂຽນເພື່ອບັນທຶກຈາກກິດຈະກຳທີ່ບໍ່ມີໂຄງສ້າງທີ່ຫຼາກຫຼາຍໃນບົດຮຽນຢ່າງມີປະສິດທິພາບ. **ນັກຮຽນສາມາດ:** 1.ນຳໃຊ້ການຂຽນເພື່ອບັນທຶກຄຳຕອບ - ເລືອກວິທີການຕອບ - ລວມທັງການໃສ່ເຄື່ອງໝາຍວັກຕອນ. 2.ຂຽນທວາຍ, ຂຽນປະໂຫຍກທີ່ບໍ່ຄຸ້ນເຄີຍຍາກຂຶ້ນ, ບົດຄວາມດ້ວຍການສະກົດຄຳ ແລະ ໃຊ້ເຄື່ອງໝາຍ | **ນັກຮຽນຮູ້:** ວິທີຂຽນເພື່ອບັນທຶກກິດຈະກຳທີ່ມີໂຄງສ້າງທີ່ຫຼາກຫຼາຍໃນບົດຮຽນ. **ນັກຮຽນສາມາດ:** 1.ນຳໃຊ້ການຂຽນເພື່ອບັນທຶກເງື່ອນໄຂໃນຫ້ອງຮຽນທີ່ແຕກຕ່າງ - ເລືອກວິທີທີ່ດີສຸດໃນການບັນທຶກ. 2.ຂຽນທວາຍ, ຂຽນປະໂຫຍກທີ່ບໍ່ຄຸ້ນເຄີຍຍາກຂຶ້ນ, ບົດຄວາມດ້ວຍການສະກົດຄຳ ແລະ ເຄື່ອງໃຊ້ເຄື່ອງໝາຍວັກຕອນ |

| | | | | |
|---|---|---|---|---|
| | | | ວັກຕອນທີ່ ຖືກຕ້ອງ. | |
| **ອົງປະກອບທີ 5 ການຂຽນເພື່ອສະແດງຄວາມຄິດເຫັນ** | | | | |
| ປ.1 | ປ. 2 | ປ. 3 | ປ. 4 | ປ. 5 |
| **ນັກຮຽນຮູ້:**<br>ວິທີຂຽນເພື່ອສະແດງຄວາມຄິດເຫັນ ຫຼື ແລກປ່ຽນຂໍ້ມູນສ່ວນຕົວ ແລະ ຄວາມຄິດເຫັນ.<br>**ນັກຮຽນສາມາດ:**<br>1.ນໍາໃຊ້ການຂຽນເພື່ອບອກຂໍ້ຄວາມໃນການແຕ້ມດ້ວຍຕົນເອງ, ເພື່ອຂຽນອະລິ ແລະ ປະໂຫຍກສັ້ນຕາມຮູບພາບ.<br>2. ນໍາໃຊ້ຄວາມຮູ້ກ່ຍວກັບສຽງໃນການຂຽນຄໍາສັບທີ່ບໍ່ຄຸ້ນເຄີຍເພື່ອສະກົດຄໍາທີ່ຄາດຄະເນໄວ້ໃຫ້ໄດ້ໂດຍການຂຽນຂອງຕົນເອງດ້ວຍຄວາມພໍໃຈ.<br>3. ນໍາໃຊ້ຄວາມຮູ້ກ່ຽວກັບຄວາມໝາຍ | **ນັກຮຽນຮູ້:**<br>ວິທີຂຽນເພື່ອສະແດງຄວາມຄິດເຫັນ ຫຼື ແລກປ່ຽນຂໍ້ມູນສ່ວນຕົວ ແລະ ຄວາມຄິດເຫັນ.<br>**ນັກຮຽນສາມາດ:**<br>1.ຂຽນດ້ວຍຄວາມໝັ້ນໃຈ ແລະ ວ່ອງໄວ.<br>2.ນໍາໃຊ້ການຂຽນເພື່ອອະທິບາຍຮູບພາບໃນເລື່ອງ ( ລວມທັງລໍາດັບຮູບພາບ ).<br>3.ນໍາໃຊ້ຄວາມຮູ້ກ່ຽວກັບສຽງໃນການຂຽນຄໍາສັບທີ່ບໍ່ຄຸ້ນເຄີຍເພື່ອສະກົດຄໍາທີ່ຄາດຄະເນໄວ້ໃຫ້ໄດ້ໂດຍການຂຽນຂອງ | **ນັກຮຽນຮູ້:**<br>ວິທີຂຽນເພື່ອສະແດງຄວາມຄິດເຫັນ ຫຼື ແລກປ່ຽນຂໍ້ມູນສ່ວນຕົວ ແລະ ຄວາມຄິດເຫັນ.<br>**ນັກຮຽນສາມາດ:**<br>1.ຂຽນດ້ວຍຄວາມໝັ້ນໃຈ ແລະ ວ່ອງໄວ.<br>2.ຂຽນຢ່າງມີຈຸດປະສົງເພື່ອການສື່ສານໄດ້.<br>3. ນໍາໃຊ້ວິທີເພື່ອສະກົດຄໍາສັບສ່ວນຫຼາຍໃຫ້ຖືກຕ້ອງ ແລະ ຫຼາກຫຼາຍ.<br>4. ນໍາໃຊ້ເຄື່ອງໝາຍວັກຕອນທີ່ມີຄວາມຜິດໜ້ອຍ ແລະ ມີປະສິດທິພາບ.<br>5. ນໍາໃຊ້ເຄື່ອງໝາຍວັກຕອນເຂົ້າໃນການຂຽນແຕ່ລະເຫດການ | **ນັກຮຽນຮູ້:**<br>ວິທີຂຽນເພື່ອສະແດງຄວາມຄິດເຫັນ ຫຼື ແລກປ່ຽນຂໍ້ມູນສ່ວນຕົວ, ແນວຄວາມຄິດ ແລະ ຄວາມຄິດເຫັນດ້ວຍຈຸດປະສົງທີ່ຫຼາກຫຼາຍ.<br>**ນັກຮຽນສາມາດ:**<br>1.ຂຽນດ້ວຍຄວາມໝັ້ນໃຈ ແລະ ວ່ອງໄວ.<br>2. ຂຽນຢ່າງມີຈຸດປະສົງເພື່ອການສື່ສານ.<br>3. ນໍາໃຊ້ວິທີເພື່ອສະກົດຄໍາສັບສ່ວນຫຼາຍໃຫ້ຖືກຕ້ອງ ແລະ ຫຼາກຫຼາຍ. | **ນັກຮຽນຮູ້:**<br>ວິທີຂຽນເພື່ອສະແດງຄວາມຄິດເຫັນ ຫຼື ແລກປ່ຽນຂໍ້ມູນສ່ວນຕົວ, ແນວຄວາມຄິດ ແລະ ຄວາມຄິດເຫັນດ້ວຍຈຸດປະສົງທີ່ຫຼາກຫຼາຍ.<br>**ນັກຮຽນສາມາດ:**<br>1.ຂຽນດ້ວຍຄວາມໝັ້ນໃຈ ແລະ ວ່ອງໄວ.<br>2. ຂຽນຢ່າງມີຈຸດປະສົງເພື່ອການສື່ສານ.<br>3. ນໍາໃຊ້ວິທີເພື່ອສະກົດຄໍາໃຫ້ຖືກຕ້ອງ ໃນບົດຂຽນສຸດທ້າຍ ທີ່ຫຼາກຫຼາຍ.<br>4.ນໍາໃຊ້ເຄື່ອງໝາຍວັກຕອນເພື່ອເພີ່ມ |

| | | | | |
|---|---|---|---|---|
| ວັກຕອນເຂົ້າໃນການຂຽນຂອງຕົນເອງໃນຂັ້ນພື້ນຖານ. | ຕົນເອງດ້ວຍຄວາມພໍໃຈ.<br>4. ນຳໃຊ້ຄວາມຮູ້ກ່ຽວກັບເຄື່ອງໝາຍວັກຕອນເຂົ້າໃນການຂຽນຂອງຕົນເອງໃນຂັ້ນພື້ນຖານ.<br>5. ນຳໃຊ້ຮູບພາບເພື່ອຊີ້ບອກຄວາມເຂົາໃຈໃນການໃຊ້ເຄື່ອງໝາຍວັກຕອນ. | ຫຼື ຄວາມຄິດເຫັນທີ່ສຳຄັນ.<br>6. ນຳໃຊ້ໂຄງຮ່າງໃນການຂຽນໃຫ້ເໝາະສົມ. | 4. ນຳໃຊ້ຫົວຂໍ້ຍ່ອຍໃນບ່ອນທີ່ເໝາະສົມ.<br>5. ຈັດລຽງວັກຕອນໃຫ້ເໝາະສົມ.<br>6. ນຳໃຊ້ຫົວຂໍ້ຍ່ອຍໃນບ່ອນທີ່ເໝາະສົມ. | ຜົນກະທົບຂອງການສື່ສານ.<br>5. ນຳໃຊ້ແຜນວາດບ່ອນທີ່ເໝາະສົມ. |
| **ອົງປະກອບທີ 6 ການແກ້ຄຳຜິດ** | | | | |
| ປ.1 | ປ. 2 | ປ. 3 | ປ. 4 | ປ. 5 |
| **ນັກຮຽນຮູ້:**<br>ປັບປຸງການກວດແກ້ດ້ວຍຕົນເອງ ຫຼື ແກ້ຄຳຜິດຈາກຜູ້ອື່ນ.<br>**ນັກຮຽນສາມາດ:**<br>1.ດຳເນີນການກວດແກ້ການສະກົດຄຳ, ປະໂຫຍກ ແລະ ເຄື່ອງໝາຍວັກຕອນໃຫ້ຖືກຕ້ອງໃນບົດຂຽນຂອງຕົນເອງ. | **ນັກຮຽນຮູ້:**<br>ຂັ້ນຕອນໃນການກວດແກ້ການຂຽນຂອງຕົນເອງແລະ ຜູ້ອື່ນ.<br>**ນັກຮຽນສາມາດ:**<br>1.ກວດແກ້ການສະກົດຄຳ, ປະໂຫຍກ ແລະ ເຄື່ອງໝາຍວັກຕອນໃຫ້ຖືກຕ້ອງໃນບົດຂຽນດ້ວຍຕົນເອງ. | **ນັກຮຽນຮູ້:**<br>ຂັ້ນຕອນໃນການກວດແກ້ການຂຽນຂອງຕົນເອງແລະ ຜູ້ອື່ນ.<br>**ນັກຮຽນສາມາດ:**<br>1.ກວດແກ້ດ້ວຍຕົນເອງ, ການປຽບທຽບໂຄງສ້າງຂອງບົດຄວາມຂອງຕົນເອງທຽບໃສ່ກັບບົດຕົວຢ່າງ. | **ນັກຮຽນຮູ້:**<br>ຂັ້ນຕອນໃນການກວດແກ້ການຂຽນຂອງຕົນເອງແລະ ຜູ້ອື່ນ.<br>**ນັກຮຽນສາມາດ:**<br>1.ກວດແກ້ດ້ວຍຕົນເອງ, ການໃຊ້ຄຳສັບໃນທາງເລືອກທີ່ດີກວ່າປະກອບມີຄຳແທນນາມ, ຄຳ | **ນັກຮຽນຮູ້:**<br>ຂັ້ນຕອນໃນການກວດແກ້ການຂຽນຂອງຕົນເອງແລະ ຜູ້ອື່ນ.<br>**ນັກຮຽນສາມາດ:**<br>1.ກວດແກ້ດ້ວຍຕົນເອງໂດຍເນັ້ນໂຄງສ້າງຂອງປະໂຫຍກແລ ການໃຊ້ຄຳສັບເພື່ອໃຫ້ຜູ້ອ່ານເຂົ້າໃຈ. |

| | | | | |
|---|---|---|---|---|
| 2.ອ່ານບົດຂຽນຂອງຜູ້ອື່ນ ແລະ ລະບຸຄຳເຫັນທີ່ຈະປະກອບ. | 2.ອ່ານບົດຂຽນຂອງຜູ້ອື່ນ, ລະບຸຄຳຜິດ ແລະ ຄຳເຫັນທີ່ ເໝາະສົມ. | 2.ອ່ານບົດຂຽນຂອງຜູ້ອື່ນ, ລະບຸຄຳຜິດ ແລະ ຄຳເຫັນທີ່ ເໝາະສົມ. | ຄຸນນາມ ແລະ ພົນກະທົບທີ່ເພີ່ມຂຶ້ນໂດຍຜ່ານເຄື່ອງໝາຍວັກຕອນ.<br>2.ອ່ານບົດຂຽນຂອງຜູ້ອື່ນ, ລະບຸຄຳຜິດ ແລະ ຄຳເຫັນທີ່ເໝາະສົມ | 2.ອ່ານບົດຂຽນຂອງຜູ້ອື່ນ, ລະບຸຄຳຜິດ ແລະ ຄຳເຫັນທີ່ ເໝາະສົມ. |
| **ປະເພດບົດ** | | | | |
| **ຄຳສັ່ງຂອງການເວົ້າ** | | | | |
| ປ.1 | ປ. 2 | ປ. 3 | ປ. 4 | ປ. 5 |
| **ນັກຮຽນຮູ້:**<br>ສຳນຶກໄດ້ ແລະ ຕອບສະໜອງຄຳແນະນຳທີ່ໄດ້ຍິນ.<br>**ນັກຮຽນສາມາດ:**<br>1.ປະຕິບັດຕາມຄຳສັ່ງງ່າຍດາຍ 2 – 3 ຄຳສັ່ງໃນແຕ່ລະຄັ້ງ.<br>2. ໃຫ້ຄຳແນະນຳງ່າຍໆກ່ຽວກັບຕົນເອງກ່ຽວກັບການເຮັດບາງຢ່າງ ຫຼື ສ້າງບາງຢ່າງ ( 2-3 ຄຳສັ່ງໃນແຕ່ລະຄັ້ງ). | **ນັກຮຽນຮູ້:**<br>ວິທີການຕອບ ແລະ ໃຫ້ຄຳແນະນຳໃນເງື່ອນໄຂທີ່ເໝາະສົມ ແລະ ຫຼາກຫຼາຍ.<br>**ນັກຮຽນສາມາດ:**<br>1.ປະຕິບັດຕາມຄຳແນະນຳງ່າຍໆ 4 – 5 ບາດກ້າວ, ບາງຄຳໃຫ້ສອງເທື່ອໃນໜຶ່ງຄັ້ງ. | **ນັກຮຽນຮູ້:**<br>ວິທີການຕອບ ແລະ ໃຫ້ຄຳແນະນຳງ່າຍໆ.<br>**ນັກຮຽນສາມາດ:**<br>1.ປະຕິບັດຕາມຄຳແນະນຳເພື່ອບັນລຸເປົ້າໝາຍ ( 6 – 10 ຂັ້ນຕອນ) ບາງຄຳແນະນຳໃຫ້ 2 – 3 ຄັ້ງໃນໜຶ່ງເທື່ອ.<br>2. ໃຫ້ຄຳແນະນຳທີ່ມີປະສິດທິພາບຕໍ່ເພື່ອນຮ່ວມຫ້ອງເພື່ອບັນລຸເປົ້າໝາຍ. | | |

| | | | | |
|---|---|---|---|---|
| 3.ຈັດລຽງຮູບພາບກ່ຽວກັບວິທີເຮັດບາງຢ່າງ ແລະ ບອກຂັ້ນຕອນຕ່າງໆ.<br>4. ນຳໃຊ້ຄຳກິລິຍາງ່າຍໆໃນການພັນລະນາການກະທຳ. | 2. ແຕ້ມຮູບສະແດງຂັ້ນຕອນບາງຢ່າງດ້ວຍຕົນເອງ.<br>3.ໃຫ້ຄຳແນະນຳດ້ວຍຕົນເອງກ່ຽວກັບການເຮັດບາງຢ່າງ ຫຼື ສ້າງບາງຢ່າງລວມທັງການບອກອຸປະກອນທີ່ຕ້ອງການ ( 4 – 5 ບາງຄຳແນະນຳສອງເທື່ອຕໍ່ຄັ້ງ).<br>4. ນຳໃຊ້ກິລິຍາງ່າຍໆໃນການພັນລະນາການກະທຳ.<br>5. ນຳໃຊ້ຄຳກິລິຍາວິເສດ. | 3. ນຳໃຊ້ຄຳກິລິຍາໃຫ້ເໝາະສົມກັບຫົວຂໍ້.<br>4. ນຳໃຊ້ບາງຄຳກິລິຍາວິເສດ. | | |
| **ອົງປະກອບທີ 2 ການອ່ານຄຳແນະນຳ** | | | | |
| ປ.1 | ປ. 2 | ປ. 3 | ປ. 4 | ປ. 5 |
| **ນັກຮຽນຮູ້:**<br>ອ່ານປະໂຫຍກຄຳແນະນຳງ່າຍໆ ແລະ ສະແດງຄວາມເຂົ້າໃຈວ່ານັ້ນແມ່ນການແນະນຳ.<br>**ນັກຮຽນສາມາດ:** | **ນັກຮຽນຮູ້:**<br>ອ່ານບົດຄຳແນະນຳງ່າຍໆ ແລະ ລະບຸປະເພດຕ່າງໆຂອງຂໍ້ມູນໃນບົດແນະນຳ ( ຫົວຂໍ້, ລາຍການ, ອຸປະກອນ ແລະ ຂັ້ນຕອນ). | **ນັກຮຽນຮູ້:**<br>ອ່ານບົດຄຳແນະນຳດ້ວຍການນຳໃຊ້ທີ່ລວມມີກິລິຍາວິເສດ.<br>**ນັກຮຽນສາມາດ:**<br>1.ອ່ານ ແລະ ບອກຈຸດປະສົງ ແລະ | | |

| | | | | |
|---|---|---|---|---|
| 1.ອ່ານ ແລະ ບອກ ຄວາມໝາຍຂອງ ປະໂຫຍກຄຳແນະນຳ ປະກອບຮູບພາບ. | **ນັກຮຽນສາມາດ:**<br>1.ອ່ານ ແລະ ບອກ ຈຸດປະສົງ ແລະ ຄວາມໝາຍຂອງບົດ ແນະນຳ.<br>2. ປະຕິບັດຕາມບົດ ຂຽນແນະນຳໃນ ການເຮັດບົດບາງ ຢ່າງ. | ຄວາມໝາຍຂອງບົດ ແນະນຳ.<br>2. ປະຕິບັດຕາມບົດ ຂຽນແນະນຳໃນການ ເຮັດບົດບາງຢ່າງ. | | |
| **ອົງປະກອບທີ 3 ການຂຽນຄຳແນະນຳ** | | | | |
| ປ.1 | ປ. 2 | ປ. 3 | ປ. 4 | ປ. 5 |
| **ນັກຮຽນຮູ້:**<br>ວິທີຂຽນປະໂຫຍກຄຳ ແນະນຳ<br><br>ນັກຮຽນສາມາດ: | **ນັກຮຽນຮູ້:**<br>ວິທີຂຽນບົດແນະນຳ ງ່າຍໆດ້ວຍຂັ້ນຕອນ ໃດໜຶ່ງທີ່ຄຸ້ນເຄີຍ<br>**ນັກຮຽນສາມາດ:**<br>1.ນຳໃຊ້ຫົວຂໍ້ທີ່ເໝາະສົມກັບຄຳແນະ ນຳ.<br>2. ນຳໃຊ້ຫົວຂໍ້ຍ່ອຍ ເພື່ອໃຫ້ເຫັນຄວາມ ແຕກຕ່າງລະຫວ່າງຂໍ້ ມູນກ່ຽວກັບ ບາດກ້າວ ແລະ ອຸປະກອນທີ່ຈຳ ເປັນ. | **ນັກຮຽນຮູ້:**<br>ວິທີຂຽນບົດແນະນຳ ທີ່ລວມມີກິລິຍາ ວິເສດ.<br>**ນັກຮຽນສາມາດ:**<br>1.ຂຽນບົດແນະນຳທີ່ ມີປະສິດທິພາບ.<br>2.ນຳໃຊ້ກິລິຍາໃຫ້ເໝາະສົມ | | |

| | | | | |
|---|---|---|---|---|
| | 3. ນຳໃຊ້ປະໂຫຍກແນະນຳທີ່ ເໝາະສົມໃນບັນດາບາດກ້າວ.<br>4. ເລືອກກິລິຍາທີ່ເໝາະສົມ. | | | |
| **ການເລົ່າປະສົບການ** | | | | |
| **ອົງປະກອບທີ 1 ການເວົ້າຄືນ** | | | | |
| ປ.1 | ປ. 2 | ປ. 3 | ປ. 4 | ປ. 5 |
| **ນັກຮຽນຮູ້:**<br>ສຳນຶກ ແລະ ຕອບສະໜອງຕໍ່ການເລົ່າປະສົບການ ແລະ ເລົ່າກ່ຽວກັບກິດຈະກຳຂອງຕົນເອງ ດ້ວຍການຊ່ວຍເຫຼືອຈາກການຖາມຂອງຄູ.<br><br>**ນັກຮຽນສາມາດ:**<br>1.ເລົ່າຄືນເຫດການທີ່ໄດ້ປະສົບມາ ຫຼື ກິດຈະກຳປະຈຳວັນດ້ວຍລຳດັບຂັ້ນຕອນທີ່ເໝາະສົມ.<br>2. ເລົ່າຄືນດ້ວຍການບອກເວລາເຫດການທີ່ເກີດຂຶ້ນ. | **ນັກຮຽນຮູ້:**<br>ວິທີເລົ່າຄືນປະສົບການ ແລະ ກິດຈະກຳປະຈຳວັນຈອງຕົນເອງ.<br>**ນັກຮຽນສາມາດ:**<br>1.ເລົ່າຄືນເຫດການທີ່ໄດ້ປະສົບມາ ຫຼື ກິດຈະກຳປະຈຳວັນດ້ວຍລຳດັບຂັ້ນຕອນທີ່ເໝາະສົມ.<br>2. ເລົ່າຄືນດ້ວຍການນຳໃຊ້ຄຳສັບບອກເວລາ: ວັນເສົາ ...., ຫຼັງຈາກເລີກໂຮງຮຽນ ແລະ ອື່ນໆ. | **ນັກຮຽນຮູ້:**<br>ວິທີເລົ່າຄືນປະສົບການ ແລະ ກິດຈະກຳປະຈຳວັນຈອງຕົນເອງ.<br>**ນັກຮຽນສາມາດ**:<br>1.ເລົ່າຄືນເຫດການໃໜຶ່ງທີ່ປະສົບມາ ແລະ ປະຕິບັດຕາມໂຄງສ້າງຂອງການເລົ່າຄືນ: ການນຳສະເໜີ, ລຳດັບຂັ້ນຕອນຂອງເຫດການ ແລະ ການນຳສະເໜີຄືນໃໝ່.<br>2. ນຳສະເໜີດ້ວຍການບອກເວລາ, ເຫດການເກີດຂຶ້ນ, ມີ | **ນັກຮຽນຮູ້:**<br>ເລົ່າຄືນທີ່ນຳໃຊ້ໃນການລາຍງານທີ່ຫຼາກຫຼາຍ.<br>**ນັກຮຽນສາມາດ:**<br>1.ຮູ້ເລົ່າຄືນເພື່ອບອກປະຫວັດຂອງຕົນເອງ ແລະ ຜູ້ອື່ນໆ.<br>2. ຮູ້ປະສົມປະສານກິດຈະກຳການສອນພາສາເວົ້າກັບກິດຈະກຳການສອນພາສາຂຽນ. | **ນັກຮຽນຮູ້:**<br>ເລົ່າຄືນທີ່ນຳໃຊ້ໃນການລາຍງານທີ່ຫຼາກຫຼາຍ.<br>**ນັກຮຽນສາມາດ:**<br>1.ເລົ່າຄືນເພື່ອລາຍງານຫືວຂໍ້ຂ່າວ.<br>2. ຮູ້ປະສົມປະສານກິດຈະກຳການສອນພາສາເວົ້າກັບກິດຈະກຳການສອນພາສາຂຽນ. |

| | | | | |
|---|---|---|---|---|
| 3. ເລົ່າຄືນດ້ວຍການບອກວ່າໃຜເຂົ້າຮ່ວມໃນເຫດການ. | 3. ເລົ່າຄືນດ້ວຍການບອກວ່າໃຜເຂົ້າຮ່ວມໃນເຫດການ. | ໃຜເຂົ້າຮ່ວມ, ເກີດຂຶ້ນຢູ່ໃສ.<br>3. ນຳໃຊ້ຄຳສັບບອກລະດັບຂັ້ນຕອນ ແລະ ຈາກນັ້ນ, ຫຼັງຈາກນັ້ນ ແລະ ອື່ນໆ.<br>4. ນຳສະເໜີຄືນ ( ສັງລວມ) ດ້ວຍການບອກສິ່ງທີ່ໄດ້ເຮັດໃນຕອນທ້າຍຂອງເຫດການ( ໃຜ, ເມື່ອໃດ, ຢູ່ໃສ ). | | |
| **ອົງປະກອບທີ 2 ບົດເລົ່າຄືນປະສົບການ** | | | | |
| ປ.1 | ປ. 2 | ປ. 3 | ປ. 4 | ປ. 5 |
| **ນັກຮຽນຮູ້:**<br>ອ່ານປະໂຫຍກເລົ່າຄືນດ້ວຍປະສົບການງ່າຍໆ ແລະ ບົດຄວາມສັ້ນໆດ້ວຍຄວາມເຂົ້າໃຈ.<br>**ນັກຮຽນສາມາດ:**<br>1.ອ່ານ ແລະ ບອກຄວາມໝາຍຂອງປະໂຫຍກເລົ່າປະສົບການ ແລະ ບົດຄວາມ | **ນັກຮຽນຮູ້:**<br>ອ່ານບົດຄວາມກ່ຽວກັບການເລົ່າຄືນດ້ວຍປະສົບການງ່າຍໆ ແລະ ລະບຸຄວາມແຕກຕ່າງຂອງປະເພດຂໍ້ມູນໃນບົດຄວາມ( ຫົວຂໍ້, ເລີ່ມຕົ້ນ, ໃຜ , ເມື່ອໃດ, ຢູ່ໃສ, ລະຫວ່າງກາງ: ລຳດັບເຫດການຕາມ).<br>**ນັກຮຽນສາມາດ:** | **ນັກຮຽນຮູ້:**<br>ອ່ານບົດຄວາມກ່ຽວກັບການເລົ່າຄືນປະສົບການງ່າຍໆ ແລະ ລະບຸຄວາມແຕກຕ່າງຂອງປະເພດຂໍ້ມູນໃນບົດຄວາມ (ຫົວຂໍ້, ເລີ່ມຕົ້ນ, ໃຜ, ເມື່ອໃດ, ຢູ່ໃສ, ລະຫວ່າງກາງ: ລຳດັບເຫດການຕາມຕາມຕອນທ້າຍ: ໃຜ, ເມື່ອໃດ ແລະ ຢູ່ໃສ). | **ນັກຮຽນຮູ້:**<br>ອ່ານບົດເລົ່າຄືນປະສົບການກ່ຽວກັບປະຫວັດຫຍໍ້ ແລະ ລະບຸຈຸດສຳຄັນຂອງປະຫວັດຫຍໍ້ໄດ້.<br>**ນັກຮຽນສາມາດ:**<br>1.ອ່ານ ແລະ ບອກຄວາມໝາຍ ແລະ ຈຸດປະສົງຂອງ | **ນັກຮຽນຮູ້:**<br>ອ່ານບົດເລົ່າຄືນ, ການລາຍງານຂ່າວ ແລະ ລະບຸຈຸດສຳຄັນຂອງການລາຍງານຂ່າວໄດ້.<br>**ນັກຮຽນສາມາດ:**<br>1.ອ່ານ ແລະ ບອກຄວາມໝາຍ ແລະ ຈຸດປະສົງຂອງບົດເລົ່າຄືນໂດຍໃຊ້ຄຳສັບທີ່ບອກລຳດັບ |

| | | | | |
|---|---|---|---|---|
| | 1.ອ່ານ ແລະ ບອກ ຄວາມໝາຍ ແລະ ຈຸດປະສົງຂອງ ເລົ່າຄືນດ້ວຍປະສົບ ການ. | **ນັກຮຽນສາມາດ:**<br>1.ອ່ານ ແລະ ບອກ ຄວາມໝາຍ ແລະ ຈຸດປະສົງຂອງບົດ ເລົ່າຄືນໂດຍໃຊ້ຄໍາສັບ ທີ່ບອກລໍາດັບເວລາ ດ້ວຍປະສົບການ. | ບົດເລົ່າຄືນໂດຍ ໃຊ້ຄໍາສັບທີ່ ບອກລໍາດັບ ເວລາດ້ວຍ ປະສົບການ. | ເວລາດ້ວຍປະສົບ ການ. |
| **ອົງປະກອບທີ 3 ການຂຽນເລົ່າຄືນປະສົບການ** | | | | |
| ປ.1 | ປ. 2 | ປ. 3 | ປ. 4 | ປ. 5 |
| **ນັກຮຽນຮູ້:**<br>ວິທີຂຽນປະໂຫຍກ ເລົ່າຄືນປະສົບການ<br>**ນັກຮຽນສາມາດ:**<br>1.ຂຽນປະໂຫຍກ ເລົ່າຄືນງ່າຍດາຍດ້ວຍ ປະສົບການ. | **ນັກຮຽນຮູ້:**<br>ວິທີຂຽນບົດເລົ່າຄືນ ປະສົບການໂດຍ ໃຊ້ຄໍາສັບງ່າຍໆຂອງ ເຫດການໃດໜຶ່ງທີ່ ເຂົາປະສົບມາ.<br>**ນັກຮຽນສາມາດ:**<br>1.ນໍາໃຊ້ຫົວຂໍ້ທີ່ເໝາະສົມສໍາລັບບົດ ເລົ່າຄືນດ້ວຍ.<br>2.ນໍາໃຊ້ປະໂຫຍກ ເລົ່າຄືນຢ່າງ ເໝາະ ສົມເພື່ອບອກວ່າມີ ຫຍັງເກີດຂຶ້ນ. | **ນັກຮຽນຮູ້:**<br>ວິທີຂຽນບົດເລົ່າຄືນ ປະສົບການໂດຍນໍາ ໃຊ້ຄໍາສັບບອກເວລາ ທີ່ ເໝາະສົມ.<br>**ນັກຮຽນສາມາດ:**<br>1.ຂຽນບົດເລົ່າຄືນ ປະສົບການຢ່າງມີ ປະສິດທິພາບ.<br>2.ນໍາໃຊ້ຄໍາສັບ ບອກລໍາດັບເວລາເພື່ອ ລະບຸວ່າແຕ່ລະຂັ້ນ ຕອນຂອງເຫດການທີ່ ເກີດຂຶ້ນ ແລະ ໃນລໍາ ດັບແນວໃດ?. | **ນັກຮຽນຮູ້:**<br>ວິທີສຶກສາ ແລະ ຂຽນຊີວະ ປະຫວັດ.<br>**ນັກຮຽນ ສາມາດ:**<br>1.ຂຽນຊີວະ ປະຫວັດຢ່າງມີ ປະສິດທິພາບ.<br>2.ນໍາໃຊ້ວິທີທີ່ເ ໝາະສົມເພື່ອ ລະບຸເວລາຂອງ ເຫດການຕ່າງໆ. | **ນັກຮຽນຮູ້:**<br>ວິທີສຶກສາ ແລະ ຂຽນບົດລາຍງານ ຂ່າວ.<br>**ນັກຮຽນສາມາດ:**<br>1.ຂຽນຊີວະ ປະຫວັດຢ່າງມີ ປະສິດທິພາບ.<br>2. ນໍາໃຊ້ວິທີທີ່ເໝາະສົມເພື່ອລະບຸ ເວລາຂອງເຫດການ ຕ່າງໆ. |

| | | | | |
|---|---|---|---|---|
| | 3.ປະໂຫຍກຖືກຈັດລຽງເພື່ອແທດຄເໝາະກັບລຳດັບເວລາ.<br>4.ນຳໃຊ້ບາງຄຳສັບເພື່ອບອກວ່າເຫດການນັ້ນເກີດຂຶ້ນເມື່ອໃດ? ແລະມີໃຜເຂົ້າຮ່ວມ. | | | |
| **ບົດຄວາມ/ ເລື່ອງ** | | | | |
| **ອົງປະກອບທີ 1 ການເລົ່າເລື່ອງຄືນ** | | | | |
| ປ.1 | ປ. 2 | ປ. 3 | ປ. 4 | ປ. 5 |
| **ນັກຮຽນຮູ້:**<br>ສຳນຶກໄດ້ ແລະ ຕອບສະໜອງຕໍ່ການເລົ່າເລື່ອງດ້ວຍປາກເປົ່າ ແລະ ບອກເລື່ອງຂອງຕົນແບບງ່າຍໆ( ການແຕ້ມຮູບເພື່ອບັນທຶກຄວາມຄິດເຫັນຂອງຕົນເອງ ແລະ ຄູຊ່ວຍເຫຼືອດ້ວຍການຕັ້ງຄຳຖາມ).<br><br>**ນັກຮຽນສາມາດ:**<br>1.ຕອບສະໜອງຕໍ່ເລື່ອງທີ່ໄດ້ຟັງດ້ວຍຄວາມສົນໃຈ. | **ນັກຮຽນຮູ້:**<br>ຕອບສະໜອງຕໍ່ການເລົ່າເລື່ອງດ້ວຍປາກເປົ່າ ແລະ ຮູ້ວິທີປະດິດສ້າງເຂົ້າໃນການເລົ່າເລື່ອງຂອງຕົນເອງ. ( ນຳໃຊ້ການແຕ້ມຮູບເພື່ອຈັດການ ແລະ ບັນທຶກຄວາມຄິດຂອງຕົນເອງ).<br><br>**ນັກຮຽນສາມາດ:**<br>1.ຕອບສະໜອງຕໍ່ບົດເລື່ອງດ້ວຍການສະແດງຄວາມ | **ນັກຮຽນຮູ້:**<br>ວິທີປະດິດສ້າງ, ໂຄງສ້າງ ແລະເລົ່າເລື່ອງທີ່ມີປະສິດທິພາບ ( ດ້ວຍບົດຮຽນເສີມຂະຫຍາຍຄວາມຄິດຂອງເລື່ອງ).<br>**ນັກຮຽນສາມາດ:**<br>1.ຕອບສະໜອງຕໍ່ເລື່ອງດ້ວຍການສະເໜີຕົວລະຄອນທີ່ຫຼາກຫຼາຍໃນການສະແດງ.<br>2.ປະດິດສ້າງ ແລະເລົ່າເລື່ອງໃດໜຶ່ງທີ່ລວມເອົາການສະເໜີບັນຫາ, ການແກ້ໄຂ | **ນັກຮຽນຮູ້:**<br>ວິທີປະດິດສ້າງ, ໂຄງສ້າງ ແລະເລົ່າເລື່ອງທີ່ມີປະສິດທິພາບເພື່ອສຶກສາຄຸນສົມບັດ.<br>**ນັກຮຽນສາມາດ:**<br>1.ຕອບສະເໜີຕໍ່ເລື່ອງດ້ວຍການສະເໜີເຖິງຄວາມຕັ້ງໃຈຂອງຜູ້ຂຽນ.<br>2. ລະບຸ ແລະ ບອກຄຳສອນ | **ນັກຮຽນຮູ້:**<br>ວິທີປະດິດສ້າງ, ໂຄງສ້າງ ແລະ ເລົ່າເລື່ອງທີ່ມີປະສິດທິພາບເພື່ອສຶກສາກ່ຽວກັບບັນຫາຂອງຊຸມຊົນ.<br>**ນັກຮຽນສາມາດ:**<br>1.ຕອບສະໜອງຕໍ່ເລື່ອງດ້ວຍການສະເໜີຈຸດປະສົງຂອງຜູ້ຂຽນ ແລະ ລະບຸຍຸດທະວິທີເພື່ອບັນລຸເປົ້າໝາຍ.<br>2. ລະບຸ ແລະ ບອກກ່ຽວກັບບັນຫາຂອງ |

| | | | | |
|---|---|---|---|---|
| 2.ເລົ່າເລື່ອງທີ່ພວກເຂົາໄດ້ຟັງ ແລະ ໄດ້ເຫັນໃນປື້ມໃດໜຶ່ງຄືນ( ສະຫຼຸບ) ນໍາໃຊ້ຄໍາເວົ້າຂອງຕົນເອງ ແລະ ບາງຄໍາສັບຈາກເລື່ອງ.<br>3. ສະແດງບົດບາດສົມມຸດຈາກເລື່ອງໃນປື້ມຫຼືໃດໜຶ່ງ, ອອກແບບສົນທະນາງ່າຍໆຂອງຕົວລະຄອນ.<br>4.ສະເໜີຄວາມຄິດເຫັນຂອງຕົນເອງເພື່ອເພີ່ມເຫດການໃສ່ ຫຼື ເພື່ອເຮັດໃຫ້ເລື່ອງຈົບລົງ.<br>5. ບອກເລື່ອງກ່ຽວກັບຕົນເອງໃສ່ກັບຮູບພາບທີ່ໄດ້ແຕ້ມ. | ຄິດເຫັນກ່ຽວກັບຕົວລະຄອນ ແລະ ເຫດການ.<br>2. ສະແດງບົດບາດສົມມຸດຈາກເລື່ອງໃນປື້ມຫຼືໃດຫຼືໜຶ່ງ, ປະດິດສ້າງບົດສົນທະນາຂອງຕົວລະຄອນທີ່ເໝາະສົມທີ່ສ່ອງແສງເຖິງເລື່ອງ.<br>3.ສະແດງຄວາມຄິດເຫັນຂອງຕົນເອງເພື່ອເພີ່ມເຫດການໃສ່ ຫຼື ເຮັດໃຫ້ເລື່ອງຈົບລົງ.<br>4. ແຕ້ມຮູບພາບຕາມລໍາດັບເພື່ອບັນທຶກເລື່ອງລາວຂອງຕົນເອງ ແລະ ເລົ່າໃຫ້ໝູ່ຟັງ. | ບັນຫາ ແລະ ການສະຫຼຸບເລື່ອງ.<br>3. ປະດິດສ້າງບົດສົນທະນາສໍາລັບຕົວລະຄອນ.<br>4. ນໍາໃຊ້ສຽງເພື່ອເພີ່ມຄວາມຈູງໃຈໃນການເລົ່າເລື່ອງ. | ຂອງທ້ອງຖິ່ນທີ່ສາມາດນໍາໄປໃຊ້ເປັນເລື່ອງກ່ຽວກັບການສອນຄຸນສົມບັດ.<br>3.ເລືອກເລື່ອງ, ເຫດການ, ຕົວລະຄອນ ແລະ ສະຖານທີ່ເໝາະສົມໃນການສາທິດຄຸນສົມບັດທີ່ໄດ້ເລືອກກ<br>4.ນໍາໃຊ້ບົດສົນທະນາຂອງຕົວລະຄອນເພື່ອສ້າງບົດສົນທະນາຂອງຕົວລະຄອນ.<br>5. ເລືອກຄໍາສັບ ແລະ ອະລິທີ່ຊ່ວຍໃຫ້ຜູ້ຟັງຈິນຕະນາການ ແລະ ວາດພາບ. | ຊຸມຊົນທີ່ຖືກເລືອກ.<br>3. ເລືອກເຫດການຂອງເລື່ອງຕົວລະຄອນ ແລະ ສະຖານທີ່ສະທ້ອນເຖິງບັນຫາຢ່າງມີປະສິດທິພາບ.<br>4. ນໍາໃຊ້ຍຸດທະວິທີທີ່ຫຼາກຫຼາຍເພື່ອເຮັດໃຫ້ເລື່ອງເກີດການສົນທະນາ. |
| **ອົງປະກອບ 2 ການອ່ານເລື່ອງຄືນ** | | | | |
| ປ.1 | ປ. 2 | ປ. 3 | ປ. 4 | ປ. 5 |
| **ນັກຮຽນຮູ້:** | **ນັກຮຽນຮູ້:** | **ນັກຮຽນຮູ້:** | **ນັກຮຽນຮູ້:** | **ນັກຮຽນຮູ້:** |

| | | | | |
|---|---|---|---|---|
| ອ່ານເລື່ອງຄືນງ່າຍໆ ແລະ ບົດຄວາມສັ້ນໆດ້ວຍຄວາມເຂົ້າໃຈ.<br>**ນັກຮຽນສາມາດ:**<br>1.ອ່ານ ແລະ ບອກຄວາມໝາຍຂອງປະໂຫຍກໃນເລື່ອງ ແລະ ບົດຄວາມ. | ອ່ານບົດເລື່ອງຄືນງ່າຍໆ ແລະ ລະບຸປະເພດຕ່າງໆຂອງຂໍ້ມູນໃນເລື່ອງເລົ່າ( ຕົວລະຄອນ, ບັນຫາຫຍັງ, ວິທີແກ້ໄຂ).<br>**ນັກຮຽນສາມາດ:**<br>1.ອ່ານ ແລະ ຫຼຸບເລື່ອງໄດ້.<br>2.ສະແດງຄວາມຄິດເຫັນຂອງຕົນເອງກ່ຽວກັບການສະແດງອອກຂອງຕົວລະຄອນ. | ອ່ານບົດເລື່ອງຄືນງ່າຍໆ ແລະ ລະບຸປະເພດຕ່າງໆຂອງຂໍ້ມູນໃນບົດເລື່ອງ( ຫົວເລື່ອງ, ເລີ່ມຕົ້ນ: ນຳສະເໜີເຖິງເວລາໃດ, ຢູ່ໃສ, ແມ່ນໃຜ ລະຫວ່າງກາງ: ລຳດັບເຫດການ - ບັນຫາ - ການແກ້ໄຂ, ຕອນທ້າຍ: ໃຜ, ເມື່ອໃດ, ຢູ່ໃສ).<br>**ນັກຮຽນສາມາດ:**<br>1.ອ່ານ ແລະ ສະຫຼຸບເລື່ອງໄດ້.<br>2. ນຳສະເໜີຄວາມຈູງໃຈຂອງຕົວລະຄອນໃນການເວົ້າ ແລະ ການສະແດງ.<br>3. ນຳສະເໜີວິທີທີ່ຕົວລະຄອນສະແດງອອກແຕກຕ່າງກັນເພື່ອຫຼີກເວົ້າບັນຫາ. | ອ່ານນິທານ ແລະ ລະບຸເຖິງຄຸນສົມບັດ<br>**ນັກຮຽນສາມາດ:**<br>1.ອ່ານນິທານ ແລະ ບອກຈຸດປະສົງຂອງນິທານ.<br>2. ນຳສະເໜີເຫດຜົນທີ່ຜູ້ຂຽນມີໃນການເລືອກຕົວລະຄອນ ແລະ ສະພາບການສຳລັບຄຸນສົມບັດ. | ອ່ານເລື່ອງຄືນໂດຍໃຊ້ການສອນກ່ຽວກັບບັນຫາຂອງຊຸມຊົນ<br>**ນັກຮຽນສາມາດ:**<br>1.ອ່ານ ແລະ ບອກຈຸດປະສົງຂອງເລື່ອງພ້ອມທັງຂໍ້ຄວາມຂອງຊຸມຊົນໃດໜຶ່ງ.<br>2. ນຳສະເໜີເຫດຜົນທີ່ຜູ້ຂຽນມີໃນການເລືອກຕົວລະຄອນ ແລະ ສະພາບການຂອງຂໍ້ຄວາມນັ້ນ. |
| **ອົງປະກອບທີ 3 ການຂຽນເລົ່າເລື່ອງ** | | | | |
| ປ.1 | ປ. 2 | ປ. 3 | ປ. 4 | ປ. 5 |
| **ນັກຮຽນຮູ້:** | ນັກຮຽນຮູ້: | **ນັກຮຽນຮູ້:** | **ນັກຮຽນຮູ້:** | **ນັກຮຽນຮູ້:** |

| | | | | |
|---|---|---|---|---|
| ວິທີຂຽນປະໂຫຍກທີ່ເລົ່າເລື່ອງໃດໜຶ່ງ.<br>**ນັກຮຽນສາມາດ:**<br>1.ຂຽນປະໂຫຍກທີ່ເລົ່າເລື່ອງງ່າຍໆເພື່ອເຮັດໃຫ້ເລື່ອງໃດໜຶ່ງສົມບູນ. | ວິທີຂຽນປະໂຫຍກທີ່ເລົ່າເລື່ອງໆທີ່ປະດິດສ້າງ( ຫຼັງຈາກການແຕ້ມຮູບພາບ, ລຳດັບຮູບພາບຄັ້ງທຳອິດ).<br>**ນັກຮຽນສາມາດ:**<br>1.ນຳໃຊ້ຫົວຂໍ້ທີ່ເໝາະສົມໃນການຂຽນບົດເລື່ອງ.<br>2. ນຳໃຊ້ປະໂຫຍກເລົ່າເລື່ອງທີ່ເໝາະສົມເພື່ອບອກສິ່ງທີ່ເກີດຂຶ້ນຕາມລຳດັບ.<br>3.ເລື່ອງມີການສິ້ນສຸດ. | ວິທີຂຽນບົດເລົ່າເລື່ອງປະກອບດ້ວຍບົດສົນທະນາ.<br>**ນັກຮຽນສາມາດ:**<br>1.ຂຽນບົດເລົ່າເລື່ອງທີ່ມີປະສິດທິພາບ.<br>2. ຂຽນບົດສົນທະນາຂອງຕົວລະຄອນທີ່ມີປະສິດທິພາບ ແລະ ພາກສ່ວນໜຶ່ງຂອງເລື່ອງ | ວິທີຂຽນນິທານກ່ຽວກັບຄຸນສົມບັດ.<br>**ນັກຮຽນສາມາດ:**<br>1.ຂຽນນິທານທີ່ມີປະສິດທິພາບ.<br>2.ຂຽນບົດສົນທະນາຂອງຕົວລະຄອນທີ່ເຮັດໃນບົດເລື່ອງມີການສົນທະນາຫຼາຍຂຶ້ນ.<br>3.ນຳໃຊ້ຄຳສັບ ແລະ ວະລີເຂົ້າໃນການຊ່ວຍໃຫ້ຜູ້ອ່ານຈິນຕະນາການ ແລະ ພັນລະນາ. | ວິທີຂຽນເລື່ອງທີ່ສອນກ່ຽວກັບບັນຫາຂອງຊຸມຊົນ.<br>**ນັກຮຽນສາມາດ:**<br>1.ຂຽນເລື່ອງທີ່ມີປະສິດທິພາບເພື່ອສອນກ່ຽວກັບບັນຫາຂອງຊຸມຊົນ.<br>2. ນຳໃຊ້ວິທີທີ່ຫຼາກຫຼາຍເພື່ອເຮັດໃຫ້ເລື່ອງມີການສົນທະນາຫຼາຍຂຶ້ນ. |
| **ກາບກອນ, ບົດເພງ, ຄຳຮ້ອຍແກ້ວ ແລະ ວັນນະຄະດີອື່ນໆ.** | | | | |
| **ອົງປະກອບທີ 1 ການເວົ້າວັນນະຄະດີ** | | | | |
| ປ.1 | ປ. 2 | ປ. 3 | ປ. 4 | ປ. 5 |
| **ນັກຮຽນຮູ້:**<br>ຈຸດປະສົງຂອງການຮ້ອງເພງເພື່ອຄວາມມ່ວນຊື່ນ.<br>**ນັກຮຽນສາມາດ:** | **ນັກຮຽນຮູ້:**<br>ຈຸດປະສົງຂອງການຮ້ອງເພງ ແລະ ການທ່ອງກາບກອນເພື່ອຄວາມມ່ວນຊື່ນ. | **ນັກຮຽນຮູ້:**<br>ຈຸດປະສົງຂອງການຮ້ອງເພງ ແລະ ການທ່ອງກາບກອນເພື່ອຄວາມມ່ວນຊື່ນ. | **ນັກຮຽນຮູ້:**<br>ຈຸດປະສົງຂອງການຮ້ອງເພງ ແລະ ການທ່ອງກາບກອນເພື່ອ | **ນັກຮຽນຮູ້:**<br>ຈຸດປະສົງຂອງການຮ້ອງເພງ ແລະ ການທ່ອງກາບກອນເພື່ອຄວາມມ່ວນຊື່ນ ສຳ |

| | | | | |
|---|---|---|---|---|
| 1.ມີຄວາມສຸກໃນການຮ້ອງເພງ (ເໝາະສົມສໍາລັບ ປ. 1) | **ນັກຮຽນສາມາດ:** 1.ມີຄວາມສຸກໃນການຮ້ອງເພງ ແລະ ການທ່ອງກາບກອນ ( ເໝາະສົມສໍາລັບ ປ. 2) | **ນັກຮຽນສາມາດ:** 1.ມີຄວາມສຸກໃນການຮ້ອງເພງ ແລະ ການທ່ອງກາບກອນ( ເໝາະສົມສໍາລັບ ປ. 3) | ຄວາມມ່ວນຊື່ນສໍາລັບຜູ້ເວົ້າ ແລະ ຜູ້ຟັງ. **ນັກຮຽນສາມາດ:** 1.ມີຄວາມສຸກໃນການຮ້ອງເພງ ແລະ ການທ່ອງກາບກອນ ( ເໝາະສົມສໍາລັບ ປ.4) | ລັບຜູ້ເວົ້າ ແລະ ຜູ້ຟັງ. **ນັກຮຽນສາມາດ:** 1.ມີຄວາມສຸກໃນການຮ້ອງເພງ ແລະ ການທ່ອງກາບກອນ ( ເໝາະສົມສໍາລັບ ປ. 5) |
| **ອົງປະກອບທີ 2 ການຂຽນບົດວັນນະຄະດີ** | | | | |
| ປ.1 | ປ. 2 | ປ. 3 | ປ. 4 | ປ. 5 |
| | **ນັກຮຽນຮູ້:** ສໍານຶກດ້ໂຄງສ້າງຂອງການຂຽນກາບກອນ ແລະ ເນື້ອຮ້ອງຂອງເພງ ( ຊັ້ນ ປ. 2). **ນັກຮຽນສາມາດ:** 1.ອ່ານອອກສຽງກາບກອນ ຫຼື ຮ້ອງເພງ. 2.ລະບຸສຽງຂອງຄໍາສັບບົດກາບກອນ ແລະ ຕົ້ນສະບັບຂອງການສໍາຜັດໃນ | **ນັກຮຽນຮູ້:** ສໍານຶກດ້ໂຄງສ້າງຂອງການຂຽນກາບກອນ ແລະ ເນື້ອຮ້ອງຂອງເພງ ( ຊັ້ນ ປ.3) **ນັກຮຽນສາມາດ:** 1.ອ່ານອອກສຽງກາບກອນ ຫຼື ຮ້ອງເພງ. 2.ລະບຸສຽງຂອງຄໍາສັບບົດກາບກອນ ແລະ ຕົ້ນສະບັບອື່ນໆທີ່ໃຊ້ໃນບົດ. | **ນັກຮຽນຮູ້:** ສໍານຶກແນວຄວາມຄິດທີ່ມ່ວນອອນຊອນຂອງການຂຽນກາບກອນ, ເນື້ອເພງ ແລະ ທີ່ມ່ວນອ່ອນຊອນຂອງບົດຄວາມ ( ຊັ້ນປ.4) **ນັກຮຽນສາມາດ:** 1.ອ່ານອອກສຽງກາບກອນ ແລະ | **ນັກຮຽນຮູ້:** ສໍານຶກແນວຄວາມຄິດທີ່ມ່ວນອອນຊອນຂອງການຂຽນກາບກອນ, ເນື້ອເພງ ແລະ ທີ່ມ່ວນອ່ອນຊອນຂອງບົດຄວາມ ( ຊັ້ນ ປ.5) **ນັກຮຽນສາມາດ:** 1.ອ່ານອອກສຽງກາບກອນ ແລະ ບົດທີ່ມ່ວນອອນຊອນ ຫຼື ຮ້ອງເພງດ້ວຍ |

| | | | | |
|---|---|---|---|---|
| | ກາບກອນ ແລະ ເນື້ອຮ້ອງຂອງເພັງ.<br>3. ນໍາສະເໜີຄໍາສັບອື່ນທີ່ສາມາດປ່ຽນແທນເຂົ້າໃນຕົ້ນສະບັບ. | 3. ນໍາສະເໜີຄໍາສັບອື່ນ ແລະ ເສັ້ນແຖວທີ່ສມາດປ່ຽນແທນຕົ້ນສະບັບໄດ້. | ບົດທີ່ມ່ວນອອນຊອນ ຫຼື ຮ້ອງເພງດ້ວຍສຽງທີ່ມີຄວາມໝາຍ ແລະ ເໝາະສົມ.<br>2.ລະບຸຫົວຂໍ້ ແລະ ຄໍາສັບທີ່ເລືອກເພື່ອຊ່ວຍໃຫ້ຜູ້ຟັງຈິນຕະນາການໄດ້.<br>3.ລະບຸໄວຍາກອນທີ່ແຕກຕ່າງ ແລະ ສະເໜີຜົນກະທົບຕໍ່ຜູ້ຟັງ.<br>4.ລະບຸຄໍາສັບໃນບົດຄວາມທີ່ມີຜົນກະທົບຕໍ່ຄວາມຮູ້ສຶກຂອງຜູ້ຟັງ.<br>5. ນໍາສະເໜີຄໍາສັບອື່ນໆ ແລະ ເສັ້ນແຖວທີ່ນໍາມາເຖິງຄວາມຮູ້ສຶກທີ່ຄ້າຍຄື | ສຽງທີ່ມີຄວາມໝາຍ ແລະ ເໝາະສົມ.<br>2.ລະບຸຫົວຂໍ້ ແລະ ຄໍາສັບທີ່ເລືອກເພື່ອຊ່ວຍໃຫ້ຜູ້ຟັງຈິນຕະນາການໄດ້.<br>3.ລະບຸໄວຍາກອນທີ່ແຕກຕ່າງ ແລະ ສະເໜີຜົນກະທົບຕໍ່ຜູ້ຟັງ.<br>4.ລະບຸຄໍາສັບໃນບົດຄວາມທີ່ມີຜົນກະທົບຕໍ່ຄວາມຮູ້ສຶກຂອງຜູ້ຟັງ.<br>5. ນໍາສະເໜີຄໍາສັບອື່ນໆ ແລະ ເສັ້ນແຖວທີ່ນໍາມາເຖິງຄວາມຮູ້ສຶກທີ່ຄ້າຍຄືກັນ ແລະ ແຕກຕ່າງກັນ. |

| | | | | |
|---|---|---|---|---|
| | | | ກັນ ແລະ ແຕກຕ່າງກັນ. | |
| **ອົງປະກອບທີ 3 ການຂຽນບົດວັນນະຄະດີ** | | | | |
| ປ.1 | ປ. 2 | ປ. 3 | ປ. 4 | ປ. 5 |
| | **ນັກຮຽນຮູ້:**<br>ວິທີຂຽນຕາມເສັ້ນແຖວຕົ້ນສະບັບໃນບົດທີ່ໄດ້ຮຽນມາ.<br>**ນັກຮຽນສາມາດ:**<br>1.ປ່ຽນແທນດ້ວຍຄໍາສັບໃໝ່ ຫຼືເສັ້ນແຖວໃສ່ຕົ້ນສະບັບດ້ວຍການຮັກສາໂຄງສ້າງບົດກະວີ. | **ນັກຮຽນຮູ້:**<br>ວິທີຂຽນບົດກະວີເດີມດ້ວຍຕົນເອງຈາກບົດທີ່ໄດ້ຮຽນມາ.<br>**ນັກຮຽນສາມາດ:**<br>1.ຂຽນຕາມຕົ້ນສະບັບທີ່ກໍານົດໃຫ້ເພື່ອປະດິດສ້າງບົດກະວີ ໃໝ່. | **ນັກຮຽນຮູ້:**<br>ວິທີຂຽນບົດທີ່ມ່ວນ ແລະ ອ່ອນຊອນ.<br>**ນັກຮຽນສາມາດ:**<br>1.ຂຽນຕາມບົດທີ່ມ່ວນອ່ອນຊອນໃນຫົວຂໍ້ໃດໜຶ່ງ.<br>2.ເລືກຄໍາສັບ ແລະ ປະໂຫຍກໃນໄວຍາກອນເພື່ອເພີ່ມຜົນກະທົບ. | **ນັກຮຽນຮູ້:**<br>ວິທີຂຽນບົດທີ່ມ່ວນ ແລະ ອ່ອນຊອນ.<br>**ນັກຮຽນສາມາດ:**<br>1.ຂຽນຕາມບົດທີ່ມ່ວນອ່ອນຊອນໃນຫົວຂໍ້ໃດໜຶ່ງ.<br>2. ເລືອກຄໍາສັບ ແລະ ປະໂຫຍກໃນໄວຍາກອນເພື່ອເພີ່ມຜົນກະທົບ. |
| **ບົດພັນລະນາຂໍ້ມູນຄວາມຈິງ/ ບົດຂໍ້ມູນຂ່າວສານ** | | | | |
| **ອົງປະກອບທີ 1 ການເວົ້າຂໍ້ມູນຂ່າວສານ** | | | | |
| ປ.1 | ປ. 2 | ປ. 3 | ປ. 4 | ປ. 5 |
| **ນັກຮຽນຮູ້:**<br>ສໍານຶກ ແລະ ຕອບຄືນຕໍ່ບົດຂໍ້ມູນຂ່າວສານ ແລະ ພັນລະນາສິ່ງ | **ນັກຮຽນຮູ້:**<br>ວິທີເລືອກ ແລະ ບອກຂໍ້ມູນກ່ຽວກັບຫົວຂໍ້ໃດໜຶ່ງ ( ສິ່ງ | **ນັກຮຽນຮູ້:**<br>ວິທີເລືອກ, ຈັດການ ແລະ ນໍາສະເໜີຂໍ້ມູນ | **ນັກຮຽນຮູ້:**<br>ວິທີເລືອກ, ຈັດການ ແລະ ນໍາສະເໜີຂໍ້ມູນ | **ນັກຮຽນຮູ້:**<br>ວິທີເລືອກ, ຈັດການ ແລະ ນໍາສະເໜີຂໍ້ |

| | | | | |
|---|---|---|---|---|
| ສອງທີ່ຄຸ້ນເຄີຍ ( ວັດຖຸ, ຄົນ, ສັດ ແລະ ອື່ນໆ).<br>**ນັກຮຽນສາມາດ:**<br>1.ນຳໃຊ້ຊື່ທົ່ວໄປຂອງສິ່ງຂອງທີ່ຄຸ້ນເຄີຍ.<br>2.ພັນລະນາພາຍນອກຂອງວັດຖຸ, ຄົນ, ສັດ ຫຼື ພືດ.<br>3. ນຳໃຊ້ຄຳຄຸນນາມງ່າຍໆເຂົ້າໃນການພັນລະນາກ່ຽວກັບຂະໜາດ ແລະ ສີ.<br>4. ມີສ່ວນຮ່ວມໃນການຫຼິ້ນເກມ, ການເດົາ ຂ້ອຍແມ່ນໃຜ? ກ່ຽວກັບສັດ( ທີ່ຢູ່ອາໄສ, ລັກສະນະ, ອາຫານ ແລະ ການກະທຳ). | ໃດໜຶ່ງ ຫຼື ກຸ່ມຂອງສິ່ງໃດໜຶ່ງ).<br>**ນັກຮຽນສາມາດ:**<br>1.ຂໍ້ມູນກ່ຽວກັບສິ່ງເຫຼົ່ານັ້ນແມ່ນຫຍັງ? ແມ່ນປະເພດໃດ?<br>2.ພັນລະນາພາຍນອກຂອງສິ່ງຂອງໂດຍນຳໃຊ້ຄຳຄຸນນາມ ແລະ ວະລີທີ່ເໝາະສົມ.<br>3. ຂໍ້ມູນອື່ນກ່ຽວກັບສິ່ງຂອງ:<br>- ສຳລັບສິ່ງທີ່ມີຊີວິດ: ມັນດຳລົງຊີວິດແນວໃດ? ( ອາຫານ, ການເບິ່ງແຍງດູແລລູກ).<br>- ສຳລັບສິ່ງທີ່ບໍ່ມີຊີວິດ: ມັນມີປະໂຫຍດ ແລະ ມີຄວາມສຳຄັນແນວໃດ?. | ຄວາມຈິງກ່ຽວກັບຫົວຂໍ້ທີ່ຄຸ້ນເຄີຍ.<br>**ນັກຮຽນສາມາດ:**<br>1.ເລືອກຂໍ້ມູນທີ່ກ່ຽວຂ້ອງ ແລະ ໜ້າສົນໃຈຕໍ່ຜູ້ຟັງ.<br>2.ຈັດລຽງຂໍ້ມູນໃສ່ຕາມລຳດັບໃຫ້ມີປະສິດທິພາບ.<br>3.ຂໍ້ມູນໂດຍການນຳໃຊ້ຄຳສັບທີ່ເໝາະສົມກັບຫົວຂໍ້. | ຄວາມຈິງກ່ຽວກັບຫົວຂໍ້ທີ່ເລືອກ.<br>**ນັກຮຽນສາມາດ:**<br>1.ເລືອກຂໍ້ມູນທີ່ກ່ຽວຂ້ອງ ແລະ ໜ້າສົນໃຈຕໍ່ຜູ້ຟັງ.<br>2.ຈັດລຽງຂໍ້ມູນໃສ່ຕາມລຳດັບໃຫ້ມີປະສິດທິພາບ.<br>3.ຂໍ້ມູນໂດຍການນຳໃຊ້ຄຳສັບທີ່ເໝາະສົມກັບຫົວຂໍ້. | ມູນຄວາມຈິງກ່ຽວກັບຫົວຂໍ້ທີ່ເລືອກ.<br>**ນັກຮຽນສາມາດ:**<br>1.ເລືອກຂໍ້ມູນທີ່ກ່ຽວຂ້ອງ ແລະ ໜ້າສົນໃຈຕໍ່ຜູ້ຟັງ.<br>2.ຈັດລຽງຂໍ້ມູນໃສ່ຕາມລຳດັບໃຫ້ມີປະສິດທິພາບ.<br>3.ນຳໃຊ້ສີ່ ແລະ ຄຳສັບອື່ນໆ ສະເພາະຫົວຂໍ້ ແລະ ເງື່ອນໄຂ.<br>4.ເລືອກຄຳຄຸນນາມ ແລະ ວະລີເຂົ້າໃນການພັນລະນາສຳລັບຫົວຂໍ້ໃດໜຶ່ງໃນເງື່ອນໄຂທີ່ເໝາະສົມ. |
| **ອົງປະກອບທີ 2 ການອ່ານບົດຂໍ້ມູນຂ່າວສານ** | | | | |
| ປ.1 | ປ. 2 | ປ. 3 | ປ. 4 | ປ. 5 |
| **ນັກຮຽນຮູ້:** | **ນັກຮຽນຮູ້:** | **ນັກຮຽນຮູ້:** | **ນັກຮຽນຮູ້:** | **ນັກຮຽນຮູ້:** |

| | | | | |
|---|---|---|---|---|
| ຟັງບົດຂໍ້ມູນຂ່າວສານທີ່ກຳລັງຖືກອ່ານ ຫຼື ອ່ານບົດພັນລະນາສັ້ນໆຢ່າງເຂົ້າໃຈ.<br>**ນັກຮຽນສາມາດ:**<br>1.ລະບຸຂໍ້ມູນສະເພາະໃນບົດພັນລະນາທີ່ກຳລັງອ່ານ( ເພື່ອຕອບຄຳຖາມຂອງຄູ).<br>2. ອ່ານ ແລະ ບອກຄວາມໝາຍຂອງປະໂຫຍກທີ່ໃຊ້ໃນບົດພັນລະນາ ແລະ ບົດຄວາມ. | ອ່ານບົດພັນລະນາງ່າຍໆ ແລະ ລະບຸປະເພດຕ່າງໆຂອງຂໍ້ມູນໃນບົດພັນລະນາ ( ການນຳສະ ເໜີຫົວຂໍ້, ການພັນລະນາຮູບຮ່າງພາຍນອກ , ການພັນລະນາພຶດຕິກຳ/ ນຳໃຊ້).<br>**ນັກຮຽນສາມາດ:**<br>1.ອ່ານ ແລະ ບອກຈຸດປະສົງ, ຄວາມໝາຍຂອງບົດພັນລະນາ.<br>2.ຊອກຫາຂໍ້ມູນສະເພາະໃນບົດພັນລະນາເພື່ອຕອບຄຳຖາມ. | ອ່ານບົດຂໍ້ມູນຂ່າວສານ ແລະ ລະບຸປະເພດຕ່າງໆຂອງຂໍ້ມູນໃນແຕ່ລະວັກ( ຫົວຂໍ້ ເລີ່ມຕົ້ນ: ສະເໜີແມ່ນຫຍັງ? ແລະ ຢູ່ໃສ, ລະຫວ່າງກາງ: ພັນລະນາຮູບຮ່າງພາຍນອກ, ພັນລະນາພຶດຕິກຳ/ ນຳໃຊ້ ບອກເຖິງສິ່ງອື່ນທີ່ໜ້າສົນໃຈກ່ຽວກັບຂໍ້ມູນຂ່າວສານ).<br>ນັກຮຽນສາມາດ:<br>1.ອ່ານ ແລະ ບອກຈຸດປະສົງ ຄວາມໝາຍຂອງຄຳສັບຫຼັກໃນບົດຂ່າວ.<br>2.ຊອກຫາຂໍ້ມູນສະເພາະໃນບົດພັນລະນາເພື່ອຕອບຄຳຖາມ. | ອ່ານບົດຂໍ້ມູນຂ່າວສານເພື່ອຊອກຫາຂໍ້ມູນສະເພາະ.<br>**ນັກຮຽນສາມາດ:**<br>1.ອ່ານ ແລະ ບອກຄວາມໝາຍຂອງຄຳສັບຫຼັກ.<br>2.ຕອບຄຳຖາມໃນແຕ່ລະວັກ. | ອ່ານບົດຂໍ້ມູນຂ່າວສານເພື່ອຊອກຫາຂໍ້ມູນສະເພາະ.<br>**ນັກຮຽນສາມາດ:**<br>1.ອ່ານ ແລະ ບອກຄວາມໝາຍຂອງຄຳສັບຫຼັກ.<br>2.ນຳໃຊ້ບົດຂໍ້ມູນຄວາມຈິງຢ່າງມີຈຸດປະສົງເພື່ອຮັບຂໍ້ມູນ ຫຼື ຊອກຫາຂໍ້ມູນສະເພາະ.<br>3.ປະເມີນຄວາມສອດຄ່ອງຂອງບົດຂ່າວຕໍ່ເງື່ອນໄຂຂອງຕົນເອງ. |
| **ອົງປະກອບ 3 ການຂຽນບົດຂໍ້ມູນຂ່າວສານ** | | | | |
| ປ.1 | ປ. 2 | ປ. 3 | ປ. 4 | ປ. 5 |
| **ນັກຮຽນຮູ້:**<br>ວິທີຂຽນປະໂຫຍກພັນລະນາ | **ນັກຮຽນຮູ້:**<br>ວິທີຂຽນປະໂຫຍກພັນລະນາງ່າຍໆ | **ນັກຮຽນຮູ້:** | **ນັກຮຽນຮູ້:**<br>ວິທີສຶກສາ ແລະ ຂຽນບົດຂໍ້ມູນ | **ນັກຮຽນຮູ້:**<br>ວິທີສຶກສາ ແລະ ຂຽນບົດຂໍ້ມູນ |

| | | | | |
|---|---|---|---|---|
| **ນັກຮຽນສາມາດ:**<br>1.ໃຫ້ເຫດຜົນດ້ວຍການນຳໃຊ້ " ເພາະວ່າ " | ກ່ຽວກັບສິ່ງທີ່ຄຸ້ນເຄີຍ.<br>**ນັກຮຽນສາມາດ:**<br>1.ນຳໃຊ້ຫົວຂໍ້ທີ່ເໝາະສົມກັບບົດ.<br>2.ນຳສະເໜີສິ່ງທີ່ກຳລັງພັນລະນາ.<br>3.ນຳໃຊ້ປະໂຫຍກພັນລະນາໃຫ້ເໝາະສົມທີ່ບອກກ່ຽວກັບຮູບຮ່າງພາຍນອກ ແລະ ພຶດຕິກຳ / ນຳໃຊ້. | ວິທີຂຽນບົດຂໍ້ມູນຄວາມຈິງດ້ວຍຄຳສັບຫຼັກທີ່ເໝາະສົມ.<br>**ນັກຮຽນສາມາດ:**<br>1.ຂຽນບົດຂໍ້ມູນຂ່າວສານທີ່ມີປະສິດທິພາບ.<br>2.ນຳໃຊ້ບາງຄຳສັບທີ່ເປັນຄຳສັບສະເພາະກັບຫົວຂໍ້. | ຄວາມຈິງກ່ຽວກັບຫົວຂໍ້.<br>**ນັກຮຽນສາມາດ:**<br>1.ຂຽນບົດຂໍ້ມູນຂ່າວສານທີ່ມີປະສິດທິພາບ.<br>2.ນຳໃຊ້ບາງຄຳສັບທີ່ເປັນຄຳສັບສະເພາະກັບຫົວຂໍ້. | ຄວາມຈິງກ່ຽວກັບຫົວຂໍ້.<br>**ນັກຮຽນສາມາດ:**<br>1.ຂຽນບົດຂໍ້ມູນຂ່າວສານທີ່ມີປະສິດທິພາບ.<br>2.ນຳໃຊ້ບາງຄຳສັບທີ່ເປັນຄຳສັບສະເພາະກັບຫົວຂໍ້. |
| **ບົດຄວາມຄິດເຫັນ / ໂຕ້ຖຽງ/ ຈູງໃຈ** | | | | |
| **ອົງປະກອບ1 ການເວົ້າສະແດງຄວາມຄິດເຫັນ** | | | | |
| ປ.1 | ປ. 2 | ປ. 3 | ປ. 4 | ປ. 5 |
| **ນັກຮຽນຮູ້:**<br>ສຳນຶກ ແລະ ຕອບສະໜອງຕໍ່ ກັບບົດເວົ້າທີ່ສະແດງຄວາມຄິດເຫັນຂອງຕົນເອງກ່ຽວກັບບາງຢ່າງ.<br>**ນັກຮຽນສາມາດ:**<br>1.ບອກຄວາມຄິດເຫັນຂອງຕົນເອງກ່ຽວ | **ນັກຮຽນຮູ້:**<br>ຈຳແນກຄວາມຄິດເຫັນຂອງຄົນອື່ນ ແລະ ຂອງຕົນເອງຕໍ່ກັບຕົນເອງກ່ຽວກັບຫົວຂໍ້ງ່າຍໆດຽວກັນ.<br>**ນັກຮຽນສາມາດ:** | **ນັກຮຽນຮູ້:**<br>ຈຳແນກຄວາມຄິດເຫັນຂອງຄົນອື່ນ ແລະ ຂອງຕົນເອງດ້ວຍກັບກ່ຽວກັບຫົວຂໍ້ງ່າຍໆດຽວກັນ.<br>**ນັກຮຽນສາມາດ:** | **ນັກຮຽນຮູ້:**<br>ວິທີຈູງໃຈໃນການໂຕ້ຖຽງເພື່ອຄວາມຖືກຕ້ອງໃນຄວາມຄິດເຫັນຂອງຕົນເອງ.<br>**ນັກຮຽນສາມາດ:** | **ນັກຮຽນຮູ້:**<br>ວິທີຈູງໃຈໃນການໂຕ້ຖຽງເພື່ອຄວາມຖືກຕ້ອງໃນຄວາມຄິດເຫັນຂອງຕົນເອງ.<br>**ນັກຮຽນສາມາດ:**<br>1.ລະບຸ ແລະ ບອກຫຼັກຖານເພື່ອຄ້ຳ |

| | | | | |
|---|---|---|---|---|
| ກັບບາງຢ່າງ(ຕົວຢ່າງ: ມັກ ແລະ ບໍ່ມັກ).<br>2.ໃຫ້ເຫດຜົນດ້ວຍການນໍາໃຊ້ " ເພາະວ່າ " | 1.ບອກຄວາມຄິດເຫັນຂອງຕົນເອງ ແລະ ເຫດຜົນກ່ຽວກັບຫົວຂໍ້ງ່າຍໆທີ່ຫຼາກຫຼາຍ( ສິ່ງທີ່ມັກ , ຕົວລະຄອນໃນເລື່ອງ, ວິທີທີ່ດີທີ່ສຸດໃນການເຮັດບາງຢ່າງ ແລະ ອື່ນໆ).<br>2.ບອກຫຼາຍກວ່າໜຶ່ງເຫດຜົນກ່ຽວກັບຄວາມຄິດເຫັນໃດໜຶ່ງ. | 1.ສະແດງຄວາມຄິດເຫັນຂອງຕົນເອງຢ່າງຈະແຈ້ງ.<br>2.ນໍາສະເໜີຫຼາຍເຫດຜົນຕໍ່ຄວາມຄິດເຫັນໃດໜຶ່ງ.<br>3.ສະເພາະເວລາທີ່ສະແດງຄວາມບໍ່ເຫັນດີຕໍ່ກັບຄວາມຄິດເຫັນຂອງຜູ້ອື່ນ. | 1.ນໍາໃຊ້ຄໍາສັບ " ຂ້ອຍຄິດວ່າ " ແລະ ຄໍາກິລິຍາຊ່ວຍ ( ຄວນ, ຕ້ອງ, ຈະ) ໃນການສະແດງຄວາມຄິດເຫັນ ແລະ ໃຫ້ເຫດຜົນ.<br>2.ນໍາໃຊ້ຄໍາສັບ " ເພາະວ່າ ", " ດັ່ງນັ້ນ " , " ເຊັ່ນວ່າ " ແລະ ອື່ນໆເພື່ອໃຫ້ເຫດຜົນທີ່ມີປະສິດທິພາບ. | ປະກັນຄວາມເຫັນຂອງຕົນເອງ.<br>2.ປະເມີນຄວາມຄິດເຫັນ ແລະ ເຫດຜົນຂອງຜູ້ອື່ນ ແລະ ຕອບກັບດ້ວຍເຫດຜົນຂອງຕົນເອງໃນການເຫັນດີ ຫຼື ບໍ່ເຫັນດີ. |
| **ອົງປະກອບ 2 ການອ່ານບົດຈູງໃຈ** | | | | |
| ປ.1 | ປ. 2 | ປ. 3 | ປ. 4 | ປ. 5 |

| | | | | |
|---|---|---|---|---|
| | **ນັກຮຽນຮູ້:**<br>ລະບຸໄດ້ເຖິງດວລາທີ່ຜູ້ອື່ນ ຫຼື ຕົວລະຄອນໃນເລື່ອງສະແດງຄວາມຄິດເຫັນ ( ຄູຊ່ວຍເຫຼືອດ້ວຍການຕັ້ງຄໍາຖາມ ).<br>**ນັກຮຽນສາມາດ:**<br>1.ອ່ານ ແລະ ບອກຄວາມຄິດເຫັນທີ່ກໍາລັງສະແດງອອກ.<br>2.ອ່ານ ແລະ ບອກເຫດຜົນຕໍ່ຄວາມຄິດເຫັນທີ່ຜ່ານມາ. | **ນັກຮຽນຮູ້:**<br>ອ່ານບົດສະແດງຄວາມຄິດເຫັນງ່າຍໆ ແລະ ຈໍາແນກປະເພດຂອງຂໍ້ມູນໃນແຕ່ລະວັກ( ຫົວຂໍ້ ເລີ່ມຕົ້ນ: ສະເໜີບັນຫາ/ ຫົວຂໍ້ ແລະ ຄວາມຄິດເຫັນລະຫວ່າງກາງ: ໃຫ້ເຫດຜົນທີ່ຫຼາກຫຼາຍ).<br>**ນັກຮຽນສາມາດ:**<br>1.ອ່ານ ແລະ ບອກຄວາມຄິດເຫັນທີ່ກໍາລັງສະແດງອອກ.<br>2.ອ່ານ ແລະ ບອກເຫດຜົນຕໍ່ຄວາມຄິດເຫັນທີ່ຜ່ານມາ. | **ນັກຮຽນຮູ້:**<br>ອ່ານບົດສະແດງຄວາມຄິດເຫັນທີ່ປະກອບມີປະໂຫຍກແຮງຈູງໃຈ.<br>**ນັກຮຽນສາມາດ:**<br>1.ຈໍາແນກຄໍາສັບທີ່ສິ່ງເສີມຕໍ່ການສະແດງຄວາມຄິດເຫັນ.<br>2.ຈໍາແນກຄໍາສັບທີ່ສິ່ງເສີມໃນການໃຫ້ເຫດຜົນ.<br>3.ຈໍາແນກຄໍາສັບທີ່ສິ່ງເສີມໃນແຮງຈູງໃຈໃຫ້ຜູ້ອ່ານ. | **ນັກຮຽນຮູ້:**<br>ອ່ານບົດສະແດງຄວາມຄິດເຫັນທີ່ປະກອບມີປະໂຫຍກແຮງຈູງໃຈ.<br>**ນັກຮຽນສາມາດ:**<br>1.ຈໍາແນກບັນດາຫຼັກຖານທີ່ຜູ້ຂຽນກໍານົດໃຫ້ແມ່ນເຫດຜົນສໍາລັບຄວາມຄິດເຫັນຂອງຕົນເອງ ຫຼື ບໍ່ເຫັນດີກັບຄວາມຄິດເຫັນຂອງຜູ້ອື່ນ.<br>2. ປະເມີນ ແລະ ຕອບຄືນຕໍ່ກັບຫຼັກຖານທີ່ໃຫ້ມາ.<br>3.ໃຫ້ເຫດຜົນຂອງຕົນເອງເພື່ອຕອບຄືນ. |
| **ອົງປະກອບ 3 ການຂຽນບົດຈູງໃຈ** | | | | |
| ປ.1 | ປ. 2 | ປ. 3 | ປ. 4 | ປ. 5 |
| | **ນັກຮຽນຮູ້:**<br>ຂຽນປະໂຫຍກງ່າຍໆທີ່ສະແດງຄວາມຄິດເຫັນຂອງ | **ນັກຮຽນຮູ້:**<br>ວິທີຂຽນບົດສະແດງຄວາມຄິດເຫັນງ່າຍໆເພື່ອສະແດງຄວາມ | **ນັກຮຽນຮູ້:**<br>ວິທີຂຽນບົດສະແດງຄວາມຄິດເຫັນງ່າຍໆ | **ນັກຮຽນຮູ້:**<br>ວິທີຂຽນບົດສະແດງຄວາມຄິດເຫັນງ່າຍໆ ເພື່ອສະແດງ |

| | | | | |
|---|---|---|---|---|
| | ຕົນເອງ ແລະ ເຫດຜົນ.<br>**ນັກຮຽນສາມາດ:**<br>1.ສະແດງຄວາມຄິດເຫັນດ້ວຍປະໂຫຍກຢ່າງຊັດເຈນຕໍ່ຫົວຂໍ້ໃດໜຶ່ງ.<br>2.ປະໂຫຍກສະແດງເຫດຜົນຕໍ່ຄວາມຄິດເຫັນໃດໜຶ່ງ.<br>3.ນຳໃຊ້ຄຳສັບ " ເພາະວ່າ " ເພື່ອເຫດຜົນ. | ຄິດເຫັນຂອງຕົນເອງຕໍ່ຫົວຂໍ້ໃດໜຶ່ງດ້ວຍເຫດຜົນຫຼາຍກວ່າໜຶ່ງເຫດຜົນ.<br>**ນັກຮຽນສາມາດ:**<br>1.ຂຽນບົດສະແດງຄວາມຄິດເຫັນທີ່ມີປະສິດທິພາບ. | ເພື່ອສະແດງຄວາມຄິດເຫັນຂອງຕົນເອງ ຕໍ່ຫົວຂໍ້ໃດໜຶ່ງດ້ວຍເຫດຜົນຫຼາຍກວ່າໜຶ່ງເຫດຜົນ.<br>**ນັກຮຽນສາມາດ:**<br>1.ນຳໃຊ້ຄຳສັບ " ຂ້ອຍຄິດວ່າ " ເພື່ອສະແດງຄວາມຄິດເຫັນ.<br>2.ນຳໃຊ້ຄຳສັບ " ເພາະວ່າ ", " ດັ່ງນັ້ນ ", " ເຊັ່ນກັນ " ເພື່ອໃຫ້ເຫດຜົນ.<br>3.ນຳໃຊ້ຄຳສັບຈູງໃຈ ແລະ ວິທີອື່ນ ເພື່ອຈູງໃຈຜູ້ອ່ານ. | ຄວາມຄິດເຫັນຂອງຕົນເອງ ຕໍ່ຫົວຂໍ້ໃດໜຶ່ງດ້ວຍເຫດຜົນຫຼາຍກວ່າໜຶ່ງເຫດຜົນ.<br>**ນັກຮຽນສາມາດ:**<br>1.ໃຫ້ຫຼັກຖານທີ່ເປັນຜົນວ່າຄວາມຄິດເຫັນຂອງຜູ້ອື່ນຖືກຕ້ອງ.<br>2.ໃຫ້ຫຼັກຖານທີ່ເປັນຜົນວ່າຄວາມຄິດເຫັນຂອງຜູ້ອື່ນບໍ່ຖືກຕ້ອງ. |
| **ຂໍ້ຄວາມ ແລະ ຈົດໝາຍ** | | | | |
| **ອົງປະກອບ 1 ການເວົ້າຂໍ້ຄວາມ** | | | | |
| ປ.1 | ປ. 2 | ປ. 3 | ປ. 4 | ປ. 5 |
| **ນັກຮຽນຮູ້:** | **ນັກຮຽນຮູ້:** | **ນັກຮຽນຮູ້:** | | |

| | | | | |
|---|---|---|---|---|
| ສຳນຶກ ແລະ ຕອບຄືນຕໍ່ຂໍ້ຄວາມ ແລະ ຮູ້ວິທີບອກຂໍ້ຄວາມງ່າຍໆຂອງຕົນເອງ.<br>**ນັກຮຽນສາມາດ:**<br>1.ຟັງ ແລະ ຖ່າຍທອດຂໍ້ມູນງ່າຍໆ. | ຕອບຄືນຕໍ່ຂໍ້ຄວາມ ແລະ ຮູ້ວິທີບອກຂໍ້ຄວາມຂອງຕົນເອງ.<br>**ນັກຮຽນສາມາດ:**<br>1.ສະແດງບົດບາດສົມມຸດ ແລະ ນຳໃຊ້ຂໍ້ຄວາມໃນສະພາບການທີ່ຫຼາກຫຼາຍ. | ວິທີຮັບໂທລະສັບ ແລະ ບັນທຶກຂໍ້ຄວາມໃຫ້ຜູ້ດໜຶ່ງ.<br>**ນັກຮຽນສາມາດ:**<br>1.ສະແດງບົດບາດສົມມຸດທີ່ສ້າງຂຶ້ນ ແລະ ລົມໂທສັບລວມທັງບັນທຶກຂໍ້ມູນເພື່ອສິ່ງເສີມໃຫ້ຜູ້ອື່ນໄດ້. | | |
| **ອົງປະກອບ 2 ການອ່ານຂໍ້ຄວາມ ແລະ ຈົດໝາຍ** | | | | |
| ປ.1 | ປ. 2 | ປ. 3 | ປ. 4 | ປ. 5 |
| | **ນັກຮຽນຮູ້:**<br>ສະພາບການອ່າຂໍ້ຄວາມທີ່ຂຽນຖືກນຳໃຊ້ ແລະ ອ່ານຢູ່ໃສ? ແລະ ເຂົ້າໃຈຂໍ້ຄວາມງ່າຍໆ.<br>**ນັກຮຽນສາມາດ:**<br>1.ຈຳແນກຂໍ້ຄວາມມາຈາກໃສ ແລະ ໃຫ້ໃຜ.<br>2.ຈຳແນກຈຸດປະສົງຕົ້ນຕໍຂອງຂໍ້ຄວາມ. | **ນັກຮຽນຮູ້:**<br>ຈຳແນກປະເພດຂອງຂໍ້ມູນທີ່ມີປົກະຕິໃນການຂຽນຂໍ້ຄວາມ ( ຂຽນຈາກການເວົ້າທາງໂທລະສັບ)ອ່ານ ແລະ ເຂົ້າໃຈຂໍ້ຄວາມເຫຼົ່ານັ້ນ.<br>**ນັກຮຽນສາມາດ:**<br>1.ຈຳແນກຂໍ້ຄວາມມາຈາກໃສ ແລະ ໃຫ້ໃຜ.<br>2.ຈຳແນກຈຸດປະສົງຕົ້ນຕໍຂອງຂໍ້ຄວາມ. | **ນັກຮຽນຮູ້:**<br>ອ່ານຈົດໝາຍ ແລະ ຈຳແນກຈຸດປະສົງຂອງຈົດໝາຍ ແລະ ປະເພດຕ່າງໆຂອງຂໍ້ມູນໃນແຕ່ລະພາກ ( ທີ່ຢູ່, ວັນ ເດືອນ ປີ, ການເປີດເລື່ອງ, ເນື້ອເລື່ອງ ແລະ ສະຫຼູບເລື່ອງ).<br>**ນັກຮຽນສາມາດ:** | **ນັກຮຽນຮູ້:**<br>ອ່ານຂໍ້ຄວາມແຈ້ງການທີ່ເປັນທາງການ ແລະ ຈຳແນກຈຸດປະສົງ ແລະ ປະເພດຕ່າງໆຂອງຂໍ້ມູນໃນແຕ່ລະພາກ (ທີ່ຢູ່, ວັນ ເດືອນ ປີ, ການເປີດເລື່ອງ, ເນື້ອເລື່ອງ ແລະ ສະຫຼູບເລື່ອງ).<br>**ນັກຮຽນສາມາດ:**<br>1.ອ່ານ ແລະ ບອກຂໍ້ມູນທີ່ຕ້ອງການສື່ສານ. |

| | | | | |
|---|---|---|---|---|
| | | | 1.ອ່ານ ແລະ ບອກຂໍ້ມູນທີ່ຕ້ອງການສື່ສານ.<br>2. ຈຳແນກ, ຈັດຕອນ ແລະ ຄຳສັບທີ່ໃຊ້ໃນຈົດໝາຍ. | 2.ຈຳແນກ, ຈັດຕອນ ແລະ ຄຳສັບທີ່ໃຊ້ໃນຈົດໝາຍ |
| ອົງປະກອບ 3 ການຂຽນຂໍ້ຄວາມ ແລະ ຈົດໝາຍ | | | | |
| ປ.1 | ປ. 2 | ປ. 3 | ປ. 4 | ປ. 5 |
| | **ນັກຮຽນຮູ້:**<br>ວິທີຂຽນຂໍ້ຄວາມທີ່ບໍ່ເປັນທາງການດ້ວຍສະພາບການທີ່ຫຼາກຫຼາຍ.<br>ນັກ**ຮຽນສາມາດ:**<br>1.ຂຽນຂໍ້ຄວາມທີ່ມີປະສິດທິພາບ | **ນັກຮຽນຮູ້:**<br>ວິທີຂຽນຂໍ້ຄວາມທີ່ບໍ່ເປັນທາງການເພື່ອຮັບຂໍ້ຄວາມທາງໂທລະສັບ ຫຼື ສິ່ງຂໍ້ຄວາມໃດໜຶ່ງ<br>**ນັກຮຽນສາມາດ:**<br>1.ຂຽນຂໍ້ຄວາມທາງໂທລະສັບທີ່ມີປະສິດທິພາບ.<br>2.ຂຽນບົດຄວາມທີ່ມີປະສິດທິພາບ. | **ນັກຮຽນຮູ້:**<br>ວິທີຂຽນຈົດໝາຍເຖິງເພື່ອນທີ່ຢູ່ຫ່າງໄກ ( ສ້າງສະຖານະການ ຫຼື ເພື່ອນທາງຈົດໝາຍ).<br>**ນັກຮຽນສາມາດ:**<br>1.ຂຽນຈົດໝາຍທີ່ມີປະສິດທິພາບ. | **ນັກຮຽນຮູ້:**<br>ວິທີຂໍ້ກຳນົດທາງສາທາລະນະງ່າຍໆ.<br>**ນັກຮຽນສາມາດ:**<br>1.ຂຽນຄຳປະກາດທີ່ມີປະສິດທິພາບ. |
| **ການອະທິບາຍ** | | | | |
| **ອົງປະກອບ 1 ການອະທະບາຍດ້ວຍປາກເປົ່າ** | | | | |
| ປ.1 | ປ. 2 | ປ. 3 | ປ. 4 | ປ. 5 |
| | | **ນັກຮຽນຮູ້:** | **ນັກຮຽນຮູ້:** | **ນັກຮຽນຮູ້:** |

| | | | | |
|---|---|---|---|---|
| | | ສຳນຶກ ແລະ ຕອບຄືນຕໍ່ການອະທິບາຍງ່າຍໆຂອງຕົນເອງ.<br>**ນັກຮຽນສາມາດ:**<br>1.ອະທິບາຍງ່າຍໆກ່ຽວກັບວ່າເປັນຫຍັງບາງຢ່າງຈຶ່ງເກີດຂຶ້ນ. | ວິທີການອະທິບາຍຂັ້ນຕອນບາງຢ່າງທີ່ເກີດຂຶ້ນ.<br>**ນັກຮຽນສາມາດ:**<br>1.ອະທິບາຍບາງຢ່າງເກີດຂຶ້ນແນວໃດ? ແລະ ຍ້ອນຫຍັງ?<br>2.ອະທິບາຍ ແລະ ນຳໃຊ້ແຜນວາດ. | ວິທີບອກແຕ່ລະຂັ້ນຕອນຂອງເຫດ ແລະ ຜົນຂອງບາງຢ່າງທີ່ເກີດຂຶ້ນ.<br>**ນັກຮຽນສາມາດ:**<br>1.ອະທິບາຍບາງຢ່າງທີ່ເກີດຂຶ້ນ ( ຫຼື ມັນເກີດຂຶ້ນໄດ້ແນວໃດ ? ດ້ວຍການໃຫ້ເຫດ ແລະ ຜົນ).<br>2.ນຳໃຊ້ຄຳສັບ, ປະໂຫຍກ ເຫດ ແລະ ຜົນ ( ຕົວຢ່າງ: ເມື່ອໃດ...ຈາກນັ້ນ .../ ຖ້າວ່າ..ຈາກນັ້ນ ...) |
| **ອົງປະກອບ 2 ການອ່ານບົດອະທິບາຍ** | | | | |
| ປ.1 | ປ. 2 | ປ. 3 | ປ. 4 | ປ. 5 |
| | | **ນັກຮຽນຮູ້:**<br>ອ່ານບົດອະທິບາຍງ່າຍໆ ແລະ ຈຳແນກສາເຫດ/ ບັນດາເຫດການຂອງສິ່ງທີ່ເກີດຂຶ້ນ.<br>**ນັກຮຽນສາມາດ:** | **ນັກຮຽນຮູ້:**<br>ອ່ານບົດອະທິບາຍງ່າຍໆ ແລະ ຈຳແນກປະເພດຕ່າງໆຂອງຂໍ້ມູນໃນແຕ່ລະວັກ( ຫົວຂໍ້ເລີ່ມຕົ້ນ: ນຳສະເໜີສິ່ງທີ່ໄດ້ | **ນັກຮຽນຮູ້:**<br>ອ່ານບົດອະທິບາຍງ່າຍໆ ແລະ ຈຳແນກລຳດັບຂອງເຫດ ແລ ະ ຜົນ ແລະ ບອກກ່ຽວກັບສິ່ງທີ່ກຳລັງອະທິບາຍ.<br>**ນັກຮຽນສາມາດ:** |

| | | | | |
|---|---|---|---|---|
| | | 1.ອ່ານ ແລະ ບອກກ່ຽວກັບສິ່ງທີ່ກຳລັງອະທິບາຍ.<br>2.ອ່ານ ແລະ ບອກສາເຫດ / ບັນດາສາເຫດຂອງສິ່ງທີ່ເກີດຂຶ້ນ. | ຜະລິດ/ ສິ່ງທີ່ເກີດຂຶ້ນ, ລະຫວ່າງກາງ: ພົນລະນາລຳດັບຂອງເຫດ ແລະ ຜົນ).<br>**ນັກຮຽນສາມາດ:**<br>1.ອ່ານ ແລະ ບອກກ່ຽວກັບສິ່ງທີ່ກຳລັງອະທິບາຍ.<br>2.ອ່ານ ແລະ ບອກບາດກ້າວຂອງເຫດ ແລະ ຜົນ.<br>3.ຈຳແນກຄຳສັບ ແລະ ໂຄງສ້າງຂອງປະໂຫຍກໃນການບອກເຫດ ແລະ ຜົນ.<br>4. ອະທິບາຍເຖິງວິທີນຳໃຊ້ແຜນພາບໃນການສະເໜີເຫດ ແລະ ຜົນ. | 1.ອ່ານ ແລະ ບອກບາດກ້າວຂອງເຫດ ແລະ ຜົນ.<br>2. ຈຳແນກຄຳສັບ ແລະ ໂຄງສ້າງຂອງປະໂຫຍກຂອງການບອກເຫດ ແລະ ຜົນ.<br>3.ອະທິບາຍເຖິງວິທີນຳໃຊ້ແຜນພາບໃນການນຳສະເໜີເຫດ ແລະ ຜົນ. |
| **ອົງປະກອບ 3 ການຂຽນບົດອະທິບາຍ** | | | | |

| ປ.1 | ປ. 2 | ປ. 3 | ປ. 4 | ປ. 5 |
|---|---|---|---|---|
| | | **ນັກຮຽນຮູ້:**<br>ວິທີຂຽນບົດ ອະທິບາຍງ່າຍໆກ່ຽວກັບປະກົດການທີ່ຄຸ້ນເຄີຍ.<br>**ນັກຮຽນສາມາດ:**<br>1.ນຳໃຊ້ຫົວຂໍ້ທີ່ເໝາະສົມກັບບົດ ( ແນວໃດ ຫຼື ຍ້ອນຫຍັງ).<br>2.ນຳສະເໜີປະກົດການທີ່ກຳລັງພັນລະນາ.<br>3.ນຳໃຊ້ປະໂຫຍກພັນລະນາທີ່ເໝາະສົມທີ່ບອກກ່ຽວກັບເຫດ ແລະ ຜົນ | **ນັກຮຽນຮູ້:**<br>ວິທີຂຽນບົດ ອະທິບາຍງ່າຍໆ ກ່ຽວກັບປະກົດການທີ່ຄຸ້ນເຄີຍ, ປະກົດການທີ່ມີຫຼາຍບາດກ້າວຂອງເຫດ ແລະ ຜົນ.<br>**ນັກຮຽນ ສາມາດ:**<br>1.ຂຽນບົດ ອະທິບາຍງ່າຍໆ ທີ່ມີ ປະສິດທິພາບ.<br>2.ນຳໃຊ້ຄຳສັບ ໃນການ ອະທິບາຍເຊັ່ນ: “ ເຕີບໂຕ / ພັດທະນາ ”, “ ສິ່ງນີ້ເຮັດໃຫ້ ”, “ ຈາກນັ້ນ ”. | **ນັກຮຽນຮູ້:**<br>ວິທີຂຽນບົດ ອະທິບາຍງ່າຍໆ ກ່ຽວກັບປະກົດການທີ່ຄຸ້ນເຄີຍ, ປະກົດການທີ່ມີຫຼາຍບາດກ້າວຂອງເຫດ ແລະ ຜົນ.<br>**ນັກຮຽນສາມາດ:**<br>1.ຂຽນບົດ ອະທິບາຍງ່າຍໆທີ່ມີປະສິດທິພາບ.<br>2. ນຳໃຊ້ປະໂຫຍກເຫດ ແລະ ຜົນ ແລະ ຄຳສັບ ( ຕົວຢ່າງ: ເມື່ອ... ຈາກນັ້ນ.../ ຖ້າວ່າ... ຈາກນັ້ນ...) |

# ບົດທີ 2

# ຄວາມຮູ້ເບື້ອງຕົ້ນກ່ຽວກັບການສອນວິຊາພາສາລາວໃນຊັ້ນປະຖົມສຶກສາ

## 1.ຄວາມສຳຄັນຂອງການສອນວິຊາພາສາລາວໃນຊັ້ນປະຖົມສຶກສາ

ພາສາລາວແມ່ນພາສາປະຈຳຊາດທີ່ມີຄວາມສຳຄັນຫຼາຍ ເພາະພວດເຮົານຳໃຊ້ພາສາລາວເປັນເຄື່ອງມືໃນການຕິດຕໍ່ສື່ສານລະຫວ່າງປະຊາຊົນເຜົ່າຕ່າງໆ ນຳໃຊ້ເຂົ້າໃນການຂຽນປຶ້ມຕຳລາທາງວິຊາການ, ຖ່າຍທອດຄວາມຮູ້, ຮີດຄອງປະເພນີ ແລະ ວັດທະນາທຳອັນດີງາມຂອງຊາດມາສູ່ລູກຫຼານໃນປັດຈຸບັນ ແລະ ອະນາຄົດ. ການຮຽນພາສາລາວແມ່ນຮຽນເອົາຄວາມຮູ້ດ້ານພາສາໂດຍຜ່ານການຟັງ, ການເວົ້າ, ການອ່ານ ແລະ ການຂຽນ. ດັ່ງນັ້ນ, ການຮຽນ-ການສອນພາສາລາວໂດຍສະເພາະໃນຊັ້ນປະຖົມສຶກສາຈຶ່ງມີຄວາມສຳຄັນ ແລະ ຈຳເປັນທີ່ສຸດເພື່ອໃຫ້ເດັກນ້ອຍທຸກຄົນອ່ານອອກຂຽນໄດ້ ແລະ ນຳໃຊ້ພາສາລາວຢ່າງຄ່ອງເພື່ອຄວາມກ້າວໜ້າທາງດ້ານການຮຽນ, ການເຮັດວຽກງານ ແລະ ການດຳລົງຊີວິດທີ່ດີນອະນາຄົດ.

ການຮຽນພາສາລາວໃນຊັ້ນປະຖົມສຶກສາ ວິຊາພາສາລາວແມ່ນວິຊາທີ່ສຳຄັນກວ່າວິຊາອື່ນໆໂດຍສະເພາະຢູ່ໃນລະດັບຂັ້ນມູນລະປະຖົມຍິ່ງມີຄວາມສຳຄັນຫຼາຍ ເພາະຊັບພະຍາກອນກໍ່ຄືເດັກນັກຮຽນມີພື້ນຖານຄວາມແຕກຕ່າງກັນເນື່ອງຈາກຖານະພໍ່-ແມ່, ຄອບຄົວ, ສັງຄົມ, ສິ່ງແວດລ້ອມ ແລະ ທ້ອງຖິ່ນຕ່າງກັນ ໂດຍສະເພາະນັກຮຽນຊົນເຜົ່າທີ່ຍັງເວົ້າພາສາລາວບໍ່ໄດ້ ເມື່ອມາຮຽນພາສາລາວຮ່ວມກັບເດັກທີ່ເວົ້າພາສາລາວມາແຕ່ເກີດ ກໍ່ຈະມີຄວາມຮັບຮູ້ຄວາມເຂົ້າໃຈໜ້ອຍຫຼາຍ ແລະ ຊ້າ-ໄວຕ່າງກັນ. ປຶ້ມພາສາລາວສາມາດຊ່ວຍແນະນຳໃນການສ້າງກິດຈະກຳການຮຽນ-ການສອນທີ່ຫຼາກຫຼາຍ ເພື່ອຊ່ວຍໃຫ້ນັກຮຽນທຸກຄົນປະສົບຜົນສຳເລັດໄດ້ໃນລະດັບໃກ້ຄຽງກັນ. ການສອນພາສາລາວຈະຊ່ວຍໃຫ້ໄດ້ຄວາມຮູ້ກ່ຽວກັບຄວາມໝາຍ, ຄວາມສຳຄັນຂອງພາສາລາວ, ຄາດຽາຍດ້ານຄວາມຮູ້, ຄວາມສາມາດ, ທັດສະນະຄະຕິ ແລະ ຄ່ານິຍົມໃຫ້ແກ່ຜູ້ຮຽນພາສາລາວ ພ້ອມນັ້ນກໍ່ໄດ້ສະເໜີວິທີສອນແບບຕ່າງໆໃຫ້ຄູໄດ້ນຳໃຊ້ໄປໃຊ້ໃຫ້ສອດຄ່ອງກັບຄວາມອາດສາມາດໃນການຮັບຮູ້ຂອງນັກຮຽນ.ໃນພາກແນະນຳການສອນແຕ່ລະບົບໄດ້ແນະນຳກິດຈະກຳການສອນ ເພື່ອສິ່ງຄວາມຮູ້ຕົວຈິງໃຫ້ນັກຮຽນໂດຍຈະມີຂອບເຂດ, ເວລາ, ຂັ້ນຕອນກິດຈະກຳ, ການວັດ ແລະ ປະເມີນຜົນ ເພື່ອຈະໄດ້ເຮັດໃຫ້ການປະຕິບັກຫຼັກສູດປຶ້ມແບບຮຽນມີປະສິດທິພາບດີ. ຫຼັກສູດການຮຽນພາສາລາວທີ່ເພິ່ນໄດ້ກຳນົດຊົ່ວໂມງຮຽນໄວ້ໝົດປີ ປ.1 396 ຊົ່ວໂມງ, ປ.2 330 ຊົ່ວໂມງ, ປ.3 – 4 - 5 ຂັ້ນລະ 264 ຊົ່ວໂມງ, ຈຳນວນບົດຮຽນ ປ.1 ມີ 98 ບົດ ສອນບົດລະ 4 ຊົ່ວໂມງ, ປ.2 ມີ 66 ບົດ ສອນບົດລະ 5 ຊົ່ວໂມງ, ປ.3-4-5 ມີ ຂັ້ນລະ 66 ບົດ ສອນບົດລະ 4 ຊົ່ວໂມງ. ໃນການແນະນຳການສອນພາສາລາວແຕ່ລະບົດ, ແຕ່ລະຂັ້ນຮຽນໃຫ້ເວລາແຕກຕ່າງກັນ, ແຕ່ມີ 5 ຫົວຂໍ້ໃຫຍ່ຄືກັນ:

I. ຈຸດປະສົງ: ຢາກໃຫ້ໄດ້ອັນໃດແດ່

II. ເນື້ອໃນບົດ: ເວົ້າເຖິງຫັຍງ

III. ອຸປະກອນ: ໃຊ້ຫຍັງຊ່ວຍການສອນ

IV. ກິດຈະກຳການຮຽນການສອນ: ເຮັດຫຍັງ, ເຮັດແນວໃດ

V. ການວັດ ແລະ ປະເມີນຜົນການຮຽນ: ຕ້ອງຮູ້ວ່ານັກຮຽນເຂົ້າໃຈຊ່ຳໃດ

## 2.ຈຸດປະສົງຂອງການສອນວິຊາພາສາລາວໃນຊັ້ນປະຖົມສຶກສາ

- ໃຫ້ນັກຮຽນມີຄວາມສາມາດໃນການຟັງ, ເວົ້າ, ອ່ານ ແລະ ຂຽນດ້ວຍຄວາມຊຳນິຊຳນານ ແລະ ກ້າວໜ້າໃຫ້ເຂົາເຈົ້າມີຄວາມຮູ້ເບື້ອງຕົ້ນກ່ຽວກັບພື້ນຖານພາສາລາວ.
- ໃຫ້ຮູ້ນຳໃຊ້ພາສາລາວໃນການຕິດຕໍ່ສື່ສານດ້ວຍການ( ຟັງ, ອ່ານ ) ແລະ ຖ່າຍທອດ ( ເວົ້າ, ຂຽນ ) ຕາມຮີດຄອງປະເພນີ ແລະ ວັດທະນະທຳຂອງຊາດ.
- ສຶກສາອົບຮົມນ້ຳໃຈໂດຍຜ່ານພາສາລາວ ແລະ ມີນິດໄສຢາກຮູ້ຢາກຮຽນ ໃຫ້ຮູ້ນຳໃຊ້ສິ່ງທີ່ໄດ້ຮຽນມາເຂົ້າໃນການຄົ້ນຄິດ ຕັດສິນໃຈແກ້ໄຂບັນຫາ ແລະ ພິຈາລະນາໄຈແຍກບັນຫາຢ່າງມີເຫດຜົນດ້ວຍຕົນເອງ.
- ໃຫ້ນັກຮຽນມີຄວາມຮູ້ເບື້ອງຕົ້ນກ່ຽວກັບວັນນະຄະດີຂອງຊາດ ແລະ ຕ່າງປະເທດ.
- ປະກອບສ່ວນກໍ່ສ້າງຄົນຮຸ່ນໃໝ່ໃຫ້ກາຍເປັນພົນລະເມືອງດີທີ່ຂະຫຍາຍຕົວຮອບດ້ານ.

## 3 .ຫຼັກການສອນພາສາລາວ

ການຮຽນ ການສອນພາສາລາວໃນຊັ້ນປະຖົມສຶກສາເນັ້ນໃຫ້ນັກຮຽນມີຄວາມຮູ້, ທັກສະພື້ນຖານ, ມີວັດທະນະທຳໃນການໃຊ້ພາສາເພື່ອການສື່ສານທັງການຟັງ, ການເວົ້າ, ການອ່ານ ແລະ ການຂຽນໂດຍສະເພາະແມ່ນທັກສະການອ່ານ, ພູມໃຈໃນພາສາລາວຮັກການອ່ານມີຄວາມເຂົ້າໃຈ ແລະ ນຳໃຊ້ຫຼັກໄວຍາກອນຢ່າງຖືກຕ້ອງ. ສາມາດນຳໃຊ້ພາສາລາວເຂົ້າໃນການຮຽນ, ການດຳລົງຊີວິດປະຈຳວັນ ການຮຽນຕໍ່ຂຶ້ນໄປ. ການສອນພາສາລາວສຳລັບນັກຮຽນທີ່ພາສາລາວບໍ່ແມ່ນພາສາແມ່ໂດຍສະເພາະບາງຄຳສັບ, ປະໂຫຍກທີ່ແຕກຕ່າງກັນດ້ານພື້ນສຽງຄູສອນຕ້ອງເອົາໃຈໃສ່ໃນການສອນໃຫ້ສອດຄ່ອງກັບຈຸດພິເສດຂອງນັກຮຽນເຊັ່ນ: ຄູເວົ້າຊ້າໆ, ຄູນຳໃຊ້ພາສາທີ່ເປັນພາສາແມ່ຂອງເດັກນ້ອຍເປັນບາງຄັ້ງເພື່ອຊ່ວຍໃຫ້ການຮຽນພາສາລາວ, ເດັກນ້ອຍໄດ້ຮັບກະຕຸກຊຸກຍູ້ໃຫ້ນຳໃຊ້ພາສາແມ່ເພື່ອຮຽນຮູ້ກ່ຽວກັບຄວາມຄິດ ຫຼື ເນື້ອໃນໃຈຄວາມໃໝ່ໆ ນັກຮຽນສາມາດນຳໃຊ້ພາສາແມ່ຂອງເຂົາອະທິບາຍໃຫ້ໝູ່ດຽວກັນ ແລະ ຜູ້ອື່ນໆ.

- ການຮຽນພາສາລາວຕ້ອງພົວພັນສະໜິດແໜ້ນກັບນັກຮຽນ
- ຄູຕ້ອງເຂົ້າໃຈວິທີການຮຽນຮູ້ຂອງນັກຮຽນໂດຍສະເພາະແມ່ນການຮຽນແບບທຳມະຊາດ
- ຄູຈັດກິດຈະກຳການຮຽນທີ່ຕິດພັນກັບການຮຍນແບບທຳມະຊາດ

- ກ່ອນການສອນແຕ່ລະທັກສະຄູຕ້ອງສ້າງກິດຈະກຳໃຫ້ເໝາະສົມກັບຄວາມຮູ້ຄວາມສາມາດຂອງນັກຮຽນ
- ກິດຈະກຳການຮຽນການສອນຕ້ອງຄຳນຶງເຖິງຄວາມເຂົ້າໃຈ ແລະ ສາມາດນຳໄປໃຊ້ໃນຊີວິດປະຈຳວັນໄດ້
- ກິດຈະກຳການຮຽນຕ້ອງສົ່ງເສີມໃຫ້ເດັກໄດ້ເຮັດ, ເວົ້າ ແລະ ໄດ້ບັນທຶກ
  ດັ່ງຕົວຢ່າງລຸ່ມນີ້:




ການເຮັດ - ເວົ້າ - ບັນທຶກ ບາງຄັ້ງກໍ່ບໍ່ສາມາດແຍກອອກຈາກກັນຢ່າງຂາດຕົວເຊັ່ນ: ເວລານັກຮຽນເຮັດກິດຈະກຳເຂົາກໍ່ສາມາດເຮັດ-ເວົ້າ-ບັນທຶກໄປພ້ອມໆກັນ

ກິດຈະກຳການຮຽນໃດກໍຕາມຖ້າວ່າເຂົາໄດ້ດຳເນີນຄືຂັ້ນຕອນດັ່ງກ່າວແມ່ນວິທີການຮຽນແບບທຳມະຊາດເຂົ້າໃນການຮຽນຂອງຕົນເອງ. ການຮຽນການສອນແບບນີ້ຖືວ່າແມ່ນການເອົານັກຮຽນເປັນໃຈກາງ

# ບົດທີ 3

# ທັກສະການສອນຟັງ - ເວົ້າໃນຊັ້ນປະຖົມສຶກສາ

## 1.ຄວາມໝາຍ ແລະ ຄວາມສຳຄັນຂອງການຟັງ - ເວົ້າ

### 1.1 ຄວາມໝາຍຂອງການຟັງ - ເວົ້າ

ຕາມຫຼັກການຂອງນັກພາສາສາດໄດ້ໃຫ້ຄຳນິຍາມວ່າ ພາສາແມ່ນພາຫະນະໃນການສື່ສານ ເປົ້າໝາຍໃນການສື່ສານແມ່ນຕິດຕໍ່ລະຫວ່າງຜູ້ສົ່ງ ແລະ ຜູ້ຮັບ. ໃນການສົ່ງແລະ ຮັບຈະໃຊ້ພາຫະນະທີ່ແຕກຕ່າງກັນຄື: ຖ້າສົ່ງດ້ວຍການເວົ້າກໍຕ້ອງຮັບດ້ວຍການຟັງ, ຖ້າສົ່ງດ້ວຍການຂຽນກໍຈະຕ້ອງຮັບດ້ວຍການອ່ານ, ພິເສດສຳລັບຜູ້ທີ່ພິການທາງການຟັງ ແລະ ປາກເວົ້າ ກໍຈະສື່ສານກັນດ້ວຍພາສາມື ຫຼື ພາສາໃບ້. ການສອນພາສາໃຫ້ນັກຮຽນແມ່ນສອນທັງ 4 ທັງສະ: ຟັງ-ເວົ້າ, ອ່ານ ແລະ ຂຽນ.

### 1.2 ຄວາມສຳຄັນຂອງການຟັງ - ເວົ້າ

ການຟັງ - ເວົ້າແມ່ນພາຫະນະທີ່ສື່ສານເບື້ອງຕົ້ນທີ່ງ່າຍດາຍສາມາດທຳຄວາມເຂົ້າໃຈເຊິ່ງກັນ ແລະ ກັນໄດ້ໃນເວລາສົນທະນາ ສະນັ້ນ ການຈັດການຮຽນ-ການສອນ ຄູຕ້ອງສ້າງໃຫ້ມີການ 2 ເຝິກທັກສະຄຽງຄູ່ກັນໄປເພາະການຟັງເປັນທັກສະທີ່ສຳຄັນນການຮັບຮູ້ຄວາມໝາຍ, ການສອນຈະຕ້ອງໃຫ້ນັກຮຽນມີມາລະຍາດ ແລະ ສະມາທິໃນການ ເພື່ອຈະຈຳແນກສິ່ງທີ່ໄດ້ຟັງຢ່າງຖືກຕ້ອງ. ການເວົ້າເປັນທັກສະທີ່ສຳຄັນໃນການສື່ສານກັບຜູ້ອື່ນ , ການສອນຕ້ອງໃຫ້ນັກຮຽນເວົ້າອອກສຽງດັງແຈ່ມແຈ້ງຊັດເຈນ ເພື່ອ ເພື່ອຢັ້ງຢືນຄວາມຖືກຕ້ອງເຊັ່ນ: ການບອກຊື່ຕົນເອງ, ບອກຊື່ຄົນໃນຄອບຄົວ, ເລົ່າປະສົບການກ່ຽວກັບຮູບພາບທີ່ກຳນົດໃຫ້, ເລົ່າຄືນເລື່ອງທີ່ໄດ້ຟັງ ແລະ ໄດ້ອ່ານເປັນຕົ້ນ.

## 2.ທັກສະການສອນຟັງ - ເວົ້າ

- **ກິດຈະກຳການຝຶກທັກສະຟັງ-ເວົ້າປ.1**

ສຳລັບເດັກນ້ອຍຈຳນວນໜຶ່ງມີຫ້ອງຮຽນບ່ອນດຽວກັນທີ່ພວກເຂົາໄດ້ຍິນ ແລະ ໄດ້ໃຊ້ພາສາລາວ. ເດັກນ້ອຍຊົນເຜົ່າສ່ວນໜຶ່ງບໍ່ມີໂອກາດໄດ້ຟັງວິທະຍຸ, ເບິ່ງໂທລະທັດ, ໄປຕະຫຼາດ ຫຼື ໂອລົມກັບຄົນທີ່ມາຈາດຂົງເຂດອື່ນ. ສຳລັບເດັກນ້ອຍທີ່ມາຈາກເຂດຫ່າງໄກສອກຫຼີກຈະຢູ່ໃນສະພາບແວດລ້ອມຂອງຕົວເອງຕະຫຼອກເວລາ. ຖ້າຢູ່ເຮືອນນັກຮຽນເວົ້າແຕ່ພາສາອື່ນຫຼາຍກວ່າພາສາລາວ. ທຸກໆວິຊາທີ່ສອນຄູຄສນໃຊ້ຍຸດທະວິທີເພື່ອສອນໃຫ້ເດັກເຫຼົ່ານັ້ນຮູ້ນຳໃຊ້າາສາລາວໃນຂົງເຂດວິຊາຮຽນຂອງຕົນ. ນອກຈາກພາສາທີ່ໃຊ້ສອນຢູ່ໃນຫ້ອງຮຽນແລ້ວຍັງມີການສອນອື່ນໆຫຼາຍວິທີທີ່ຊ່ວຍໃຫ້ຄູໃຊ້ນການວາງແຜນການສອນ. ກິດຈະກຳຝຶກທັກສະຟັງ-ເວົ້າ ປ. 1 ສາມາດສັງລວມໄດ້ດັ່ງນີ້:

**2.1ກິດຈະກຳ: ສົນທະນາຮູບພາບ**

ການສອນນີ້ແມ່ນເໝາະສົມສະເພາະໂຮງຮຽນທີ່ມີຮູບແຜ່ນໃຫຍ່, ຖ້າຫາກວ່າໂຮງຮຽນໃດບໍ່ມີກໍໃຫ້ນັກຮຽນເບິ່ງຕາມປຶ້ມແບບຮຽນນັ້ນ.ຕົວຢ່າງ:

1.ຄູນຳໃຊ້ປຶ້ມແບບຮຽນຍົກຮູບພາບ ( ຕົວຢ່າງ : ຮູບຢູ່ໃນບົດທີ17 ໜ້າທີ34 ຮູບເບື້ອງລຸ່ມ )ໃຫ້ນັກຮຽນໄດ້ເບິ່ງໝົດທຸກຄົນ.

- ຄູຖາມນັກຮຽນໝົດຫ້ອງ, ແຖວ, ໂຕະ ແລະ ບຸກຄົນ ( ໃຫ້ເລືອກໃຊ້ຕາມຄວາມເໝາະສົມ)ວ່າ: ໃນຮູບນີ້ພວກນ້ອງເຫັນຫຍັງແດ່?
- ນັກຮຽນຕອບຕາມຄວາມເຂົ້າໃຈເຊັ່ນ: ໂອ່ນຊາ, ຕະລູດ, ແມ່ຄ້າ, ໂຕປາ, ມ້າໝູນ, ຕົ້ນໄມ້, ຖຽງນາ.

2.ຄູຊີ້ແຕ່ລະຮູບພ້ອມທັງຖາມວ່າ: ອັນນີ້ແມ່ນຮູບຫຍັງ? ( ຖ້ານັກຮຽນຕອບບໍ່ຖືກຄູຕ້ອງບອກຄຳຕອບທີ່ຖືກຕ້ອງ) ນັກຮຽນຕອບຕາມການຊີ້ຂອງຄູ.

3.ຄູໃຫ້ນັກຮຽນອາສາສະໝັກອອກມາຊີ້ແລ້ວສົນທະນາກັບໝູ່ໃນຫ້ອງ

4.ຄູໃຫ້ນັກຮຽນຜູ້ທີ່ຮຽນອ່ອນອອກມາຊີ້ ແລະ ເວົ້າພ້ອມຕາມຮູບ.

❖ ການວັດ ແລະ ປະເມີນຜົນ

- ຄູຖາມນັກຮຽນຄືນວ່າໃນຮູບເຫັນຫຍັງແດ່?
- ຄູໃຫ້ນັກຮຽນຈັບຄູ່ກັນອອກມາສົນທະນາປະມານ 2-3 ຄູ່

**2.2 ກິດຈະກຳ: ເລືອກບັດອັກສອນ**

1. ຄູກອງບັດອັກສອນ ກ ຮອດ ຮ ໄວ້ໜ້າໂຕະ
2. ເອົາຮູບພາບຕິດໃສ່ກະດານ ຫຼື ຖົງບັດຄຳ
3. ຄູແນະນຳນັກຮຽນອອກມາເລືອກບັດອັກສອນແລ້ວໄປຕິດໃສ່ກັບຮູບພາບທີ່ອອກສຽງອັກສອນທີ່ຕົນເລືອກ.
4. ຄູຊີ້ໃສ່ແຕ່ລະຮູບພາບແລ້ວໃຫ້ນັກຮຽນເວົ້າເປັນຄຳສັບ
5. ຄູນຳພານັກຮຽນປະຕິບັດຈົນຮອດຜູ້ສຸດທ້າຍ.

ການວັດ ແລະ ປະເມີນຜົນ.

ຄູກວດເບິ່ງຜູ້ທີ່ສາມາດ ແລະ ບໍ່ສາມາດປະຕິບັດກິກຈະກຳໄດ້, ສຳລັບຜູ້ທີ່ຍັງບໍ່ສາມາດປະຕິບັດກິດຈະກຳໄດ້ຄູຕ້ອງອະທິບາຍ ແລະ ສາມທິດວິທີການຈຳແນກສຽງຕ່າງໆໃນຄຳສັບ ແລະ ວິທີການຈັບຄູ່ແຕ່ລະສຽງໃສ່ກັບຕົວອັກສອນ.

# ບົດທີ 3

# ທັກສະການສອນຟັງ - ເວົ້າໃນຊັ້ນປະຖົມສຶກສາ ( ຕໍ່ )

**2.3 ກິດຈະກຳ: ສ້າງແຜນມະໂນພາບ**

1.ຄູກຽມຮູບ ໂສ້ງ, ເສື່ອ, ສາກ, ສິງ, ຊ້າງ, ເຊືອກ, ປາຊິວ ມາກອງໄວ້ໜ້າໂຕະ

2. ຄູສ້າງແຜນມະໂນພາບ ໃສ່ເຈ້ຍແຜ່ນໃຫຍ່ ຫຼື ກະດານແລ້ວໃຫ້ນັກຮຽນອອກມາຕິດຮູບໃສ່( ຂຽນແຕ່ ເຄື່ອງໃຊ້, ສັດ, ສ, ຊ ໃສ່ແຜ່ນພາບ)

3.ຄູຈັດແບ່ງນັກຮຽນອອກເປັນ 2 ກຸ່ມ ( ກຸ່ມ 1 ເອົາຮູບທີ່ອອກສຽງ ສ, ກຸ່ມ 2 ເອົາຮູບທີ່ອອກສຽງ ຊ)

4. ໃຫ້ແຕ່ລະກຸ່ມເລືອກເອົາຮູບຢູ່ໜ້າໂຕະໄປຕິດໃສ່ບ່ອນທີ່ຄູກຳນົດໃຫ້

5. ຄູ ແລະ ນັກຮຽນຮ່ວມກັນສະຫຼຸບຄຳຕອບ




❖ ການວັດ ແລະ ປະເມີນຜົນ

ການອອກໄປຈັບ ແລະ ເວົ້າຊື່ຮູບນັ້ນ

**2.4ກິດຈະກຳ: ເລົ່າເລື່ອງຄືນຕາມຮູບພາບ**

ຕົວຢ່າງປຶ້ມແບບຮຽນ ປ. 2 ບົດທີ 41

1.ຄູເລົ່າເລື່ອງສາມັກຄີຊ່ວຍເຫຼືອກັນໃຫ້ນັກຮຽນຟັງ 1-2 ເທື່ອ

2. ຄູຢາຍແຜ່ນພູມພາບທີ່ຄູກະກຽມມາ ຫຼື ຮູບໃນປຶ້ມແບບຮຽນໃຫ້ນັກຮຽນແຕ່ລະກຸ່ມເລົ່າເລື່ອງຕາມຄວາມເຂົ້າໃຈເລົ່າຕໍ່ກັນ. ( ຮູບທີ 1 ໄກ່ ກັບ ໝາ ເປັນສ່ຽວກັນ, ຮູບທີ 2 ໝາ ກັບໄກ່ໄດ້ໄປທ່ຽວປ່າ, ຮູບທີ 3 ໄກ່ນອນຢູ່ເທິງງ່າໄມ້ ແລະ ໝານອນຢູ່ໃນໂກນເຫງົ້າໄມ້, ຮູບທີ 4 ໝາຄາບຄໍເຫງັນ)

3. ຄູໃຫ້ນັກຮຽນແຕ່ລະກຸ່ມສົນທະນາຕາມຮູບພາບ

4. ຄູໃຫ້ຕ່າງໜ້າກຸ່ມຜັດປ່ຽນກັນອອກມາເລົ່າເລື່ອງຢູ່ກະດານ ( ຄູ ແລະ ນັກຮຽນຜູ້ທີ່ບໍ່ໄດ້ເລົ່າເປັນຜູ້ຕິດຕາມ)

5. ໃນກໍລະນີນັກຮຽນເລົ່າຄືນບໍ່ໄດ້ຄູເປັນຜູ້ຊ່ວຍເຫຼືອນັກຮຽນ

6. ຄູສະຫຼຸບຄືນການເລົ່າວ່າຕ້ອງເລົ່າດ້ວຍການຕື່ມຂໍ້ຄວາມທີ່ເໝາະສົມໃສ່ເນື້ອໃນບາງບ່ອນໃຫ້ຕໍ່ເນື່ອງ ເຊັ່ນ: ໄກ່ກັບໝາເປັນສ່ຽວກັນ. ມື້ໜຶ່ງໄກ່ ແລະ ໝາໄປທ່ຽວປາຈົນຄໍ່າເລີຍມາບໍ່ໄດ້. ໝານອນຢູ່ໂກນເຫງົ້າໄມ້ ສ່ວນໄກ່ນອນຢູ່ເທິງງ່າໄມ້. ເຫງັນມາເຫັນ ແລະ ຢາກກິນຈຶ່ງລໍ້ໃຫ້ໄກ່ລົງມາ. ໄກ່ບອກວ່າສ່ຽວຂ້ອຍນອນຢູ່ໂກນເຫງົ້າໄມ້ນັ້ນເດ. ເມື່ອເຫງັນໄປເບິ່ງໝາກໍໂດດຄາບຄໍທັນທີ.

- ການວັດ ແລະ ປະເມີນຜົນ

ການເວົ້າເປັນອະລິ, ປະໂຫຍກຊັດເຈນ ແລະ ຕື່ມຄໍາສັບໃສ່ໃຫ້ເໝາະສົມ.

**2.5 ກິດຈະກໍາ: ປະຕິບັດຄໍາສັ່ງ**

1.ຄູສຽບຮູບໂອ່ນຊາ, ຕະລູດ, ແມ່ຄ້າ, ໂຕປາ, ມ້າໝູນ, ຕົ້ນໄມ້, ຖຽງນາ ໃສ່ກະດານບັດຄໍາ

2. ຄູເວົ້າຊື່ເທື່ອລະຮູບ ໃຫ້ນັກຮຽນອອກມາຈັບຮູບແລ້ວເວົ້າຊື່ໃຫ້ໝູ່ຟັງ ແລະ ສຽບໄວ້ຄືເກົ່າ

3. ຄູໃຫ້ນັກຮຽນຜູ້ອື່ນໆ ປະຕິບັດຕໍ່ໄປຕາມຄວາມເໝາະສົມ

❖ ການວັດ ແລະ ປະເມີນຜົນ

- ຄູຫ້ນັກຮຽນອອກມາຈັບຮູບພາບ ແລະ ເວົ້າຊື່ໃຫ້ຖືກຕ້ອງ

**2.6 ກິດຈະກໍາ: ສົນທະນາກ່ຽວກັບຮູບ**

1.ຄູໃຫ້ນັກຮຽນເບິ່ງຮູບທ້າຍບົດຕາມປຶ້ມແບບຮຽນບົດທີ 14 ໜ້າທີ 28 ແລ້ວແນະນໍາໃຫ້ນັກຮຽນຈັບຄູ່ສົນທະນາປະມານ 10 ນາທີ.

2.ຄູໃຫ້ນັກຮຽນຈັບຄູ່ສົນທະນາກັນວ່າແມ່ນໃຜ? ເຮັດຫຍັງ?

3.ຄູໃຫ້ນັກຮຽນອາສາສະໝັກອອກມາເວົາໃຫ້ໝູ່ຟັງຢູ່ໜ້າກະດານ 2- 3 ຄົນ

4.ຄູໃຫ້ນັກຮຽນຮ່ວມກັນສະຫຼຸບການເວົາຂອງແຕ່ລະຄົນ.

- ການວັດ ແລະ ປະເມີນຜົນ

ຄູຖາມນັກຮຽນກ່ຽວກັບຮູບໃນປຶ້ມແບບຮຽນແລ້ວໃຫ້ນັກຮຽນຕອບເປັນປະໂຫຍກສັ້ນທີ່ເຂົ້າໃຈໄດ້.

**2.7 ກິດຈະກໍາ: ລາຍງານການສັງເກດ**

1.ຄູສົນທະນາກ່ຽວກັບບໍລິເວນຂອງໂຮງຮຽນທີ່ນັກຮຽນກໍາລັງຮຽນຢູ່

2.ຄູພານັກຮຽນອອກມາສັງເກດເບິ່ງສະພາບແວດລ້ອມບໍລິເວນຂອງໂຮງຮຽນຕົວຈິງ

3.ຄູໃຫ້ນັກຮຽນເວົ້າສິ່ງທີ່ຕົນເອງໄດ້ເຫັນ ເປັນແຖວ ແລະ ເປັນບຸກຄົນ

4.ຄູຂຽນຄໍາເວົ້າຂອງນັກຮຽນໃສ່ກະດານຕົວຢ່າງ: ຮົ້ວ, ປະຕູ, ປ້າຍ, ທຸງ, ສວນດອກໄມ້, ຫ້ອງນໍ້າ, ຖັງຂີ້ເຫຍື່ອ, ຫ້ອງຮຽນ...

5.ຄູສະຫຼຸບຄໍາຕອບ ແລະ ໃຫ້ນັກຮຽນເວົ້າຄືນເປັນວະລີ, ເປັນປະໂຫຍກເຊັ່ນ: ຮົ້ວໂຮງຮຽນ, ປະຕູໃຫຍ່, ປ້າຍບອກຊື່ຂອງໂຮງຮຽນ, ມີຫຼັກທຸງ, ສວນດອກໄມ້, ຫ້ອງນໍ້າ, ຖັງຂີ້ເຫຍື່ອ, ຫ້ອງຮຽນ...

6.ໃນກໍລະນີນັກຮຽນເວົ້າຄືນບໍ່ໄດ້ຄູເປັນຜູ້ຊ່ວຍເຫຼືອນັກຮຽນ.

- ການວັດ ແລະ ປະເມີນຜົນ

  ການເວົ້າເປັນວະລີ ແລະ ປະໂຫຍກຊັດເຈນ.

**2.8ກິດຈະກໍາ: ສະແດງບົດບາດສົມມຸດ**

ຕົວຢ່າງ: ເຕົ່າກັບກະຕ່າຍ

ຮູບພາບ

1. ຄູອ່ານເລື່ອງເຕົ່າກັບກະຕ່າຍໃຫ້ນັກຮຽນຟັງ
2. ຄູອະທິບາຍວິທີການສະແດງໂດຍໃຫ້ນັກຮຽນສວມບົດບາດສົມມຸດຂອງຕົວລະຄອນ
3. ຄູຖາມວ່າຜູ້ໃດສະໝັກເປັນເຕົ່າ, ຜູ້ໃດເປັນກະຕ່າຍ
4. ໃຫ້ຜູ້ສະໝັກຝຶກຊ້ອມຄໍາເວົ້າ ແລະ ທ່າທາງຂອງຕົວລະຄອນ

- ກະຕ່າຍ: ໂທ!ອ້າຍເຕົ່າເອີຍ ເຖິງເຈົ້າຈະແອບແລ່ນປານໃດ, ກໍບໍ່ຕ່າງຫຍັງກັບຫອຍໄຕ່, ເຈົ້າຈະເຮັດແນວໃດກໍບໍ່ໄວຄືຂ້ອຍດອກ!

- ເຕົ່າ: ເຈົ້າຢ່າປະໝາດຂ້ອຍໃດ໋!ຄັນເຈົ້າເກັ່ງລອງມາແລ່ນເສັງກັບຂ້ອຍເບິ່ງດູ!ວ່າໃຜຈະແລ່ນໄວກວ່າກັນ

5.ຄູໃຫ້ນັກຮຽນແຕ່ລະກຸ່ມກຽມ ແລະ ສະແດງໃນກຸ່ມ

6.ຄູໃຫ້ແຕ່ລະກຸ່ມອອກມາສະແດງຢູ່ໜ້າຫ້ອງ

7.ຄູສະຫຼຸບລວມການສະແດງບົດບາດສົມມຸດໃຫ້ຄົບຕາມເນື້ອໃນບົດຮຽນ

- ການວັດ ແລະ ປະເມີນຜົນ

  ສັງເກດທ່າທາງ ແລະ ການເວົ້າຄົບຕາມເນື້ອໃນຂອງກຸ່ມ ແລະ ບຸກຄົນ

**2.9. ກິດຈະກໍາ: ການເວົ້າ ແລະ ການສາທິດ**

ຕົວຢ່າງ: ການກວາດຫ້ອງຮຽນ

1.ຄູໃຫ້ນັກຮຽນເວົ້າກ່ຽວກັບອຸປະກອນການກວາດຫ້ອງຮຽນເຊັ່ນ: ຟອຍ, ຊວ້ານຕັກຂີ້ເຫຍື່ອ, ຖົງຂີ້ເຫຍື່ອ...

2.ຄູອະທິບາຍພ້ອມທັງສາທິດວິທີກວາດຫ້ອງນັກຮຽນເບິ່ງກ່ອນ

3. ຄູໃຫ້ນັກຮຽນ 1 ຄົນອອກມາກວາດຫ້ອງຕົວຈິງໃຫ້ໝູ່ເບິ່ງ ພ້ອມທັງເວົ້າຂັ້ນຕອນການກວາດເຊັ່ນ: ຂ້ອຍຈັບຟອຍເບື້ອງຂວາ, ຂ້ອຍຈັບຊວານເບື້ອງຊ້າຍ, ຂ້ອຍກົ້ມໜ້າລົງໜ້ອຍໜຶ່ງ ແລະ ກວາດຂີ້ເຫຍື່ອມາໃສ່ຊວ້ານ. ຂ້ອຍເອົາຂີ້ເຫຍື່ອມາຖອກໃສ່ຖົງ

4.ຄູໃຫ້ນັກຮຽນ 4-5 ຄົນອອກມາປະຕິບັດ

5. ຄູ ແລະ ໝູ່ຄູ່ເປັນຜູ້ຕິດຕາມ

6.ຄູສະຫຼຸບກ່ຽວກັບການປະຕິບັດຕົວຈິງຄືນໃຫ້ນັກຮຽນຟັງ ພ້ອມທັງແນະນຳນັກຮຽນໃນຫ້ອງຮຽນວ່າເປັນພື້ນດິນເຮົາຕ້ອງບິດນ້ຳໃສ່ໜ້ອຍໜຶ່ງແລ້ວຈິ່ງກວາດ

- ການວັດ ແລະ ການປະເມີນຜົນ

  ສັງເກດການກວາດ ແລະ ການເວົ້າໃຫ້ຖືກຕ້ອງ

**2.10 ກິດຈະກຳ: ການເລົ່າປະສົບ**

ຕົວຢ່າງ: ການໃສ່ເບັດ

1.ຄູໃຫ້ນັກຮຽນເລົ່າປະສົບການຕົວຈິງໃນຊີວິດປະຈຳວັນ ( ສິ່ງທີ່ໄດ້ເຮັດ)

2. ຄູບັນທຶກຄຳເວົ້າຂອງນັກຮຽນໃສ່ກະດານຕາມລຳດັບເຊັ່ນ: ຕອນແລງມື້ໜຶ່ງຂ້ອຍໄປໃສ່ເບັດນຳອ້າຍ, ອ້າຍຂ້ອຍຂຸດຂີ້ກະເດືອນໃສ່ກະປ໋ອງໄດ້ 10 ໂຕ, ຂ້ອຍຖືກະປ໋ອງຂີ້ກະເດືອນ, ອ້າຍຂ້ອຍຖືເບັດ, ພວກຂ້ອຍພາກັນໄປໃສ່ເບັດຢູ່ໜອງທົ່ງນາ, ຕອນເຊົ້າມື້ໃໝ່ພວກຂ້ອຍໄປຢາມເບັດໄດ້ປາດຸກ ແລະ ປາຄໍ່.

3.ຄູໃຫ້ນັກຮຽນຜູ້ອື່ນໆອອກມາເລົ່າຄືນ 2 – 3 ຄົນ

4. ຄູໃຫ້ນັກຮຽນເລົ່າເລື່ອງອື່ນຖ້າມີ

5. ຄູສະຫຼຸບການເລົ່າຂອງນັກຮຽນ

- ການວັດ ແລະ ປະເມີນຜົນ

  ການເລົ່າມີຄວາມຕໍ່ເນື່ອງ ແລະ ແຈ່ມແຈ້ງດີ

**2.11 ກິດຈະກຳ: ເລົ່າເລື່ອງຄືນຕາມທີ່ໄດ້ຟັງຈາກຄູ**

1. ຄູອ່ານນິທານ ຫຼື ເລົ່ານິທານໃຫ້ນັກຮຽນຟັງ1 – 2 ເທື່ອ.ຈາກນັ້ນ, ໃຫ້ນັກຮຽນເລົ່ານິທານຄືນຈາກຄວາມຈື່ຈຳຂອງເຂົາເຈົ້າ.
2. ຄູໃຫ້ນັກຮຽນເວົ້າຄຳສັບທີ່ໜ້າສົນໃຈໃນບົດນິທານ ແລ້ວຂຽນຄຳສັບທີ່ນັກຮຽນສົນໃຈໃສ່ກະດານ.
3. ຄູບອກນັກຮຽນຈຳແນກຄຳສັບທີ່ເຂົາເຈົ້າຮູ້ຢູ່ໃນນິທານ.

ການວັດ ແລະ ປະເມີນຜົນ

ນັກຮຽນເລົ່ານິທານຕາມເຫດການທີ່ເກີດຂຶ້ນໂດຍໂດຍນຳໃຊ້ຄຳເວົ້າຂອງເຂົາເຈົ້າເອງ.

**ກິດຈະກຳ: ລາຍງານການສັງເກດ**

1.ຄູສົນທະນາກ່ຽວກັບບໍລິເວນຂອງໂຮງຮຽນທີ່ນັກຮຽນກຳລັງຮຽນຢູ່

2.ຄູພານັກຮຽນອອກມາສັງເກດເບິ່ງສະພາບແວດລ້ອມບໍລິເວນຂອງໂຮງຮຽນຕົວຈິງ

3.ຄູໃຫ້ນັກຮຽນເວົ້າສິ່ງທີ່ຕົນເອງໄດ້ເຫັນ ເປັນແຖວ ແລະ ເປັນບຸກຄົນ

4.ຄູຂຽນຄຳເວົ້າຂອງນັກຮຽນໃສ່ກະດານຕົວຢ່າງ: ຮົ້ວ, ປະຕູ, ປ້າຍ, ທຸງ, ສວນດອກໄມ້, ຫ້ອງນ້ຳ, ຖັງຂີ້ເຫຍື່ອ, ຫ້ອງຮຽນ...

5.ຄູສະຫຼຸບຄຳຕອບ ແລະ ໃຫ້ນັກຮຽນເວົ້າຄືນເປັນວະລີ, ເປັນປະໂຫຍກເຊັ່ນ: ຮົ້ວໂຮງຮຽນ, ປະຕູໃຫຍ່, ປ້າຍບອກຊື່ຂອງໂຮງຮຽນ, ມີຫຼັກທຸງ, ສວນດອກໄມ້, ຫ້ອງນ້ຳ, ຖັງຂີ້ເຫຍື່ອ, ຫ້ອງຮຽນ...

6.ໃນກໍລະນີນັກຮຽນເວົ້າຄືນບໍ່ໄດ້ຄູເປັນຜູ້ຊ່ວຍເຫຼືອນັກຮຽນ.

- ການວັດ ແລະ ປະເມີນຜົນ

  ການເວົ້າເປັນວະລີ ແລະ ປະໂຫຍກຊັດເຈນ.

**ກິດຈະກຳ: ການເລົ່າປະສົບ**

ຕົວຢ່າງ: ການໃສ່ເບັດ

1.ຄູໃຫ້ນັກຮຽນເລົ່າປະສົບການຕົວຈິງໃນຊີວິດປະຈຳວັນ ( ສິ່ງທີ່ໄດ້ເຮັດ)

2. ຄູບັນທຶກຄຳເວົ້າຂອງນັກຮຽນໃສ່ກະດານຕາມລຳດັບເຊັ່ນ: ຕອນແລງມື້ໜຶ່ງຂ້ອຍໄປໃສ່ເບັດນຳອ້າຍ, ອ້າຍຂ້ອຍຂຸດຂີ້ກະເດືອນໃສ່ກະປ໋ອງໄດ້ 10 ໂຕ, ຂ້ອຍຖືກະປ໋ອງຂີ້ກະເດືອນ, ອ້າຍຂ້ອຍຖືເບັດ, ພວກຂ້ອຍພາກັນໄປໃສ່ເບັດຢູ່ໜອງທົ່ງນາ, ຕອນເຊົ້າມື້ໃໝ່ພວກຂ້ອຍໄປຢາມເບັດໄດ້ປາດຸກ ແລະ ປາຄໍ່.

3.ຄູໃຫ້ນັກຮຽນຜູ້ອື່ນໆອອກມາເລົ່າຄືນ 2 – 3 ຄົນ

4. ຄູໃຫ້ນັກຮຽນເລົ່າເລື່ອງອື່ນຖ້າມີ

5. ຄູສະຫຼຸບການເລົ່າຂອງນັກຮຽນ

- ການວັດ ແລະ ປະເມີນຜົນ

  ການເລົ່າມີຄວາມຕໍ່ເນື່ອງ ແລະ ແຈ່ມແຈ້ງ

**2.12 ກິດຈະກຳ: ການເລົ່າກາບກອນ**

1. ຄູເລົ່າກາບກອນໃຫ້ນັກຮຽນຟັງໝົດບົດກອນ 1-2 ເທື່ອ
2. ຄູພານັກຮຽນເລົ່າບົດກາບກອນເທື່ອລະວັກຕາມລຳດັບຈົນໝົດບົດ 1-2 ເທື່ອ
3. ຄູເວົ້າກາບກອນຕອນທີ1 ໃຫ້ນັກຮຽນເວົ້າຕໍ່ຕອນທີ2 ຕໍ່ໆໄປຕາມລຳດັບຈົນໝົດບົດ

4. ຄູໃຫ້ນັກຮຽນເລົ່າໝົດບົດພ້ອມກັນເປັນແຖວ, ເປັນໂຕະ, ເປັນບຸກຄົນຕາມຄວາມເໝາະສົມ
5. ຄູໃຫ້ນັກຮຽນອາສາສະໝັກ ຫຼື ບົ່ງຕົວອອກມາເລົ່າກາບກອນສູ່ໝູ່ຟັງ
6. ສະຫຼຸບການເວົ້າຕໍ່ກອນແຕ່ລະຕອນຂອງນັກຮຽນ

- ການວັດ ແລະ ປະເມີນຜົນ

ໃຫ້ນັກຮຽນ 2 ຄົນອອກໄປເວົ້າກອນຕໍ່ກັນຢູ່ໜ້າກະດານ

**ການຫຼິ້ນເກມຊິ່ມໃສ່ຫູ**

1. ຄູແນະນຳວິທີຫຼິ້ນໃຫ້ຜູ້ຢູ່ຫົວແຖວເວົ້າຄຳທີ່ຄູກຳນົດໃຫ້ໃສ່ຫູຜູ້ທີ່2 -3ຈົນສຸດແຖວ
2. ຄູຈັດນັກຮຽນໃຫ້ນັ່ງ ຫຼື ຢືນເປັນແຖວ 3- 5 ຄົນ
3. ຄູບອກຄຳໃດຄຳໜຶ່ງຄ່ອຍໆໃຫ້ຜູ້ຢູ່ຫົວແຖວຊິ່ມໃສ່ຫູໝູ່ຕໍ່ໆກັນໄປຈົນສຸດແຖວ
4.ຜູ້ສຸດທ້າຍໃຫ້ເວົ້າຄຳນັ້ນດັງໆໃຫ້ໝູ່ຟັງ

❖ ການວັດ ແລະ ປະເມີນຜົນ

ຟັງຈາກຄຳເວົາຂອງຜູ້ສຸດທ້າຍຖືກກັບຄຳທີ່ຄູບອກຜູ້ທຳອິດ

**ກິດຈະກຳ: ຖາມ-ຕອບກ່ຽວກັບຮູບພາບ**

ການສອນນີ້ແມ່ນເໝາະສົມສະເພາະໂຮງຮຽນທີ່ມີຮູບແຜ່ນໃຫຍ່, ຖ້າຫາກວ່າໂຮງຮຽນໃດບໍ່ມີກໍໃຫ້ນັກຮຽນເບິ່ງຕາມປຶ້ມແບບຮຽນນັ້ນ.ຕົວຢ່າງ:

1.ຄູນຳໃຊ້ປຶ້ມແບບຮຽນຍົກຮູບພາບ ( ຕົວຢ່າງ : ຮູບຢູ່ໃນບົດທີ17 ໜ້າທີ34 ຮູບເບື້ອງລຸ່ມ )ໃຫ້ນັກຮຽນໄດ້ເບິ່ງໝົດທຸກຄົນ.

- ຄູຖາມນັກຮຽນໝົດຫ້ອງ, ແຖວ, ໂຕະ ແລະ ບຸກຄົນ ( ໃຫ້ເລືອກໃຊ້ຕາມຄວາມເໝາະສົມ)ວ່າ: ໃນຮູບນີ້ພວກນ້ອງເຫັນຫຍັງແດ່?
- ນັກຮຽນຕອບຕາມຄວາມເຂົ້າໃຈເຊັ່ນ: ໂອ່ນຊາ, ຕະລູດ, ແມ່ຄ້າ, ໂຕປາ, ມ້າໝູນ, ຕົ້ນໄມ້, ຖຽງນາ.

2.ຄູຊີ້ແຕ່ລະຮູບພ້ອມທັງຖາມວ່າ: ອັນນີ້ແມ່ນຮູບຫຍັງ? ( ຖ້ານັກຮຽນຕອບບໍ່ຖືກຄູຕ້ອງບອກຄຳຕອບທີ່ຖືກຕ້ອງ) ນັກຮຽນຕອບຕາມການຊີຂອງຄູ.

3.ຄູໃຫ້ນັກຮຽນອາສາສະໝັກອອກມາຊີ້ແລ້ວສົນທະນາກັບໝູ່ໃນຫ້ອງ

4.ຄູໃຫ້ນັກຮຽນຜູ້ທີ່ຮຽນອ່ອນອອກມາຊີ້ ແລະ ເວົ້າພ້ອມຕາມຮູບ.

# ບົດທີ 4
# ທັກສະການສອນອ່ານໃນຊັ້ນປະຖົມສຶກສາ

## 1.ຄວາມໝາຍ ແລະ ຄວາມສຳຄັນຂອງການອ່ານ

### 1.1ຄວາມໝາຍຂອງການອ່ານ

ການອ່ານແມ່ນການສະແດງອອກເຖິງຄວາມເຂົ້າໃຈກ່ຽວກັບເນື້ອໃນບົດ. ການອ່ານແມ່ນກິດຈະກຳທີ່ສັບຊ້ອນ ເຊິ່ງພົວພັນກັບຂະບວນການຄວາມຮູ້ພື້ນຖານຄື ຮູ້ໂຄງສ້າງຂອງພາສາ, ຮູ້ລັກສະນະ ຫຼື ຕົວອັກສອນທີ່ແທນຄຳເວົ້າ, ຮູ້ຄວາມໝາຍໃນຄຳສັບ ແລະ ໂຫຍກ.

### 1.2 ຄວາມສຳຄັນຂອງການອ່ານ

ການອ່ານ ມີຄວາມສຳຄັນຢ່າງຍິ່ງ ໃນການສຶກສາຫາຄວາມຮູ້ໃນວິຊາການຕ່າງໆ. ການອ່ານສາມາດໃຫ້ເຮົາຮູ້ຄວາມຮູ້ສຶກນຶກຄິດຂອງຄົນທັງໃນອະດີດ ແລະ ປັດຈຸບັນ. ຊ່ວຍເພີ່ມສະຕິປັນຍາຄວາມຮັບຮູ້ ແລະ ຄວາມເຂົ້າໃຈໃນປັນຫາຕ່າງໆໄດ້ຢ່າງເລິກເຊິ່ງ ເຮົາຈິ່ງຈຳເປັນຢ່າງຍິ່ງທີ່ຈະຕ້ອງໄດ້ຝຶກທັກສະການອ່ານ, ການອ່ານມີຄວາມສຳຄັນຫຼາຍຕໍ່ການດຳລົງຊີວິດຂອງຄົນເຮົາໃນປັດຈຸບັນການອ່ານປຶມ ຫຼື ໜັງສືເລື່ອງຕ່າງໆທີ່ໄດ້ຮັບໂຮມເອົາຄວາມຮູ້ທຸກສາຂາສາວິຊາ ແລະ ຄວາມບັນເທີງຕ່າງໆນັ້ນເປັນເສັ້ນທາງ ທີ່ຈະພັດທະນາຄົນໃຫ້ມີຄຸນະພາບດຜູ້ທີ່ຮັກການອ່ານຈະເປັນປະໂຫຍດຫຼວງຫຼາຍໃນການເພີ່ມພູນຄວາມຮູ້ໃນທຸກສາຂາອາຊີບ ເພື່ອປັບປຸງການປະກອບອາຊີບໃຫ້ຈະເລີນກ້າວໜ້າ.

ນອກຈາກໃນດ້ານການພັດທະນາການປະກອບອາຊີບແລ້ວ, ການອ່ານຍັງເຮັດໃຫ້ຄົນເຮົາມີອິດສະຫຼະທາງດ້ານຄວາມຄິດ, ບໍ່ຖືກຕວະຍົວະ ຫຼື ຖືກຄອບງຳທາງດ້ານຄວາມຄິດ, ມີສາຍຕາເບິ່ງກວ້າງເຫັນໄກ, ມີໂລກະທັດຊີວະທັດທີ່ກວ້າງຂວາງ ແລະ ຖືກຕ້ອງໄດ້ປະສົບການຂໍ້ຄິດ ແລະ ຄວາມຮູ້ຕ່າງໆຈາກການອ່ານມາວິໄຈວິຈານໂດຍໃຊ້ວິຈາລະນາຍານ. ຢູ່ໃນການອ່ານເພື່ອຄວາມບັນເທີງຍັງສາມາດເຮັດໃຫ້ຈິດໃຈແຈ່ມໃສເປັນການພັກຜ່ອນຢ່ອນໃຈອີກແບບໜຶ່ງ ເຮັດໃຫ້ຊີວິດມີຄວາມກະຕືລືລົ້ນກ້າຕໍ່ສູ້ກັບອຸປະສັກ ແລະ ຄວາມເປັນຕົວຂອງຕົວເອງເພື່ອຈະດຳລົງຊີວິດຢ່າງມີຄວາມສຸກ.

## 2.ການສອນທັກສະອ່ານ

### 2.1ກິດຈະກຳ: ອ່ານເນື້ອໃນບົດຮຽນ

- ຄູໃຫ້ນັກຮຽນຜູ້ໃດຜູ້ໜຶ່ງອ່ານໃຫ້ໝູ່ຟັງ 1 ເທື່ອ
- ໃຫ້ນັກຮຽນອ່ານພ້ອມກັນໝົດຫ້ອງ1-2 ເທື່ອ
- ໃຫ້ນັກຮຽນອ່ານເປັນກຸ່ມ ແລະ ບຸກຄົນຕາມຄວາມເໝາະສົມ

- ນາຍຄູຕັ້ງຄຳຖາມຕາມເນື້ອໃນບົດຮຽນໃນແບບຮຽນ

- ຄູສະຫຼຸບຄືນການຕອບຄຳຖາມຂອງນັກຮຽນ ແລະ ໃຫ້ຄຳຕອບທີ່ຕອບຖືກ

**2.2ກິດຈະກຳ: ອ່ານອອກສຽງ**

ການອ່ານອອກສຽງໄດ້ແກ່ການອ່ານໃຫ້ມີສຽງດັງ ເພື່ອຢັ້ງຢືນຄວາມຖືກຕ້ອງຕາມລັກສະນະ ແລະ ປະເພດຂອງສິ່ງທີ່ອ່ານເຊັ່ນ: ອ່ານສະຫຼະ, ອ່ານພະຍັນຊະນະ,ອ່ານຟ້ອງສຽງ, ອ່ານຜັນສຽງ, ອ່ານຄຳສັບ, ອ່ານ ວະລີ, ອ່ານປະໂຫຍກ ຫຼື ຂໍ້ຄວາມ ແລະ ອ່ານບົດຕ່າງໆ.ໃນການອອກສຽງຍັງມີການອອກສຽງປະກອບລີລາ ແລະ ທ່າທາງອີກດ້ອຍ.

**2.3 ກິດຈະກຳ: ການອ່ານຖອດສຽງ**

ຕົວຢ່າງ: ການອ່ານຖິດສຽງພະຍັນຊະ ສ, ຊ

ຄູສາມາດເອົາວັດຖຸຈິງ ຫຼື ຮູບພາບກໍ່ໄດ້

1. ຄູຍົກເອົາ “ ເສື້ອ ” ທີ່ຄູກຽມມາແລ້ວຖາມນັກຮຽນວ່າ:

- ອັນນີ້ແມ່ນຫຍັງ? ເສືອ
- ໃຫ້ນັກຮຽນຟັງການອອກສຽງຄຳວ່າ: ເສືອ, ເສື້ອ, ເສື້ອ
- ເສື້ອອອກສຽງພະຍັນຊະຫຍັງ?ໃຫ້ນັກຮຽນຕອບ ( ສ )
- ຄູຂຽນພະຍັນຊະນະ “ ສ ”ໃສ່ກະດານ
- ຄູອ່ານ “ ສ ” ນັກຮຽນອ່ານຕາມຈາກນັ້ນນັກຮຽນອ່ານ

2. ທີ່ຄູກຽມມາແລ້ວຖາມນັກຮຽນວ່າ

- ອັນນີ້ແມ່ນຮູບຫຍັງ? ຊ້າງ
- ໃຫ້ນັກຮຽນຟັງການອ່ານອອກສຽງຄຳວ່າ: ຊ້າງ, ຊ້າງ, ຊ້າງ
- ຊ້າງ ອອກສຽງພະຍັນຊະນະຫຍັງ? ໃຫ້ນັກຮຽນຕອບ ( ຊ )
- ຄູຂຽນພະຍັນຊະນະ “ ຊ ” ໃສ່ກະດານ
- ຄູຂຽນພະຍັນຊະນະ “ ຊ ” ໃສ່ກະດານ
- ຄູອ່ານ “ ຊ ” ນັກຮຽນອ່ານຕາມ ຈາກນັນນັກຮຽນອ່ານ

3.ຄູອ່ານ “ ສ, ຊ ” 1-2 ເທື່ອ

4. ຄູພານັກຮຽນອ່ານ “ ສ, ຊ ” 2-3 ເທື່ອ

5. ໃຫ້ນັກຮຽນອ່ານເປັນໂຕະ, ເປັນແຖວ ຫຼື ເປັນບຸກຄົນ

6. ຄູຊີ້ “ ສ, ຊ ” ໃຫ້ນັກຮຽນອ່ານເນັ້ນສຽງ “ ສ, ຊ ” 2-3 ເທື່ອ

❖ ການວັດ ແລະ ປະເມີນຜົນ

ຄູອ່ານອອກສຽງ " ສ, ຊ " ແລ້ວໃຫ້ນັກຮຽນອອກໄປຊີ້ພະຍັນຊະນະ " ສ, ຊ "

**2.4ກິດຈະກຳ: ການອ່ານຟ້ອງສຽງ**

1. ຄູສາທິດການປະສົມພະຍັນຊະນະກັບສະຫຼະເຊັ່ນ ( ສ ) ( ຊ ) ( xະ, xິ, xຸ, ໂx )

ຕົວຢ່າງ: ສ + xະ = ສະ, ສ + xິ = ສິ, ສ + x ຸ= ສຸ, ສ + ໂx = ໂສ

ຊ + xະ = ຊະ, ຊ + xິ = ຊິ, ຊ + x ຸ= ຊຸ, ຊ + ໂx = ໂຊ

2.ຄູຂຽນຄຳວ່າ: ສະ, ສິ, ສຸ, ໂສ, ຊະ, ຊິ, ຊຸ, ໂຊ

| | xະ | xິ | xຸ | ໂx |
|---|---|---|---|---|
| ສ | ສະ | ສິ | ສຸ | ໂສ |
| ຊ | ຊະ | ຊິ | ຊຸ | ໂຊ |

3. ຄູພານັກຮຽນອ່ານຟ້ອງສຽງ 2-3 ເທື່ອ
4. ໃຫ້ນັກຮຽນອ່ານເປັນກຸ່ມ ແລະ ບຸກຄົນ

❖ ການວັດ ແລະ ປະເມີນຜົນ

ສັງເກດການອ່ານພະຍັນຊະນະຟ້ອງໃສ່ສະຫຼະແຕ່ລະຕົວຂອງນັກຮຽນ

**2.5 ກິດຈະກຳ: ການອ່ານຜັນສຽງ**

1.ຄູຕິດເຈ້ຍໃຫຍ່ໃສ່ກະດານທີ່ຄູກຽມໄວ້ຖ້າບໍ່ມີຄູຂຽນຄຳສັບທີ່ກຽມໄວ້ໃສ່ກະດານ

ຕົວຢ່າງ:

| | x່ | x້ | x໊ | x໋ |
|---|---|---|---|---|
| ກາ | ກ່າ | ກ້າ | ກ໊າ | ກ໋າ |
| ປີ | ປີ່ | ປີ້ | ປີ໊ | ປີ໋ |
| ໂດ | ໂດ່ | ໂດ້ | ໂດ໊ | ໂດ໋ |

2.ຄູພານັກຮຽນອ່ານ 2 – 3 ເທື່ອ.

3.ຄູໃຫ້ນັກຮຽນອ່ານເປັນກຸ່ມ ແລະ ບຸກຄົນ

❖ ການວັດ ແລະ ປະເມີນຜົນ

- ຄູບົ່ງຕົວໃຫ້ນັກຮຽນອອກໄປອ່ານ 2 – 3 ຄົນ
- ສັງເກດການອ່ານຄຳຜັນສຽງໃສ່ວັນນະຍຸດແຕ່ລະຕົວ

**2.6 ກິດຈະກຳ: ເກມຊອກຄຳ ແລະ ອ່ານຄຳສັບ**

1. ຄູກຽມບັດຄຳສັບຫຼາຍຄຳທີ່ຂຶ້ນຕົ້ນດ້ວຍຫຼາຍຕົວພະຍັນຊະນະປະປົນກັນເຊັ່ນ: ເປືອນ, ເສືອ, ສີ, ເຊືອກ, ຊ້າງ, ນົກ, ຊາ, ມ້າ, ແບ້, ໄກ່, ແມວ, ເປັດ, ຊີງ, ໂສ້ງ, ຊາຍ, ຍິງ, ເສື້ອ, ນອນ, ເບິ່ງ, ສິງ ( 3 ຊຸດ )

2.ຄູແບ່ງນັກຮຽນອອກເປັນ 3 ກຸ່ມ

3.ຄູຢາຍບັດໃຫ້ກຸ່ມລະ 20 ບັດ( 60 ບັດ )

4.ຄູແນະນຳວິທີ ແລະ ກາຕິກາໃນການຫຼິ້ນໃຫ້ນັກຮຽນເຂົ້າໃຈ

ວິທີຫຼິ້ນ:

- ໃຫ້ນັກຮຽນແຕ່ລະກຸ່ມເລືອກເອົາຄຳສັບທີ່ມີພະຍັນຊະນະຕົວ “ ສ, ຊ ” ໃຫ້ຄົບ
- ກຸ່ມໃດໄດ້ຄົບໃຫ້ຮ້ອງວ່າໄຊໂຍ!

ກະຕິກາ:

1. ຄູໃຫ້ແຕ່ລະກຸ່ມອ່ານຄຳສັບທີ່ເລືອກໄດ້
2. ກຸ່ມທີ່ເລືອກໄດ້ຄົບ ແລະ ອ່ານຖືກຕ້ອງເປັນຜູ້ຊະນະ
3. ຄູ ແລະ ນັກຮຽນສະຫຼຸບຮ່ວມກັນ
4. ຄູສ້າງເປັນແຜນມະໂນພາບໃສ່ກະດານດັ່ງນີ້:



## 2.7 ກິດຈະກຳ: ການອ່ານເປັນຄຳ, ວະລີ ແລະ ປະໂຫຍກ

ການອ່ານເປັນຄຳ, ວະລີ ແລະ ປະໂຫຍກນີ້ ແມ່ນຄວາມສາມາດທີ່ພັດທະນາມາຈາກການອ່ານຟ້ອງສຽງ ແລະ ຜັນສຽງກາຍມາເປັນທັກສະ ຫຼື ຄວາມຄ່ອງແຄ້ວຂອງການອ່ານອອກສຽງໄດ້ໂລດ, ການສອນອ່ານກໍໃຫ້ຄູອ່ານເປັນຄຳ ແລະ ຂໍ້ຄວາມນັ້ນໂລດເຊັ່ນ: ດີ, ເດືອນ, ໂຕະ, ຕະຫຼາດ, ໂຮງຮຽນ, ຂ້ອຍກິນເຂົ້າ...ຖ້ານັກຮຽນອ່ານເອງມີຄຳໃດອ່ານບໍ່ໄດ້ໃຫ້ເຂົາເຈົ້າອ່ານຟ້ອງສະເພາະຄຳນັ້ນກ່ອນກໍ່ໄດ້.

ຄຳແມ່ນຫົວໜ່ວຍຂອງຄຳເວົ້າເຊິ່ງແມ່ນກາເປັ່ງສຽງອອກມາຈາກຮູຄໍ ແລະ ໂພ້ງປາກ, ຖ້າສຽງທີ່ເຮົາເປັ່ງອອກມາບໍ່ມີຄວາມໝາຍບໍ່ເອີ້ນວ່າຄຳ, ຖ້າສຽງທີ່ເຮົາເປັ່ງອອກມາມີຄວາມໝາຍເອີ້ນວ່າຄຳ. ຄຳປະກອບມີ 2 ຢ່າງຄື: ສຽງ ແລະ ຄວາມໝາຍ.

ວະລີ ແມ່ນ ໝວດຄຳ ຫຼື ໝູ່ຄຳເຊິ່ງໝາຍເຖິງຄຳທີ່ເອົາມາຕິດຕໍ່ກັນນັບແຕ່ 2 ຄຳຂຶ້ນໄປແຕ່ລະຄຳມີຄວາມໝາຍຕ່າງກັນ ເມື່ອເອົາມາປະສົມເຂົ້າກັນມີຄວາມໝາຍກ່ຽວເນື່ອງຜູກພັນກັນແຕ່ວ່າຍັງບໍ່ທັນໄດ້ຄວາມໝາຍຄົບຖ້ວນຄືກັບປະໂຫຍກ.

ປະໂຫຍກ ແມ່ນ ວັກ ຫຼື ຕອນຂອງຄຳເວົ້າທີ່ມີຄວາມໝາຍຄົບຖ້ວນສົມບູນ.

**ກິດຈະກຳ: ອ່ານຄຳ**

1. ຄູກຽມບັດຄຳເຊັ່ນ: ເສືອ, ຊ້າງ, ສອກ, ໂສ້ງ, ເຊືອກ
2. ຄູຍົກ ແລະ ອ່ານແຕ່ລະບັດແລ້ວໄປສຽບໃສ່ຖົງບັດຄຳທີ່ກຽມໄວ້
3. ຄູພາອ່ານໃຫ້ນັກຮຽນອ່ານຕາມຫຼັງ 1-2 ເທື່ອ
4. ຄູຊີ້ແຕ່ລະຄຳໃຫ້ນັກຮຽນອ່ານ2-3 ເທື່ອ
5. ນັກຮຽນຈັບຄູ່ກັນອອກໄປອ່ານໂດຍມີຜູ້ໜຶ່ງຊີ້ອີກຜູ້ໜຶ່ງອ່ານສັບປ່ຽນກັນໄປ

**ກິດຈະກຳ: ອ່ານວະລີ**

1.ຄູກຽມບັດວະລີເຊັ່ນ: ຊຸກະໂຊ້, ສຸສະບູ, ເທື່ອລະບັດ

2. ຄູຍົກ ແລະ ອ່ານບັດວະລີແຕ່ລະບັດແລ້ວໄປສຽບໃສ່ຖົງບັດຄຳທີ່ກຽມໄວ້

3. ຄູພາອ່ານໃຫ້ນັກຮຽນອ່ານຕາມຫຼັງ 1-2 ເທື່ອ

4. ຄູຊີ້ແຕ່ລະວະລີໃຫ້ນັກຮຽນອ່ານ 2-3 ເທື່ອ

5. ນັກຮຽນຈັບຄູ່ກັນອອກໄປອ່ານໂດຍມີຜູ້ໜຶ່ງຊີ້, ອີກຜູ້ໜຶ່ງອ່ານສັບປ່ຽນກັນໄປ

**ກິດຈະກຳ: ອ່ານປະໂຫຍກ**

1.ຄູກຽມບັດປະໂຫຍກເຊັ່ນ: ຂ້ອຍສຸສະບູ, ປ້າສີຊື້ປາ, ຂ້ອຍນຸ່ງໂສ້ງ ແລະ ເສື້ອເທື່ອລະບັດ

2. ຄູຍົກ ແລະ ອ່ານບັດປະໂຫຍກແຕ່ລະບັດແລ້ວໄປສຽບໃສ່ຖົງບັດຄຳທີ່ກຽມໄວ້

3. ຄູພາອ່ານໃຫ້ນັກຮຽນອ່ານຕາມຫຼັງ1-2ເທື່ອ

4. ຄູຊີ້ແຕ່ລະປະໂຫຍກໃຫ້ນັກຮຽນອ່ານ 2-3 ເທື່ອ

5.ນັກຮຽນຈັບຄູ່ກັນອອກໄປອ່ານມີຜູ້ໜຶ່ງຊີ້ອີກຜູ້ໜຶ່ງອ່ານສັບປ່ຽນກັນໄປ

ການວັດ ແລະ ປະເມີນຜົນ

ການອ່ານຄຳ, ວະລີ ແລະ ປະໂຫຍກຖືກຕ້ອງ ແລະ ຊັດເຈນ

**2.8 ກິດຈະກຳ: ການອ່ານກາບກອນ**

ການອ່ານກາບກອນແມ່ນການປັ່ງສຽງ ເນື່ອງສຽງໃຫ້ຖືກວັກຕອນ ຂອງບົດກາບກອນ, ຮູ້ຄຳສຳຜັດ, ຄວາມໝາຍໃນແຕ່ລະວັກຂອງບົດກອນ.

ຕົວຢ່າງ: ບົດທີ 38 ດອກບົວກາງບຶງ

ຄູຂຽນເນື້ອໃນໃສ່ກະດານ ຫຼື ເບິ່ງຕາມປຶ້ມດັ່ງນີ້:

ປະທຸມມະຊາດເຊື້ອ ອາໄສເກີດກັບຕົມ

ນ້ຳໜອງພໍພຽງໃດ ດອກບົວກໍຜຸດພົ້ນ

ຂ້ອຍກໍພາຍເຮືອຫຼິ້ນ ສະແຫວງຊົມດວງດອກ

ໃນໜອງດູມ່ອນແມ້ງ ມະໂນຊ້ອຍຊື່ນໃຈ

ດອກບົວເອີຍເຈົ້າຢູ່ນ້ຳ ຮາກທ່ອງເຖິງດິນ

ເອົາຕົມເປັນອາຫານ ຊູ່ວັນບໍ່ມີມື້ວ

ຖາມແດ່ເປັນດເຈົ້າ ຈຶ່ງຫອມຫຼາຍເຫຼືອມາກ

ຫົວຮາກໝາກແກ່ເຈົ້າ ກິນໄດ້ຄູ່ຊູ່ວັນ

...................... ..........................

1.ຄູອ່ານກາບກອນໝົດບົດໃຫ້ນັກຮຽນຟັງ 1 – 2 ເທື່ອ

2.ຄູສົນທະນາກັບນັກຮຽນກ່ຽວກັບຄວາມໝາຍແຕ່ລະວັກຂອງກາບກອນ

3. ໃຫ້ນັກຮຽນອ່ານພ້ອມກັນໝົດຫ້ອງ, ເປັນແຖວ, ເປັນໂຕະ ຫຼື ເປັນບຸກຄົນ

4.ໃຫ້ນັກຮຽນອ່ານຄືນ 1-2 ຄົນ

5. ຄູສະຫຼຸບການອ່ານກາບກອນຂອງນັກຮຽນ

❖ ການວັດ ແລະ ປະເມີນຜົນ

ການອ່ານລ່ຽນໄຫຼ ປັ່ງສຽງຖືກຈັງຫວະວັກຕອນ

**2.9 ກິດຈະກຳ: ການອ່ານໃນໃຈຈັບໃຈຄວາມ**

ການອ່ານໃນໃຈແມ່ນການອ່ານເລື່ອງໃດເລື່ອງໜຶ່ງໂດຍບໍ່ອອກສຽງ, ບໍ່ມີສຽງລົບກວນຜູ້ອື່ນ, ໃຊ້ເວລາບໍ່ຫຼາຍເທົ່າກັບການອ່ານອອກສຽງ, ເປັນການຝຶກສະມາທິໃນການອ່ານ ແລະ ສາມາດຈັບໃຈຄວາມໄດ້ດີຖືກຕ້ອງເລີ່ມຝຶກການອ່ານໃນໃຈໃຫ້ນັກຮຽນໄດ້ປະຕິບັດຕັ້ງແຕ່ປ.2 ຂຶ້ນໄປ.

1. ຄູແນະນຳວິທີອ່ານໂດຍເອົາມືຊີ້ແຕ່ລະຄຳເລີ່ມແຕ່ຕົ້ນແຖວໄປສຸດເລື່ອງ
2. ຄູເຮັດໃຫ້ເບິ່ງ 1 ຄັ້ງ
3. ໃຫ້ນັກຮຽນປະຕິບັດເປັນບຸກຄົນ ໂດຍຊີ້ແຕ່ລະຄຳແຕ່ຕົ້ນແຖວໄປຈົນສຸດ
4. ໃຫ້ນັກຮຽນປະຕິບັດເປັນຄູ່ ໂດຍຜູ້ໜຶ່ງຊີ້ຜູ້ທີ່ສອງເບິ່ງໄປນຳ
5. ໃຫ້ນັກຮຽນປະຕິບັດເປັນກຸ່ມ ໂດຍຜູ້ໜຶ່ງຊີ້ ແລະ ໝູ່ເບິ່ງໄປນຳ
6. ຫຼັງຈາກນັກຮຽນອ່ານແລ້ວ ຄູຖາມເນື້ອໃນຂອງເລື່ອງວ່າແມ່ນຫຍັງ ? ເປັນແນວໃດ?

❖ ການວັດ ແລະ ປະເມີນຜົນ

ການຕອບຄຳຖາມໄດ້ຕາມເນື້ອໃນທີ່ອ່ານ

**2.10 ກິດຈະກຳ: ການອ່ານນິທານ/ ເລື່ອງ**

ການສອນນິທານໃຫ້ປະຕິບັດຄືກັບການອ່ານເລື່ອງທົ່ວໄປ ຕ່າງແຕ່ການອອກສຽງເນັ້ນໄປຕາມຕົວລະຄອນ ເວລາຄູອ່ານຕ້ອງໄດ້ໃຊ້ນ້ຳສຽງ, ໃຊ້ທ່າທາງປະກອບໄປພ້ອມເພື່ອເຮັດໃຫ້ນັກຮຽນຈື່ຈຳ ແລະ ເຂົ້າໃຈບົດຮຽນໄດ້ດີຂຶ້ນພ້ອມກັນນັ້ນຍັງເປັນການກະຕຸ້ນໃຫ້ນັກຮຽນໃນການນຳອີກ.

ຕົວຢ່າງ: ນິທານເຕົ່າກັບໝູ ( ບົດທີ 22ໜ້າທີ 93 ປ. 3 )

1.ຄູສົນທະນາກ່ຽວກັບຮູບໃນບົດວ່າແມ່ນໃຜ? ເຮັດຫຍັງ?ຢູ່ໃສ?ເຮັດແນວໃດ?

2.ຄູໃຫ້ນັກຮຽນນັກຮຽນອ່ານໃນໃຈເນື້ອໃນບົດ 2 -3 ນາທີ

3. ຄູຖາມຄຳທີ່ນັກຮຽນອ່ານບໍ່ໄດ້, ຄູຂຽນຄຳດັ່ງກ່າວໃສ່ກະດານ

4. ຄູອະທິບາຍຄວາມໝາຍ ແລະ ພານັກຮຽນອ່ານຄຳນັ້ນໆ

5. ຄູອ່ານໃຫ້ນັກຮຽນຟັງໝົດເລື່ອງ 1 ຄັ້ງ

6. ຄູພານັກຮຽນອ່ານໝົດຫ້ອງ 1 – 2 ຄັ້ງ

7. ໃຫ້ນັກຮຽນອ່ານເປັນກຸ່ມ ແລະ ບຸກຄົນ

8. ຄູຕິດຕາມຊ່ວຍເຫຼືອຜູ້ທີ່ອ່ານບໍ່ທັນໄດ້ດີ

9. ຄູສະຫຼຸບການອ່ານ ແລະ ອ່ານໃຫ້ນັກຮຽນຟັງຄືນ 1 ເທື່ອ ( ໝົດບົດ)

10. ຄູພານັກຮຽນເຮັດແຜນມະໂນພາບໂດຍຖາມນັກຮຽນວ່າ ເລື່ອງຫຍັງ? ຕົວລະຄອນມີຫຍັງແດ່? ພວກມັນພາກັນຢູ່ໃສ? ໝູເວົ້າແນວໃດ? ເຕົ່າເວົ້າແນວໃດ? ( ຄູແຕ້ມແຜນມະໂນພາບໃສ່ກະດານ)




ການຕອບຄຳຖາມ ເພື່ອຄູຂຽນໃສ່ແຜນມະໂນພາບ

**ກິດຈະກຳ: ການອ່ານບົດທົ່ວໄປ**

ຕົວຢ່າງ ບົດທີ 19 ຊົ່ວໂມງສຸດທ້າຍ

1. ຄູສົນທະນາກ່ຽວກັບຮູບໃນບົດວ່າແມ່ນຫັຍ?ເຮັດຫຍັງ? ຢູ່ໃສ?
2. ຄູໃຫ້ນັກຮຽນອ່ານໃນໃຈ ເນື້ອໃນບົດ 2-3 ນາທີ
3. ຄູຖາມຄຳສັບທີ່ນັກຮຽນອ່ານບໍ່ໄດ້, ຄູຂຽນຄຳສັບດັ່ງກ່າວໃສ່ກະດານ
4. ຄູອະທິບາຍຄວາມໝາຍ ແລະ ພານັກຮຽນຂຽນຄຳສັບນັ້ນໆ
5. ຄູອ່ານໃຫ້ນັກຮຽນຟັງໝົດເລື່ອງ 1 ຄັ້ງ
6. ຄູພານັກຮຽນອ່ານໝົດຫ້ອງ1-2 ຄັ້ງ
7. ໃຫ້ນັກຮຽນອ່ານເປັນກຸ່ມ ແລະ ບຸກຄົນ
8. ຄູຕິດຕາມຊ່ວຍເຫຼືອຜູ້ທີ່ອ່ານບໍ່ທັນໄດ້ດີ

9. ຄູສະຫຼຸບການອ່ານ ແລະ ອ່ານໃຫ້ນັກຮຽນຟັງຄືນ 1 ເທື່ອ ( ໝົດບົດ )
10. ຄູພານັກຮຽນເຮັດແຜນມະໂນພາບໂດຍຖາມນັກຮຽນວ່າເລື່ອງຫຍັງ?ຄູເຮັດແນວໃດ?ນັກຮຽນເຮັດແນວໃດ?ຫຼັງຈາກນັ້ນເປັນແນວໃດ? ( ຄູແຕ້ມໃສ່ກະດານ)




ການວັດ ແລະ ປະເມີນຜົນ

- ການຕອບຄໍາຖາມ ເພື່ອຄູຂຽນໃສ່ແຜນມະໂນພາບ

**ກິດຈະກໍາ: ການອ່ານນິທານ**

ການອ່ານນິທານແມ່ນການອ່ານອອກສຽງໂດຍການໃຊ້ນໍ້າສຽງ, ທ່າທາງປະກອບຕາມຈຸດພິເສດຂອງຕົວລະຄອນ ເພື່ອເຮັດໃຫ້ນັກຮຽນຈື່ຈໍາ ແລະ ເຂົ້າໃຈບົດຮຽນໄດ້ດີຂຶ້ນ ທັງເປັນການກະຕຸ້ນໃຫ້ນັກຮຽນມັກໃນການອ່ານນໍາອີກ.

ຕົວຢ່າງ: ບົດທີ 41 ນິທານ ສາມັກຄີ ແລະ ຊ່ວຍເຫຼືອ

1. ຄູສົນທະນາກ່ຽວກັບຮູບໃນບົດວ່າແມ່ນໃຜ?ເຮັດຫຍັງ? ຢູ່ໃສ? ເຮັດແນວໃດ
2. ຄູໃຫ້ນັກຮຽນອ່ານໃນໃຈເນື້ອໃນບົດຮຽນ 2-3 ນາທີ
3. ຄູຖາມຄໍາທີ່ນັກຮຽນອ່ານບໍ່ໄດ້, ຄູຂຽນຄໍາດັ່ງກ່າວໃສ່ກະດານ
4. ຄູອະທິບາຍຄວາມໝາຍ ແລະ ພານັກຮຽນອ່ານຄໍານັ້ນໆ
5. ຄູອ່ານໃຫ້ນັກຮຽນຟັງໝົດເລື່ອງ 1 ຄັ້ງ
6. ຄູພານັກຮຽນອ່ານໝົດຫ້ອງ1-2 ຄັ້ງ
7. ໃຫ້ນັກຮຽນອ່ານເປັນກຸ່ມ ແລະ ບຸກຄົນ
8. ຄູຕິດຕາມຊ່ວຍເຫຼືອຜູ້ທີ່ອ່ານບໍ່ທັນໄດ້

9. ຄູສະຫຼຸບການອ່ານ ແລະ ອ່ານໃຫ້ນັກຮຽນຟັງຄືນ 1 ເທື່ອ( ໝົດບົດ)

10. ຄູພານັກຮຽນເຮັດແຜນມະໂນພາບໂດຍຖາມນັກຮຽນວ່າເລື່ອງຫຍັງ? ຕົວລະຄອນມີຫຍັງແດ່? ພວກມັນພາກັນໄປໃສ? ເປັນຫຍັງຈຶ່ງກັບມາບໍ່ໄດ້? ພວກມັນນອນຢູ່ໃສ?ຕອນການຄືນມີຫຍັງມາ?ເຫງັນຄິດແນວໃດ? ໄກ່ເວົ້າແນວໃດ? ເຫງັນໄປໃສ?ໝາເຮັດແນວໃດ? ( ຄູແຕ້ມແຜນມະໂນພາບໃສ່ກະດານ )




ການວັດ ແລະ ປະເມີນຜົນ

- ການຕອບຄໍາຖາມເພື່ອຄູຂຽນໃສ່ແຜນມະໂນພາບ

ບົດສອນ

ວິຊາພາສາລາວ ຊັ້ນຮຽນ ປ5

ບົດທີ 39 ເວລາ 3 ຊົ່ວໂມງ

ຫົວບົດ:ລີງກັບແຂ້

I.ຈຸດປະສົງ

- ໃຫ້ນັກຮຽນຕອບຄຳຖາມກ່ຽວກັບເນື້ອໃນບົດຮຽນໄດ້
- ໃຫ້ນັກຮຽນອ່ານຈັບໃຈຄວາມເກັບກຳເນື້ອໃນບົດຮຽນໄດ້
- ໃຫ້ນັກຮຽນສັງລວມເນື້ອໃນສຳຄັນຂອງບົດຮຽນ ແລະ ສາມາດຈຳແນກໄດ້ເຖິງສິ່ງດີ ແລະ ສິ່ງທີ່ບໍ່ດີ

II.ເນື້ອໃນຕົ້ນຕໍ

ເວົ້າເຖິງຜູ້ຕະລະລາຍຈ່າຍ ແລະ ເນລະຄຸນ( ລືມບຸນຄຸນ)ຍ່ອມໄດ້ຮັບໂທດກຳເປັນສິ່ງຕອບແທນ.

III. ສື່ການສອນ

- ຮູບພາບ
- ບົດເລື່ອງ
- ບັດຄຳຖາມ

IV. ປະເມີນຜົນ

- ສັງເກດຈາກການຕອບຄຳຖາມ
- ສັງເກດຈາກການຄົ້ນຄວ້າສົນທະນາພາຍໃນກຸ່ມ
- ສັງເກດຈາກການລາຍງານກຸ່ມ
- ສັງເກດຈາກຄວາມສົນໃຈຂອງນັກຮຽນໃນການຄົ້ນຄວ້າບົດຮຽນ

V. ກິດຈະກຳການຮຽນ-ການສອນ

➢ **ຂັ້ນນຳເຂົ້າສູ່ບົດຮຽນ ( ເວລາ 10ນາທີ )**

- ຄູ ແລະ ນັກຮຽນທຳຄວາມເຄົາລົບເຊິ່ງກັນ ແລະ ກັນ
- ຄູກວດກາຈຳນວນພົນເຕັມ.....ຄົນ, ຂາດຄົນ

• ຄູໄດ້ມີການທົບທວນຄືນບົດຮຽນເກົ່າ

- ຄູຕັ້ງຄຳຖາມ :

1. ນິທານເລື່ອງນົກຊິວະຊິວາສອນໃຫ້ເຮົາຮູ້ຫຍັງແດ່?

- ໃຫ້ນັກຮຽນ 2-3 ຄົນຕອບ
- ຄູຍ້ອງຍໍ
- ຜ່ານການຕອບຂອງນັກຮຽນຄູສະຫຼຸບຄືນ.

• **ລ້ຽວເຂົ້າສູ່ບົດຮຽນໃໝ່**

- ຄູຍົກຮູບພາບ

- ຄູແນະນຳໃຫ້ນັກຮຽນສັງເກດ

  ຄູຕັ້ງຄຳຖາມ:1. ນີ້ແມ່ນຮູບພາບຫຍັງ?

  -ນັກຮຽນຕອບລີງຜູກຄໍແຂ້,

  - ຄຳຖາມທີ2  ພວກລີງກຳລັງເຮັດຫຍັງ?

  - ນັກຮຽນຕອບ

  - ລີງກຳລັງສາມັກຄີກັບຂ້າແຂ້

  - ຄູສະຫຼຸບຄຳຕອບຂອງນັກຮຽນ

➢ **ຂັ້ນສອນບົດໃໝ່**

ໃນການດຳເນີນການສອນບົດໃໝ່ນີ້ແມ່ນໄດ້ມີການປະຕິບັດຕາມກິດຈະກຳທີ່ອາງໄວ້ໃນບົດສອນຄື: ຄູໄດ້ນຳພານັກຮຽນດຳເນີນກິດຈະກຳການຮຽນການສອນຕົວຈິງໃນວິຊາພາສາລາວບົດທີ39ຫົວບົດ: ລີງ ກັບ ແຂ້

- ຄູທົດສອບກ່ອນຮຽນດ້ວຍຄຳຖາມ
  1. ເປັນຫຍັງລີງ ແລະ ແຂ້ຈຶ່ງສະໜິດສະໜົມຮັກແພງກັນ?
  2. ເປັນຫຍັງເມຍແຂ້ຈຶ່ງຢາກກິນຫົວໃຈລີງ?
  3. ຍ້ອນຫຍັງລີງຈຶ່ງບໍ່ຖືກແຂ້ກິນ?
  4. ເປັນຫຍັງລີງຈຶ່ງຖືກກົນອຸບາຍຫຼອກລວງຂອງແຂ້?
  5. ຍ້ອນຫຍັງແຂ້ຈຶ່ງຄິດທໍລະຍົດຕໍ່ເພື່ອນ?
  6. ນິທານເລື່ອງນີ້ສອນໃຫ້ເຮົາຮູ້ຫຍັງແດ່?

  - ນຳເອົາບົດທົດສອບມາກວດພ້ອມໃຫ້ຄະແນນ

- ***ກິດຈະກຳທີ1 ພາກຟັງ-ເວົ້າ ( ເວລາ 15 ນາທີ )***

  ຄູນຳເຂົ້າສູ່ກິດຈະກຳດ້ວຍການອະທິບາຍສົນທະນາບົດຮຽນກັບນັກຮຽນ

- ຄູຍົກຮູບພາບລີງ, ແຂ້ໃຫ້ນັກຮຽນສັງເກດແລ້ວຖາມເວົ້າວ່າ:ພວກຫຼານສັງເກດໃນຮູບນັ້ນເຫັນຫຍັງແດ່?ນັກຮຽນຕອບແຂ້, ລີງ
- ຄູສະຫຼຸບຄືນເພື່ອໃຫ້ນັກຮຽນຈົດເອົາເປັນບົດຮຽນ.

- ***ກິດຈະກຳທີ 2 ພາກອ່ານ -ຂຽນ***

- ຄູອ່ານເນື້ອໃນບົດຮຽນສູ່ນັກຮຽນຟັງ 2 ເທື່ອ
- ຄູໃຫ້ນັກຮຽນອ່ານຮ່ວມກັນໂດຍເນັ້ນໃຫ້ນັກຮຽນເປົ້າໝາຍມີສ່ວນຮ່ວມຫຼາຍ
- ຄູໃຫ້ນັກຮຽນອ່ານໃນໃຈເປັນບຸກຄົນ,ພາຍຫຼັງນັກຮຽນອ່ານແລ້ວ ຄູໃຫ້ນັກຮຽນເວົ້າຄືນກ່ຽວກັບເນື້ອໃນຕົ້ນຕໍຂອງເລື່ອງ
- ຄູອະທິບາຍຄຳສັບທີ່ນັກຮຽນບໍ່ເຂົ້າໃຈ
- ຄູໄດ້ສົນທະນາຕອບຖາມຕາມເນື້ອໃນຂອງບົດຮຽນ
- ຄູໃຫ້ນັກຮຽນເລົ່າເລື່ອງຄືນ
- ຄູຕັ້ງຄຳຖາມ

1. ເປັນຫຍັງລີງ ແລະ ແຂ້ຈຶ່ງສະໜິດສະໜົມຮັກແພງກັນ?
2. ເປັນຫຍັງເມຍແຂ້ຈຶ່ງຢາກກິນຫົວໃຈລີງ?
3. ຍ້ອນຫຍັງລີງຈຶ່ງບໍ່ຖືກແຂ້ກິນ?
4. ເປັນຫຍັງລີງຈຶ່ງຖືກກົນອຸບາຍຫຼອກລວງຂອງແຂ້?
5. ຍ້ອນຫຍັງແຂ້ຈຶ່ງຄິດທໍລະຍົດຕໍ່ເພື່ອນ?

- ຄູໃຫ້ນັກຮຽນຕອບໂດຍເນັ້ນໃສ່ນັກຮຽນເປົ້າໝາຍ
- ຄູຍ້ອງຍໍຊົມເຊີຍ
- ຄູໄດ້ສົນທະນາສັງເກດການຕອບຄໍາຖາມ
- ຄູໄດ້ມີຄໍາຄິດຄໍາເຫັນຕື່ມຕໍ່ການປະກອບຂອງນັກຮຽນທີ່ເຫັນວ່າບາງເນື້ອໃນທີ່ເຫັນວ່າບໍ່ທັນສົມບູນ.

- **ກິດຈະກໍາທີ3 ( ເວລາ 90 ນາທີ )**

ຄູໃຫ້ນັກຮຽນຄົ້ນຄວ້າຄໍາຕອບເປັນກຸ່ມໂດຍຄູແບ່ງນັກຮຽນອອກເປັນ 5 ກຸ່ມ, ກຸ່ມ 4 – 5 ຄົນ.

- ຄູຢາຍບັດຄໍາຖາມໃຫ້ແຕ່ລະກຸ່ມໂດຍຂຽນຄໍາຕອບໃສ່ເຈ້ຍ.

**ກຸ່ມທີ1**

1. ເປັນຫຍັງລີງ ແລະ ແຂ້ຈຶ່ງສະໜິດສະໜົມຮັກແພງກັນ?
2. ເປັນຫຍັງເມຍແຂ້ຈຶ່ງຢາກກິນຫົວໃຈລີງ?
3. ຍ້ອນຫຍັງລີງຈຶ່ງບໍ່ຖືກແຂ້ກິນ?
4. ເປັນຫຍັງລີງຈຶ່ງຖືກກົນອຸບາຍຫຼອກລວງຂອງແຂ້?
5. ຍ້ອນຫຍັງແຂ້ຈຶ່ງຄິດທໍລະຍົດຕໍ່ເພື່ອນ?
6. ນິທານເລື່ອງນີ້ສອນໃຫ້ເຮົາຮູ້ຫຍັງແດ່?

**ກຸ່ມທີ2**

1. ເປັນຫຍັງລີງ ແລະ ແຂ້ຈຶ່ງສະໜິດສະໜົມຮັກແພງກັນ?
2. ເປັນຫຍັງເມຍແຂ້ຈຶ່ງຢາກກິນຫົວໃຈລີງ?
3. ຍ້ອນຫຍັງລີງຈຶ່ງບໍ່ຖືກແຂ້ກິນ?
4. ເປັນຫຍັງລີງຈຶ່ງຖືກກົນອຸບາຍຫຼອກລວງຂອງແຂ້?
5. ຍ້ອນຫຍັງແຂ້ຈຶ່ງຄິດທໍລະຍົດຕໍ່ເພື່ອນ?
6. ນິທານເລື່ອງນີ້ສອນໃຫ້ເຮົາຮູ້ຫຍັງແດ່?

**ກຸ່ມທີ3**

1. ເປັນຫຍັງລີງ ແລະ ແຂ້ຈຶ່ງສະໜິດສະໜົມຮັກແພງກັນ?
2. ເປັນຫຍັງເມຍແຂ້ຈຶ່ງຢາກກິນຫົວໃຈລີງ?
3. ຍ້ອນຫຍັງລີງຈຶ່ງບໍ່ຖືກແຂ້ກິນ?
4. ເປັນຫຍັງລີງຈຶ່ງຖືກກົນອຸບາຍຫຼອກລວງຂອງແຂ້?
5. ຍ້ອນຫຍັງແຂ້ຈຶ່ງຄິດທໍລະຍົດຕໍ່ເພື່ອນ?

6. ນິທານເລື່ອງນີ້ສອນໃຫ້ເຮົາຮູ້ຫຍັງແດ່?

**ກຸ່ມທີ4**

1. ເປັນຫຍັງລີງ ແລະ ແຂ້ຈຶ່ງສະໜິດສະໜົມຮັກແພງກັນ?
2. ເປັນຫຍັງເມຍແຂ້ຈຶ່ງຢາກກິນຫົວໃຈລີງ?
3. ຍ້ອນຫຍັງລີງຈຶ່ງບໍ່ຖືກແຂ້ກິນ?
4. ເປັນຫຍັງລີງຈຶ່ງຖືກກົນອຸບາຍຫຼອກລວງຂອງແຂ້?
5. ຍ້ອນຫຍັງແຂ້ຈຶ່ງຄິດທໍລະຍົດຕໍ່ເພື່ອນ?
6. ນິທານເລື່ອງນີ້ສອນໃຫ້ເຮົາຮູ້ຫຍັງແດ່?

**ກຸ່ມທີ5**

1. ເປັນຫຍັງລີງ ແລະ ແຂ້ຈຶ່ງສະໜິດສະໜົມຮັກແພງກັນ?
2. ເປັນຫຍັງເມຍແຂ້ຈຶ່ງຢາກກິນຫົວໃຈລີງ?
3. ຍ້ອນຫຍັງລີງຈຶ່ງບໍ່ຖືກແຂ້ກິນ?
4. ເປັນຫຍັງລີງຈຶ່ງຖືກກົນອຸບາຍຫຼອກລວງຂອງແຂ້?
5. ຍ້ອນຫຍັງແຂ້ຈຶ່ງຄິດທໍລະຍົດຕໍ່ເພື່ອນ?
6. ນິທານເລື່ອງນີ້ສອນໃຫ້ເຮົາຮູ້ຫຍັງແດ່?

- ຄູຕິດຕາມຊ່ວຍເຫຼືອແຕ່ລະກຸ່ມ
- ໃຫ້ຕ່າງໜ້າກຸ່ມ ແລະ ໃຫ້ນັກຮຽນກຸ່ມເປົ້າໝາຍຂຶ້ນອ່ານຄຳຕອບທີ່ກຸ່ມຕົນຄົ້ນຄວ້າໃຫ້ກຸ່ມອື່ນຟັງ
- ຄູໄດ້ມີຄຳຄິດຄຳເຫັນຕື່ມຕໍ່ການປະກອບຂອງນັກຮຽນທີ່ເຫັນວ່າບາງເນື້ອໃນທີ່ເຫັນວ່າບໍ່ທັນສົມບູນ.
- ຄູແນະນຳນັກຮຽນຈົດເອົາເປັນບົດຮຽນໃສ່ປຶ້ມໃຜລາວ

- **ຄູທົດສອບນັກຮຽນກຸ່ມເປົ້າໝາຍ ຄັ້ງທີ1**

- ຄູໄດ້ນຳເອົາບົດເລື່ອງ ນົກຊີວະຊີວາມາໃຫ້ນັກຮຽນອ່ານ
- ຄູໃຫ້ນັກຮຽນສັງລວມໃຈຄວາມຂອງບົດ
- ຄູເອົາຄຳຖາມໃຫ້ນັກຮຽນຕອບ
  1. ເປັນຫຍັງນາຍານຈຶ່ງປ່ອຍນົກຍາງໄປ?
  2. ນົກຊີວະຊີວາອ້ອນວອນນາຍພານວ່າແນວໃດ?
  3. ນິທານເລື່ອງນີ້ສອນໃຫ້ເຮົາຮູ້ຫຍັງແດ່?
- ຄູກວດບົດກວດກາຂອງນັກຮຽນພ້ອມທັງໃຫ້ຄະແນນ
- ພ້ອມທັງໝາຍບອກບ່ອນທີ່ນັກຮຽນຂຽນຜິດ

- **ຄູທົດສອບນັກຮຽນກຸ່ມເປົ້າໝາຍ ຄັ້ງທີ2**

- **ຄູແນະນຳນັກຮຽນອ່ານເນື້ອໃນບົດຮຽນຄືນບົດທີ39**

**ຄຳຖາມ**

1. **ເນື້ອໃນລວມຂອງນິທານເລື່ອງນີ້ເວົ້າເຖິງຫຍັງ?**
2. **ນິທານເລື່ອງນີ້ສອນໃຫ້ເຮົາຮູ້ຫຍັງແດ່?**

- ຄູກວດປຶດກວດກາຂອງນັກຮຽນພ້ອມທັງໃຫ້ຄະແນນ
- ພ້ອມທັງໝາຍບອກບ່ອນທີ່ນັກຮຽນຂຽນຜິດ

**➢ຂັ້ນສະຫຼຸບ ( ເວລາ 5 ນາທີ )**

- ຄູ ແລະ ນັກຮຽນພ້ອມກັນສະຫຼຸບຄືນເນື້ອໃນບົດຮຽນກ່ຽວກັບເນື້ອໃນບົດຮຽນ.
- ໃຫ້ນັກຮຽນກຸ່ມເປົ້າໝາຍເວົ້າຄືນກ່ຽວກັບເນື້ອໃນຂອງບົດຮຽນ
- ຄູຖາມຄວາມຂ້ອງໃຈຂອງນັກຮຽນ ( ຖ້າມີ )ຄູໃຫ້ນັກຮຽນຈົດເອົາເນື້ອໃສ່ປຶ້ມຂອງໃຜລາວ

**➢ຂັ້ນວັດຜົນ ( ເວລາ 15 ນາທີ)**

ຄູກວດກາດ້ວຍຄຳຖາມ

1. ເປັນຫຍັງລີງ ແລະ ແຂ້ຈຶ່ງສະໜິດສະໜົມຮັກແພງກັນ?
2. ເປັນຫຍັງເມຍແຂ້ຈຶ່ງຢາກກິນຫົວໃຈລີງ?
3. ຍ້ອນຫຍັງລີງຈຶ່ງບໍ່ຖືກແຂ້ກິນ?
4. ເປັນຫຍັງລີງຈຶ່ງຖືກກົນອຸບາຍຫຼອກລວງຂອງແຂ້?
5. ຍ້ອນຫຍັງແຂ້ຈຶ່ງຄິດທໍລະຍົດຕໍ່ເພື່ອນ?
6. ນິທານເລື່ອງນີ້ສອນໃຫ້ເຮົາຮູ້ຫຍັງແດ່?

- ນຳເອົາບົດທົດສອບມາກວດພ້ອມໃຫ້ຄະແນນ

➢ **<u>ຕັກເຕືອນ -ມອບວຽກບ້ານ</u>**

- ພວກນ້ອງພະຍາຍາມຮ່ຳຮຽນຕື່ມ ແລະ ຟັງຄຳອະທິບາຍຂອງຄູໃນເວລາຮຽນ.
- ເວລາພວກນ້ອງເມືອເຮືອນຄວນເບິ່ງບົດຮຽນຕື່ມອີກ ແລະ ຊ່ວຍເຫຼືອວຽກພໍ່ແມ່.

ວັນທີ......................

ຜູ້ສອນ

## ບົດສອນ

ວິຊາ: ພາສາລາວ ຊັ້ນຮຽນ ປ3

ບົດທີ: 42 ( ຕໍ່ ) ເວລາ 45 ນາທີ

ຫົວບົດ: ສ ປ ປ ລາວ

I. ຈຸດປະສົງ
- ໃຫ້ນັກຮຽນສາມາດອ່ານອອກສຽງຄໍາສັບໄດ້ຢ່າງຖືກຕ້ອງ
- ໃຫ້ສາມາດຈໍາແນກອັນໃດແມ່ນຄໍາແລະ ວະລີໄດ້

II. ເນື້ອໃນ
- ອ່ານເປັນຄໍາ ແລະ ວະລີ

III. ສື່ການຮຽນ - ການສອນ
- ປື້ມແບບຮຽນ ແລະ ຄູ່ມືຄູ ພາສາລາວ ປ 3
- ຖົງບັດຄໍາ
- ບັດຄໍາສັບ( ແຂວງ, ເມືອງ, ບ້ານ, ຫົນທາງ, ຫຍຸ້ງຍາກ, ສູງສຸດ, ອັນດີງາມ, ອາຊີບ, ສະຫົງບສຸກ )

IV. ປະເມີນຜົນ
- ສັງເກດການອ່ານອອກສຽງຂອງນັກຮຽນ
- ສັງເກດການອອກກະດານຂອງນັກຮຽນ
- ສັງເກດຄວາມເຂົ້າໃຈຂອງນັກຮຽນ

V. ກິດຈະກໍາການຮຽນ - ການສອນ

**+ ຂັ້ນນໍາ:**
- ຄູ ແລະ ນັກຮຽນທໍາຄວາມເຄົາລົບ
- ກວດກາຈໍານວນຄົນຂາດ. ເຕັມ, ຂາດ
- ທວນຄືນບົດຮຽນເກົ່າ
- ຄູຕັ້ງຄໍາຖາມ
  1. ສ ປ ປ ລາວ ຫຍໍ້ມາຈາກຄໍາໃດ?
  2. ປະຊາຊົນລາວເຮົາສ່ວນຫຼາຍມີອາຊີບເຮັດຫຍັງ?
- ນັກຮຽນຕອບຄໍາຖາມ
- ຄູສະຫຼຸບຄືນຄໍາຕອບຂອງນັກຮຽນ

**+ ຂັ້ນສອນ:**
- ຄູສະເໜີຫົວຂໍ້ທີ່ຈະສອນ

- ຄູຂຽນຫົວຂໍ້ໃສ່ກະດານ
- ບົດທີ: 42  ຫົວບົດ: ສ .ປ. ປ. ລາວ
- ພາກອ່ານເປັນຄຳ ແລະ ວະລີ
- ອ່ານເປັນຄຳ ແລະ ວະລີ
- ຄູຫ້ອຍຖົງບັດຄຳໃສ່ກະດານ
- ຄູເອົາບັດຄຳສັບສຽບໃສ່ຖົງບັດຄຳ
- ຄູໃຫ້ນັກຮຽນອາສາສະໝັກອ່ານກ່ອນ
- ຄູອ່ານຄຳສັບໃຫ້ນັກຮຽນຟັງ 2 – 3 ເທື່ອ
- ຄູໃຫ້ນັກຮຽນອ່ານຕາມຫຼັງຄູ 2 – 3 ເທື່ອ
- ຄູໃຫ້ນັກຮຽນອອກມາອ່ານບັດຄຳສັບຢູ່ກະດານ
- ຄູຊີ້ໃສ່ບັດຄຳສັບໃຫ້ນັກຮຽນອ່ານ 2 – 3 ເທື່ອ
- ຄູເອີ້ນຊື່ນັກຮຽນ ຫຼື ນັກຮຽນອາສາສະໝັກອອກມາເລືອກເອົາຄຳສັບຢູ່ໜ້າໂຕະຄູ ແລ້ວຍົກໃຫ້ໝູ່ເບິ່ງ ແລະ ອ່ານໃຫ້ໝູ່ຟັງພ້ອມ ແລ້ວສຽບໃສາຖົງບັດຄຳ
- ຫຼັງຈາກນັ້ນຄູແນະນຳໃຫ້ນັກຮຽນຮູ້ຄຳສັບອັນໃດແມ່ນຄຳ ແລະ ອັນໃດແມ່ນວະລີ
- ຄຳນາມ: ບ້ານ, ເມືອງ, ແຂວງ.
- ວະລີ: ສະດວກ, ຫົນທາງ, ຫຍຸ້ງຍາກ, ສູງສຸດ, ອັນດີງາມ ແລະ ອາຊີບ
- ຄູ ແລະ ນັກຮຽນສະຫຼຸບການອ່ານຂອງນັກຮຽນແຕ່ລະຄົນ

**+ ຂັ້ນສະຫຼຸບ**

- ຄູສະຫຼຸບບົດຮຽນຄືນທີ່ຮຽນມາ
- ການອ່ານອອກສຽງ, ຄວາມເຂົ້າໃຈໃນການຈຳແນກ, ຄຳ ແລະ ວະລີ
- ຄູຖາມພວກຫຼານເຂົ້າໃຈບໍກັບບົດຮຽນທີ່ຮຽນມາ

**+ ຂັ້ນວັດ ຜົນ**

- ທົດສອບ
- ຄູໃຫ້ນັກຮຽນເປັນຄຳ ແລະ ວະລີເປັນລາຍບຸກຄົນ
- ຄູຕິດຕາມການອ່ານພ້ອມໃຫ້ຄະແນນນັກຮຽນແຕ່ລະຄົນ

+ ຕັກເຕືອນ ແລະ ມອບວຽກບ້ານ

- ຄູແນະນຳນັກເມືອເຮືອນຊ່ວຍວຽກພໍ່ແມ່
- ແນະນຳໃຫ້ອອ່ານບົດຮຽນຄືນ ແລະ ອ່ານບົດຕໍ່ໄປ

ຜູ້ສອນ

# ບົດສອນ

ວິຊາພາສາລາວ ຊັ້ນປ2

ບົດທີ: 41 ເວລາ 2 ຊົ່ວໂມງ

ຫົວບົດ:ສາມັກຄີ ແລະ ຊ່ວຍເຫຼືອ ນາທີ..../..../....

| ຈຸດປະສົງ | ເນື້ອໃນ | ກິດຈະກຳການຮຽນ - ການສອນ | | ເວລາ | ສື່ການສອນ | ປະເມີນຜົນ |
|---|---|---|---|---|---|---|
| | | ກິດຈະກຳຂອງຄູ | ກິດຈະກຳຂອງນັກຮຽນ | | | |
| -ເພື່ອໃຫ້ນັກຮຽນຈື່ບົດຮຽນເກົ່າໄດ້ດີ | ຕອບ ມິດງ່າມຄາບເຫຍື່ອມາຮັງບໍ່ໄດ້ເພາະວ່າຂ້າມນ້ຳບໍ່ໄດ້ | + ຂັ້ນສອນ:<br>-ຄູທຳຄວາມເຄົາລົບນັກຮຽນ<br>-ຄູກວດກາຈຳນວນພົນເຕັມ... ຄົນ, ຂາດ.........ຄົນ.<br>-ສະເໜີແຂກເຂົ້າຮ່ວມ( ຖ້າມີ )<br>+ ທວນຄືນບົດຮຽນເກົ່າ:<br>-ຄູຕັ້ງຄຳຖາມ<br>1. ມິດງ່າມຄາບເຫຍື່ອມາຮັງບໍ່ໄດ້ຍ້ອນຫຍັງ?<br>-ຄູເລັ່ງໃສ່ນັກຮຽນທີ່ເປັນເປົ້າໝາຍ<br>-ສະຫຼຸບການຂຽນຂອງນັກຮຽນຟັງ ( ຖືກຄູຍ້ອງຍໍ - ຜິດຄູແນະນຳ )<br>+ ລ້ຽວເຂົ້າສູ່ບົດຮຽນໃໝ່:<br>ຄູຖາມນັກຮຽນວ່າ: ໃນການຖາມແມ່ນເລັ່ງໃສ່ນັກຮຽນກຸ່ມເປົ້າໝາຍ<br>ພວກຫຼານເຄີຍຊ່ວຍວຽກພໍ່ແມ່ບໍ? | ນັກຮຽນເຄົາລົບຄູ<br>ນັກຮຽນລຸກຂຶ້ນລາຍງານຄົນຂາດ<br><br>ນັກຮຽນນັ່ງຟັງ<br><br>ນັກຮຽນອອກມາຂຽນສະຫຼະ<br><br><br><br>ນັກຮຽນຕອບ<br>ນັກຮຽນຕອບ | 10′ | ບັດຄຳຖາມ | ສັງເກດຈາກການຕອບຄຳຖາມຂອງນັກຮຽນ |

| | | | | | | |
|---|---|---|---|---|---|---|
| | | ຊົ່ວໂມງນີ້ຄູພາພວກຫຼານຮຽນກ່ຽວກັບສາມັກຄີ ແລະ ຊ່ວຍເຫຼືອ | | | | ສັງເກດການ ຕອບຄໍາຖາມ |
| ໃຫ້ນັກຮຽນ ບອກຊື່ຮູບ ຕ່າງໆ ແລະ ເວົ້າ , ຕອບຄໍາຖາມ ໄດ້ | ວິຊາພາສາລາວ<br>ບົດທີ 41<br>ຄວາມສາມັກຄີ ແລະ ຊ່ວຍເຫຼືອ<br><br>ຕອບ: ໄກ່, ໝາ,ເຫງັນ, ໂກນເຫງົ້າໄມ້,ປ່າໄມ້, ຕົ້ນໄມ້ໃຫຍ່<br><br>ຊ່ວຍເຫຼືອໝູ່ເພື່ອນ | + ຂັ້ນສອນ:<br>ຄູແບ່ງກະດານອອກເປັນສອງສ່ວນເທົ່າກັນ<br>ຄູຂຽນຫົວບົດໃສ້ກະດານ.<br>**<u>ກິດຈະກໍາ</u>: 1 ສົນທະນາກ່ຽວກັບຮູບ**ພາບ, ໃນການສົນທະນາຄູໄດ້ເລັງໃສ່ນັກຮຽນກຸ່ມເປົ້າໝາຍໃຫ້ມີສ່ວນຮ່ວມຫຼາຍ<br>ຄູຍົກຮູບພາບໃຫ້ນັກຮຽນສັງເກດ<br>ຄູຖາມນັກຮຽນວ່າ: ນີ້ແມ່ນຮູບຫຍັງ?<br>-ນັກຮຽນເຫັນຫຍັງແດ່ຈາກຮູບພາບນີ້?<br><br>-ເວລານັກຮຽນເຫັນໝູ່ເພື່ອນພົບອັນຕະລາຍຄວນເຮັດແນວໃດ?<br>-ຄູແນະນໍານັກຮຽນເວົ້າເປັນປະໂຫຍກ<br>ຄູສະຫຼຸບຄືນຕໍ່ກັບຄໍາຕອບ | ນັກຮຽນສັງເກດຮູບພາບ<br><br>ນັກຮຽນຕອບ<br><br>ນັກຮຽນຕອບ | 45′ | ຮູບ ພາບ | ສັງເກດການ ຕອບຄໍາຖາມ ຂອງນັກຮຽນ |
| ເພື່ອໃຫ້ ນັກຮຽນອ່ານ ອອກສຽງຄໍາສັບ ແລະ ອ່ານ | | **<u>ກິດຈະກໍາ</u>: 2 ເຝິກອ່ານປະໂຫຍກ**<br>-ຄູແນະນໍາໃຫ້ນັກຮຽນເບິ່ງເນື້ອໃນບົດຫັດອ່ານ<br>- ຄູຂຽນປະໂຫຍກໃສ່ກະດານ<br>-ຄູອ່ານປະໂຫຍກໃຫ້ນັກຮຽນຟັງ 1 – 2 ເທື່ອ<br>-ຄູພານັກຮຽນອ່ານ 2 – 3 ເທື່ອ | ນັກຮຽນຟັງຕິດຕາມການອ່ານຂອງຄູ<br><br>ນັກຮຽນອ່ານຕາມຫຼັງຄູ | | | ສັງເກດການ ຕັ້ງໃຈຟັງຂອງ ນັກຮຽນ |

| | | | | | | |
|---|---|---|---|---|---|---|
| ປະໂຫຍກໄດ້ຖືກຕ້ອງ | - ໄກ່ຜູ້ໂອກໂຕໜຶ່ງແຮກສ່ຽວກັບໝາ<br>- ມື້ໜຶ່ງສອງສ່ຽວຊວນກັນໄປຫາກິນ<br>- ໝາເຂົ້າໄປນອນຢູ່ໂກນເຫງົ້າໄມ້<br>- ໄກ່ບິນຂຶ້ນຢູ່ເທິງງ່າໄມ້ | -ຄູໃຫ້ນັກຮຽນອ່ານເປັນບຸກຄົນ<br>-ຄູຕິດຕາມການອ່ານຂອງນັກຮຽນ<br>-ຄູໃຫ້ນັກຮຽນກຸ່ມເປົ້າໝາຍຕອບ<br>-ຄູຍົກບັດປະໂຫຍກໃຫ້ນັກຮຽນອ່ານ<br>-ຄູຍົກບັດປະໂຫຍກເທື່ອລະບັດຜັນປ່ຽນກັນເຊັ່ນ<br>- ໄກ່ຜູ້ໂອກໂຕໜຶ່ງແຮກສ່ຽວກັບໝາ<br>- ມື້ໜຶ່ງສອງສ່ຽວຊວນກັນໄປຫາກິນ<br>- ໝາເຂົ້າໄປນອນຢູ່ໂກນເຫງົ້າໄມ້<br>- ໄກ່ບິນຂຶ້ນຢູ່ເທິງງ່າໄມ້<br>-ຄູໃຫ້ນັກຮຽນອ່ານໂດຍເນັ້ນໃສ່ນັກຮຽນກຸ່ມເປົ້າໝາຍ ພ້ອມທັງຕິດຕາມການອ່ານຂອງນັກຮຽນແຕ່ລະຄົນ<br>-ຄູສະຫຼຸບຄືນ ແລະ ຄູຕິດຕາມຊ່ວຍເຫຼືອນັກຮຽນກຸ່ມເປົ້າໝາຍ ແລະ ນັກຮຽນຄົນອື່ນ | ນັກຮຽນອ່ານ<br>ນັກຮຽນຕອບ<br>-ນັກຮຽນອ່ານ<br>-ນັກຮຽນອ່ານ<br>ນັກຮຽນຂຽນໃສ່ປຶ້ມຂອງຕົນເອງ | 40′ | ບັດປະໂຫຍກ | ສັງເກດຈາກການອ່ານ ແລະ ຕອບຄຳຖາມ |
| ນັກຮຽນສາມາດສ້າງປະໂຫຍກປາກເປົ່າໄດ້ຢ່າງຖືກຕ້ອງ | | **<u>ກິດຈະກຳທີ</u>: 4 ເຝິກເວົ້າກ່ຽວກັບຮູບພາບ**<br>-ຄູຍົກຮູບພາບໃຫ້ນັກຮຽນສັງເກດ ໃນແຕ່ລະຮູບ<br>-ໃຫ້ນັກຮຽນເວົ້າເປັນລາຍບຸກຄົນ<br>-ຄູໃຫ້ນັກຮຽນເວົ້າເປັນປະໂຫຍກຕາມຮູບພາບ<br>- ຄູຕິດຕາມການສ້າງປະໂຫຍກປາກເປົ່າຕາມຮູບພາບຂອງນັກຮຽນ<br>- ຄູສະຫຼຸບຄືນກ່ຽວກັບການເວົ້າຂອງນັກຮຽນ | ນັກຮຽນສັງເກດ<br>ນັກຮຽນເວົ້າເປັນປະໂຫຍກ | 20 ນາທີ | ຮູບພາບ | ສັງເກດຈາກຄວາມການເວົ້າຂອງນັກຮຽນ |

| | | | | | | |
|---|---|---|---|---|---|---|
| ເພື່ອໃຫ້ນັກຮຽນມີບົດຮຽນໃນປຶ້ມຂຽນຂອງໃຜລາວ | | + **<u>ສະຫຼຸບ</u>**:<br>ຄູ ແລະ ນັກຮຽນພ້ອມກັນສະຫຼຸບບົດຮຽນທີ່ຜ່ານມາ<br>ຄູແນະນຳໃຫ້ນັກຮຽນຈົດເອົາບົດຮຽນໃສ່ປຶ້ມຂຽນ | ນັກຮຽນຈົດເອົາບົດຮຽນ | 10′ | | ສັງເກດນັກຮຽນ |
| ຢາກໃຫ້ນັກຮຽນສາມາດຈື່ບົດຮຽນໄດ້ | | + <u>ວັດປະເມີນ</u>:<br>ຄູໃຫ້ນັກຮຽນກຸ່ມເປົ້າໝາຍອອກມາເລືອກບັດປະໂຫຍກຕິດໃສ່ກະດານພ້ອມທັງອ່ານໃຫ້ໝູ່ໃນຫ້ອງຟັງ<br>ການອ່ານອອກສຽງ ໃຫ້ຖືກຕ້ອງ ແລະ ແຈ່ມແຈ້ງ ( ຖືກຍ້ອງຍໍ - ຜິດຄູແນະນຳຕື່ມ). | -ຄູໃຫ້ນັກຮຽນກຸ່ມເປົ້າໝາຍອອກມາອ່ານ | 10′ | ບັດຄຳ | ສັງເກດການອ່ານຂອງນັກຮຽນ |

ວັນທີ......................

ຜູ້ສອນ

## ບົດສອນ

ວິຊາ: ພາສາລາວ　　　　　　　　　　　　　　　　　　　　　　　　　ເວລາ 90 ນາທີ

ບົດທີ 47　　　　　　　　　　　　　　　　　　　　　　　　　　　ຊັ້ນຮຽນ: ປ3

ຫົວບົດ: ເສືອ ແລະ ງົວ

| ຈຸດປະສົງ | ເນື້ອໃນ | ກິດຈະກຳການຮຽນ-ການສອນ | | ເວລາ | ສື່ການສອນ | ປະເມີນຜົນ |
|---|---|---|---|---|---|---|
| | | ກິດຈະກຳຄູ | ກິດຈະກຳນັກຮຽນ | | | |
| | ຕອບ: ນັບແຕ່ເຮົາເກີດມາແມ່ນອາໃສດຳລົງຊີວິດຢູ່ນຳພໍ່ ແລະ ແມ່ | • ຂັ້ນນຳ<br>- ຄູ ແລະ ນັກຮຽນທຳຄວາມເຄົາລົບເຊິ່ງກັນ ແລະ ກັນ<br>- ຄູກວດກາຈຳນວນພົນເຕັມ.....ຄົນ, ຂາດຄົນ<br>- ຄູໄດ້ມີການທົບທວນຄືນບົດຮຽນເກົ່າ<br>ຄູຕັ້ງຄຳຖາມ :<br>1.ເນື້ອໃນຂອງກອນບາດທີ1 ເວົ້າເຖິງຫຍັງ?<br>- ຄູຍ້ອງຍໍ<br>- ຜ່ານການຕອບຂອງນັກຮຽນຄູສະຫຼຸບຄືນ. | - ນັກຮຽນທຳຄວາມເຄົາລົບຄູ<br>- ນັກຮຽນລາຍງານຄົນຂາດ<br>- ນັກຮຽນຕອບ | 10 ນາທີ | ບັດຄຳຖາມ | ສັງເກດການຕອບຄຳຖາມຂອງນັກຮຽນ |
| | ບົດທີ 47<br>ເສືອ ແລະ ງົວ | ຂັ້ນສອນ<br>-ຄູແບ່ງກະດານອອກເປັນ 2 ສ່ວນ<br>-ຄູຂຽນຫົວບົດໃສ່ກະດານ<br>• ຂັ້ນກຽມ: | -ນັກຮຽນບັນທຶກ | | | |

| | | | | | | |
|---|---|---|---|---|---|---|
| ນັກຮຽນ<br>ຕອບຄຳຖາມ<br>ກ່ຽວກັບເນື້ອໃນ<br>ບົດຮຽນທີ່ໄດ້<br>ອ່ານໄດ້<br><br>ນັກຮຽນສະຫຼຸບ<br>ເນື້ອໃນບົດຮຽນ<br>ໄດ້ | | -ຄູແບ່ງນັກຮຽນອອກເປັນ 4 ກຸ່ມໂດຍມີນັກຮຽນເກັ່ງ, ກາງ ແລະ ນັກຮຽນອ່ອນ<br>- ຄູສົນທະນາກັບນັກຮຽນກ່ຽວກັບຈຳນວນຊື່ສັດໃນບົດຮຽນ ແລະ ເຫດການທີ່ສຳຄັນ<br>• ຂັ້ນກິດຈະກຳກຸ່ມ<br>- ຄູມອບໃຫ້ແຜນວຽກໃຫ້ນັກຮຽນແຕ່ລະກຸ່ມ<br>ກຸ່ມທີ1:<br>1. ແຕ່ໃດໆມາເສືອກັບງົວເປັນແນວໃດ?<br>2. ເມື່ອພົບເສືອງົວແມ່ເຮັດແນວໃດ?<br>3. ເສືອໃຊ້ເລກົນເວົ້າກັບງົວວ່າແນວໃດ?<br>4. ຍ້ອນຫຼົງເຊື່ອເລກົນຂອງເສືອງົວແມ່ລູກອ່ອນເປັນແນວໃດ?<br>5. ໃຫ້ແຕ່ລະກຸ່ມຊ່ວຍກັນສະຫຼຸບໃຈຄວາມສຳຄັນຂອງເນື້ອໃນບົດຮຽນ ຂໍ້ຄິດທີ່ໄດ້ຈາກການອ່ານ ແລະ ການວາງແຜນຂຽນເລື່ອງໃໝ່ຕາມຄວາມສົນໃຈ.<br>ກຸ່ມທີ2<br>1. ແຕ່ໃດໆມາເສືອກັບງົວເປັນແນວໃດ?<br>2. ເມື່ອພົບເສືອງົວແມ່ເຮັດແນວໃດ?<br>3. ເສືອໃຊ້ເລກົນເວົ້າກັບງົວວ່າແນວໃດ?<br>4. ຍ້ອນຫຼົງເຊື່ອເລກົນຂອງເສືອງົວແມ່ລູກອ່ອນເປັນແນວໃດ? | -ນັກຮຽນເຂົ້າກຸ່ມຕາມທີ່ຄູແນະນຳ<br><br>-ນັກຮຽນສົນທະນາກັບຄູ<br><br>-ນັກຮຽນຄົ້ນຄວ້າຫາຄຳຕອບ<br><br>-ນັກຮຽນຄົ້ນຄວ້າຫາຄຳຕອບ | 50<br>ນາທີ | ບັດຄຳຖາມ | ສັງເກດຈາກ<br>ຄວາມ<br>ເອົາໃຈໃສ່<br>ຂອງ<br>ນັກຮຽນ<br><br>ສັງເກດຈາກ<br>ການຄົ້ນຄວ້າ<br>ບົດຮຽນຂອງ<br>ນັກຮຽນພາຍ<br>ໃນກຸ່ມ<br><br>ສັງເກດຈາກ<br>ການຄົ້ນຄວ້າ<br>ບົດຮຽນຂອງ<br>ນັກຮຽນພາຍ<br>ໃນກຸ່ມ |

| | | | | | | |
|---|---|---|---|---|---|---|
| | | 5. ໃຫ້ແຕ່ລະກຸ່ມຊ່ວຍກັນສະຫຼຸບໃຈຄວາມສຳຄັນຂອງເນື້ອໃນບົດຮຽນ ຂໍ້ຄິດທີ່ໄດ້ຈາກການອ່ານ ແລະ ການວາງແຜນຂຽນເລື່ອງໃໝ່ຕາມຄວາມສົນໃຈ.<br>ກຸ່ມທີ3:<br>1. ແຕ່ໃດໆມາເສືອກັບງົວເປັນແນວໃດ?<br>2. ເມື່ອພົບເສືອງົວແມ່ເຮັດແນວໃດ?<br>3. ເສືອໃຊ້ເລກົນເວົ້າກັບງົວວ່າແນວໃດ?<br>4. ຍ້ອນຫຼົງເຊື່ອເລກົນຂອງເສືອງົວແມ່ລູກອ່ອນເປັນແນວໃດ?<br>5. ໃຫ້ແຕ່ລະກຸ່ມຊ່ວຍກັນສະຫຼຸບໃຈຄວາມສຳຄັນຂອງເນື້ອໃນບົດຮຽນ ຂໍ້ຄິດທີ່ໄດ້ຈາກການອ່ານ ແລະ ການວາງແຜນຂຽນເລື່ອງໃໝ່ຕາມຄວາມສົນໃຈ.<br>ກຸ່ມທີ4:<br>1. ແຕ່ໃດໆມາເສືອກັບງົວເປັນແນວໃດ?<br>2. ເມື່ອພົບເສືອງົວແມ່ເຮັດແນວໃດ?<br>3. ເສືອໃຊ້ເລກົນເວົ້າກັບງົວວ່າແນວໃດ?<br>4. ຍ້ອນຫຼົງເຊື່ອເລກົນຂອງເສືອງົວແມ່ລູກອ່ອນເປັນແນວໃດ?<br>5. ໃຫ້ແຕ່ລະກຸ່ມຊ່ວຍກັນສະຫຼຸບໃຈຄວາມສຳຄັນຂອງເນື້ອໃນບົດຮຽນ ຂໍ້ຄິດທີ່ໄດ້ຈາກການ | -ນັກຮຽນຄົ້ນຄວ້າຫາຄຳຕອບ<br><br><br><br><br><br><br>-ນັກຮຽນຄົ້ນຄວ້າຫາຄຳຕອບ | | | |

| | | | | | | |
|---|---|---|---|---|---|---|
| | | ອ່ານ ແລະ ການວາງແຜນຂຽນເລື່ອງໃໝ່ຕາມຄວາມສົນໃຈ.<br>-ຄູຕິດຕາມການຄົ້ນຄວ້າຂອງນັກຮຽນແຕ່ລະກຸ່ມ | | | | |
| ເພື່ອໃຫ້ນັກຮຽນກຳໄດ້ເນື້ອໃນບົດຮຽນໄດ້ | | • **ຂັ້ນສະຫຼຸບ**<br>- ຄູ ແລະ ນັກຮຽນພ້ອມກັນສະຫຼຸບຄືນເນື້ອໃນບົດຮຽນ<br>- ໃຫ້ນັກຮຽນກຸ່ມເປົ້າໝາຍເວົ້າຄືນກ່ຽວກັບເນື້ອໃນບົດຮຽນ<br>- ຄູຖາມຄວາມຂ້ອງໃຈຂອງນັກຮຽນ ( ຖ້າມີ )ຄູໃຫ້ນັກຮຽນຈົດເອົາເນື້ອໃສ່ປຶ້ມຂອງໃຜລາວ | -ນັກຮຽນບັນທຶກ<br>-ນັກຮຽນເວົ້າຄືນ | 5 ນາທີ | | -ສັງເກດຈາກຄວາມເຂົ້າໃຈຂອງນັກຮຽນ |
| | | • **ຂັ້ນວັດຜົນ**<br>ຄູທົດສອບນັກຮຽນ<br>1. ແຕ່ໃດໆມາເສືອກັບງົວເປັນແນວໃດ?<br>2. ເມື່ອພົບເສືອງົວແມ່ເຮັດແນວໃດ?<br>3. ເສືອໃຊ້ເລກົນເວົ້າກັບງົວວ່າແນວໃດ?<br>4. ຍ້ອນຫຼົງເຊື່ອເລກົນຂອງເສືອງົວແມ່ລູກອ່ອນເປັນແນວໃດ?<br>- ນຳເອົາບົດທົດສອບມາກວດພ້ອມໃຫ້ຄະແນນ ແລະ ແນະນຳຄືນບ່ອນນັກຮຽນຂຽນຄຳສັບຍັງບໍ່ທັນຖືກຕ້ອງ, ເໝາະສົມ.<br>➢ **<u>ຕັກເຕືອນ -ມອບວຽກບ້ານ</u>** | -ນັກຮຽນທົດສອບຕົວຈິງ | 25 ນາທີ | ບັດຄຳຖາມ | -ສັງເກດຈາກບົດທົດສອບ |

| | | | | | | |
|---|---|---|---|---|---|---|
| | | - ພວກນ້ອງພະຍາຍາມຮໍ່າຮຽນຕື່ມ ແລະ ຟັງຄໍາອະທິບາຍຂອງຄູໃນເວລາຮຽນ.<br>- ເວລາພວກນ້ອງເມືອເຮືອນຄວນເບິ່ງປຶດຮຽນຕື່ມອີກ ແລະ ຊ່ວຍເຫຼືອວຽກພໍ່ແມ່. | | | | |

ວັນທີ......................

ຜູ້ສອນ

ບົດສອນ

ວິຊາພາສາລາວ ຊັ້ນຮຽນ ປ2

ບົດທີ: 41 ( ຕໍ່ ) ເວລາ 45 ນາທີ

ຫົວບົດ:ຄວາມສາມັກຄີ ແລະ ຄວາມຊ່ວຍເຫຼືອກັນ

| ຈຸດປະສົງ | ເນື້ອໃນທີ່ຈະສອນ | ກິດຈະກຳການຮຽນ-ການສອນ | | ເວລາ | ສື່ການສອນ | ປະເມີນຜົນ |
|---|---|---|---|---|---|---|
| ເພື່ອທົບທວນຄວາມຈື່ຈຳຂອງນັກຮຽນ | ຕອບ: ໄກ່ ແລະ ໝາຊວນກັນໄປຫາກິນຢູ່ປ່າ | • ຂັ້ນນຳ<br>- ຄູເຄົາລົບນັກຮຽນ<br>- ຄູກວດກາຈຳນວນພົນເຕັມ.....ຄົນ, ຂາດ......ຄົນ.<br>- ສະເໜີແຂກເຂົ້າຮ່ວມ( ຖ້າມີ )<br>- ທວນຄືນບົດຮຽນເກົ່າດ້ວຍຄຳຖາມ<br>1. ໄກ່ ແລະ ໝາໄປນອນຢູ່ໃສ?<br>- ຄູແນະນຳນັກຮຽນຕອບ<br>- ຄູສະຫຼູບຄຳຕອບຂອງນັກຮຽນ<br>- ຄູຊົມເຊີຍນັກຮຽນຕອບຖືກ<br>- ຄູແນະນຳນັກຮຽນຕອບຜິດ | -ນັກຮຽນເຄົາລົບຄູ<br><br>-ນັກຮຽນຕອບ | 5ນາທີ | ບັດຄຳຖາມ | ສັງເກດຈາກການຕອບຄຳຖາມຂອງນັກຮຽນ |
| | ວິຊາ: ພາສາລາວ<br>ບົດທີ: 41 ( ຕໍ່ )<br>ຄວາມສາມັກຄີ ແລະ ຊ່ວຍເຫຼືອກັນ | • ຂັ້ນສອນ<br>- ຄູແບ່ງກະດານອອກເປັນສອງສ່ວນ<br>- ຄູຂຽນຫົວບົດໃໝ່ໃສ່ກະດານ<br>➢ ກິດຈະກຳທີ1 ເລົ່າເລື່ອງຄືນຕາມຮູບພາບ | | | | |

| | | | | | | |
|---|---|---|---|---|---|---|
| ໃຫ້ນັກຮຽນ<br>ເລົ່າເລື່ອງຄືນ<br>ຕາມຮູບພາບ<br>ໄດ້ | • ເລົ່າເລື່ອງຄືນ<br>ຕາມຮູບ<br><br>ຮູບພາບທີ1<br>ແຕ່ກ່ອນມີໄກ່ຜູ້ໂອກໂຕ<br>ໜຶ່ງແຮກສ່ຽວກັບໝາ.ມື້<br>ໜຶ່ງສອງສ່ຽວຊວນກັນໄປ<br>ກາກິນຢູ່ປ່າ<br>ຮູບທີ2 ພວກມັນເມົາແຕ່<br>ຊອກຫາກິນໄປເລື້ອຍໆ<br>ຈົນຄໍ່າເລີຍກັບເມືອເຮືອນ<br>ບໍ່ໄດ້ຈຶ່ງພາກັນຊອກຫາ<br>ບ່ອນນອນ<br>ຮູບທີ3 ໝາພາເຂົ້າໄປ<br>ນອນຢູ່ໂກນເຫງົ້າໄມ້<br>ສ່ວນໄກ່ບິນຂຶ້ນໄປນອນ<br>ຢູ່ເທິງງ່າໄມ້ | - ຄູແນະນຳໃຫ້ນັກຮຽນສັງເກດຮູບພາບ<br>ໃນປຶ້ມແບບຮຽນ<br>- ຄູເລົ່າເລື່ອງຕາມຮູບພາບໃນແຕ່ລະຮູບ<br>ຄືຮູບທີ1-4<br>- ຄູແນະນຳໃຫ້ນັກຮຽນສັງເກດ<br>- ຄູຖາມຄືນຂໍ້ສົນໃຈຂອງນັກຮຽນ<br>- ຄູແນະນຳວິທີເລົ່າເລື່ອງຕາມຮູບໂດຍ<br>ໃຫ້ມີ<br>ການເລົ່າຕໍ່ເນື່ອງກັນແຕ່ຮູບທີ1- 4<br>- ຄູແບ່ງນັກຮຽນອອກເປັນກຸ່ມ 4 ກຸ່ມ<br>, ກຸ່ມລະ4 ຄົນ<br>- ຄູຢາຍຮູບພາບໃຫ້ແຕ່ລະກຸ່ມ<br>ກຸ່ມທີ1 ແມ່ນຮູບພາບທີ1<br><br>ກຸ່ມທີ2 ແມ່ນຮູບພາບທີ2<br><br>ກຸ່ມທີ3 ແມ່ນຮູບພາບທີ3 | -ນັກຮຽນສັງເກດຮູບ<br>ພາບ<br><br>-ນັກຮຽນຕິດຕາມ<br><br>-ນັກຮຽນຕິດຕາມ<br>ການແນະນຳຂອງຄູ<br>-ນັກຮຽນປະຕິບັດ<br>ຕາມຄູແນະນຳ<br><br>-ນັກຮຽນແຕ່ລະກຸ່ມ<br>ຄົ້ນຄວ້າ<br><br>-ນັກຮຽນແຕ່ລະກຸ່ມ<br>ຂຶ້ນລາຍງານ | 35<br>ນາທີ | ຮູບພາບ<br><br>ຮູບພາບ | ສັງເກດຈາກ<br>ຄວາມສົນໃຈ<br>ຂອງນັກຮຽນ<br><br>ສັງເກດຈາກ<br>ການຄົ້ນຄວ້າ<br>ເປັນກຸ່ມ<br><br>ສັງເກດ<br>ຈາກການລາຍ<br>ງານ |

| | | | | | | |
|---|---|---|---|---|---|---|
| | ຮູບທີ4: ກາງຄືນເຫງັນອອກມາຊອກກິນໄກ່ ມັນຄິດຢາກກິນເລີຍໃຊ້ເລ່ລ່ຽມຫຼອກເອົາ. ໄກ່ຮູ້ກົນອຸບາຍກ່ອນຈຶ່ງໄປບອກສ່ຽວຂອງຕົນທີ່ນອນຢູ່ໂກນເຫງົ້າໄມ້ທັນໃດນັ້ນ ໝາໂດດຄາບຄໍເຫງັນທັນທີ | ກຸ່ມທີ4 ແມ່ນຮູບພາບທີ4<br>- ຄູຕິດຕາມແລະ ຊ່ວຍເຫຼືອນັກຮຽນແຕ່ລະກຸ່ມ<br>- ເມື່ອນັກຮຽນຄົ້ນຄວ້າສຳເລັດຄູແນະນຳຕາງໜ້າກຸ່ມຂຶ້ນລາຍງານ<br>- ຄູແນະນຳນັກຮຽນກຸ່ມອື່ນຕິດຕາມການລາຍງານ<br>- ຄູສະຫຼຸບຄືນການຂຶ້ນລາຍງານການເລົ່າເລື່ອງຂອງນັກຮຽນແຕ່ລະກຸ່ມ<br>- ຄູແນະນຳນັກຮຽນຈົດບັນທຶກເອົາເປັນບົດຮຽນ<br>• ຂັ້ນສະຫຼຸບ<br>- ຄູສະຫຼຸບຄືນດ້ວຍການເລົ່າເລື່ອງແຕ່ຮູບທີ1-4 ໃຫ້ນັກຮຽນຟັງ<br>- ຄູຕາມຂໍ້ສົນໃຈຂອງນັກຮຽນ<br>• ຂັ້ນວັດຜົນ<br>- ຄູໃຫ້ນັກຮຽນອອກມາເລົ່າເລື່ອງຕາມຮູບພາບເປັນລາຍບຸກຄົນ | -ນັກຮຽນຕິດຕາມການລາຍງານ<br>-ນັກຮຽນຕິດຕາມຟັງ<br>-ນັກຮຽນຕິດຕາມ ແລະ ບັນທຶກ<br>-ນັກຮຽນປະຕິບັດຕາມຄູແນະນຳ | 5 ນາທີ<br>5 ນາທີ | | ສັງເກດຈາກຄວາມສົນໃຈ<br>ສັງເກດຈາກການຕັ້ງໃຈຟັງ |

ວັນທີ........

ຜູ້ສອນ

ບົດສອນ

ວິຊາພາສາລາວ ຊັ້ນປ1

ບົດທີ: 35 ເວລາ 4 ຊົ່ວໂມງ

ຫົວບົດ: ພະຍັນຊະນະ ພ ຟ ວັນທີ..../..../....

| ຈຸດປະສົງ | ເນື້ອໃນ | ກິດຈະກຳການຮຽນ - ການສອນ | | ເວລາ | ການສື່ສານ | ປະເມີນຜົນ |
|---|---|---|---|---|---|---|
| | | ກິດຈະກຳຂອງຄູ | ກິດຈະກຳຂອງນັກຮຽນ | | | |
| -ເພື່ອໃຫ້ນັກຮຽນຈື່ບົດຮຽນເກົ່າໄດ້ດີ | ບັດ ພະຍັນຊະນະ | + ຂັ້ນສອນ:<br>ຄູທຳຄວາມເຄົາລົບນັກຮຽນ<br>ຄູກວດກາຈຳນວນພົນເຕັມ... ຄົນ, ຂາດ.........ຄົນ.<br>ສະເໜີແຂກເຂົ້າຮ່ວມ( ຖ້າມີ )<br>+ ທວນຄືນບົດຮຽນເກົ່າ:<br>-ຄູຍົກບັດຄຳສັບ ເຊີ, ເຜີ ຂຶ້ນໃຫ້ນັກຮຽນອ່ານ<br>-ຄູເລັງໃສ່ນັກຮຽນທີ່ເປັນເປົ້າໝາຍ<br>-ສະຫຼູບການຂຽນຂອງນັກຮຽນຟັງ ( ຖືກຄູຍ້ອງຍໍ - ຜິດຄູແນະນຳ )<br>+ ລ້ຽວເຂົ້າສູ່ບົດຮຽນໃໝ່:<br>ຄູຖາມນັກຮຽນວ່າ: ໃນການຖາມແມ່ນເລັງໃສ່ນັກຮຽນກຸ່ມເປົ້າໝາຍ<br>ພວກຫຼານເຄີຍເຫັນໝາກກາເຟບໍ?<br>ໝາກກາເຟປະກອບດ້ວຍພະຍັນຊະນະຫຍັງ? | ນັກຮຽນເຄົາລົບຄູ<br>ນັກຮຽນລຸກຂຶ້ນລາຍງານຄົນຂາດ<br>ນັກຮຽນນັ່ງຟັງ<br>ນັກຮຽນອອກມາຂຽນສະຫຼະ<br>ນັກຮຽນຕອບ<br>ນັກຮຽນຕອບ | 10′ | ບັດຄຳຖາມ<br>ບັດ ພະຍັນ ຊະນະ | ສັງເກດຈາກການຕອບຄຳຖາມຂອງນັກຮຽນ |

| | | | | | | |
|---|---|---|---|---|---|---|
| | | ຊົ່ວໂມງນີ້ຄູພາພວກຫຼານຮຽນກ່ຽວກັບພະຍັນຊະນະ<br>ພ, ຟ | | | | ສັງເກດການ<br>ຕອບຄຳຖາມ |
| ໃຫ້ນັກຮຽນ<br>ບອກຊື່ຮູບຕ່າງໆ<br>ແລະ ເວົ້າ,<br>ຕອບຄຳຖາມໄດ້ | ວິຊາພາສາລາວ<br>ບົດທີ 35<br>ພ, ຟ | + ຂັ້ນສອນ:<br>ຄູແບ່ງກະດານອອກເປັນສອງສ່ວນເທົ່າກັນ<br>ຄູຂຽນຫົວບົດໃສ່ກະດານ.<br>**<u>ກິດຈະກຳ</u>: 1 ສົນທະນາກ່ຽວກັບຮູບ**ພາບ, ໃນການສົນທະນາຄູໄດ້ເລັງໃສ່ນັກຮຽນກຸ່ມເປົ້າໝາຍໃຫ້ມີສ່ວນຮ່ວມຫຼາຍ<br>ຄູຍົກຮູບພາບໃຫ້ນັກຮຽນສັງເກດ<br>ຄູຖາມນັກຮຽນວ່າ: ນີ້ແມ່ນຮູບຫຍັງ?<br>-ຢູ່ເທິງພູມີຫຍັງ?<br>-ເພິ່ນໃຊ້ການເຟເຮັດຫຍັງ?<br>-ຄູແນະນຳນັກຮຽນເວົ້າເປັນປະໂຫຍກ<br>ຄູສະຫຼຸບຄືນຕໍ່ກັບຄຳຕອບ | ນັກຮຽນສັງເກດຮູບພາບ<br><br>ນັກຮຽນຕອບ<br><br>ນັກຮຽນຕອບ | 45′ | ຮູບ<br>ພາບ | ສັງເກດການ<br>ຕອບຄຳຖາມຂອງ<br>ນັກຮຽນ |
| ເພື່ອໃຫ້ນັກຮຽນ<br>ອ່ານອອກສຽງ<br>ພະຍັນຊະນະຜ<br>ຟ ແລະ ເວົ້າຄຳ<br>ສັບອື່ນທີ່ມີ | | **<u>ກິດຈະກຳ</u>: 2 ເຝິກອ່ານຄຳສັບ**<br>ຄູແນະນຳໃຫ້ນັກຮຽນເບິ່ງເນື້ອໃນບົດຫັດອ່ານ<br>ຄູອ່ານເນື້ອໃນໃຫ້ນັກຮຽນຟັງ 1 – 2 ເທື່ອ<br>ຄູພານັກຮຽນອ່ານ 2 – 3 ເທື່ອ<br>ຄູແນະນຳໃຫ້ນັກຮຽນອ່ານເປັນກຸ່ມ<br>ຄູໃຫ້ນັກຮຽນອ່ານເປັນບຸກຄົນ<br>ຄູຕິດຕາມການອ່ານຂອງນັກຮຽນ | ນັກຮຽນຟັງຕິດຕາມການອ່ານຂອງຄູ<br><br>ນັກຮຽນອ່ານຕາມຫຼັງຄູ<br><br>ນັກຮຽນອ່ານ<br><br>ນັກຮຽນຕອບ | 45′ | | ສັງເກດການຕັ້ງໃຈ<br>ຟັງຂອງນັກຮຽນ |

| | | | | | | |
|---|---|---|---|---|---|---|
| ພະຍັນຊະນະຜ ຟ ໄດ້ | ພ , ຟ ແລະ ຄຳສັບ ພູຝາ, ກາເຟ, ພໍດີ, ສີຟ້າ, ໄຟ, ຟອຍ ແພ | ຄູໃຫ້ນັກຮຽນກຸ່ມເປົ້າໝາຍຕອບ<br>-ຄູຍົກບັດພະຍັນຊະນະ ພ, ຟ ໃຫ້ນັກຮຽນອ່ານ<br><br>-ຄູຍົກບັດຄຳສັບເທື່ອລະຄຳສັບຜົນປ່ຽນກັນເຊັ່ນ ພູຝາ, ກາເຟ, ພໍດີ, ສີຟ້າ, ໄຟ, ຟອຍ, ແພ<br>-ຄູໃຫ້ນັກຮຽນອ່ານໂດຍເນັ້ນໃສ່ນັກຮຽນກຸ່ມເປົ້າໝາຍ ພ້ອມທັງຕິດຕາມການອ່ານຂອງນັກຮຽນແຕ່ລະຄົນ<br>-ຄູສະຫຼຸບຄືນດ້ວຍການຖາມວ່າ: ພູຝາ, ກາເຟ, ພໍດີ, ສີຟ້າ, ໄຟ, ຟອຍ ມີສຽງສະຫຼະຫຍັງ ແລະ ພະຍັນຊະນະຫຍັງ ຄວາມໝາຍຕ່າງກັນແນວໃດ?<br>ຄູຕິດຕາມຊ່ວຍເຫຼືອນັກຮຽນກຸ່ມເປົ້າໝາຍ ແລະ ນັກຮຽນຄົນອື່ນ | -ນັກຮຽນອ່ານ<br>-ນັກຮຽນອ່ານ<br><br><br><br>ນັກຮຽນຂຽນໃສ່ປຶ້ມຂອງຕົນເອງ | 45′ | ບັດ ພະຍັນ ຊະນະ<br><br>ບັດຄຳ ສັບ | ສັງເກດຈາກການ ອ່ານ ແລະ ຕອບຄຳຖາມ |
| ໃຫ້ນັກຮຽນ ບອກຊື່ຕ່າງໆ ແລະ ຖອດສຽງ ສະຫຼະ, ພະຍັນຊະນະ ແລະ ວັນລະຍຸດ ຈາກຊື່ຮູບບັດໄດ້ | ພູຝາ, ກາເຟ, ພໍດີ, ສີຟ້າ | **<u>ກິດຈະກຳທີ</u>: 4 ເຝິກເວົ້າກ່ຽວກັບຮູບພາບ**<br>ຄູຍົກຮູບພາບໃຫ້ນັກຮຽນສັງເກດ ໃນແຕ່ລະຮູບ<br>ຄູຖາມນັກຮຽນວ່າ: ອັນນີ້ແມ່ນຮູບຫຍັງ?<br>ຄູແນະນຳໃຫ້ນັກຮຽນຕອບຕາມຄວາມເຂົ້າໃຈ<br>ຄູຕິດຕາມການຕອບຂອງນັກຮຽນ<br>ຄູສະຫຼຸບຄືນກ່ຽວກັບການເວົ້າຂອງນັກຮຽນ<br>**ເຝິກອ່ານຂໍ້ຄວາມ**<br>ຄູແນະນຳໃຫ້ນັກຮຽນເບິ່ງເນື້ອໃນຫົດອ່ານ | ນັກຮຽນສັງເກດ<br>ນັກຮຽນຕອບ<br><br><br>ນັກຮຽນຕິດຕາມ<br>ນັກຮຽນອອກມາອ່ານ | 45′ | ຮູບ ພາບ<br><br><br>ບັດຄຳ ສັບ | ສັງເກດຈາກການ ບອກຊື່ຮູບ ແລະ ການຖອດສຽງ ພະຍັນຊະນະພ, ຟ<br><br>ສັງເກດຈາກການ ອ່ານຂອງນັກຮຽນ |

| | | | | | | |
|---|---|---|---|---|---|---|
| ໃຫ້ນັກຮຽນອ່ານ ແຕ່ລະຄຳ ອອກສຽງ ພະຍັນຊະນະພ ,ຟ ໄດ້ | | ກ່ອນການອ່ານຄູໄດ້ມີການແນະນຳຄື: ການອ່ານພະຍັນຊະນະ ພ , ຟ ແລະ ຄຳສັບ ພູຝາ, ກາເຟ, ພໍດີ, ສີຟ້າ, ໄຟ, ຟອຍ ແພ ແຕ່ລະຄຳຕ້ອງອອກສຽງພ້ອມກັນໃຫ້ແຈ່ມແຈ້ງ<br>ການອ່ານຂໍ້ຄວາມຕ້ອງເປັ່ງສຽງຖືກຕ້ອງຕາມວັກຕອນ<br>ຄູອ່ານໃຫ້ນັກຮຽນຟັງ<br>ຄູໃຫ້ນັກຮຽນອ່ານ<br>ຄູໃຫ້ນັກຮຽນອອກມາອ່ານເປັນລາຍບຸກຄົນຢູ່ກະດານ<br>ຄູໃຫ້ນັກຮຽນກຸ່ມເປົ້າໝາຍອອກມາອ່ານ<br>ຄູຕິດຕາມການອ່ານຂອງນັກຮຽນແຕ່ລະຄົນ<br>ຄູສະຫຼຸບການອ່ານຂອງນັກຮຽນ | ນັກຮຽນສັງເກດ<br><br>ນັກຮຽນລົງມືປະຕິບັດ | | | ແຕ່ລະຄົນ ອອກສຽງ ພະຍັນຊະນະພ, ຟຖືກ ຫຼື ບໍ |
| ໃຫ້ນັກຮຽນ ບອກຊື່ຮູບທີ່ຕົນເອງແຕ້ມ ໃຫ້ໝູ່ເພື່ອນໃນຫ້ອງຟັງໄດ້ | | <u>**ກິດຈະກຳທີ: 5 ແຕ້ມຮູບ ແລະ ເວົ້າຄືນຕາມຮູບແຕ້ມ**</u><br>ຄູແນະນຳໃຫ້ນັກຮຽນເບິ່ງຮູບທ້າຍບົດຮຽນ<br>ສົນທະນາກັບນັກຮຽນກ່ຽວກັບຮູບໂດຍເນັ້ນໃສ່ພະຍັນຊະນະ ພ, ຟ<br>ຄູແນະນຳໃຫ້ນັກຮຽນແຕ້ມຮູບຕາມໃຈໂດຍເນັ້ນໃສ່ພະຍັນຊະນະ ພ, ຟ<br>ຫຼັງຈາກນັກຮຽນແຕ້ມສຳເລັດ<br>ຄູໃຫ້ນັກຮຽນອອກມາສະເໜີຊື່ຕົນເອງ ແລະ ເວົ້າກ່ຽວກັບຮູບທີ່ຕົນເອງແຕ້ມຢູ່ກະດານ<br>ຄູຖາມນັກຮຽນກຸ່ມເປົ້າໝາຍຄຳວ່າ:<br>ແພ ມີສຽງພະຍັນຊະນະຫຍັງ? ສະຫຼະຫຍັງ? | ນັກຮຽນອອກມາລາຍງານ<br><br>ນັກຮຽນຕອບ<br><br>ນັກຮຽນຕິດຕາມ | 45′ | | ສັງເກດຈາກການບອກສື່ຄວາມໝາຍຂອງການແຕ້ມ |

| | | | | | | |
|---|---|---|---|---|---|---|
| | | ກາເຟ ມີສຽງພະຍັນຊະນະຫຍັງ?ສະລະຫຍັງ?<br>ຄູຕິດຕາມການເວົ້າ ແລະ ການຕອບຂອງນັກຮຽນ<br>ຄູສະຫຼຸບຄືນ | | | | |
| ເພື່ອໃຫ້ນັກຮຽນມີບົດຮຽນໃນປື້ມຂຽນຂອງໃຜລາວ | | + **<u>ສະຫຼຸບ</u>**:<br>ຄູ ແລະ ນັກຮຽນພ້ອມກັນສະຫຼຸບບົດຮຽນທີ່ຜ່ານມາ<br>ຄູແນະນຳໃຫ້ນັກຮຽນຈົດເອົາບົດຮຽນໃສ່ປື້ມຂຽນ | ນັກຮຽນຈົດເອົາບົດຮຽນ | 10′ | | ສັງເກດນັກຮຽນ |
| ຢາກໃຫ້ນັກຮຽນສາມາດຈື່ບົດຮຽນໄດ້ | | + <u>ວັດປະເມີນ</u>:<br>ຄູໃຫ້ນັກຮຽນກຸ່ມເປົ້າໝາຍອອກມາເລືອກຄຳສັບທີ່ວ່າ: ພູຝາ, ກາເຟ , ຟອຍ, ໄຟ, ແພ ,ສີຟ້າ, ພໍດີ ຕິດໃສ່ກະດານພ້ອມທັງອ່ານໃຫ້ໝູ່ໃນຫ້ອງຟັງ<br>ການອ່ານອອກສຽງພະຍັນຊະນະ ພ, ຟ ໃຫ້ຖືກຕ້ອງ ແລະ ແຈ່ມແຈ້ງ ( ຖືກຍ້ອງຍໍ - ຜິດຄູແນະນຳຕື່ມ). | -ຄູໃຫ້ນັກຮຽນກຸ່ມເປົ້າໝາຍອອກມາອ່ານ | 10′ | ບັດຄຳ | ສັງເກດການອ່ານຂອງນັກຮຽນ |

ວັນທີ......................

ຜູ້ສອນ

ບົດສອນ

ວັນ ຈັນ .ວັນທີ 9 ເດືອນ 1 ປີ 2o17

ວິຊາ ພາສາລາວ — ຊັ້ນຮຽນ ປ.5

ບົດທີ 22 — ເວລາ 45 ນາທີ

ຊັບພະຍາກອນປ່າໄມ້ — ສອນໂດຍ: ທ້າວ ພອນວິໄລ ໄຊອຸດົມ

## I. ຈຸດປະສົງ:

ໃຫ້ນັກຮຽນສາມາດ:

- ສົນທະນາກ່ຽວກັບຮູບໃນບົດ ແລະ ເລົ່າເລື່ອງຕາມບົດທີ່ອ່ານແລ້ວໄດ້
- ອ່ານຈັບໃຈຄວາມເພື່ອເກັບກຳເນື້ອໃນຂອງບົດ ແລະ ຕອບຄຳຖາມໄດ້
- ອ່ານອອກສຽງ,ປົງສຽງຖືກວັກຕອນ,ແຈ່ມແຈ້ງ ແລະ ລ່ຽນໄຫຼ
- ອ່ານປະກອບທ່າທາງ,ສຽງຄ່ອຍ-ແຮງທີ່ງ່າຍດາຍໄດ້
- ອ່ານເນື້ອໃນຄວາມໝາຍວິທີພັນລະນາພາບ ແລະ ໂຄງຮ່າງຂອງບົດພັນລະນາທັດສະນີຍະພາບໄດ້
- ເລົ່າເລື່ອງຄືນຕາມທີ່ຮຽນມາແລ້ວໄດ້
- ຂຽນບົດພັນລະນາກ່ຽວກັບພາບພູຜາປ່າດົງ ຫຼື ພາຍໃນທ້ອງຖິ່ນຂອງຕົນໄດ້ຢ່າງຖືກຕ້ອງ

## II. ເນື້ອໃນລວມ:

ເວົ້າເຖິງຄວາມອຸດົມສົມບູນ,ຄຸນປະໂຫຍດຂອງຊັບພະຍາກອນປ່າໄມ້ທີ່ມີຕໍ່ທຸກສິ່ງທີ່ມີຊີວິດ ແລະ ການປົກປັກຮັກສາຊັບພະຍາກອນປ່າໄມ້

## III. ການພົວພັນບົດຮຽນທ່ານມາ:

ບົດທີ 15 ແມ່ນ້ຳລຳເຊໃນປະເທດເຮົາ; ບົດທີ 19 ໄພນ້ຳຖ້ວມ; ບົດທີ 22 ຊັບພະຍາກອນປ່າໄມ້

## IV. ວິທີສອນ:

ນຳໃຊ້ວິທີສອນແບບອະທິບາຍ ໂດຍເນັ້ນຂະບວນການກຸ່ມຍ່ອຍ

## V. ເຕັກນິກການສອນ:

| ຈຸດປະສົງ | ເນື້ອໃນ | ກິດຈະກຳການຮຽນ-ການສອນ | | ເວລາ | ສື່ການສອນ | ປະເມີນ |
|---|---|---|---|---|---|---|
| | | ກິດຈະກຳຄູ | ກິດຈະກຳນັກຮຽນ | | | |
| ໃຫ້ນັກຮຽນເປັນຄວາມເປັນລະບຽບ | | ➢ **ຂັ້ນນຳ**<br>-ຄູທຳຄວາມເຄົາລົບນັກຮຽນ<br>-ຄູກວດຈຳນວນພົນເຕັມ ຈັກຄົນ ຍິງ...ຄົນ. ຂາດ....ຄົນ<br>-ຄູສະເໜີແຂກເຂົ້າຮ່ວມ(ຖ້າມີ)<br>-ຄູສະເໜີຊື່ແລະຈຸດພິເສດ(ຖ້າເປັນຄູໃໝ່)<br>-ຄູກວດເປັນລະບຽບຮຽບຮ້ອຍ | -ນັກຮຽນທຳຄວາມເຄົາລົບຄູ<br>-ນັກຮຽນລາຍງາຄົນຂາດ<br>-ນັກຮຽນຕົບມືໃຫ້ກຽດ | 7’ | | ສັງເກດການເປັນລະບຽບຂອງນັກຮຽນ |
| ໃຫ້ນັກສາມາດຈື່ຈຳບົດເກົ່າໄດ້. | ຕອບ<br>ທາດຫຼວງສ້າງຂຶ້ນເມື່ອປີ ຄ.ສ 1566 ແມ່ນພະເຈົ້າໄຊຍະເຊດຖາທິລາດເປັນຜູ້ນຳພາປະຊາຊົນຊາວວຽງສ້າງຂຶ້ນ | ➢ **ທວນຄືນບົດຮຽນເກົ່າ**<br>-ຄູຕັ້ງຄຳຖາມໃຫ້ນັກຮຽນຕອບ<br>1.ທາດຫຼວງສ້າງຂຶ້ນໃນປີໃດ?ແລະ ແມ່ນໃຜເປັນຜູ້ນຳພາສ້າງ?<br>-ຄູໃຫ້ນັກຮຽນຕອບ 2-3 ຄົນ<br>-ນັກຮຽນຕອບຖືກຄູຍ້ອງຍໍ້(ຖ້າຜິດແນະນຳຕື່ມ)<br>-ຄູແລະນັກຮຽນຮ່ວມກັນສະຫຼຸບ | -ນັກຮຽນຄົ້ນຄ້ວາ<br>-ນັກຮຽນອາສາສະໝັກລຸກຕອບ1-2ຄົນ | | | ສັງເກດຈາກການຕອບຂອງນັກນຽນ |
| | ຕອບ<br>ເຄີຍໄປເຫັນທິວທັດທຳມະຊາດ ພູຜາ ປ່າໄມ້ | ➢ **ລ້ຽວເຂົ້າສູ່ບົດຮຽນໃໝ່**<br>ຄູຕັ້ງຄຳຖາມວ່າ<br>-ພວກຫຼານເຄີຍໄປຫຼິ້ນປ່າບໍ່ ເຫັນຫຍັງແດ່?<br>-ສະນັ້ນໃນຊົ່ວໂມງນີ້ຄູຈະພາພວກຫຼານມາຮຽນກ່ຽວ | -ນັກຮຽນຕັ້ງໃຈຟັງ<br>-ນັກຮຽນຄົ້ນຄ້ວາ<br>-ນັກຮຽນຕອບ | | | |

| | | | | | | |
|---|---|---|---|---|---|---|
| | | ຊັບພະຍາກອນປ່າໄມ້ | | | | |
| ໃຫ້ສາມາດເວົ້າຕາມຮູບໄດ້ຕອບຕາມຮູບພາບ<br><br><br><br><br><br><br><br><br><br>ໃຫ້ນັກຮຽນຕອບຄຳຖາມໄດ້ | <u>ວິຊາພາສາລາວ</u><br><u>ບົດທີ 22</u><br><u>ຊັບພະຍາກອນປ່າໄມ</u><br><br>ຕົ້ນໄມ້,ປ່າໄມ້,ສັດປ່າ,ຫ້ວຍນ້ຳ ແລະ ອື່ນໆ<br><br><br><br><br><br><br><u>ຕອບ</u><br><u>1</u>. ປ່າໄມ້ເປັນສິ່ງປັບຄວາມສົມດຸນຂອງອາກາດໃຫສະໜຳສະເໝີ,ຮັກສາຄວາມຊຸ່ມຊື່ນ,ຮັກສາແຫຼ່ງນ້ຳ ແລະ ຮັກສາຄຸນນະພາບຂອງດິນ. | ➢ **ຂັ້ນສອນ**<br>-ຄູຂຽນຫົວບົດໃສ່ກະດານ.<br>-ຄູຍົກຮູບໃຫ້ນັກຮຽນສັງເກດເບິ່ງ.<br>-ຄູຕັ້ງຄຳຖາມໃຫ້ນັກຮຽນຕອບ.<br>+ ໃນຮູບພາບນັ້ນພວກຫຼານເຫັນມີຫຍັງແດ່?<br>-ຄູໃຫ້ນັກຮຽນເວົ້າຕາມທີ່ນັກຮຽນເຫັນໃນພາບ<br>-ຄູແລະໝູ່ເພື່ອນຕິດຕາມພ້ອມທັງຍ້ອງຍໍ.<br>-ຄູໃຫ້ນັກຮຽນອ່ານໃນໃຈເປັນບຸກຄົນ.<br>-ຄູໃຫ້ນັກຮຽນເວົ້າກ່ຽວກັບເນື້ອໃນຕົ້ນຕໍ່ຂອງເລື່ອງ<br>-ຄູອະທິບາຍຄຳສັບທີ່ນັກຮຽນຍັງບໍ່ທັນເຂົ້າໃຈຄຳສັບນັ້ນ.<br>-ຄູຈັດນັກຮຽນອອກເປັນ **3** ກຸ່ມ<br>-ຄູຢາຍບັດຄຳຖາມໃຫ້ນັກຮຽນແຕ່ລະກຸ່ມຄົ້ນຄ້ວາ.<br>- ກຸ່ມ 1<br>**1**.ປ່າໄມ້ມີຄວາມສຳຄັນຕໍ່ດິນຟ້າອາກາດແນວໃດ?<br>- ກຸ່ມ 2<br>**2**. ຊັບພະຍາກອນປ່າໄມ້ມີຫຍັງແດ່? | -ນັກຮຽນສັງເກດຮູບພາບ<br><br>-ນັກຮຽນອາສາສະໝັກອອກມາອ່ານຢູ່ກະດານ<br><br><br><br><br><br><br><br><br><br><br>-ນັກຮຽນຕ່າງໜ້າກຸ່ມມາລາຍງານຢູ່ກະດານ | 23’ | | ສັງເກດຈາກອ່ານໃນໃຈຂອງນັກຮຽນn ແລະການຕອບຄຳຖາມຕາມຮູບພາບ<br><br><br><br><br><br><br><br><br>ສັງເກດຈາກການລາຍງານຂອງແຕ່ລະກຸ່ມຂອງນັກຮຽນ |

| | | | | | | |
|---|---|---|---|---|---|---|
| ໃຫ້ນັກຮຽນອ່ານໄດ້<br><br><br><br><br><br><br><br><br><br><br><br><br><br><br>ໃຫ້ສາມາດຂຽນບົດພັນລະນາໄດ້ | 2. ຊັບພະຍາກອນປ່າໄມ້ມີ: ຕົ້ນໄມ້ຊະນິດຕ່າງໆເຊັ່ນ: ໄມ້ດູ່, ໄມ້ແດງ, ໄມ້ຂະຍູງ, ໄມ້ແຕ້, ໄມ້ແຄນ, ໄມ້ສັກ ແລະ ອື່ນໆ.<br>3. ຢາກປົກປັກຮັກສາພວກເຮົາບໍ່ຄວນທຳລາຍປ່າໄມ້, ຈົ່ງຊ່ວຍກັນປົກປັກສາທຳມະຊາດອັນເປັນທຶນຮອນທີ່ປະເສີດນີ້, ສົ່ງເສີມການປູກຕົ້ນໄມ້ໃຫ້ເປັນປ່າ, ຈຳກັດການຖາງປ່າເຮັດໄຮ່, ກຳນົດເຂດປ່າສະຫງວນຢ່າງຈະແຈ້ງ.<br><br><br><br>+**ພາກອ່ານ**<br>ເລີ່ມແຕ່ຕົ້ນ ປ່າໄມ້ແມ່ນຊັບພະຍາກອນທຳມະຊາດອັນປະເສີດ - ຈິນຮອດ ເປັນສ່ວນຢ່າພື້ນເມືອງໃຊ້ປິ່ນປົວພະຍາດຕ່າງໆຕະຫຼອດມາ. | - ກຸ່ມ 3<br>**3**. ຢາກປົກປັກຮັກສາຊັບພະຍາກອນປ່າໄມ້ຕ້ອງເຮັດແນວໃດ?<br><br>-ຄູໃຫ້ນັກຮຽນແຕ່ລະກຸ່ມ ຕ່າງໜ້າ 1 ຄົນອອກມາລາຍງານໃຫ້ໝູ່ຄູ່ຟັງ.<br>-ຄູສະຫຼຸບຄືນ<br>+ພາກອ່ານ<br>-ຄູໃຫ້ນັກຮຽນອ່ານ 2-3 ຄົນ ແລ້ວໃຫ້ມາອ່ານຢູ່ກະດານ<br>-ຄູໃຫ້ນັກຮຽນມາອ່ານເທື່ອລະຄົນ<br>➢ **ຫັດອ່ານ**<br>-ຄູໃຫ້ນັກຮຽນອອກອ່ານເພື່ອຈັບໃຈຄວາມ ເລີ່ມຕົ້ນແຕ່ ປ່າໄມ້ແມ່ນ ຊັບພະຍາກອນທຳມະຊາດອັນປະເສີດ- ຈິນອດ ເປັນສວນຢາພື້ນເມືອງໃຊ້ປິ່ນປົວພະຍາດຕ່າງໆຕະຫຼອດມາ.<br>-ຄູ ແລະ ນັກຮຽນ ສະຫຼຸບຄືນ<br><br>**ອະທິບາຍຄຳສຳ**<br>ສົມດຸນ : ເທົ່າກັນ, ສະເໝີກັນ<br>ບຸກເບີກ : ຂຸດ, ຂະຫຍາຍອອກຕື່ມ | -ນັກຮຽນອ່ານ<br><br><br><br><br><br><br><br><br><br><br><br><br><br><br><br><br><br><br>-ນັກຮຽນອ່ານຕາມຫຼັງ | | | <br><br><br><br>ສັງເກດການອ່ານຂອງນັກຮຽນ<br><br><br><br>ສັງເກດການອ່ານຂອງນັກຮຽນ<br><br><br><br><br><br><br><br>ສັງເກດຈາກຂຽນບົດພັນ |

| | | | | | | |
|---|---|---|---|---|---|---|
| | ➢ **ຫັດແຕ່ງບົດພັນລະນາທຳມະຊາດ**<br><br>ກ່ອນຈະພັນລະນາພາບຕ້ອງກຳນົດເນື້ອໃນໃຈຄວາມ ແລະ ຄວາມຮູ້ສຶກລວມຕໍ່ບົດເຊັ່ນ:ພາບນັ້ນມີຄວາມຕື່ນເຕັ້ນ ຫຼື ໂສກເສົ້າ ,ເວລາແຕ່ງຕ້ອງໃຊ້ສັບພາສາໃຫ້ເໝາະສົມກັບສະພາບຫຼວມ.<br>ຕ້ອງພັນລະນາພາບໃຫ້ຖືກຕ້ອງກັບກາລະ,ເທສະ ຕາມລະດູການເພາະຮູບພາບໃນການພັນລະນາແມ່ນໃຫ້ຖືກຕ້ອງຕາມເວລາ ແລະ ລະດູການເຊັ່ນ:ຍາມຝົນ, ຍາມແລ້ງ,ຍາມເຊົ້າ,ຍາມສວຍ, ຍາມຮ້ອນ,ຍາມໜາວ, ແລະ ອື່ນໆ... | ປ່າສະຫງວນ : ປ່າທີ່ຖະໜອມຮັກຮັກສາ<br>-ຄູໃຫ້ນັກຮຽນຂຽນໃສ່ປຶ້ມໃຜລາວຫັດແຕ່ງ<br>-ຄູໃຫ້ນັກຮຽນອ່ານເນື້ອໃນຄວາມໝາຍຂອງວິທີພັນລະນາ<br><br>➢ **ຫັດແຕ່ງບົດພັນລະນາພາບທຳມະຊາດ**<br>**ວິທີພັນລະນາພາບ**<br>**ຕົວຢ່າງ:** ໂຄງຮ່າງບົດພັນລະນາທັດສະນີຍະພາບ<br>**ຫົວບົດ :** ຊັບພະຍາກອນປ່າໄມ້<br>**ກ.** ເປີດຫົວເລື່ອງ<br>ກ່າວເຖິງຄວາມສຳຄັນຂອງປ່າໄມ້<br>**ຂ.** ເດີນເລື່ອງ<br>- ຄວາມອຸດົມສົມບູນຂອງປ່າໄມ້<br>- ຄຸນປະໂຫຍດ ແລະ ການນຳໃຊ້ໄມ້<br>- ປ່າໄມ້ມີຄຸນຕໍ່ຄົນ,ສັດ ແລະ ສິ່ງທີ່ມີຊີວິດ<br>- ຜົນສະທ້ອນໃນການທຳລາຍປ່າ<br>- ການສະຫງວນປ່າ ແລະ ປູກໄມ້ທົດແທນ. | -ນັກຮຽນອ່ານ<br>ນັກຮຽນຫັດຂຽນ | | | ລະນາຂອງ<br>ນັກຮຽນ |

| | | | | | | |
|---|---|---|---|---|---|---|
| ໃຫ້ນັກຮຽນສາມາດກຳເນື້ອໃນໄດ້ | | ➢ **ຂັ້ນສະຫຼຸບ**<br>-ຄູແລະນັກຽນສະຫຼຸບຄືນພ້ອມກັນບົດຮຽນຜ່ານມາ<br>-ຄູແນະນຳໃຫ້ນັກຮຽນຂຽນບົດຮຽນໃສ່ປຶ້ມໃຜລາວ<br>-ຄູແນະນນຳຕື່ມບົດຮຽນ | -ນັກຮຽນຕັ້ງໃຈຟັງ<br>-ນັກຮຽນຖາມຄືນຂໍ້ຂ້ອງໃຈ | 5 | | |
| ສອບຄວາມເຂົ້າໃຈນັກຮຽນ | | ➢ **ຂັ້ນວັດແລະປະເມີນຜົນ**<br>-ການສົນທະນາກ່ຽວກັບຮູບພາບ,ເລົ່າເລື່ອງຕາມບົດຮຽນ.<br>-ການອ່ານຈັບໃຈຄວາມເນື້ອໃນບົດຮຽນ<br>-ການພັນລະນາພາບຂອງນັກຮຽນ<br>-ການລາຍງານກຸ່ມແຕ່ລະກຸ່ມ | | 5 | | |
| | | ➢ **ຂັ້ນຕັກເຕືອນ-ມອບວຽກບ້ານ**<br>-ຄູໃຫ້ນັກຮຽນແອບເຝິກອ່ານອອກສຽງເວລາບາງເບິ່ງບົດຮຽນ<br>-ຊ່ວຍວຽກພໍ່ແມ່ທີ່ພວກຫຼານເຮັດໃດ | | 5 | | |

ນຳໃຊ້ເທັກນິກຖາມ-ຕອບ,ສົນທະນາ,ປະຕິບັດອະທິບາຍກຸ່ມ ແລະ ລາຍງານຜົນດີຂອງຊັບພະຍາກອນປ່າໄມ້

## VI. ສື່ການຮຽນ-ການສອນ

ປຶ້ມແບບຮຽນ ແລະ ຄູ່ມືຄູພາສາລາວ ປ.5

ຮູບພາບກ່ຽວກັບຕົ້ນໄມ້,ປ່າໄມ້,ສັດປ່າ,ຫ້ວຍນ້ຳລຳເຊ ແລະ ເຄື່ອງປ່າຂອງດົງຕ່າງໆ

ລາຍເຊັນ ວິຊາການ ລາຍເຊັນ ຄູປະຈຳຫ້ອງ

<table>
<tr><td colspan="4">ຂໍ້ມູນທົ່ວໄປ:</td></tr>
<tr><td>ຊື່ຄູສອນ:<br>...............................................</td><td>ຊື່ໂຮງຮຽນ: ........................................</td><td>ວິຊາ: ພາສາວລາວ</td><td>ຊັ້ນຮຽນ:............</td></tr>
<tr><td>ບົດທີ:</td><td>ຊື່ບົດຮຽນ:</td><td>ວັນທີ……/……./ ຫາ<br>…../…./….<br>ເວລາ:………………..</td><td>ຈໍານວນນັກຮຽນທີ່ຕ້ອງຝກເວົ້າພາສາລາວ: ຄົນ; ຍິງ…….ຄົນ.</td></tr>
<tr><td colspan="4">I. ຈຸດປະສົງ:</td></tr>
<tr><td colspan="4">II. ການວັດ ແລະ ປະເມີນຜົນການຮຽນ:</td></tr>
<tr><td colspan="2">ການວັດປະເມີນຜົນເພື່ອປັບປຸງຜົນການຮຽນ</td><td colspan="2">ການວັດປະເມີນຜົນເພື່ອສະຫຼຸບຜົນການຮຽນ</td></tr>
<tr><td colspan="4">III. ເນື້ອໃນຕົ້ນຕໍ່ຂອງບົດຮຽນ:</td></tr>
<tr><td colspan="4">IV . ສື່ການຮຽນ-ການສອນ</td></tr>
<tr><td colspan="4">ການຊ່ວຍເຫຼືອນັກຮຽນທີ່ຕ້ອງການຝຶກເວົ້າພາສາລາວ:</td></tr>
</table>

V. ກິດຈະກຳການຮຽນ-ການສອນ:

| ຂັ້ນຕອນການສອນ: | ເວລາ( ນາທີ ) | ກິດຈະກຳການສອນ |
|---|---|---|
| 1. ຂັ້ນນຳເຂົ້າສູ່ບົດຮຽນ: | | |
| 2. ຂັ້ນຈັດກິດຈະກຳການຮຽນ: | | |
| 3. ຂັ້ນຝຶກປະຕິບັດແລະນຳໃຊ້: | | |
| 4. ຂັ້ນສະຫຼຸບ: | | |

**ການປະເມີນຕົນເອງສຳລັບຄູສອນ:**

| ນັກຮຽນໄດ້ບັນລຸຈຸດປະສົງຂອງບົດຮຽນ: | ວິທີປັບປຸງການສອນຂອງຄູໃນຄັ້ງຕໍ່ໄປ: |
|---|---|
| | |

## ບົດສອນ

| ຂໍ້ມູນທົ່ວໄປ | | | |
|---|---|---|---|
| **ຊື່ຄູສອນ:** | **ຊື່ໂຮງຮຽນປະຖົມ..........** | **ວິຊາ:** ພາສາລາວ | **ຊັ້ນຮຽນ: ປ 3**<br>ຈຳນວນນັກຮຽນເຕັມ 25 ຄົນ, ຍິງ 12 ຄົນ |
| **ບົດທີ : 21** | **ຊື່ບົດຮຽນ:**<br>ການລ້າງຖ້ວຍ | ວັນທີ ແລະ ເວລາ<br>...................... | ຈຳນວນນັກຮຽນທີ່ຕ້ອງຝຶກເວົ້າພາສາລາວ<br>(.......ຄົນ) |

**I. ຈຸດປະສົງ: ໃຫ້ນັກຮຽນສາມາດ**

1. ອ່ານບົດໄດ້ຢ່າງຄ່ອງແຄ້ວ
2. ນຳໃຊ້ຄຳສັບທີ່ຮຽນເຂົ້າໃນການບອກຂຶ້ນ ຕອນຕາມຮູບພາບ ແລະ ຕື່ມໃສບອນວ່າງໃນ ປະໂຫຍກ.
3. ນຳໃຊ້ຄຳສັບກ່ຽວກັບບົດວິທີການເຂົ້າໃນການ ຂຽນບົດ.
4. ຂຽນຫັດຂຽນງາມຖືກຕາມຂະໜາດ, ຮູບແບບ. ສະອາດ ແລະ ເປັນລະບຽບ
5. ສະກົດຄຳທີ່ຮຽນໄດ້ຢ່າງຖືກຕ້ອງ
6. ຂຽນທວາຍໄດ້ຢ່າງຖືກຕ້ອງຕາມຫຼັກໄວຍາກອນ
7. ຈັດລຽງຄຳສັບ ແລະ ວະລີໃຫ້ເປັນປະໂຫຍກ

**II. ການວັດ ແລະ ປະເມີນຜົນ**

| ❖ **ການປະເມີນເພື່ອປັບປຸງຜົນການຮຽນ** | ❖ **ການປະເມີນເພື່ອສະຫຼຸບຜົນການຮຽນ**<br>**ເພື່ອປະເມີນນັກຮຽນກຸ່ມ** |
|---|---|
| ສຳລັບການປະເມີນເພື່ອປັບປຸງການຮຽນຂອງ ນັກຮຽນ ຄູສາມາດດຳເນີນໃນໄລຍະຮຽນ ໂດຍຜ່ານ ການສັງເກດ ແລະ ສົນທະນາຖາມຕອບ. ຄູສາມາດ ສະຫຼຸບຜົນການຮຽນຂອງທັກສະການຟັງ ແລະ ເວົ້າ, ອ່ານ ແລະ ຂຽນ ໂດຍໃຊ້ເກນການໃຫ້ຄະແນນດັ່ງລຸ່ມນີ້ | ນັກຮຽນສາມາດອ່ານແລະຕອບບົດຮຽນໄດ້. |

| | |
|---|---|
| 1. ການອ່ານ: ໃຊ້ເກນການໃຫ້ຄະແນນຂໍ້ທີ 9 ໃນ ຊົ່ວໂມງທີ 1<br>2. ການຟັງ ແລະ ເວົ້າ: ໃຊ້ເກນການໃຫ້ຄະແນນຂໍ້ ທີ 6 ແລະ 2 ໃນຊົ່ວໂມງທີ 3 ແລະ 5<br><br>3. ການຂຽນ: ໃຊ້ເກນການໃຫ້ຄະແນນຂໍ້ທີ 15 ໃນຊົ່ວໂມງທີ 7. | |

**III. ເນື້ອໃນຕົ້ນຕໍ**

1. ການອ່ານບົດ ການລ້າງຖ້ວຍ.
2. ການບອກຂັ້ນຕອນການລ້າງຈອກຕາມຮູບພາບ.
3. ການຂຽນບົດຕາມໂຄງຮ່າງ.
4. ຫັດຂຽນງາມ ແລະ ຂຽນທວາຍ.
5. ການສະກົດຄຳ: ບິບ, ຂວໍ້າ, ຜັດ, ໜ່ວຍ, ຈອກ.
6. ການນຳໃຊ້ຄຳສັບ: ເປີດ, ຖອກ, ບິບ, ເປີດ, ຂວົ້າ...

**IV. ສື່ການສອນ**

1. ປຶ້ມແບບຮຽນ ແລະ ຄູ່ມືຄູ
2. ບັດຄຳສັບ ແລະ ປະໂຫຍກ.
3. ກັບ ຫຼື ກ່ອງທີ່ໃຊ້ໃນການຫຼິ້ນເກມ

- ວິທີຊ່ວຍເຫຼືອນັກຮຽນໃນການອ່ານ,ຂຽນບໍ່ໄດ້

+ ວິທີຊ່ວຍເຫຼືອນັກຮຽນທີ່ອ່ານບໍ່ໄດ້:

1. ຄູຕ້ອງໄດ້ນຳພານັກຮຽນອ່ານຫຼາຍໆເທື່ອ,ອ່ານເລື້ອຍໆ.

| | | |
|---|---|---|
| 2. ສອນພິເສດໃຫ້ນັກຮຽນທີ່ອ່ານບໍ່ໄດ້.<br>3. ເພື່ອນຊ່ວຍເພື່ອນ: ນັກຮຽນຜູ້ອ່ານໄດ້ບອກ.<br>4. ແນະນຳຜູ້ປົກຄອງສອນຊ່ວຍ.<br>+ ວິທີຊ່ວຍເຫຼືອນັກຮຽນທີ່ຂຽນບໍ່ໄດ້:<br>- ຄູຕ້ອງຈັບມືນັກຮຽນແອບຂຽນພະຍັນຊະນະ,ສະຫຼະເລື້ອຍໆ.<br>- ຄູຕ້ອງຈ້ຳເມັດໃຫ້ນັກຮຽນຂຽນຕາມຈ້ຳເມັດທີ່ຄູຈ້ຳເມັດໄວ້ແລ້ວ.<br>- ແນະນຳຜູ້ປົກຄອງສອນຊ່ວຍ. | | |
| **V. ກິດຈະກຳການຮຽນ - ການສອນ** | | |
| **ຊົ່ວໂມງ 1 - 2( ເວລາ 90 ນາທີ )** | | |
| **ຂັ້ນຕອນການສອນ** | **ເວລາ (ນາທີ)** | **ກິດຈະກຳ** |
| **1.ຂັ້ນນຳເຂົ້າສູ່ບົດຮຽນ** | **5 ນາທີ** | **ຊົ່ວໂມງທີ 1-2 (90 ນາທີ)**<br>**- ນັກຮຽນທ່ອງບົດກາບ" ຕື່ນແຕ່ເຊົ້າ "ພ້ອມທັງຕົບມືປະກອບ**<br>"ຕື່ນແຕ່ເຊົ້າ<br><br>ຕື່ນແຕ່ເຊົ້າ ປັດກວາດເຮືອນຊານ<br>ລ້າງຖ້ວຍຈານ ເຊັດຖູຮຽບຮ້ອຍ<br>ເອື້ອຍ ແລະ ຂ້ອຍ ຈິ່ງໄປໂຮງຮຽນ<br>ຫຼານພາກພຽນ ໄປຮຽນບໍ່ຂາດ<br>- ຄູ ແລະ ນັກຮຽນສົນທະນາຖາມຕອບກ່ຽວກັບບົດ ການໜຶ້ງໄຂໃນບົດອ່ານເສີມບົດທີ 20 ດ້ວຍການຕັ້ງ ຄຳຖາມ ບົດນີ້ເວົ້າກ່ຽວກັບຫຍັງ? (ການໜຶ້ງໄຂ່...). ອຸປະກອນທີ່ໃຊ້ມີຫຍັງແດ່? (ຖ້ວຍ, ບ່ວງ, ໝໍ່ຊືງ, ເຕົາໄຟ, ຈອກ), ສ່ວນປະສົມມີຫຍັງແດ່? (ໄຂ, ເກືອ, ນ້ຳປາ, ຫອມບົ່ວ, ຫອມປ້ອມ, ນ້ຳ), ການໜຶ້ງໄຂ່ມີ ຈັກຂັ້ນຕອນ? ຄືຂັ້ນຕອນໃດແດ່? (ການໜຶ້ງໄຂ່ມີ 7 ຂັ້ນຕອນຄື: |

| | | |
|---|---|---|
| | | 1. ທັບໄຂ່ໃສ່ຖ້ວຍ, 2. ຖອກນໍ້າໃສ່ພໍ ປະມານ, 3. ຕື່ມເຄື່ອງປຸງໃສ່ຕາມໃຈມັກ, 4. ຄົນໄຂ ກັບເຄື່ອງປຸງໃຫ້ເຂົ້າກັນ, 5. ວາງ ຖ້ວຍໄຂ່ໃສ່ໝໍ້ຊຶ່ງ ທີ່ ຄ້າງຢູ່ເຕົາໄຟ, 6. ອັດຝາໝໍ້ຊຶ່ງທີ່ຄ້າງຢູ່ເທິງເຕົາໄຟ, 7. ຍົກໝໍ້ຊຶ່ງອອກຈາກເຕົາໄຟ ເມື່ອໄຂສຸກ..... ນັກຮຽນ ຕອບຕາມຄວາມເຂົ້າໃຈ.<br>ຄູສະຫຼຸບຄືນຄຳຕອບທີ່ຖືກຕ້ອງ. ຄູບອກນັກຮຽນວ່າ ເມື່ອພົບເຫັນປະໂຫຍກທີ່ຂຶ້ນຕົ້ນ ດ້ວຍຄຳກຳມະ ແລະ ມີຂັ້ນຕອນການ ເຮັດສິ່ງໃດສິ່ງ ໜຶ່ງປະໂຫຍກນັ້ນເປັນບົດວິທີການ.<br>- ຄູຖາມນັກຮຽນວ່ານັກຮຽນເຄີຍລ້າງສິ່ງໃດສິ່ງໜຶ່ງຊ່ວຍ ພໍ່ແມ່ບໍ່? ຂັ້ນຕອນການລ້າງມີຫຍັງແດ່?<br>- ນັກຮຽນຕອບຕາມຄວາມເຂົ້າໃຈ.<br>- ຄູບອກວ່າ ນັກຮຽນຈະໄດ້ຮຽນກ່ຽວກັບຂັ້ນຕອນການ ລາງຖວຍ. |
| **2.ຂັ້ນຈັດກິດຈະກຳ ການຮຽນ** | **40 ນາທີ** | ❖ **ການອ່ານ**<br>**1. ຟັງ ແລະ ອ່ານບົດການລ້າງຖ່ວຍ**<br>ການສອນໃຫ້ນຳໃຊ້ເຕັກນິກການສອນທີ 2 ຢູ່ພາກແນະ ນຳລວມ.<br>ຂັ້ນຕອນການສອນໃຫ້ປະຕິບັດຄືກັນກັບບົດທີ 1 ຊົ່ວໂມງ ທີ 1.<br>- ຄູອະທິບາຍຄວາມໝາຍຂອງຄຳສັບທີ່ບອກໄວ້ໃນ ປຶ້ມແບບຮຽນ.<br>- ຄູຈັດນັກຮຽນອອກເປັນກຸ່ມ ໃຫ້ນັກຮຽນອ່ານບົດການ ລາງຖວຍ.<br>**2. ອ່ານ ແລະ ຕອບຄຳຖາມ ແລ້ວຂຽນຄຳຕອບໃສ່ປຶ້ມ ຂຽນ**<br>ການສອນໃຫ້ນຳໃຊ້ເຕັກນິກການສອນທີ 3 ຢູ່ພາກແນະ ນຳລວມ.<br>ຂັ້ນຕອນການສອນໃຫ້ປະຕິບັດຄືກັນກັບບົດທີ 1 ຊົ່ວໂມງ ທີ 2. |
| **3.ຂັ້ນຝຶກປະຕິບັດ ແລະ ນຳໃຊ້** | **40ນາທີ** | **ຂັ້ນຕອນການສອນໃຫ້ປະຕິບັດຄືກັນກັບບົດທີ 1 ຊົ່ວໂມງ ທີ 1.**<br>**ນັກຮຽນເປັນກຸ່ມອ່ານບົດການລ້າງຖ້ວຍ.**<br>**ຄຳຕອບ:**<br>1. ບົດນີ້ເວົ້າກ່ຽວກັບການລ້າງຖ້ວຍ<br>2. ອຸປະກອນທີ່ໃຊ້ມີ: ນໍ້າ, ຊາມ, ຖ້ວຍ, ຈານ, ບ່ວງ, ນໍ້າ ຢາລ້າງຈານ, ຟອຍຜັດ. |

| | | |
|---|---|---|
| | | 3. ການລ້າງຖ້ວຍມີ 5 ຂັ້ນຕອນຄື:<br>1) ເປີດນ້ຳໃສ່ຊາມ ແລ້ວລ້າງເສດອາຫານທີ່ຕິດ ຖ້ວຍອອກ.<br>2) ຖອກນ້ຳທີ່ລ້າງເສດອາຫານອອກຈາກຊາມ.<br><br>3) ບີບນ້ຳຢາລາງຈານໃສ່ຟອຍຜັດ ແລ້ວຜັດຖ້ວຍ, ຈານເທື່ອລະໃບ ແລະ ບ່ວງເທື່ອລະກ້ານ<br>4) ເປີດນ້ຳໃສ່ຊາມ ແລ້ວໄລຖ້ວຍຈານ ແລະ ບ່ວງ ດ້ວຍນ້ຳສະອາດປະມານ 2-3 ເທື່ອ.<br>5) ຂວ້ຳຖ້ວຍ, ຈານ ແລະ ບ່ວງທີ່ລ້າງແລ້ວປະໄວ້ ເພື່ອໃຫ້ມັນແຫ້ງ.<br>**3. ບ້ານ ແລ້ວຕື່ມນຳສັບ ຫຼື ວະລີໃສ່ບ່ອນວ່າງ**<br>ການສອນນຳໃຊ້ເຕັກນິກການສອນທີ 5ຄ ຢູ່ພາກແນະ ນຳລວມ.<br>ຂັ້ນຕອນການສອນໃຫ້ປະຕິບັດຄືກັນກັບບົດທີ 1 ຊົ່ວໂມງ2.<br>- ຄູຂຽນຄຳສັບ ບີບ, ຊາມ, ຂວ້ຳ, ຜັດ, ສະອາດ, ເປີດ, ແຫ່ງ, ເສດອາຫານ ໃສກະດານ.<br>**ຄຳຕອບ:**<br>1. ຂວ້ຳຖ້ວຍທີ່ລາງແລ້ວປະໄວ້ ເພື່ອໃຫ້ມັນແຫ້ງ.<br>2. ເປີດນ້ຳໃສ່ຊາມ ແລ້ວລ້າງເສດອາຫານທີ່ຕິດຖ້ວຍ<br>3. ບີບນ້ຳຢາລາງຈານໃສ່ຟອຍຜັດ ແລ້ວຜັດຖ້ວຍເທື່ອ ລະໃບໃຫ້ທົ່ວ.<br>4. ເປີດນ້ຳໃສ່ຊາມ ແລ້ວໄລຖ້ວຍດ້ວຍນ້ຳສະອາດປະ ມານ 2-3 ນ້ຳ.<br>**ໝາຍເຫດ:** ຄູສ້າງບັດຄຳສັບທີ່ຍາກໃນບົດ, ບັດຄຳສັບເຫຼົ່າ ນີ້ຈະໄດ້ນຳໃຊ້ໃນການຫຼິ້ນເກມຄຳສັບເທື່ອຕໍ່ໄປ ໂດຍບວກ ໃສກັບບັດຄຳສັບທີ່ໄດ້ສ້າງຈາກບົດຮຽນຜ່ານມາ. |
| **4.ຂັ້ນສະຫຼຸບ** | **5ນາທີ** | ຄູສະຫຼຸບເນື້ອໃນສຳຄັນ ໂດຍເນັ້ນກ່ຽວກັບອຸປະກອນ, ຂັ້ນຕອນການລ້າງຖ້ວຍ, ການຕອບຄຳຖາມ ແລະ ການຕື່ມຄຳສັບ ແລະ ວະລີ. |

| ຊົ່ວໂມງ 3-4 (90 ນາທີ) | | |
|---|---|---|
| **1.ຂັ້ນນຳເຂົ້າສູ່ບົດຮຽນ** | **5ນາທີ** | **ທວນຄືນການເວົ້າ ການອ່ານຄຳສັບ**<br>- ນັກຮຽນທ່ອງກາບ "ລ້າງຈອກ ພ້ອມທັງຕົບມືປະກອບ.<br>ບົດກາບ "ລ້າງຈອກ"<br>ການລ້າງຈອກ ເປັນສິ່ງສຳຄັນ<br>ລ້າງທຸກວັນ ໃຫ້ຈອກສະອາດ<br>ແມ່ພະຍາດ ຈຶ່ງຫ່າງໜີໄກ<br>ເວລາໃຊ້ເຮົາ ຈຶ່ງປອດໄພ<br>- ຄູໃຫ້ນັກຮຽນປ່ຽນຜຽນກັນອ່ານແຕ່ລະຂັ້ນຕອນຂອງ ການລ້າງຖ້ວຍ.<br><br>- ຄູໃຫ້ນັກຮຽນຊາຍ 1 ຄົນ ແລະ ນັກຮຽນຍິງ 1 ຄົນ ບອກ ວິທີລ້າງຖ້ວຍຂອງເຂົາເຈົ້າ |
| **2.ຂັ້ນຈັດກິດຈະກຳການຮຽນ** | **40ນາທີ** | **ການເວົ້າ**<br>**4. ເບິ່ງ ແລະ ບອກການລ້າງຈອກຕາມຮູບພາບ**<br>ການສອນໃຫ້ນຳໃຊ້ເຕັກນິກການສອນທີ 1 ຂ ຢູ່ພາກແນະ ນຳລວມ.<br>- ຄູອະທິບາຍວ່າ ໃນກິດຈະກຳນີ້ນັກຮຽນຈະໄດ້ສັງເກດ ແຕ່ລະຮູບພາບວ່າມີຂັ້ນຕອນຫຍັງແດ່. ຈາກນັ້ນ, ໃຫ້ ນັກຮຽນບອກຂັ້ນຕອນຕາມຮູບພາບ.<br>- ຄູ ແລະ ນັກຮຽນສົນທະນາແຕ່ລະຮູບພາບ ໃນຂະນະ ທີ່ສົນທະນາຄູເລືອກຂຽນຄຳສັບໃສ່ກະດານ ເຊັ່ນ: ເປີດ, ຜົດ, ລ້າງ, ຂວ້ຳ …<br>- ຄູຈັດນັກຮຽນເປັນຄູ່ ຫຼື ກຸ່ມຝຶກຊ້ອມບອກຂັ້ນຕອນ ການລ້າງຈອກຕາມຮູບພາບ.<br>**ການຂຽນ**<br>**5. ເບິ່ງຮູບພາບຂໍ້ທີ 4 ແລ້ວຂຽນບົດວິທີການຕາມໂຄງ**<br>ການສອນນຳໃຊ້ເຕັກນິກການສອນທີ 6 ຢູ່ພາກແນະນຳ ລວມ. |

| | | |
|---|---|---|
| | | ຂັ້ນຕອນການສອນໃຫ້ປະຕິບັດຄືກັນກັບບົດທີ 1 ຊົ່ວໂມງ ທີ 4.<br>- ຄູ ແລະ ນັກຮຽນເຮັດຕົວຢ່າງຮູບພາບທີ 1 ນຳກັນແລ້ວ ຂຽນ 1. ເປີດນ້ຳໃສ່ຊາມ ແລ້ວເອົາຈອກລົງໃສ່ກະດານ. - ຄູຈັດນັກຮຽນເປັນຄູ່ ຫຼື ກຸ່ມເພື່ອຝຶກຊ້ອມຂຽນບົດ ການລ້າງຈອກຕາມຮູບພາບແລ້ວຂຽນໃສ່ປຶ້ມຂຽນ. |
| **3.ຂັ້ນຝຶກປະຕິບັດ ແລະ ນຳໃຊ້** | **40ນາທີ** | ຂັ້ນຕອນການສອນໃຫ້ປະຕິບັດຄືກັນກັບບົດທີ 1 ຊົ່ວໂມງ 3.<br>ນັກຮຽນເປັນຄູ່ ຫຼື ກຸ່ມຝຶກຊ້ອມບອກຂັ້ນຕອນການ ລາງຈອກ.<br>ນັກຮຽນປ່ຽນຜຽນກັນບອກຂັ້ນຕອນການລ້າງຈອກ ຕາມຮູບພາບ.<br>ຄຳຕອບ:<br>1. ເປີດນ້ຳໃສ່ຊາມ ແລ້ວເອົາຈອກລົງ.<br>2. ຜັດຈອກໃຫ້ທົ່ວເທື່ອລະໜ່ອຍ.<br>3. ໄລຈອກດ້ວຍນ້ຳສະອາດປະມານ 2-3 ເທື່ອ.<br>4. ຂວ້ຳຈອກທີ່ລ້າງແລ້ວປະໄວ້ ເພື່ອໃຫ້ມັນແຫ້ງ.<br>ຄຳຕອບ:<br>**ຊື່ບົດ ການລ້າງຈອກ**<br>1. ເປີດນ້ຳໃສ່ຊາມ ແລ້ວເອົາຈອກລົງ.<br>2. ຜັດຈອກໃຫ້ທົ່ວເທື່ອລະໜ່ອຍ.<br>3. ໄລຈອກດ້ວຍນ້ຳສະອາດປະມານ 2-3 ເທື່ອ.<br>4. ຂວ້ຳຈອກທີ່ລ້າງແລ້ວປະໄວ້ ເພື່ອໃຫ້ມັນແຫ້ງ. |
| **4.ຂັ້ນສະຫຼຸບ** | **5ນາທີ** | - ຄູ ແລະ ນັກຮຽນສະຫຼຸບຄືນດ້ວຍການໃຊ້ຄຳກຳມະ ເປີດ, ຜັດ, ໄລ, ຂວ້ຳ ໃນບົດວິທີການເຂົ້າໃນການບອກ ຂັ້ນຕອນ ແລະ ຂຽນບົດຕາມໂຄງຮ່າງ |

<table>
<tr><td colspan="3">ຊົ່ວໂມງ 5-6 (90ນາທີ )</td></tr>
<tr><td>1.ຂັ້ນນຳເຂົ້າສູ່ບົດຮຽນ</td><td>5ນາທີ</td><td>- ຄູຈັດນັກຮຽນຫຼິ້ນເກມ ຄາດເດົາຄຳສັບ<br>ຂັ້ນຕອນການສອນໃຫ້ປະຕິບັດຄືກັນກັບບົດທີ 9 ຊົ່ວໂມງທີ 3.<br>- ຄຳສັບ: ຂວົ້າ, ບີບ, ຮອາດ, ຖ້ວຍ, ຫົດ, ຄ້າງ, ມອຍ, ເປີດ, ຈອກ, ສະອາດ, ຊາມ, ຟອຍຜົດ....</td></tr>
<tr><td>2.ຂັ້ນຈັດກິດຈະກຳການຮຽນ</td><td>40ນາທີ</td><td>❖ ໄວຍາກອນ<br>ຄຳນາມ<br>6. ອ່ານ ແລະ ສັງເກດຄຳນາມ<br>ຂັ້ນຕອນການສອນໃຫ້ປະຕິບັດຄືກັນກັບບົດທີ 1 ຊົ່ວໂມງທີ 5.<br>- ຄູໃຫ້ນັກຮຽນອ່ານຕົວຢ່າງໃນປຶ້ມແບບຮຽນ<br>- ຄູຖາມວາ ຄຳນາມແມ່ນຄຳແນວໃດ?<br>- ນັກຮຽນຕອບຕາມຄວາມເຂົ້າໃຈ.<br>- ຄູອະທິບາຍຄຳນາມ ແມ່ນຄຳທີ່ໃຊ້ບອກເຖິງຊື່ຂອງ ຄົນ, ສັດ ແລະ ວັດຖຸສິ່ງຂອງຕ່າງໆ ເຊັ່ນ: ຟອຍຜົດ, ນ້ຳຢາລ້າງຈານ, ຖ້ວຍ ...<br>7. ຈັບຄູ່ຄຳກຳມະໃໝ່ກັບຮູບພາບ<br>ຂັ້ນຕອນການສອນໃຫ້ປະຕິບັດຄືກັນກັບບົດທີ 1 ຊົ່ວໂມງ ທີ5.<br>- ຄູໃຫ້ນັກຮຽນອ່ານຄຳກຳມະ ແລ້ວສັງເກດຮູບພາບຂໍ້ ທີ 7 ໃນປຶ້ມແບບຮຽນ.<br>- ຄູບອກນັກຮຽນວ່າ ນັກຮຽນຈະໄດ້ຈັບຄູ່ຄຳກຳມະໃສ່ ຮູບພາບ, ຈາກນັ້ນ, ໃຫ້ຂຽນໃສ່ປຶ້ມຂຽນ.<br>ຄູຍົກຕົວຢ່າງຄຳສັບ ເປີດ ຈັບຄູໃສ່ກັບຮູບພາບ ກ໊ອກ ນ້ຳ ຕາມປຶ້ມແບບຮຽນໃຫ້ນັກຮຽນເບິ່ງ.<br>- ຄູຈັດນັກຮຽນເປັນຄູ ຫຼື ເປັນກຸ່ມ ເພື່ອຈັບຄູ່ຄຳກຳມະ ໃສຮູບພາບ. ຈາກນັ້ນ, ໃຫ້ຂຽນໃສ່ປຶ້ມຂຽນ.<br>8. ທົດຂຽນງານ<br>ຂັ້ນຕອນການສອນໃຫ້ປະຕິບັດຄືກັນກັບບົດທີ 1 ຊົ່ວໂມງ ທີ 6.</td></tr>
</table>

<table>
<tr><td>3.ຂັ້ນຝຶກປະຕິບັດ ແລະ ນຳໃຊ້</td><td>40ນາທີ</td><td>- ນັກຮຽນເປັນຄູ່ ຫຼື ເປັນກຸ່ມ ສົນທະນາກັນເພື່ອຈັບຄູ່ ຄຳກຳມະໃສ່ຮູບພາບ ແລ້ວຂຽນໃສ່ປຶ້ມຂຽນ.<br>- ຄູຕິດຕາມ ແລະ ໃຫ້ການຊ່ວຍເຫຼືອ.<br>- ຄູໃຫ້ນັກຮຽນແຕ່ລະກຸ່ມປ່ຽນຜຽນກັນບອກຄຳຕອບ.<br>- ນັກຮຽນກຸ່ມອື່ນຟັງ ແລະ ສົມທຽບໃສ່ຄຳຕອບຂອງ ກຸ່ມຕົນ.<br>- ຄູເລືອກຂຽນຄຳຕອບທີ່ຖືກຕ້ອງໃສ່ກະດານ.<br>- ນັກຮຽນແຕ່ລະກຸ່ມກວດ ແລະ ແປງໃຫ້ຖືກຕ້ອງ.<br>- ນັກຮຽນໝົດຫ້ອງອ່ານຄຳຕອບຢູ່ກະດານພ້ອມກັນ.<br>ຄຳຕອບ:<br>ເປີດ — ນ້ຳຢາລ້າງຈານໃສ່ຟອຍຜັດ<br>ຂວ້ຳ — ເປີດກ໋ອກນ້ຳໃສຊາມ<br>ບີບ — ໄລຈອກ<br>ໄລ — ຂວ້ຳຈານໃສຖານ<br>ຜັດ — ຜັດຈານ<br>ຂັ້ນຕອນການສອນໃຫ້ປະຕິບັດຄືກັນກັບບົດທີ 1 ຊົ່ວໂມງ ທີ 6.<br>ຫັດຂຽນງາມ: ຜັດຈອກເທື່ອລະໜ່ວຍ</td></tr>
<tr><td>4.ຂັ້ນສະຫຼຸບ</td><td>5ນາທີ</td><td>- ສະຫຼຸບເນື້ອໃນສຳຄັນຂອງບົດຮຽນ ໂດຍເນັ້ນການ ນຳໃຊ້ຄຳກຳມະໃສ່ຮູບພາບ ແລະ ການຂຽນຫັດຂຽນ ງາມຖືກຕາມຂະໜາດ , ຮູບແບບ, ສະອາດ ແລະ ເປັນ ລະບຽບ.</td></tr>
<tr><td colspan="3">ຊົ່ວໂມງ 7-8 ( 90 ນາທີ)</td></tr>
</table>

<table>
<tr>
<td>1.ຂັ້ນນຳເຂົ້າສູ່ບົດຮຽນ</td>
<td>5ນາທີ</td>
<td>- ຄູຈັດໃຫ້ນັກຮຽນໝົດຫ້ອງຫຼິ້ນເກມ ລຸກຂຶ້ນນັ່ງລົງ. ຂັ້ນຕອນການສອນໃຫ້ປະຕິບັດຄືກັນກັບບົດທີ 8 ຊົ່ວ ໂມງທີ 7. -<br>ຕົວຢ່າງ:<br>1. ຖອກນ້ຳທີ່ລ້າງເສດອາຫານອອກຈາກຊາມ. (ລຸກຂຶ້ນ)<br>2. ນົກຈາບວ້ອນວອນນົກຈິບເຟືອງສອນເຮັດຮັງ. (ນັ່ງ ລົງ).<br>3. ເປີດນ້ຳແລ້ວເອົາຖ້ວຍໄປຂວ້ຳໄວ້ໃນຊາມນ້ຳໃຫ້ແຫ້ງ. (ນັ່ງລົງ)<br>4. ຂວ້ຳຈອກທີ່ລ້າງແລ້ວປະໄວ້ ເພື່ອໃຫ້ມັນແຫ້ງ. (ລູກ ຂຶ້ນ)<br>5. ເປີດນ້ຳໃສ່ຊາມ ແລ້ວຖອກນ້ຳຖິ້ມ (ນັ່ງລົງ)<br>6. ເປີດນ້ຳໃສ່ຊາມ ແລ້ວເອົາຈອກລົງແຊ່ (ລູກຂຶ້ນ)<br><br>- ຄູໃຫ້ນັກຮຽນ 1-2 ຄົນບອກຂັ້ນຕອນການລ້າງຈອກ ຂອງເຂົາເຈົ້າທີ່ເຄີຍເຮັດຜ່ານມາ ໂດຍນຳໃຊ້ຄຳກຳ ມະເຂົ້າໃນການບອກແຕ່ລະຂັ້ນຕອນ</td>
</tr>
<tr>
<td>2.ຂັ້ນຈັດກິດຈະກຳການຮຽນ</td>
<td>20ນາທີ</td>
<td>9. ອ່ານ ແລະ ສະກົດຄຳ<br>ການສອນໃຫ້ນຳໃຊ້ເຕັກນິກການສອນທີ4ຄູ່ພາກແນະ ນຳລວມ.<br>ຂັ້ນຕອນການສອນໃຫ້ປະຕິບັດຄືກັນກັບບົດທີ 1 ຊົ່ວໂມງ ທີ 7.<br>- ຄູຍົກຕົວຢ່າງຄຳສັບ: ບິບ ຄູເວົ້າ ບິບ ນັກຮຽນເວົ້າ ພະຍັນຊະນະ ບ, ສະຫຼະ ິ ທີ່ມີຕົວສະກົດ ບ, ວັນນະ ຍຸດໂທ, ແລ້ວເວົ້າວ່າ ບິບ.<br>- ຄູຂີດຕາຕະລາງຄຳສັບ ແລະ ຕົວອັກສອນລຸ່ມນີ້ໃສ່ ກະດານ.
<table>
<tr><th>ຄຳສັບ</th><th>ພະຍັນຊະນະ</th><th>ພະຍັນຊະນະຄວບ</th><th>ສະຫຼະ</th><th>ຕົວສະກົດ</th><th>ວັນນະຍຸດ</th></tr>
<tr><td>ບິບ</td><td>ບ</td><td></td><td>ິ</td><td>ບ</td><td></td></tr>
</table>
10. ຂຽນທວາຍ<br>ຂັ້ນຕອນການສອນໃຫ້ປະຕິບັດຄືກັນກັບບົດທີ 1 ຊົ່ວໂມງ ທີ 8.</td>
</tr>
</table>

<table>
<tr><td></td><td></td><td></td></tr>
<tr><td>3.ຂັ້ນຝຶກປະຕິບັດ<br>ແລະ ນຳໃຊ້</td><td>60ນາທີ</td><td>ນັກຮຽນສະກົດຄຳ.<br>ຂັ້ນຕອນການສອນໃຫ້ປະຕິບັດຄືກັນກັບບົດທີ 1 ຊົ່ວໂມງ7<br>ຄຳຕອບ<br>
<table>
<tr><td>ຄຳສັບ</td><td>ພະຍັນຊະນະ</td><td>ພະຍັນຊະນະຄວບ</td><td>ສະຫຼະ</td><td>ຕົວສະກົດ</td><td>ວັນນະຍຸດ</td></tr>
<tr><td>ບິບ</td><td>ບ</td><td></td><td>ິ</td><td>ບ</td><td></td></tr>
<tr><td>ຂວ້ໍາ</td><td>ຂ</td><td>ວ</td><td>ໍາ</td><td></td><td>້</td></tr>
<tr><td>ຜັດ</td><td>ຜ</td><td></td><td>ັ</td><td>ດ</td><td></td></tr>
<tr><td>ໜ່ວຍ</td><td>ໜ</td><td></td><td>ວ</td><td>ຍ</td><td>່</td></tr>
<tr><td>ຈອກ</td><td>ຈ</td><td></td><td>ອ</td><td>ກ</td><td></td></tr>
</table>
<br>ເກມສະກົດຄຳ<br>ຂັ້ນຕອນການສອນໃຫ້ປະຕິບັດຄືກັນກັບບົດທີ 20 ຊົ່ວ ໂມງທີ 7.<br>- ຄູກຽມຊຸດບັດຄຳສັບສອງຊຸດ ຫຼື ຄູຂຽນຄຳສັບທີ່ນັກ ຮຽນໄດ້ຮຽນຜ່ານມາໃສ່ກະດານ ເຊັ່ນ: ບິບ, ເປີດ, ຊາມ, ໜ່ວຍ, ຂວ້ໍາ, ຮວາດ, ລ້າງ, ແຫ່ງ, ຟອຍ... ຄູສາມາດ ນຳໃຊ້ຄຳສັບທີ່ນັກຮຽນບອກຂັ້ນຕອນການລ້າງຈອກຂອງເຂົາເຈົ້າເຂົ້າໃນການຫຼິ້ນເກມ.<br><br>ວິທີຫຼິ້ນ: ທົ່ວໜ້າກຸມຖາມກຸ່ມກົງກັນຂ້າມ, ສະມາຊິກ ໃນແຕ່ລະກຸ່ມຜັດປ່ຽນກັນອອກມາສະກົດຄຳຢູ່ກະ ດານ ໂດຍໃຫ້ເວລາຜູ້ໜຶ່ງບໍ່ໃຫ້ກາຍ 30 ວິນາທີ ແລະ ບໍ່ໃຫ້ສົນທະນາກັບໝູ່ ຄູເປັນກຳມະການ ແລະ ຜູ້ກຳນົດເວລາ.<br>ຕົວຢ່າງ:</td></tr>
</table>

ກຸ່ມສີຟ້າ: ບິບ, ແຫ່ງ, ຂວ້ິາ, ໜ່ວຍ. ກຸ່ມສີແດງ: ຮວາດ, ລ້າງ, ຟອຍ, ເປີດ.

| ກຸ່ມສີເຫຼືອງ | ກຸ່ມສີບົວ |
|---|---|
| ຫົວໜ້າກຸ່ມເວົ້າ: ບິບ ສະກົດແນວໃດ? | ຕາງໜ້າກຸ່ມຂຽນ ແລະ ເວົ້າ: ບ-×ິ-ບ |
| ຕາງໜ້າກຸ່ມຂຽນ ແລະ<br>ເວົ້າ: ຮ-ວ-xາ-ດ | ຫົວໜ້າກຸ່ມເວົ້າ: ຮວາດ ສະກົດ<br>ແນວໃດ? |

ຄູປະເມີນການຂຽນຄຳສັບ (ການສະກົດຄຳ) ທີ່ຮຽນ ໂດຍ ນຳໃຊ້ເກນການໃຫ້ຄະແນນຂໍ້ທີ 15.

| ຄະແນນ | ການຂຽນຄຳສັບ (ສະກົດຄຳ) ທີ່ໄດ້ຮຽນ |
|---|---|
| 3 | ສາມາດຂຽນຄຳສັບທີ່ຮຽນໃນບົດຮຽນໄດ້ເກືອບ ໝົດທຸກຄຳດ້ວຍການສະກົດທີ່ຖືກຕ້ອງ |
| 2 | ສາມາດຂຽນຄຳສັບທີ່ຮຽນໃນບົດຮຽນດ້ວຍ ການສະກົດຄຳຖືກໄດ້ຈຳນວນເຄິ່ງໜຶ່ງ ແລະ ຄຳສັບ ບໍ່ຖືກຊຶ່ງສະແດງໃຫ້ເຫັນການນຳໃຊ້ ຄວາມຮູ້ກ່ຽວກັບການຟັອງສຽງ. |
| 1 | ພະຍາຍາມຂຽນທຸກຄຳສັບດ້ວຍການນຳໃຊ້ ຄວາມຮູ້ກ່ຽວກັບການຟັອງສຽງ ແຕ່ການສະ ກົດຄຳສັບ ທີ່ຮຽນຖືກໜ້ອຍກວ່າເຄິ່ງ. |
| 0 | ບໍ່ສາມາດຂຽນຄຳສັບທີ່ຮຽນໃນບົດຮຽນ ໄດ້ເກືອບໝົດທຸກຄຳ-ບໍ່ພະຍາຍາມ ຫຼື ພະຍາຍາມ ແຕ່ການສະກົດຄຳບໍ່ຖືກ |

**ເນື້ອໃນຂຽນທວາຍ ບົດການລ້າງຖ້ວຍ**

| | | |
|---|---|---|
| | | ເປີດນ້ຳໃສ່ຊາມ ແລ້ວລ້າງເສດອາຫານທີ່ຕິດຖ້ວຍອອກ, ຖອກນ້ຳທີ່ລ້າງເສດອາຫານອອກຈາກຊາມ, ບີບນ້ຳຢາລ້າງ ຈານໃສ່ຟອຍ ຜັດ ແລ້ວຜັດຖ້ວຍ, ຈານເທື່ອລະໃບ ແລະ ບ່ວງ ເທື່ອລະກ້ານ. ເປີດນ້ຳໃສ່ຊາມ ແລ້ວໄລຖ້ວຍ, ຈານ ແລະ ບ່ວງດ້ວຍນ້ຳສະອາດ ປະມານ 2-3 ເທື່ອ. |
| **4.ຂັ້ນສະຫຼຸບ** | **5ນາທີ** | - ຄູ ແລະ ນັກຮຽນສະຫຼຸບເນື້ອໃນສຳຄັນຂອງບົດຮຽນ ໂດຍໃຫ້ນັກຮຽນສະກົດຄຳຄືນ ແລະ ແນະນຳນັກຮຽນ ຂຽນຄືນຄຳທີ່ ຂຽນຫວາຍຜິດ. |
| ຊົ່ວໂມງທີ 9(45ນາທີ) | | |
| **1.ຂັ້ນນຳເຂົ້າສູ່ບົດຮຽນ** | | - ຄູຈັດນັກຮຽນຫຼິ້ນເກມກ່ອງຄຳສັບປິດສະໜາ.<br>- ຄູກຽມຊຸດບັດຄຳສັບ 8 - 10 ຄຳສັບ 2 ຊຸດຄືກັນໃສ່ ກອງປິດສະໜາ 2 ກອງ: ເປີດນ້ຳ, ຊາມ, ລາງ, ເສດ ອາຫານ, ຖ້ວຍ, ຖອກ , ບີບ, ນ້ຳຢາລ້າງຈານ, ຟອຍ ຜັດ, ໄລ, ສະອາດ, ຂວ້ຳ, ແຫ້ງ...<br>- ຄູໃຫ້ນັກຮຽນເທື່ອລະສອງຄົນອອກມາແຂ່ງຂັນກັນ ອ່ານຄຳສັບ. ຖ້າຄົນໃດອ່ານຄຳສັບຢູ່ໃນກອງປິດສະ ໜາຖືກຕ້ອງ ແລະ ໝົດກ່ອນຄົນນັ້ນເປັນຜູ້ຊະນະ ຜູ້ ຊະນະສາມາດເລືອກເອົາໝູ່ໃນຫ້ອງ 2 ຄົນມາສືບຕໍ່ ຫຼິ້ນເກມ<br>- ຄູຂຽນຄຳສັບທີ່ຫຼິ້ນເກມຜ່ານໄປນັ້ນໃສ່ກະດານ ແລ້ວ ບອກວ່ານັກຮຽນສາມາດນຳໃຊ້ຄຳສັບເຫຼົ່ານີ້ເຂົ້າໃນ ການຕື່ມປະໂຫຍກໃຫ້ສົມບູນ. |
| **2.ຂັ້ນຈັດກິດຈະກຳ ການຮຽນ** | | 11. ຈັດລຽງຄຳສັບ ແລະ ວາະວິໃຫ້ເປັນປະໂຫຍກ<br>ການສອນໃຫ້ນຳໃຊ້ເຕັກນິກການສອນທີ 42 ຢູ່ພາກແນະ ນຳລວມ.<br>ຂັ້ນຕອນການສອນໃຫ້ປະຕິບັດຄືກັນກັບບົດທີ 1 ຊົ່ວໂມງ<br>ທີ 9. |

| | | |
|---|---|---|
| | | - ຄູໃຫ້ນັກຮຽນອ່ານຄຳສັບທີ່ເປັນຕົວຢ່າງໃນ ປະໂຫຍກປົນເປ: ໄລຖ້ວຍ/ປະມານ 2-3 ນໍ້າ/ເປີດນໍ້າ ໃສ່ຊາມ/ດ້ວຍນໍ້າສະອາດ// ແລ້ວ ຈາກນັ້ນ, ໃຫ້ນັກຮຽນ ອ່ານປະໂຫຍກຄຳຕອບ: ເປີດນໍ້າໃສ່ຊາມ ແລ້ວໄລ ຖ້ວຍດ້ວຍນໍ້າສະອາດປະມານ 2-3 ນໍ້າ.<br>- ຄູຈັດນັກຮຽນເປັນກຸ່ມ ເພື່ອຈັດລຽງຄຳສັບ ແລະ ວະລີ ໃຫ້ເປັນປະໂຫຍກ. |
| **3.ຂັ້ນຝຶກປະຕິບັດ ແລະ ນຳໃຊ້** | | - ນັກຮຽນເປັນກຸ່ມຈັດລຽງຄຳສັບ ແລະ ວະລີໃຫ້ເປັນ ປະໂຫຍກ.<br>ຄຳຕອບ:<br>1. ຖອກນໍ້າທີ່ລ້າງເສດອາຫານອອກຈາກຊາມ.<br>2. ຂວໍ້າຖ້ວຍທີ່ລ້າງແລ້ວປະໄວ້ ເພື່ອໃຫ້ມັນແຫ້ງ.<br>3. ເປີດນໍ້າໃສ່ຊາມ ແລ້ວລ້າງເສດອາຫານທີ່ຕິດຖ້ວຍອອກ.<br>4. ບີບນໍ້າຢາລ້າງຈານໃສ່ຟອຍຜັດ ແລ້ວຜັດຖ້ວຍເທື່ອ ລະໃບໃຫ້ທົ່ວ. |
| **4.ຂັ້ນສະຫຼຸບ** | | - ຄູ ແລະ ນັກຮຽນສະຫຼຸບບົດຮຽນໝົດບົດຄືນ ໂດຍເນັ້ນ ກ່ຽວກັບອຸປະກອນ, ຂັ້ນຕອນການລ້າງຖ້ວຍ, ການຕອບ ຄຳຖາມ ແລະ ການຕື່ມຄຳສັບ ແລະ ວະລີ.<br><br>- ການໃຊ້ຄຳກຳມະ: ເປີດ, ບີບ, ໄລ, ຂວໍ້າ ໃນບົດວິທີ ການເຂົ້າໃນການບອກຂັ້ນຕອນ ແລະ ຂຽນບົດຕາມ ໂຄງຮ່າງ. ການນຳໃຊ້ຄຳກຳມະໃສ່ຮູບພາບ ແລະ ການຂຽນຫັດ ຂຽນງາມຖືກຕາມຂະໜາດ, ຮູບແບບ, ສະອາດ ແລະ ເປັນລະບຽບ.<br>- ການສະກົດຄຳຄືນ ແລະ ແນະນຳນັກຮຽນຂຽນຄືນຄຳ ທີ່ຫວາຍຜິດ.<br>- ການຈັດລຽງຄຳສັບ ແລະ ວະລີໃຫ້ເປັນປະໂຫຍກ.<br>- ຄູແນະນຳນັກຮຽນອ່ານບົດອ່ານເສີມ ການລ້າງຜັກ ພ້ອມທັງຕອບຄຳຖາມຢູ່ກ້ອງບົດອ່ານ |
| ➢ ການປະເມີນຕົນເອງສຳລັບຄູ | | |

| ນັກຮຽນທີ່ບັນລຸຈຸດປະສົງຂອງບົດຮຽນ: | ວິທີປັບປຸງການສອນຂອງຄູໃນຄັ້ງຕໍ່ໄປ: |
|---|---|
| | |

ວັນທີ / / ວັນທີ / /

ລາຍເຊັ່ນຄູປະຈຳຫ້ອງ ລາຍເຊັ່ນຄູຝຶກຫັດ

<table>
<tr><td colspan="4">ຂໍ້ມູນທົ່ວໄປ</td></tr>
<tr><td>ຊື່ຄູສອນ</td><td>ຊື່ໂຮງຮຽນ:..................</td><td>ວິຊາ:ພາສາລາວ</td><td>ຊັ້ນຮຽນ ປ3<br>ຈຳນວນນັກຮຽນທັງໝົດ.......ຄົນ,ຍິງ.............ຄົນ.</td></tr>
<tr><td>ບົດທີ21</td><td>ຊື່ ບົດຮຽນ:ການລ້າງຖ້ວຍ</td><td>ວັນທີ ................<br>ເວລາ 45 ຊົ່ວໂມງ</td><td>ຈຳນວນນັກຮຽນທີ່ເຝິກເວົ້າພາສາລາວ:</td></tr>
<tr><td colspan="4">I. ຈຸດປະສົງ<br>ໃຫ້ນັກຮຽນສາມາດ<br>1. ນຳໃຊ້ຄຳສັບທີ່ຮຽນເຂົ້າໃນການບອກຂັ້ນຕອນຕາມຮູບພາບແລະຕື່ມໃສ່ບ່ອນວ່າງໃນປະໂຫຍກ.</td></tr>
<tr><td colspan="4">II. ການວັດແລະປະເມີນຜົນ</td></tr>
</table>

<table>
<tr><td>ການວັດປະເມີນເພື່ອປັບປຸງການຮຽນ<br><br>- ຄູດຳເນີນໃນໄລຍະຮຽນ ໂດຍຜ່ານການສັງເກດ ແລະ ສົນທະນາຖາມຕອບ.</td><td>ການວັດປະເມີນເພື່ອສະຫຼຸບຜົນການຮຽນ<br><br>- ຄູສັງເກດທັກສະການຟັງ ແລະ ການເວົ້າ, ການອ່ານ, ການຂຽນ ແລະ ການຮຽນນິທານຂອງນັກຮຽນ ໂດຍໃຊ້ເກມການໃຫ້ຄະແນນດັ່ງລຸ່ມນີ້:</td></tr>
<tr><td colspan="2">III. ເນື້ອໃນຕົ້ນຕໍ<br><br>1. ການບອກຂັ້ນຕອນການລ້າງຈອກຕາມຮູບພາບ.</td></tr>
<tr><td colspan="2">IV. ສື່ການສອນ<br><br>1. ປຶ້ມແບບຮຽນ ແລະ ຄູ່ມືຄູ<br>2. ບັດຄຳສັບ, ແລະ ບັດຮູບພາບ.<br>3. ບັດຄຳສັບທີ່ໃຊ້ໃນການຫຼິ້ນເກມ<br>➢ ວິທີຊ່ວຍເຫຼືອນັກຮຽນໃນການອ່ານ,ຂຽນບໍ່ໄດ້<br>+ ວິທີຊ່ວຍເຫຼືອນັກຮຽນທີ່ອ່ານບໍ່ໄດ້:<br>1. ຄູຕ້ອງໄດ້ນຳພານັກຮຽນອ່ານຫຼາຍໆເທື່ອ,ອ່ານເລື້ອຍໆ.<br>2. ສອນພິເສດໃຫ້ນັກຮຽນທີ່ອ່ານບໍ່ໄດ້.<br>3. ເພື່ອນຊ່ວຍເພື່ອນ: ນັກຮຽນຜູ້ອ່ານໄດ້ບອກ.<br>4. ແນະນຳຜູ້ປົກຄອງສອນຊ່ວຍ.</td></tr>
<tr><td colspan="2">V. ກິດຈະກຳການຮຽນ-ການສອນ</td></tr>
</table>

| ຊົ່ວໂມງທີ5 (45ນາທີ) | | |
|---|---|---|
| ຂັ້ນຕອນການສອນ | ເວລາ ນາທີ | ກິດຈະກຳ |
| ຂັ້ນນຳເຂົ້າສູ່ບົດຮຽນ | 10 | **-** ຄູແລະນັກຮຽນທຳຄວາມເຄົາລົບເຊິ່ງກັນແລະກັນ<br>- ຄູກວດກາຈຳນວນຄົນທັງໝົດ ຄົນ ຍິງ ຄົນ ຂາດ ຄົນ<br>- ຄູທວນຄືນບົດຮຽນເກົ່າ<br>- ຄູຖາມນັກຮຽນວ່າ ການລ້າງຈອກມີຈັກຂັ້ນຕອນ<br>- ນັກຮຽນຕອບຕາມຄວາມເຂົ້າໃຈ<br>- ຄູຈັດນັກຮຽນຫຼິ້ນເກມຄາດເດົາຄຳສັບ<br>- ຄູກຽມບັດຄຳສັບທີ່ໄດ້ຮຽນ 6-12 ຄຳເຊັ່ນ: ຂວ້ຳ ບິບ, ຮວາດ, ຖ້ວຍ, ຫົດ, ຄ້າງ, ມວຍ , ເປີດ , ຈອກ, ສະອາດ ,ຊາມ, ຟອຍ ຜັດ ...<br>- ຄູຈະບໍ່ໃຫ້ນັກຮຽນເຫັນບັດຄຳທີ່ຈະໃຫ້ນັກຮຽນຄາດເດົາ.<br>- ຄູເອົາບັດຄຳໜຶ່ງອອກມາ ແລ້ວໃຊ້ເຈ້ຍບັງໄວ້ ແລະ ໃຫ້ເຫັນແຕ່ຕົວອັກສອນທຳອິດ ຫຼື ສັນຍະລັກທຳອິດ ຂອງຄຳສັບນັ້ນໃຫ້ນັກຮຽນເບິ່ງ.<br>- ຄູໃຫ້ນັກຮຽນຄາດເດົາວ່າຈະແມ່ນຄຳສັບໃດ. ນັກຮຽນ ຄາດເດົາ. ຄູເວົ້າ ແລະ ຖາມຕໍ່ເຊັ່ນ: ຫຼານເດົາຖືກແລ້ວ ຕົວອັກສອນຕໍ່ໄປຈະແມ່ນຫຍັງ?<br>- ຄູເປີດຕົວອັກສອນ ຫຼື ເຄື່ອງໝາຍທີສອງ ແລະ ບອກ ໃຫ້ນັກຮຽນເດົາຕໍ່ວ່າ ຈະແມ່ນຄຳສັບໃດ?<br>- ຄູຖາມນັກຮຽນຜູ້ທີ່ເດົາກ່ອນໜ້ານີ້ວ່າ ນັກຮຽນຍັງຄິດ ວ່າແມ່ນຄຳຕອບເກົ່າບໍ່ ຫຼື ຈະປ່ຽນຄຳຕອບ.<br>- ຄູຖາມນັກຮຽນໃນຫ້ອງວ່ານັກຮຽນຄົນນັ້ນຄາດເດົາ ຖືກບໍ່. ຈາກນັ້ນ, ຖາມວ່າ ຕົວອັກສອນຕໍ່ໄປຈະແມ່ນ ຫຍັງ?<br>- ຄູເປີດຕົວອັກສອນ ຫຼື ເຄື່ອງໝາຍຕໍ່ໄປ ແລະ ເຮັດໄປ ເລື້ອຍໆຈົນກວ່າຕົວອັກສອນຈະຄົບເປັນຄຳສັບ. |

| | | |
|---|---|---|
| | | - ຄູເຮັດຕາມຂັ້ນຕອນດຽວກັນກັບຄຳສັບອື່ນໆ. |
| ຂັ້ນຈັດກິດຈະກຳການຮຽນ | 15 | **6. ອ່ານແລະສັງເກດຄຳນາມ**<br>- ຄູໃຫ້ນັກຮຽນອ່ານຕົວຢ່າງໃນປຶ້ມແບບຮຽນ.<br>- ຄູຖາມວ່າ ຄຳນາມແມ່ນຄຳແນວໃດ?<br>- ນັກຮຽນຕອບຕາມຄວາມເຂົ້າໃຈ.<br>- ຄູອະທິບາຍຄຳນາມ ແມ່ນຄຳທີ່ໃຊ້ບອກເຖິງຊື່ຂອງ ຄົນ, ສັດ ແລະ ວັດຖຸສິ່ງຂອງຕ່າງໆ ເຊັ່ນ: ຟອຍຜັດ, ນ້ຳຢາລ້າງຈານ, ຖ້ວຍ ...<br>- ຄູສະແດງບົດບາດສົມມຸດ ແລ້ວໃຫ້ນັກຮຽນບອກວ່າ ຄູກຳລັງເຮັດຫຍັງ? ຄູສະແດງ ເຊັ່ນ: ຂຽນກະດານ, ນັ່ງຕັ້ງ, ຍ່າງໄປ.<br>- ຄູຖາມວ່ານາຍຄູເຮັດຫຍັງແດ່?<br>- ນັກຮຽນຕອບຕາມຄວາມເຂົ້າໃຈ.<br>- ຄູບອກນັກຮຽນວ່າ ຂຽນ, ນັ່ງ, ຍ່າງ ສິ່ງທີ່ຄູປະຕິບັດ ຜ່ານໄປນັ້ນແມ່ນສະແດງເຖິງການເຄື່ອນໄຫວ.<br>- ຄູໃຫ້ນັກຮຽນເອົາຄຳນາມດັ່ງ: ຟອຍຜັດ,ນ້ຳຢາລ້າງຈານ,ຖ້ວຍ... ແຕ່ງເປັນ ປະໂຫຍກປາກເປົ່າ (ໂດຍໃຫ້ເປັນປະໂຫຍກອື່ນນອກຈາກບົດຮຽນກໍໄດ້).<br>- ຄູບອກວ່າຕໍ່ໄປຈະໄດ້ເຮັດກິດຈະກຳການຈັບຄູ່ຄຳສັບທີ່ບອກການກະທຳໃສ່ຮູບພາບຢູ່ຂໍ້ທີ7.<br>**7. ຈັບຄູ່ຄຳກຳມະໃສ່ຮັບຮູບພາບ**<br>- ຄູທົບທວນຄວາມໝາຍຂອງຄຳສັບທີ່ບອກການກະທຳ ແລະ ເຮັດທ່າທາງປະກອບ.<br>- ຄູໃຫ້ນັກຮຽນເວົ້າຄຳສັບລຸ່ມນີ້ ແລະ ເຮັດທ່າທາງປະກອບ.<br>ສໍ → ຂ<br>ຽນ |

| | | |
|---|---|---|
| | | ໂອ → ຕັກ<br>ຕັ່ງ → ນັ່ງ<br>ເກີບ → ໃສ່<br>ເສື້ອ → ນຸ່ງ<br>ເຊືອກ → ມັດ<br>- ຄູອະທິບາຍຕື່ມອີກວ່າ ບາງຄຳສາມາດບອກການກະທຳໄດ້ຫຼາຍຢ່າງເຊັ່ນ: ພັບ ປຶ້ມ, ເສື້ອ ...<br>- ຄູໃຫ້ນັກຮຽນອ່ານຄຳກຳມະ ແລ້ວສັງເກດຮູບພາບຂໍ້ ທີ 7 ໃນປຶ້ມແບບຮຽນ.<br>- ຄູບອກນັກຮຽນວ່າ ນັກຮຽນຈະໄດ້ຈັບຄູ່ຄຳກຳມະໃສ່ ຮູບພາບ. ຈາກນັ້ນ, ໃຫ້ຂຽນໃສ່ປຶ້ມຂຽນ.<br>- ຄູຍົກຕົວຢ່າງຄຳສັບ ເປີດ ຈັບຄູ່ໃສ່ກັບຮູບພາບ ກ໊ອກ ນ້ຳ ຕາມປຶ້ມແບບຮຽນໃຫ້ນັກຮຽນເບິ່ງ.<br>- ຄູຈັດນັກຮຽນເປັນຄູ່ ຫຼື ເປັນກຸ່ມ ເພື່ອຈັບຄູ່ຄຳກຳມະ ໃສ່ຮູບພາບ. ຈາກນັ້ນ, ໃຫ້ຂຽນໃສ່ປຶ້ມຂຽນ. |
| ຂັ້ນຝຶກປະຕິບັດ | 20 | - ນັກຮຽນກຸ່ມອື່ນຟັງ ແລະ ສົມທຽບໃສ່ຄຳຕອບຂອງ ກຸ່ມຕົນ.<br>- ຄູເລືອກຂຽນຄຳຕອບທີ່ຖືກຕ້ອງໃສ່ກະດານ.<br>- ນັກຮຽນແຕ່ລະກຸ່ມກວດ ແລະ ແປງໃຫ້ຖືກຕ້ອງ.<br>- ນັກຮຽນໝົດຫ້ອງອ່ານຄຳຕອບຢູ່ກະດານພ້ອມກັນ.<br>ຄຳຕອບ:<br>ເປີດ → ເປີດກ໊ອກນ້ຳໃສ່ຊາມ<br>ຂວ້ຳ → ຂວ້ຳຈານໃສ່ຖ້ານ<br>ບີບ → ບີບນ້ຳຢາລ້າງຈານໃສ່ຟອຍຜັດ<br>ໄລ → ໄລຈອກ<br>ຜັດ → ຜັດຈານ |
| ຂັ້ນສະຫຼຸບ | 5 | - ຄູສະຫຼຸບເນື້ອໃນສຳຄັນຂອງບົດຮຽນໃນ 5 ຊົ່ວໂມງທີ່ຜ່ານມາ.ໂດຍເນັ້ນການນຳໃຊ້ຄຳກຳມະໃສ່ຮູບພາບ |

| ➢ ການປະເມີນຕົນເອງສໍາລັບຄູ | |
|---|---|
| ນັກຮຽນທີບັນລຸຈຸດສີງຂອງບົດຮຽນ:<br>- ນັກຮຽນສາມາດຕອບບົດຮຽນໄດ້ຖືກຕ້ອງຕາມບົດຮຽນ.<br>1. ນາງ ຄ້ອບພີ<br>2. ນາງ ຈີງເໝີຍ | ການປັບປຸງການສອນຂອງຄູໃນຄັ້ງຕໍໄປ:<br>- ຍັງຂາດປະສົບການການສອນຕໍ່ໄປຈະພະຍາຍາມຖອດຖອນບົດຮຽນນໍາຄູອາຈານເພື່ອພັດທະນາການສອນຄັ້ງຕໍໄປໃຫ້ດີຂຶ້ນ. |

ວັນທີ...../...../..........　　　　ວັນທີ ...../...../.......

ລາຍເຊັນວິຊາການ　　　　ລາຍເຊັນຄູປະຈໍາຫ້ອງ

# ບົດສອນ

| ຂໍ້ມູນທົ່ວໄປ | | | |
|---|---|---|---|
| ຊື່ຄູສອນ | ຊື່ໂຮງຮຽນ | ວິຊາ ພາສາລາວ | ຂັ້ນປີ 2<br>ຈຳນວນນັກຮຽນທັງໝົດ......ຄົນ ຍິງ .........ຄົນ |
| ບົດທີ 25 | ຊື່ບົດຮຽນ ບົດພັນລະນາ | ວັນທີ ..............<br>ເວລາ 45 ນາທີ | ຈຳນວນນັກຮຽນທີ່ຕ້ອງຝຶກພາສາລາວ |

**I ຈຸດປະສົງ**

**ໃຫ້ນັກຮຽນສາມາດ:**

1. ບອກການພັນລະນາທີ່ເວົ້າກ່ຽວກັບສິ່ງແວດລ້ອມ (ຕົ້ນໄມ້).
2. ບອກຄຳສັບທີ່ພັນລະນາກ່ຽວກັບສິ່ງຂອງ ແລະ ພຶດຕ່າງໆ.

**II ການວັດແລະປະເມີນ**

- ຄູປະເມີນການຟັງ ແລະ ເວົ້າຂອງນັກຮຽນຢູ່ໃນບົດພັນລະນາ ໂດຍ ໃສ່ເກນຂໍທີ18

**III ເນື້ອໃນຕົ້ນຕໍ**

1. ການພັນລະນາ

**IV ສື່ການສອນ**

1. ປຶ້ມແບບຮຽນ, ປຶ້ມຄູ່ມືຄູ, ເຈ້ຍຕ່າງໆ, ຮູບພາບກ່ຽວກັບບົດ.(ຕົ້ນໄມ້,ສັດ,ຄົນປຸກຕົ້ນໄມ້,ຜູ້ຄົນ)

+ ການຊ່ວຍເຫຼືອນັກຮຽນທີ່ຕ້ອງການຝຶກພາສາລາວ:ວິທີອ່ານຄຳສັບ,ໂດຍເວົ້າຊ້າໆ ແລະ ຫຼາຍໆເທື່ອ

**V ກິດຈະກຳການຮຽນ-ການສອນ**

| ຊື່ວໂມງທີ1 | ເວລາ45 ນາທີ | ກິດຈະກຳ |
| --- | --- | --- |
| ຂັ້ນນຳເຂົ້າສູ່ບົດຮຽນ | 5ນາທີ | - ຄູທຳຄວາມເຄົາລົບນັກຮຽນ<br>- ກວດກາຈຳນວນພົນ<br>- ຄູແນະນຳຊື່,ຈຸດພິເສດ(ຖ້າເປັນຄູໃໝ່)<br>- ສະເໜີແຂກເຂົ້າຮ່ວມ(ຖ້າມີ)<br>- ທວນຄືນ ການຝຶກເວົ້າ ແລະ ການອ່ານຄຳສັບ ບົດທີ24 |
| ຂັ້ນກິດຈະກຳການຮຽນ-ການສອນ | 15ນາທີ | ການເວົ້າໃນບົດພັນລະນາ<br>**1 ເບິ່ງ ແລະ ພັນລະນາກ່ຽວກັບຮູບພາບເຫຼົ່ານີ້**<br>ການສອນໃຫ້ນຳໃຊ້ເຕັກນິກການສອນທີ 8ກ ຢູ່ໃນພາກແນະນຳລວມ.<br>1) ຄູໃຫ້ນັກຮຽນເບິ່ງຮູບພາບ ແລະ ບອກສິ່ງທີ່ເຂົາເຈົ້າເຫັນ.<br>ນັກຮຽນຕອບ: **ຕົ້ນໄມ້, ປ່າ, ສັດ, ເບ້ຍໄມ້, ຜູ້ຄົນ, ດິນເປົ່າຫວ່າງ.**<br>ຄູໃຫ້ນັກຮຽນບອກກິດຈະກຳ ຫຼື ທ່າທາງຫຍັງທີ່ເຂົາເຈົ້າໄດ້ເຫັນ. ນັກຮຽນຕອບ: **ການກິນ, ການແກວ່ງ ຫຼື ໄກວ, ການຄານ, ການເບິ່ງ, ການໃຫຄວາມນັບຖື, ການປູກ, ການຫອບ**<br>2) ຄູໃຫ້ນັກຮຽນພັນລະນາສິ່ງຂອງທີ່ເຂົາເຈົ້າເຫັນ.<br>ນັກຮຽນຕອບ: **ໃຫຍ່, ສູງ, ຕົ້ນໄມ້, ດິນເປົ່າຫວ່າງ, ຕົ້ນໄມ້ນ້ອຍ, ຄົນພວມນົບ, ຄົນພວມປູກຕົ້ນໄມ້, ຄົນເຈັບ ຫຼື ຄົນຜູ້ທີ່ທັນໃຈບໍ່ໄດ້ດີ.**<br>ໝາຍເຫດ: ຖ້ານັກຮຽນບໍ່ສາມາດພັນລະນາໄດ້, ຄູຖາມຄຳຖາມເພື່ອກ<br>ຕົວຢ່າງ: ຄົນນີ້ແມ່ນໃຜ? (ເດັກນ້ອຍພວມປູກຕົ້ນໄມ້)<br>- ຄູໃຫ້ນັກຮຽນຄິດກ່ຽວກັບຄວາມໝາຍຂອງຮູບພາບ. |

| | | |
|---|---|---|
| | | - ຄູຖາມ: ບົດຮຽນຜ່ານມາພວກເຮົາຮຽນກ່ຽວກັບນິທານ; ບົດນີ້ບໍ່ແມ່ນນິທານ ມັນແມ່ນການພັນລະນາ. ນັກຮຽນ ຄິດວ່າ ມັນພັນລະນາກ່ຽວກັບຫຍັງ?<br>ນັກຮຽນສົນທະນາ ແລະ ບອກເຫດຜົນຂອງເຂົາເຈົ້າ (ເຂົາເຈົ້າອາດຈະເວົ້າກ່ຽວກັບ ຕົ້ນໄມ້ ຫຼື ຕົ້ນໃຫຍ່ ຫຼື ເຂົາເຈົ້າອາດ ຈະບໍ່ເວົ້າ ຄູຍັງບໍ່ເວົ້າເທື່ອ).<br>- ຄູທົບທວນໃຫ້ນັກຮຽນຮູ້ວ່າເຂົາເຈົ້າໄດ້ຮຽນການພັນລະນາໃນພາກຮຽນ 1 ແລ້ວ. ພວກເຂົາອ່ານກ່ຽວກັບມົດ. ວັກຕອນ ທີ 1 ຂອງການພັນລະນາແມ່ນການເວົ້າກ່ຽວກັບປະເພດຂອງສິ່ງຂອງ. ດັ່ງນັ້ນ ຮູບທີ 1 ບອກໃຫ້ເຮົາ ຮູ້ວ່າ ການພັນລະນາ ແມ່ນກ່ຽວກັບຫຍັງ.<br>- ຄູຖາມ: ມັນເວົ້າກ່ຽວກັບຫຍັງ?<br>ນັກຮຽນໃຫ້ເຫດຜົນ **ຕົ້ນໄມ້, ຕົ້ນໄມ້ສູງ, ຕົ້ນໄມ້ໃຫຍ່, ຕົ້ນໄມ້ແກ່.**<br>- ຄູບອກນັກຮຽນວ່າ ທີ່ເຂົາເຈົ້າຈະອ່ານຕໍ່ໄປນີ້ ມີຫົວຂໍ້ວ່າ “ຕົ້ນໄມ້ແກ່. ຄູຂຽນຫົວຂໍ້ດັ່ງກ່າວໃສ່ກະດານ.<br>- ຄູໃຫ້ນັກຮຽນເບິ່ງຮູບພາບ ແລະ ຄາດເດົາຂໍ້ມູນ ເນື້ອໃນຂອງບົດເລື່ອງຈະມີຫຍັງແດ່ສຳລັບຫົວຂໍ້ “ຕົ້ນໄມ້ແກ່” ນີ້. ນັກຮຽນບອກເຫດຜົນ ແລະ ບອກວ່າ ຮູບໃດທີ່ບອກເຫດຜົນດັ່ງກ່າວນັ້ນ.<br>- ຄູຂຽນຄຳສັບ ຫຼື ວະລີທີ່ສຳຄັນຈຳນວນໜຶ່ງໃສ່ກະດານ.<br>ໝາຍເຫດ: ຖ້າມັນຍາກ ໃຫ້ຄູຊ່ວຍດ້ວຍການຖາມຄຳຖາມ<br>ຕົວຢ່າງ:<br>ຮູບທີ 1: ຕົ້ນໄມ້ແກ່ເປັນຄືແນວໃດ (ໃຫຍ່ ແລະ ສູງຫຼາຍ) ໂດຍທົ່ວໄປເຮົາຊອກເຫັນຕົ້ນໄມ້ໃຫຍ່ຢູ່ໃສ? (ຢູ່ໃນປ່າດົງ).<br>ຮູບທີ 2: ຈຸດພິເສດຂອງຕົ້ນໄມ້ແກ່ມີຄືແນວໃດ?<br>ຮູບທີ 3: ຄົນເຮົາຄວນເຮັດແນວໃດແດ່ຕໍ່ກັບຕົ້ນໄມ້ແກ່? (ປົກປັກຮັກສາ, ພວກເຮົາປູກຕົ້ນໄມ້ໃໝ່).<br>ຮູບທີ 4: ມີຫຍັງອີກບໍ່ທີ່ຄົນເຮັດຕໍ່ກັບຕົ້ນໄມ້? (ຕັດ). ຄົນເຫຼົ່ານີ້ບໍ່ສາມາດຫາຍໃຈໄດ້ດີ, ເປັນຫຍັງ? (ອາກາດບໍ່ດີ) ເປັນຫຍັງ? (ເພາະວ່າມັນບໍ່ມີຕົ້ນໄມ້). |
| ຂັ້ນເຝິກປະຕິບັດ ແລະນຳໃຊ້ | 20ນາທີ | ການເວົ້າໃນບົດເລົ່າຄືນ<br>ການສອນໃຫ້ນຳໃຊ້ເຕັກນິກການສອນທີ 8ກ ຢູ່ໃນພາກແນະນຳລວມ - ສືບຕໍ່ນຳໃຊ້ບົດຮຽນຂໍ້ທີ 1 ເພື່ອຝຶກປະຕິບັດ ແລະ ນຳໃຊ້. |

| | | |
|---|---|---|
| | | 3) ຄູໃຫ້ນັກຮຽນສົນທະນາເປັນກຸ່ມແລ້ວເລືອກເອົາ 1 ປະໂຫຍກທີ່ສົມບູນສຳລັບແຕ່ລະຮູບພາບ ຊຶ່ງອາດຈະຢູ່ບົດເລື່ອງພັນລະນາທີ່ເຂົາເຈົ້າຈະໄດ້ອ່ານ.<br>ນັກຮຽນສົນທະນາ ແລ້ວແຕ່ງປະໂຫຍກສຳລັບແຕ່ລະຮູບພາບ.<br>ຄູໄປຫາແຕ່ລະກຸ່ມເພື່ອຊ່ວຍເຫຼືອເຂົາເຈົ້າໃນເວລາທີ່ເຂົາເຈົ້າຕ້ອງການ.<br>ຕອນທ້າຍ ນັກຮຽນຝຶກເພື່ອສະເໜີປະໂຫຍກຂອງເຂົາເຈົ້າດ້ວຍການຊີ້ໃສ່ແຕ່ລະຮູບ ແລ້ວເວົ້າປະໂຫຍກນຳກັນ.<br>- ສະຫຼຸບຂໍ້ທີ 1 ເບິ່ງ ແລະ ພັນລະນາກ່ຽວກັບຮູບພາບເຫຼົ່ານີ້ການສອນໃຫ້ນຳໃຊ້ເຕັກນິກການສອນທີ 8ກ ຢູ່ໃນພາກແນະນຳ,<br>4) ຄູໃຫ້ນັກຮຽນກັບບ່ອນແຕ່ລະກຸ່ມເວົ້າປະໂຫຍກຂອງຕົນເອງຢ່າງໜ້ອຍ 1 ປະໂຫຍກ ໂດຍການຊີ້ໃສ່ຮູບພາບ ແລະ ສະມາຊິກໃນກຸ່ມເວົ້າປະໂຫຍກໄປພ້ອມກັນ.<br>**ສະຫຼຸບຫຍໍ້**<br>ແຕ່ລະກຸ່ມມີວິທີເວົ້າປະໂຫຍກຂອງແຕ່ລະຮູບແຕກຕ່າງກັນ ເຖິງແມ່ນວ່າບາງປະໂຫຍກຈະຄ້າຍໆກັນ. ແຕ່ລະກຸ່ມຂຽນປະໂຫຍກພັນລະນາທີ່ຖືກ ຫຼື ເຂົ້າກັບຫົວຂໍ້ “ຕົ້ນໄມ້ແກ່” ແລະ ບອກຂໍ້ມູນກ່ຽວກັບ “ຕົ້ນໄມ້ແກ່".ປະໂຫຍກໃນເລື່ອງພັນລະນາແຕກຕ່າງຈາກປະໂຫຍກໃນເລື່ອງນິທານ.<br>**ຕົວຢ່າງ**: ເຮົາບໍ່ໄດ້ເລີ່ມຕົ້ນປະໂຫຍກດ້ວຍ “ຄັ້ງໜຶ່ງ ຍັງມີຕົ້ນໄມ້ແກ່ຕົ້ນໜຶ່ງຢູ່ໃນປ່າ” ແຕ່ເຮົາອາດເລີ່ມຕົ້ນດ້ວຍ “ຕົ້ນ ໄມ້ແກ່ສາມາດຊອກເຫັນໄດ້ຢູ່ໃນປ່າດົງ”. |
| ຂັ້ນສະຫຼຸບ | 5ນາທີ | ຄູສະຫຼຸບເນື້ອໃນສຳຄັນຂອງບົດຮຽນໃນ 1 ຊົ່ວໂມງທີ່ຜ່ານມາ. |
| ການວັດແລະປະເມີນຕົນເອງສຳລັບຄູ | | |
| ນັກຮຽນທີ່ບັນລຸຈຸດປະສົງຂອງບົດຮຽນ | | ວິທີປັບປຸງການສອນຂອງຄູໃນບົດຕໍ່ໄປ |

ວັນທີ..../..../.....                ວັນທີ..../..../......                ວັນທີ..../..../.....

ເຊັນຜູ້ອຳນວຍການ                ເຊັນວິຊາການ                ເຊັນຄູປະຈຳຫ້ອງ

**ບົດສອນ**

**ວິຊາ ພາສາລາວ**

<table>
<tr><td colspan="4">ຂໍ້ມູນທົ່ວໄປ</td></tr>
<tr><td>ຊື່ຄູສອນ:</td><td>ຊື່ໂຮງຮຽນ:</td><td>ວິຊາ: ພາສາລາວ</td><td>ຊັ້ນປ4<br>ຈຳນວນນັກຮຽນ 24 ຄົນ,ຍິງ 13 ຄົນ</td></tr>
<tr><td>ບົດທີ23</td><td>ຊື່ບົດຮຽນ:ນິທານອັດສະຈັນ</td><td>ວັນທີ<br>ເວລາ: 45 ນາທີ</td><td>ຈຳນວນນັກຮຽນທີ່ຕ້ອງຝຶກເວົ້າພາສາລາວ</td></tr>
<tr><td colspan="4">I ຈຸດປະສົງ:<br>ໃຫ້ນັກຮຽນສາມາດ:<br>1. ໃຊ້ວິທີການອ່ານຄຳຖາມ ຖືກ ຫຼື ຜິດ (ຄຳຖາມ).<br>2. ອ່ານ ແລະ ເຂົ້າໃຈນິທານ.<br>3. ສະແດງບົດບາດສົມມຸດຈາກເລື່ອງ<br>4. ຈຳແນກສິ່ງມະຫັດສະຈັນໃນເລື່ອງ<br>❖ ວິທີຊ່ວຍເຫຼືອນັກຮຽນໃນການອ່ານພາສາລາວ<br>- ໃຫ້ນັກຮຽນບອກສຳສັບທີ່ອ່ານຍາກອອກມາ<br>- ຄູພານັກຮຽນອ່ານແລ້ວໃຫ້ນັກຮຽນອ່ານຕາມ<br>- ຄູແປຄວາມໝາຍຂອງຄຳສັບແລ້ວນັກຮຽນອ່ານເອງອີກເທື່ອ<br>- ຄູໃຫ້ນັກຮຽນຝຶກອ່ານດ້ວຍຕົນເອງຫຼາຍໆຄັ້ງ<br>- ຄູບອກນັກຮຽນຝຶກອ່ານດ້ວຍຕົນເອງຢູ່ບ້ານ</td></tr>
<tr><td colspan="4">II ການວັດ ແລະ ປະເມີນ</td></tr>
</table>

<table>
<tr><td>ວິທີການວັດປະເມີນເພື່ອປັບປຸງການຮຽນ<br>- ສັງເກດຄວາມຖືກຕ້ອງໃນການ ຕອບຄຳຖາມ ແລະ ປະຕິບັດ ກິດຈະກຳ.</td><td>ວິທີການວັດປະເມີນເພື່ອສະຫຼຸບການຮຽນ<br>- 2. ການເວົ້າ: ໃຊ້ເກນການໃຫ້ຄະແນນ S3 ໂດຍ ສ້າງສຳລັບໜ້າວຽກໃນຊົ່ວໂມງທີ 2<br><table><tr><td>2</td><td>ສາມາດສຳເລັດໜ້າວຽກຂອງການເວົ້າຕາມການ ແນະນຳ.</td></tr><tr><td>1</td><td>ສາມາດສຳເລັດໜ້າວຽກຂອງການເວົ້າຕາມການ ແນະນຳ ແຕ່ຍັງຕ້ອງການຄວາມຊ່ວຍເຫຼືອ ແລະ ຄຳ ແນະນຳ.</td></tr><tr><td>0</td><td>ຍັງບໍ່ທັນສາມາດສຳເລັດໜ້າວຽກຂອງການເວົ້າ.</td></tr></table></td></tr>
<tr><td colspan="2">III ເນື້ອໃນຕົ້ນຕໍ<br>➢ . ແນວຄິດຂອງເລື່ອງ: ເວົ້າເຖິງຄວາມປາກຮັ່ງປາກມີ ລືມສ່ຽວ ໂດຍເບິ່ງຂ້າມຄວາມເປັນຈິງ.</td></tr>
<tr><td colspan="2">IV ສື່ການສອນ<br>- ປຶ້ມແບບຮຽນ ແລະ ປຶ້ມຄູ່ມືຄູພາສາລາວ ປ4<br>- ບົດສອນ<br>- ບັດປະໂຫຍກ: ນິທານແມ່ນຫຍັງ</td></tr>
<tr><td colspan="2">V ກິດຈະກຳການຮຽນ-ການສອນ</td></tr>
<tr><td colspan="2">ຊົ່ວໂມງທີ 1-2</td></tr>
</table>

| ຂັ້ນຕອນການສອນ | ເວລາ | ກິດຈະກຳ |
|---|---|---|
| ຂັ້ນນຳເຂົ້າສູ່ບົດຮຽນ | 5 ນາທີ | - ຄູ ແລະນັກຮຽນທັກທາຍກັນ<br>- ກວດກາຈຳນວນພົນ<br>- ສະເໜີແຂກເຂົ້າຮ່ວມ<br>- ຄູເອົາບັດຄຳສັບຕິດໃສ່ກະດານ ແລະ ແນະນຳການລະດົມສະ ໝອງສັ້ນໆ ນິທານແມ່ນຫຍັງ?<br>- ນັກຮຽນຕອບຕາມຄວາມເຂົ້າໃຈ. |

| | | |
|---|---|---|
| | | - ຄູຖາມນັກຮຽນວ່າ ນິທານມີເລື່ອງໃດແດ່? ໃຫ້ນັກຮຽນ ຍົກຕົວຢ່າງ?<br>- ຄູບອກວ່າ ນັກຮຽນຈະປະຕິບັດກິດຈະກຳກ່ຽວກັບນິທານ ຕ່າງໆ ແລະ ພິຈາລະນາຄຳຖາມນີ້ ໃນບົດຮຽນຕໍ່ໄປ. |
| ຂັ້ນຈັດກິດຈະກຳການຮຽນ | 40ນາທີ | **ພວກເຮົາເລີ່ມຕົ້ນເທາະ**<br>**1. ຕອບຄຳຖາມ ໂດຍອີງໃສ່ຮູບພາບ (ກ່ອນການອ່ານ 10 ນາທີ)**<br>- ຄູບອກນັກຮຽນ ຈະໃຊ້ຄຳຖາມທີ່ເປັນວິທີ ກ່ອນ ການອ່ານນິທານເລື່ອງໃໝ່ໃນອາທິດນີ້.<br>- ຄູເອົາຮູບໃຫ້ນັກຮຽນເບິ່ງ<br>- ຄູໃຫ້ນັກຮຽນເປີດປຶ້ມແບບຮຽນຂໍ້ທີ 1 ແລະ ເບິ່ງຮູບ ພາບ. ຊຸກຍູ້ໃຫ້ນັກຮຽນຖາມຄຳຖາມກ່ຽວກັບຮູບພາບ ແລະ ຂຽນຄຳຖາມໃສ່ກະດານ.<br>- ຫຼັງຈາກຂຽນຄຳຖາມຈຳນວນໜຶ່ງ, ຄູໃຫ້ນັກຮຽນຕອບ ຄຳຖາມຢູ່ກະດານ ເພື່ອໃຫ້ແນ່ໃຈວ່າ ນັກຮຽນມີເຫດ ຜົນ ໃນເວລາຕອບຄຳຖາມ.<br>**2. ບອກຄຳສັບ ໂດຍອີງໃສ່ຮູບພາບ ແລ້ວຕື່ມໃສ່ ບ່ອນວ່າງ (ຄຳສັບສຳຄັນ 10 ນາທີ)**<br>- ຄູໃຫ້ນັກຮຽນເປີດປຶ້ມແບບຮຽນຂໍ້ທີ 2. ຄູໃຫ້ນັກຮຽນເຮັດວຽກເປັນຄູ່ ເພື່ອອ່ານຄຳສັບຕ່າງໆ ໃນປຶ້ມແບບຮຽນ ແລະ ການຈັບຄູ່ຄຳສັບກັບຮູບພາບ ທີ່ຢູ່ຂໍ້ທີ 1 ດ້ວຍການຊີ້ໄປທີ່ອົງປະກອບທີ່ແຕກຕ່າງ ໃນຮູບພາບ. ຫຼັງຈາກນັ້ນ , ນັກຮຽນຕື່ມຄຳສັບໃສ່ບ່ອນ ວ່າງຈາກປຶ້ມແບບຮຽນແລ້ວຂຽນໃສ່ປຶ້ມຂຽນຂອງ ຕົນເອງ.<br>**ຄຳຕອບ:** 1. ຫີງ, 2. ພໍ່ນາ ແລະ ໜອງ 3. ວິເສດ (ມະຫັດ ສະຈັນ), ດອກໄມ້ຄຳ, 4. ກ້ອນຫີນ<br>**3. ຟັງ ແລະ ຕັ້ງຄຳຖາມ ໂດຍອີງໃສ່ບັດຄຳສັບ (ການຟັງ 10 ນາທີ)**<br>- ຄູບອກນັກຮຽນວ່າ ຕໍ່ໄປນີ້ ຈະຟັງນິທານ ແລະ ນຳໃຊ້ ບັດຄຳຖາມ ໃນຂະນະອ່ານ (ຈາກບົດທີ 21) ເພື່ອ ຊ່ວຍໃຫ້ ເຂົ້າໃຈສິ່ງທີ່ພວມອ່ານ.<br>- ອະທິບາຍວ່າ ຄູຈະອ່ານເລື່ອງ ຫຼື ສະແດງກ່ຽວກັບ ບົດເລື່ອງເປັນຕອນໆ. ຫຼັງຈາກອ່ານແຕ່ລະຕອນແລ້ວ ໃຫ້ຢຸດ ແລະ ຈົກເອົາບັດຄຳສັບຈາກກອງ.<br>- ນັກຮຽນຖາມຄຳຖາມກ່ຽວກັບບົດເລື່ອງ ໂດຍນຳໃຊ້ ຄຳສັບຢູ່ໃນບັດ. ຈາກນັ້ນ, ໃຫ້ນັກຮຽນຄົນອື່ນຕອບ. ຄູອ່ານ ຫຼື ຟັງຄຣິບສຽງກ່ຽວກັບ ພໍ່ນາກັບຫີນວິເສດ ໃນຫ້ອງຮຽນເປັນຕອນໆ. |

| | | |
|---|---|---|
| | | **4. ຕອບຄຳຖາມດ້ວຍຄຳວ່າ ແມ່ນ ຫຼື ບໍ່ແມ່ນ (ການຄິດກ່ຽວກັບເລື່ອງ 10 ນາທີ)**<br>- ຄູອະທິບາຍວ່າ ຈະໄດ້ຮຽນວິທີການຕັ້ງຄຳຖາມແບບ ໃໝ່ ທີ່ສາມາດນຳໃຊ້ຫຼັງການອ່ານ ຊຶ່ງເອີ້ນວ່າ "ແມ່ນ ຫຼື ບໍ່ແມ່ນ".<br>- ຄູຖາມຄຳຖາມລຸ່ມນີ້ ແລະ ນັກຮຽນຕອບດ້ວຍ ແມ່ນ ຫຼື ບໍ່ແມ່ນ.<br>• ພໍ່ນາຢູ່ໃນບ້ານໃກ້ໜອງນ້ຳໃຫຍ່ແມ່ນບໍ່? (ແມ່ນ)<br>• ພໍ່ນາຈັບປາໄດ້ຫຼາຍແມ່ນບໍ່? (ບໍ່ແມ່ນ)<br>• ຫີນສີຂາວໄດ້ກາຍເປັນຫົງຂາວ ທີ່ສວຍງາມຢ່າງ ມະຫັດສະຈັນແມ່ນບໍ່? (ແມ່ນ)<br>• ພໍ່ນາໄດ້ເອົາດອກໄມ້ຫຼາຍເທົ່າທີ່ລາວສາມາດ ເອົາມາໄດ້ແມ່ນບໍ່? (ບໍ່ແມ່ນ)<br>• ສ່ຽວຂອງພໍ່ນາໄດ້ກາຍເປັນຄົນຮັ່ງມີຄືກັບພໍ່ນາ ແມ່ນບໍ່? (ບໍ່ແມ່ນ)<br>- ຄູໃຫ້ນັກຮຽນແຕ່ລະຄົນຄິດຫາຄຳຖາມ ແລະ ແລກ ປ່ຽນຄຳຖາມຂອງຕົນກັບໝູ່ໃນຫ້ອງຮຽນ. ນັກຮຽນ ຕອບຄຳຖາມຂອງກັນ ແລະ ກັນດ້ວຍ ແມ່ນ ຫຼື ບໍ່ ແມ່ນ ນັກຮຽນກວດເບິ່ງວ່າ ຄຳຕອບຂອງເຂົາເຈົ້າ ຖືກຕ້ອງໃນກິດຈະກຳຕໍ່ໄປ ຫຼື ບໍ່. |
| ຂັ້ນຝຶກປະຕິບັດ ແລະ ນຳໃຊ້ | 40 ນາທີ | **5. ອ່ານເລື່ອງ ພໍ່ນາກັບຫີນວິເສດ (ການອານ 10 ນາທີ)**<br>- ຄູແບ່ງນັກຮຽນເປັນກຸ່ມ, ກຸ່ມລະ 4 ຄົນ, ນັກຮຽນຜັດ ປ່ຽນກັນອ່ານບົດເລື່ອງໃນກຸ່ມ.<br>ຫຼັງຈາກອ່ານບົດເລື່ອງແລ້ວ, ຄູ ແລະ ນັກຮຽນກັບຄືນ ໄປຫາຄຳຖາມຈາກກິດຈະກຳທີ່ຜ່ານມາ. ນັກຮຽນ ຕອບໄດ້ຖືກຕ້ອງບໍ່? ຖ້າຄຳຕອບແມ່ນຜິດ, ໃຫ້ເບິ່ງ ວ່າ ນັກຮຽນໃຫ້ຂໍ້ມູນທີ່ຖືກຕ້ອງ.<br>- ຄູ ແລະ ນັກຮຽນ ສົນທະນາບາງຄຳຖາມ ທີ່ນັກຮຽນ ຖາມ ແລະ ກວດເບິ່ງຄຳຕອບ.<br>**ພວກເຮົາເບິ່ງໃກ້ໆເທາະ**<br>**6. ສະແດງບົດບາດສົມມຸດຈາກເລື່ອງ (ການເລົ່າເລື່ອງຄືນ 15 ນາທີ)**<br>- ຄູບອກວ່າ ນັກຮຽນຈະໄດ້ເລົ່າເລື່ອງຄືນ ເພື່ອໃຫ້ຮູ້ ວ່າເຂົາເຈົ້າໄດ້ຮຽນຮູ້ຫຍັງແດ່ ໂດຍການສະແດງບົດບາດສົມມຸດ.<br>- ຄູຈັດນັກຮຽນເປັນ 4 ກຸ່ມ. |

- ຄູແບ່ງປຶ້ມເລື່ອງອອກເປັນ 4 ຕອນ ຄື:
  1 ແນະນຳ+ປະສົບການ ການຫາປາຂອງພໍ່ນາ,
  2. ການຜະຈົນໄພ ຕອນກາງຄືນຂອງພໍ່ນາ,
  3. ເລື່ອງຂອງສ່ຽວພໍ່ນາ,
  4. ສ່ຽວພໍ່ນາສູນເສຍຄວາມຮັ່ງມີຂອງລາວ.
- ຄູອະທິບາຍວ່າ ເລກ 1 ຈະໄດ້ສະແດງກ່ຽວກັບຕອນ ທີ 1, ເລກ 2 ຈະໄດ້ສະແດງກ່ຽວກັບຕອນທີ 2 ແລະ ອື່ນໆ. ເມື່ອເລົ່າຄືນ ແລະ ສະແດງປຶ້ມບາດສົມມຸດ ນັກຮຽນສາມາດໃຊ້ຄຳເວົ້າຂອງຕົນເອງ ຫຼື ຈາກປຶ້ມ ເລື່ອງ.
- ຄູບອກວ່າ ນັກຮຽນຈະໄດ້ປະເມີນໃນລະຫວ່າງປະຕິ ບັດກິດຈະກຳນີ້.
- ຄູເລີ່ມປະເມີນປະມານ 1/3 ຂອງນັກຮຽນໃນຫ້ອງ ໂດຍນຳໃຊ້ເກນການໃຫ້ຄະແນນ ຮູບຣິກ S3 ແລະ ບັນທຶກການປະຕິບັດກິດຈະກຳຂອງເຂົາເຈົ້າ.

ໂຄງຮ່າງ S3 ສຳລັບໜ້າວຽກ (ຂໍ້ທີ 6). ນັກຮຽນປະຕິບັດຕາມຄຳແນະນຳ ເພື່ອໃຫ້ກິດຈະກຳການເວົ້າສຳເລັດ.

| | |
|---|---|
| 2 | ສາມາດສຳເລັດໜ້າວຽກຂອງການເວົ້າຕາມການ ແນະນຳ. |
| 1 | ສາມາດສຳເລັດໜ້າວຽກຂອງການເວົ້າຕາມການ ແນະນຳ ແຕ່ຍັງຕ້ອງການຄວາມຊ່ວຍເຫຼືອ ແລະ ຄຳ ແນະນຳ. |
| 0 | ຍັງບໍ່ທັນສາມາດສຳເລັດໜ້າວຽກຂອງການເວົ້າ. |

**7. ຟັງ ແລະ ຈຳແນກຄຳສັບທີ່ບອກສິ່ງມະຫັດສະຈັນ ໃນເລື່ອງ (ຄຳສັບ ແລະ ອະລິໃໝ່ 15 ນາທີ)**

- ຄູຂຽນຄຳສັບ ວິເສດ ໃສ່ກະດານ ແລະ ຖາມນັກຮຽນ ວ່າ ຄຳນີ້ກ່ຽວຂ້ອງກັບນິທານພໍ່ນາແນວໃດ ແລ້ວສົນ ທະນານຳກັນ.
- ຄູສະແດງ ຫຼື ຫຼື ອ່ານປຶ້ມເລື່ອງອີກເທື່ອໜຶ່ງ ອ່ານປຶ ແລ້ວໃຫ້ນັກ ຄູສະ ຮຽນຢືນຂຶ້ນເມື່ອໄດ້ຍິນຄຳສັບທີ່ກ່ຽວຂ້ອງກັບສິ່ງທີ່ ວິເສດ.

| | | |
|---|---|---|
| | | - ເປີດເຄື່ອງສຽງ ຫຼື ອ່ານບົດເລື່ອງ ແລະ ໃຫ້ແນ່ໃຈວ່າ ນັກຮຽນຍືນຂຶ້ນຕາມການແນະນຳ. ໃຫ້ນັກຮຽນເວົ້າ ຄຳສັບນັ້ນອອກມາດັງໆ ຫຼັງຈາກຢືນຂຶ້ນ (ຄຳສັບທີ່ ປະກອບມີ: ງຶດງາມ ແລະ ມີສະເໜ່, ປະຫຼາດໃຈ, ໜ້າແປກປະຫຼາດ, ຢ່າງມະຫັດສະຈັນ, ວິເສດ, ຢ່າງ ລຶກລັບ, ອັດສະຈັນໃຈ).<br>- ໃນຂະນະທີ່ສະແດງ ຫຼື ອ່ານບົດເລື່ອງ, ຄູສືບຕໍ່ປະ ເມີນນັກຮຽນດ້ວຍຮູບຣິກ S3 ແລະ ບັນທຶກການປະ ຕິບັດກິດຈະກຳຂອງເຂົາເຈົ້າ.<br>- ຄູຂຽນຄຳສັບຢ່າງອັດສະຈັນ, ຢ່າງມະຫັດສະຈັນ, ແລະ ຢ່າງອັນລຶກລັບ ໃສ່ກະດານ.<br>- ຄູອະທິບາຍຄຳສັບເຫຼົ່ານີ້ ແມ່ນຄຳສັບທີ່ບອກເຖິງສິ່ງ ທີ່ເກີດຂຶ້ນຢ່າງມະຫັດສະຈັນ ໃນບົດເລື່ອງ ແລະ ແນະ ນຳນັກຮຽນໄປເບິ່ງຂໍ້ທີ 7 ໃນປຶ້ມແບບຮຽນ.<br>- ອ່ານນິຍາມຮ່ວມກັນ ແລະ ເບິ່ງຕົວຢ່າງຈາກບົດ ເລື່ອງ.<br>- ຄູອະທິບາຍວ່າ ເຂົາເຈົ້າຈະສົນທະນາກ່ຽວກັບສິ່ງທີ່ ວິເສດຕື່ມອີກຕະຫຼອດບົດຮຽນ. |
| ຂັ້ນສະຫຼຸບ | 5 ນາທີ | - ນິທານເລື່ອງພໍ່ນາກັບຫີນວິເສດເວົ້າເຖິງຫຍັງ?<br>- ຄູຖາມນັກຮຽນວ່າ ນິທານມີເລື່ອງໃດແດ່? ນັກຮຽນຄິດ ວ່າ ເລື່ອງນີ້ແມ່ນນິທານບໍ່? ຍ້ອນຫຍັງ?<br>- ຄູ ແລະ ນັກຮຽນສົນທະນາ ແລະ ສະຫຼຸບຮ່ວມກັນ. |

| **ການວັດແລະປະເມີນຕົນເອງສຳເລັບຄູ** | |
|---|---|
| ນັກຮຽນທີ່ບັນລຸຈຸດປະສົງຂອງບົດຮຽນ:ນັກຮຽນທີ່ບັນລຸຈຸດປະສົງມີ 17ຄົນ ມີເດັກພິເສດ1 ຄົນ | ວິທີປັບປຸງການສອນຂອງຄູໃນບົດຕໍ່ໄປ: ຄັ້ງຕໍ່ໄປຈະພະຍາຍາມເອົາເດັກພິເສດເຂົ້າຮ່ວມກິດຈະກຳຫຼາຍກວ່າເກົ່າ ແລະໃຫ້ນັກຮຽນອ່ານບົດເລື່ອງດ້ວຍຕົນເອງ |

ວັນທີ / / ວັນທີ / / ວັນທີ / /

ລາຍເຊັນຄູປະເມີນ ລາຍເຊັນຄູປະຈຳຫ້ອງ ລາຍເຊັນຄູຝຶກຫັດ

## ເອກະສານອ້າງອີງ


- ແບບຮຽນວິທີສອນພາສາລາວ ສາຍປະຖົມ ລະບົບ 8+3 ເຊື່ອມຕໍ່ຊັ້ນກາງ ປີ 2012
- ແບບຮຽນພາສາລາວ- ວັນນະຄະດີ ສາຍປະຖົມລະບົບ 12 +2 ຊັ້ນສູງກະຊວງສຶກສາປີ2008
- ຫຼັກສູດ ແລະ ການສອນພາສາລາວສໍາລັບກໍ່ສ້າງຄູປະຖົມລະບົບ 11+1ກະຊວງສຶກສາປີ 1998
- ປື້ມຄູ່ມືແນະນໍາເພີ່ມການສອນພາສາລາວໃນຊັ້ນປະຖົມ ປ1,2,3 ປີ 2015 ກົມສ້າງຄູ
- ຫຼັກສູດຊັ້ນປະຖົມສຶກສາ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ 2010